ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 118 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 26 ມິຖຸນາ 2017

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ປະມວນກົດໝາຍອາຍາ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 013/ສພຊ, ລົງວັນທີ 17 ພຶດສະພາ 2017 ກ່ຽວກັບການຮັບຮອງເອົາປະມວນກົດໝາຍອາຍາ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 018/ຄປຈ, ລົງວັນທີ 13 ມິຖຸນາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ປະມວນກົດໝາຍອາຍາ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 013 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17/05/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາປະມວນກົດໝາຍອາຍາ

---

ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງປະມວນກົດໝາຍອາຍາ ໃນວາລະກອງປະຊຸມ ວັນທີ 17 ພຶດສະພາ 2017.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາປະມວນກົດໝາຍອາຍາ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 26 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ພຶດສະພາ 2017

# ປະມວນກົດໝາຍອາຍາ

## ພາກທີ I
## ພາກທົ່ວໄປ

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ໜ້າທີ່ຂອງປະມວນກົດໝາຍອາຍາ**

ປະມວນກົດໝາຍອາຍາ ມີໜ້າທີ່ ປົກປັກຮັກສາ ລະບອບການເມືອງ, ເສດຖະກິດ ແລະ ສັງຄົມ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ປົກປ້ອງຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຊີວິດ, ສຸຂະພາບ, ກຽດສັກສີ, ສິດ ແລະ ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ; ສະກັດກັ້ນ ແລະ ຕ້ານການກະທຳຜິດ ແລະ ສຶກສາອົບຮົມພົນລະເມືອງທຸກຄົນ ໃຫ້ມີຄວາມຕື່ນຕົວເຄົາລົບກົດໝາຍ.

ເພື່ອປະຕິບັດໜ້າທີ່ດັ່ງກ່າວ ປະມວນກົດໝາຍອາຍາ ໄດ້ກຳນົດວ່າ ການກະທຳອັນໃດ ທີ່ເປັນອັນຕະລາຍຕໍ່ສັງຄົມ ເປັນການກະທຳຜິດທາງອາຍາ ແລ້ວຈຶ່ງກຳນົດໂທດໃສ່ຜູ້ກະທຳຜິດ.

**ມາດຕາ 2 ປະມວນກົດໝາຍອາຍາ**

ປະມວນກົດໝາຍອາຍາ ແມ່ນ ການລວບລວມເອົາບັນດາບົດບັນຍັດ ທີ່ກຳນົດການກະທຳຜິດທາງອາຍາ ແລະ ໂທດ ເຂົ້າເປັນກົດໝາຍສະບັບດຽວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນປະມວນກົດໝາຍອາຍາສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ກົດໝາຍອາຍາ** ໝາຍເຖິງ ປະມວນກົດໝາຍອາຍາສະບັບນີ້ ແລະ ກົດໝາຍສະບັບອື່ນທີ່ກຳນົດການກະທຳຜິດທາງອາຍາ ແລະ ໂທດ;

2. **ກົດໝາຍສະບັບອື່ນທີ່ກຳນົດການກະທຳຜິດທາງອາຍາ ແລະ ໂທດ** ໝາຍເຖິງ ກົດໝາຍທີ່ກຳນົດການກະທຳຜິດທາງອາຍາ ແລະ ໂທດ ທີ່ປະກາດໃຊ້ພາຍຫຼັງປະມວນກົດໝາຍອາຍາສະບັບນີ້ ມີຜົນສັກສິດ;

3. **ດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ** ໝາຍເຖິງ ພື້ນທີ່ ຊຶ່ງເປັນທີ່ຕັ້ງຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມແຜນທີ່ໂລກ ຊຶ່ງລວມມີ ໜ້າດິນ, ພື້ນດິນ, ນ່ານນ້ຳ, ນ່ານຟ້າ ແລະ ພື້ນທີ່ ຊຶ່ງເປັນທີ່ຕັ້ງຂອງສຳນັກງານຜູ້ຕາງໜ້າທາງການທູດ, ສຳນັກງານຜູ້ຕາງໜ້າກົງສຸນ ແລະ ສຳນັກງານຜູ້ຕາງໜ້າຖາວອນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳອົງການຈັດຕັ້ງສາກົນ ແລະ ພາກພື້ນ ຢູ່ຕ່າງປະເທດ ລວມທັງຍານພາຫະນະທີ່ຕິດທຸງຊາດລາວ ເຊັ່ນ ລົດ, ເຮືອ, ກຳປັ່ນ, ເຮືອບິນ ຕາມສົນທິສັນຍາສາກົນ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ;

4. **ບຸກຄົນໃດ ໃນໝວດທີ 1 ຫາ ໝວດທີ 12 ພາກທີ II ຂອງປະມວນກົດໝາຍອາຍາສະບັບນີ້** ໝາຍເຖິງ ຜູ້ກະທຳຜິດ ຊຶ່ງລວມມີ ບຸກຄົນ ແລະ ນິຕິບຸກຄົນ;

5. **ບຸກຄົນໃດ ໃນໝວດທີ 13 ພາກທີ II ຂອງປະມວນກົດໝາຍອາຍາສະບັບນີ້** ໝາຍເຖິງ ຜູ້ທີ່ສັງກັດໃນກຳລັງປ້ອງກັນຊາດ ທີ່ພວມປະຕິບັດໜ້າທີ່, ບຸກຄົນທີ່ຖືກຮຽກຕົວເຂົ້າເປັນກຳລັງສຳຮອງ ທີ່ພວມຢູ່ໃນໄລຍະເວລາການຝຶກຊ້ອມ, ພົນລະເມືອງ ທີ່ໄດ້ຈົດທະບຽນເຂົ້າເປັນທະຫານພັນທະ ຫຼື ຮັບໃຊ້ໃນກຳລັງປ້ອງກັນຊາດ, ຜູ້ທີ່ສັງກັດໃນກຳລັງສຳຮອງ, ຜູ້ທີ່ສັງກັດໃນກຳລັງປ້ອງກັນຕົວ ທີ່ຖືກສົ່ງໄປປະຈຳການສະເພາະ, ຜູ້ທີ່ ສັງກັດຢູ່ໜ່ວຍສູ້ຮົບພິເສດ;

6. **ນິຕິບຸກຄົນ** ໝາຍເຖິງ ວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ລວມທັງສະຫະກອນ, ສະມາຄົມ ແລະ ມູນນິທິ ທັງພາຍໃນ ແລະ ຕ່າງປະເທດ ທີ່ສ້າງຕັ້ງຂຶ້ນເປັນນິຕິບຸກຄົນຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

7. **ສະຕິສຳປະຊັນຍະ** ໝາຍເຖິງ ຄວາມມີສະຕິ, ຮູ້ຜິດ ຮູ້ຖືກ ໃນຂະນະທີ່ກະທຳ;

8. **ເສບສົມ** ໝາຍເຖິງ ການມີເພດສຳພັນ ລະຫວ່າງ ຍິງກັບຊາຍ ຫຼື ລະຫວ່າງເພດດຽວກັນ ດ້ວຍການໃຊ້ອະໄວຍະວະເພດກັບອະໄວຍະວະເພດດ້ວຍກັນ ຫຼື ອະໄວຍະວະເພດກັບອະໄວຍະວະອື່ນຂອງຮ່າງກາຍ;

9. **ທຳຊຳເລົາ** ໝາຍເຖິງ ການເອົາອະໄວຍະວະເພດຊາຍ ສອດໃສ່ອະໄວຍະວະເພດຍິງ ຫຼື ເອົາອະໄວຍະວະເພດຍິງ ສຸບໃສ່ອະໄວຍະວະເພດຊາຍ ຫຼື ການເອົາອະໄວຍະວະເພດ ໃສ່ອະໄວຍະວະອື່ນຂອງຮ່າງກາຍ;

10. **ສິ່ງລາມົກ** ໝາຍເຖິງ ສິ່ງທີ່ສະແດງອອກກ່ຽວກັບອະໄວຍະວະເພດ ແລະ ພຶດຕິກຳທາງເພດຂອງຄົນ;

11. **ອະພິສິດທາງການທູດ** ໝາຍເຖິງ ສິດຄຸ້ມກັນ ທີ່ນັກການທູດ ໄດ້ຮັບການຍົກເວັ້ນໃນການດຳເນີນຄະດີອາຍາ ຕາມສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

12. **ສິນຄ້າທີ່ເກືອດຫ້າມ** ໝາຍເຖິງ ສິນຄ້າທີ່ບໍ່ອະນຸຍາດໃຫ້ ຂາຍ, ແລກປ່ຽນ, ຜະລິດ, ນຳເຂົ້າ ຫຼື ສົ່ງອອກ ຫຼື ສິນຄ້າ ຊຶ່ງຕ້ອງຢູ່ພາຍໃຕ້ການຄວບຄຸມຂອງອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ;

13. **ໄສຍະສາດ** ໝາຍເຖິງ ເວດມົນ, ກົນ, ຄາຖາ ທີ່ບໍ່ສາມາດພິສູດໄດ້ທາງວິທະຍາສາດ;

14. **ການຫຼຸລູກໂດຍບໍ່ຖືກຕ້ອງຕາມກົດໝາຍ** ໝາຍເຖິງ ການຫຼຸລູກທີ່ບໍ່ໄດ້ຮັບອະນຸຍາດຈາກຄະນະແພດ;

15. **ການພະນັນທີ່ຕ້ອງຫ້າມ** ໝາຍເຖິງ ການພະນັນທີ່ບໍ່ໄດ້ຮັບອະນຸຍາດ;

16. **ຜູ້ພິການທາງສະໝອງ** ໝາຍເຖິງ ບຸກຄົນທີ່ສູນເສຍໜ້າທີ່ການທາງມັນສະໝອງ;

17. **ພະຍາດຮ້າຍແຮງ** ໝາຍເຖິງ ພະຍາດທີ່ບໍ່ສາມາດປິ່ນປົວໃຫ້ຫາຍດີໄດ້;

18. **ເນື້ອເຍື່ອຂອງຄົນ** ໝາຍເຖິງ ຈິວະ, ຈຸລັງ ຊຶ່ງລວມມີ ນ້ຳເຊື້ອ, ໄຂ່, ຕົວອ່ອນທີ່ປະຕິສົນທິຈາກໄຂ່ ແລະ ນ້ຳເຊື້ອ;

19. **ສະຖາບັນການເງິນ** ໝາຍເຖິງ ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ທີ່ບໍ່ແມ່ນທະນາຄານ ເຊັ່ນ ສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ;

20. **ເຄື່ອງສົນເສີກ** ໝາຍເຖິງ ເຄື່ອງຂອງສັດຕູທີ່ນຳໃຊ້ຢູ່ໃນສົງຄາມ.

### ມາດຕາ 4 ພື້ນຖານຂອງຄວາມຮັບຜິດຊອບທາງອາຍາ

ບຸກຄົນ, ນິຕິບຸກຄົນໃດ ຈະມີຄວາມຮັບຜິດຊອບທາງອາຍາ ແລະ ຈະຖືກລົງໂທດທາງອາຍາໄດ້ ກໍຕໍ່ເມື່ອບຸກຄົນ, ນິຕິບຸກຄົນນັ້ນ ຫາກມີການກະທຳທີ່ເປັນອັນຕະລາຍຕໍ່ສັງຄົມ ຊຶ່ງໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາສະບັບນີ້ ແລະ ກົດໝາຍສະບັບອື່ນທີ່ກຳນົດການກະທຳຜິດທາງອາຍາ ແລະ ໂທດ ແລະ ເມື່ອມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

### ມາດຕາ 5 ຫຼັກການພື້ນຖານຂອງກົດໝາຍອາຍາ

ຫຼັກການພື້ນຖານຂອງກົດໝາຍອາຍາ ມີ ດັ່ງນີ້:

1. ເມື່ອມີການກະທຳຜິດ ຕ້ອງມີຄວາມຮັບຜິດຊອບທາງອາຍາ;
2. ມີແຕ່ຜູ້ກະທຳຜິດເທົ່ານັ້ນ ເປັນຜູ້ມີຄວາມຮັບຜິດຊອບຕໍ່ການກະທຳຜິດຂອງຕົນ;

3. ຄວາມຮັບຜິດຊອບຂອງຜູ້ກະທຳຜິດ ຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ບຸກຄະລິກກະພາບຂອງຜູ້ກະທຳຜິດ ແລະ ສາເຫດທີ່ພາໃຫ້ມີການຫຼຸດຜ່ອນ ຫຼື ການເພີ່ມຄວາມຮັບຜິດຊອບທາງອາຍາ.

**ມາດຕາ 6 ພັນທະໃນການສະກັດກັ້ນ ແລະ ຕ້ານອາຊະຍາກຳ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະເຂົ້າຮ່ວມ ແລະ ໃຫ້ການຮ່ວມມືກັບອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງໃນການສະກັດກັ້ນ ແລະ ຕ້ານອາຊະຍາກຳ ແນໃສ່ກຳຈັດບັນດາສາເຫດ ແລະ ເງື່ອນໄຂທີ່ພາໃຫ້ເກີດມີການກະທຳຜິດທາງອາຍາ.

**ມາດຕາ 7 ການນຳໃຊ້ບົດບັນຍັດໃນພາກທົ່ວໄປຂອງປະມວນກົດໝາຍອາຍາ**

ບົດບັນຍັດໃນພາກທົ່ວໄປຂອງປະມວນກົດໝາຍອາຍາສະບັບນີ້ ໃຫ້ນຳໃຊ້ຕໍ່ການກະທຳຜິດທາງອາຍາ ທີ່ກຳນົດໄວ້ໃນກົດໝາຍສະບັບອື່ນເຊັ່ນກັນ.

## ໝວດທີ 2
## ຂອບເຂດການນຳໃຊ້ກົດໝາຍອາຍາ

**ມາດຕາ 8 ການນຳໃຊ້ກົດໝາຍອາຍາໃນດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກົດໝາຍອາຍາ ນຳໃຊ້ຕໍ່ທຸກການກະທຳຜິດທາງອາຍາ ທີ່ເກີດຂຶ້ນໃນດິນແດນສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ.

ບຸກຄົນ, ນິຕິບຸກຄົນໃດ ຫາກໄດ້ກະທຳຜິດທາງອາຍາ ຢູ່ໃນດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງຮັບຜິດຊອບ ຕາມປະມວນກົດໝາຍອາຍາ ຂອງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ.

ຜູ້ຕາງໜ້າທາງການທູດ ຫຼື ບຸກຄົນທີ່ໄດ້ຮັບອະພິສິດທາງການທູດ ຕາມສົນທິສັນຍາສາກົນທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ ຊຶ່ງໄດ້ກະທຳຜິດໃນດິນແດນ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຈະໄດ້ຮັບການແກ້ໄຂ ຕາມສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຫຼື ທາງການທູດ.

**ມາດຕາ 9 ການນຳໃຊ້ກົດໝາຍອາຍານອກດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ພົນລະເມືອງລາວ ທີ່ໄດ້ກະທຳຜິດທາງອາຍາຢູ່ນອກດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະໄດ້ຮັບຜິດຊອບທາງອາຍາ ຖ້າວ່າການກະທຳນັ້ນ ຫາກໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາສະບັບນີ້ ແລະ ກົດໝາຍສະບັບອື່ນ ທີ່ກຳນົດການກະທຳຜິດທາງອາຍາ ແລະ ໂທດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄົນຕ່າງດ້າວ ແລະ ຄົນທີ່ບໍ່ມີສັນຊາດ ທີ່ອາໄສຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫາກໄດ້ກະທຳຜິດທາງອາຍາ ຢູ່ນອກດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍຈະໄດ້ຮັບຜິດຊອບທາງອາຍາເຊັ່ນດຽວກັນ.

ຄົນຕ່າງປະເທດ ທີ່ໄດ້ກະທຳຜິດຢູ່ນອກດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງ ແຕະຕ້ອງເຖິງຜົນປະໂຫຍດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງລາວ ກໍຈະໄດ້ຮັບຜິດຊອບທາງອາຍາເຊັ່ນດຽວກັນ.

**ມາດຕາ 10 ການນຳໃຊ້ກົດໝາຍອາຍາໃນກາລະເວລາ**

ກົດໝາຍອາຍາ ນຳໃຊ້ນັບແຕ່ວັນມີຜົນສັກສິດ ເປັນຕົ້ນໄປ.

ກົດໝາຍໃໝ່ ທີ່ກຳນົດໂທດເບົາກວ່າ ຫຼື ລົບລ້າງການກະທຳຜິດທາງອາຍາ ທີ່ກົດໝາຍເກົ່າໄດ້ກຳນົດໄວ້ນັ້ນ ຈະມີຜົນສັກສິດຍ້ອນຫຼັງ.

ກົດໝາຍໃໝ່ ທີ່ກຳນົດການກະທຳຜິດໃໝ່ ຫຼື ໂທດໜັກກວ່າທີ່ກົດໝາຍເກົ່າໄດ້ກຳນົດໄວ້ ຈະບໍ່ມີຜົນສັກສິດຍ້ອນຫຼັງ.

## ໝວດທີ 3
## ການກະທຳຜິດ ແລະ ຜູ້ກະທຳຜິດ

**ມາດຕາ 11 ການກະທຳຜິດ**

ການກະທຳຜິດທາງອາຍາ ແມ່ນ ການກະທຳ ຫຼື ການເມີນເສີຍ ທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ຫຼື ສັງຄົມຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ແລະ ການຈັດຕັ້ງ, ຊີວິດ, ສຸຂະພາບ, ກຽດສັກສີ, ສິດ ແລະ ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຊຶ່ງໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາສະບັບນີ້ ແລະ ກົດໝາຍສະບັບອື່ນ ທີ່ກຳນົດການກະທຳຜິດທາງອາຍາ ແລະ ໂທດ.

ການກະທຳ ຫຼື ການເມີນເສີຍ ທີ່ມີອົງປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນ ແຕ່ໄດ້ກໍ່ຄວາມເສຍຫາຍທາງດ້ານຊັບສິນ ຕໍ່າກວ່າ ໜຶ່ງລ້ານກີບ ສາມາດນຳມາແກ້ໄຂດ້ວຍການໄກ່ເກ່ຍ ຫຼື ດ້ວຍຮູບການອື່ນ ຍົກເວັ້ນການຍາດຊິງຊັບ, ການປຸ້ນຊັບ, ການກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ເປັນອາຈິນ.

**ມາດຕາ 12 ອົງປະກອບຂອງການກະທຳຜິດ**

ອົງປະກອບຂອງການກະທຳຜິດທາງອາຍາ ແມ່ນ ບັນດາເຄື່ອງໝາຍທາງດ້ານພາວະວິໄສ ແລະ ອັດຕະວິໄສຂອງການປະພຶດ ທີ່ປະມວນກົດໝາຍອາຍາຖືວ່າເປັນການກະທຳຜິດ.

ການກະທຳຜິດທາງອາຍາ ມີ ສີ່ອົງປະກອບ ດັ່ງນີ້:

1. ອົງປະກອບທາງດ້ານວັດຖຸກຳ;
2. ອົງປະກອບທາງດ້ານພາວະວິໄສ;
3. ອົງປະກອບທາງດ້ານອັດຕະວິໄສ;
4. ອົງປະກອບທາງດ້ານເຈົ້າກຳ.

ອົງປະກອບທາງດ້ານວັດຖຸກຳຂອງການກະທຳຜິດ ແມ່ນ ສາຍພົວພັນສັງຄົມທີ່ປະມວນກົດໝາຍອາຍາຄຸ້ມຄອງ ແລະ ຖືກແຕະຕ້ອງຈາກການກະທຳຜິດ.

ອົງປະກອບທາງດ້ານພາວະວິໄສຂອງການກະທຳຜິດ ແມ່ນ ບັນດາເຄື່ອງໝາຍພາຍນອກຂອງພຶດຕິກຳ ທີ່ໄດ້ສ້າງ ຫຼື ແນໃສ່ສ້າງຄວາມເສຍຫາຍໃຫ້ແກ່ສາຍພົວພັນສັງຄົມ ທີ່ປະມວນກົດໝາຍອາຍາຄຸ້ມຄອງ ລວມທັງ ວັນ ເວລາ, ສະຖານທີ່, ພາຫະນະ, ອຸປະກອນ, ສະພາບ ແລະ ວິທີກະທຳຜິດ.

ອົງປະກອບທາງດ້ານອັດຕະວິໄສຂອງການກະທຳຜິດ ແມ່ນ ບັນດາເຄື່ອງໝາຍຕ່າງໆທາງດ້ານທັດສະນະ, ແນວຄິດຂອງຜູ້ກະທຳຜິດ ຕໍ່ການປະພຶດຂອງຕົນ ທີ່ສະແດງອອກພາຍນອກໂດຍຜ່ານພຶດຕິກຳ.

ອົງປະກອບທາງດ້ານເຈົ້າກຳຂອງການກະທຳຜິດ ແມ່ນ ຜູ້ກະທຳຜິດ ຊຶ່ງຕ້ອງແມ່ນນິຕິບຸກຄົນ ຫຼື ບຸກຄົນ ທີ່ມີສະຕິສຳປະຊັນຍະ, ບໍ່ເປັນຄົນບ້າເສຍຈິດ ແລະ ເຖິງກະສຽນອາຍຸທາງອາຍາ ສິບຫ້າປີ ຂຶ້ນໄປ.

**ມາດຕາ 13 ສະຖານການກະທຳຜິດ**

ການກະທຳຜິດແບ່ງອອກເປັນ ສາມ ສະຖານ ດັ່ງນີ້:

1. ລະຫຸໂທດ ແມ່ນ ການກະທຳຜິດທີ່ກົດໝາຍກຳນົດໂທດຕຳນິວິຈານ ຫຼື ໂທດປັບໃໝ;

2. ໂທສານຸໂທດ ແມ່ນ ການກະທຳຜິດທີ່ກົດໝາຍກຳນົດໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສິບປີ ແລະ ໂທດປັບໃໝ;

3. ຄະຣຸໂທດ ແມ່ນ ການກະທຳຜິດທີ່ກົດໝາຍກຳນົດໂທດຕັດອິດສະລະພາບ ແຕ່ ຫ້າປີ ຂຶ້ນໄປ ຫາ ຕະຫຼອດຊີວິດ ພ້ອມທັງປັບໃໝ ແລະ ໂທດປະຫານຊີວິດ.

**ມາດຕາ 14 ການກະທຳຜິດໂດຍເຈດຕະນາ**

ການກະທຳຜິດໂດຍເຈດຕະນາ ແມ່ນ ການກະທຳ ຫຼື ການເມີນເສີຍ ຊຶ່ງຜູ້ກະທຳຜິດຮູ້ວ່າການກະທຳ ຫຼື ການເມີນເສີຍຂອງຕົນ ເປັນອັນຕະລາຍຕໍ່ສັງຄົມ ແລະ ກໍຄາດຄະເນໄດ້ເຖິງຜົນສະທ້ອນຂອງມັນ ແຕ່ຈົງໃຈເຮັດ ຫຼື ປະປ່ອຍໃຫ້ເກີດຂຶ້ນ.

**ມາດຕາ 15 ການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ**

ການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ ແມ່ນ ການກະທຳ ຫຼື ການເມີນເສີຍ ຊຶ່ງຜູ້ກະທຳຜິດຄາດຄະເນໄດ້ວ່າ ມັນອາດສ້າງຜົນສະທ້ອນທີ່ເປັນອັນຕະລາຍຕໍ່ສັງຄົມ ແຕ່ຖືເບົາ ແລະ ເຊື່ອວ່າມັນຈະບໍ່ເກີດຂຶ້ນ ຫຼື ບໍ່ຄາດຄະເນໄດ້ວ່າຜົນສະທ້ອນດັ່ງກ່າວ ຈະເກີດຂຶ້ນ ທັງໆ ທີ່ຕົນຕ້ອງຄາດຄະເນ ແລະ ສາມາດຄາດຄະເນໄດ້.

**ມາດຕາ 16 ການກະທຳຜິດຫຼາຍສະຖານ**

ການກະທຳຜິດຫຼາຍສະຖານ ແມ່ນ ການກະທຳຜິດຂອງບຸກຄົນໃດໜຶ່ງ ແຕ່ສອງຢ່າງ ຂຶ້ນໄປ ດ້ວຍການກະທຳອັນດຽວ ຫຼື ຫຼາຍອັນ ທີ່ຜິດຕໍ່ຫຼາຍມາດຕາຂອງກົດໝາຍອາຍາ ຊຶ່ງຈະຖືກຕັດສິນພ້ອມກັນໃນສານດຽວກັນ.

**ມາດຕາ 17 ການກະທຳຜິດຊ້ຳ**

ການກະທຳຜິດຊ້ຳ ແມ່ນ ການກະທຳຜິດແຕ່ ສອງຢ່າງ ຂຶ້ນໄປ ໃນຖານການກະທຳຜິດດຽວກັນ ຫຼື ຄ້າຍຄືກັນ ຊຶ່ງການກະທຳຜິດແຕ່ລະຢ່າງ ບໍ່ທັນຖືກສານຕັດສິນມາກ່ອນ ແລະ ຈະຖືກຕັດສິນພ້ອມກັນໃນສານດຽວກັນ.

**ມາດຕາ 18 ການກະທຳຜິດຊ້ອນ**

ການກະທຳຜິດຊ້ອນ ແມ່ນ ການກະທຳຜິດແຕ່ ສອງຢ່າງ ຂຶ້ນໄປ ໃນຖານການກະທຳຜິດແຕກຕ່າງກັນ ຊຶ່ງການກະທຳຜິດແຕ່ລະຢ່າງ ບໍ່ທັນຖືກສານຕັດສິນມາກ່ອນ ແລະ ຈະຖືກຕັດສິນພ້ອມກັນໃນສານດຽວກັນ.

**ມາດຕາ 19 ການກະທຳຜິດທີ່ມີການຈັດຕັ້ງເປັນກຸ່ມ**

ການກະທຳຜິດທີ່ມີການຈັດຕັ້ງເປັນກຸ່ມ ແມ່ນ ການກະທຳຜິດຂອງກຸ່ມຄົນແຕ່ ສາມຄົນ ຂຶ້ນໄປ ຊຶ່ງມີການຈັດຕັ້ງໃນກຳນົດເວລາໃດໜຶ່ງ ແລະ ມີການວາງແຜນ ເພື່ອກະທຳຜິດໃນສະຖານໂທສານຸໂທດຂຶ້ນໄປ.

**ມາດຕາ 20 ການກະທຳຜິດເປັນອາຈິນ**

ການກະທຳຜິດເປັນອາຈິນ ແມ່ນ ການກະທຳຜິດໃນສະຖານດຽວກັນ ຫຼື ຄ້າຍຄືກັນແຕ່ ສາມຄັ້ງຂຶ້ນໄປ ຊຶ່ງສານຍັງບໍ່ທັນໄດ້ນຳມາພິຈາລະນາຕັດສິນ.

**ມາດຕາ 21 ການກະທຳຜິດທີ່ບໍ່ເຂັດຫຼາບ**

ການກະທຳຜິດທີ່ບໍ່ເຂັດຫຼາບ ແມ່ນການກະທຳຜິດຂອງຜູ້ທີ່ໄດ້ຖືກຕັດສິນລົງໂທດຕັດອິດສະລະພາບຍ້ອນການກະທຳຜິດໂດຍເຈດຕະນາ ຊຶ່ງໄດ້ກະທຳຜິດໃໝ່ໂດຍເຈດຕະນາອີກ ໃນເວລາປະຕິບັດໂທດ ຫຼື ໄດ້ກະທຳຜິດໃໝ່ໂດຍເຈດຕະນາອີກ ໃນສະຖານດຽວກັນ ຫຼື ຄ້າຍຄືກັນ ພາຍໃນກຳນົດເວລາ ດັ່ງນີ້:

1. ໜຶ່ງປີ ສຳລັບໂທດຖານ ລະຫຸໂທດ;
2. ຫ້າປີ ສຳລັບໂທດຖານ ໂທສານຸໂທດ;
3. ເຈັດປີ ສຳລັບໂທດຖານ ຄະຣຸໂທດ.

**ມາດຕາ 22 ການກະກຽມໃຫ້ແກ່ການກະທຳຜິດ**

ການກະກຽມໃຫ້ແກ່ການກະທຳຜິດ ແມ່ນ ການຫາງຫາພາຫະນະ, ອຸປະກອນ, ການສ້າງເງື່ອນໄຂ ຫຼື ປັດໃຈອື່ນ ໃຫ້ແກ່ການກະທຳຜິດໂດຍເຈດຕະນາ.

ການກະກຽມໃຫ້ແກ່ການກະທຳຜິດ ຈະຖືກລົງໂທດໄດ້ກໍຕໍ່ເມື່ອ ຫາກເປັນອັນຕະລາຍຕໍ່ສັງຄົມ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍອາຍາເທົ່ານັ້ນ.

ການກະກຽມໃຫ້ແກ່ການກະທຳຜິດ ຖານໂທສານຸໂທດ ຫຼື ຄະຣຸໂທດ ຈະຖືກລົງໂທດຕາມມາດຕາທີ່ກຳນົດໂທດໃສ່ການກະທຳຜິດທີ່ກ່ຽວຂ້ອງ.

ການກະກຽມໃຫ້ແກ່ການກະທຳຜິດ ຖານລະຫຸໂທດ ຈະບໍ່ຖືກລົງໂທດ.

**ມາດຕາ 23 ຄວາມພະຍາຍາມກໍ່ການກະທຳຜິດ**

ຄວາມພະຍາຍາມກໍ່ການກະທຳຜິດ ແມ່ນ ການລົງມືກະທຳຜິດສ່ວນໃດສ່ວນໜຶ່ງໂດຍເຈດຕະນາ ແຕ່ຍ້ອນມີສາເຫດນອກຕົວມາຂັດຂວາງ ຊຶ່ງພາໃຫ້ການກະທຳຜິດນັ້ນບໍ່ສຳເລັດຜົນ.

ຄວາມພະຍາຍາມກໍ່ການກະທຳຜິດ ຈະຖືກລົງໂທດໄດ້ກໍຕໍ່ເມື່ອ ຫາກເປັນອັນຕະລາຍຕໍ່ສັງຄົມ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍອາຍາ ເທົ່ານັ້ນ.

ຄວາມພະຍາຍາມກໍ່ການກະທຳຜິດ ຈະຖືກລົງໂທດຕາມມາດຕາທີ່ກຳນົດໂທດໃສ່ການກະທຳຜິດທີ່ກ່ຽວຂ້ອງ.

ຄວາມພະຍາຍາມກໍ່ການກະທຳຜິດຖານລະຫຸໂທດ ຈະບໍ່ຖືກລົງໂທດ.

**ມາດຕາ 24 ການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈ**

ບຸກຄົນໃດ ຫາກໄດ້ຢຸດເຊົາການກະທຳຜິດຂອງຕົນດ້ວຍຄວາມສະໝັກໃຈ ໂດຍບໍ່ສືບຕໍ່ການກະທຳຜິດນັ້ນໃຫ້ສຳເລັດຜົນ ຈະຢູ່ໃນໄລຍະຂອງການກະກຽມ ຫຼື ຄວາມພະຍາຍາມກໍຕາມ ບຸກຄົນນັ້ນກໍຈະບໍ່ມີຄວາມຮັບຜິດຊອບທາງອາຍາ ເວັ້ນເສຍແຕ່ການກະທຳນັ້ນ ຫາກເປັນການກະທຳຜິດອື່ນ.

**ມາດຕາ 25 ຜູ້ກະທຳຜິດ**

ຜູ້ກະທຳຜິດ ແມ່ນ ບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງ ທີ່ມີການກະທຳ ຫຼື ການເມີນເສີຍ ຊຶ່ງເປັນອັນຕະລາຍຕໍ່ສັງຄົມ ແລະ ມີອົງປະກອບຂອງການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້.

**ມາດຕາ 26 ການຮ່ວມກັນກະທຳຜິດ**

ການຮ່ວມກັນກະທຳຜິດ ແມ່ນ ການເຂົ້າຮ່ວມການກະທຳຜິດໂດຍເຈດຕະນາແຕ່ ສອງຄົນ ຂຶ້ນໄປ.

ບັນດາຜູ້ຮ່ວມກັນກະທຳຜິດ ມີ ດັ່ງນີ້:

1. ຕົວການ;
2. ຜູ້ປະຕິບັດ;
3. ຜູ້ຍຸຍົງ;
4. ຜູ້ສົມຮູ້ຮ່ວມຄິດ.

**ມາດຕາ 27 ຕົວການ**

ຕົວການ ແມ່ນ ຜູ້ວາງແຜນ, ຈັດຕັ້ງ ແລະ ບັນຊາການກະທຳຜິດ.

**ມາດຕາ 28 ຜູ້ປະຕິບັດ**

ຜູ້ປະຕິບັດ ແມ່ນ ຜູ້ລົງມືກະທຳຜິດໂດຍກົງ.

**ມາດຕາ 29 ຜູ້ຍຸຍົງ**

ຜູ້ຍຸຍົງ ແມ່ນ ຜູ້ຍຸແຍ່, ປຸກລະດົມ, ຊຸກຍູ້ຜູ້ອື່ນໃຫ້ກະທຳຜິດ.

**ມາດຕາ 30 ຜູ້ສົມຮູ້ຮ່ວມຄິດ**

ຜູ້ສົມຮູ້ຮ່ວມຄິດ ແມ່ນ ຜູ້ໃຫ້ການຊ່ວຍເຫຼືອໂດຍເຈດຕະນາໃນການກະທຳຜິດ ຫຼື ໃຫ້ຄຳໝັ້ນສັນຍາລ່ວງໜ້າວ່າ ຈະຊຸກເຊື່ອງ, ປົກປິດຜູ້ກະທຳຜິດ, ພາຫະນະ, ອຸປະກອນໃນການກະທຳຜິດ, ຈະລຶບລ້າງຮ່ອງຮອຍຂອງການກະທຳຜິດ ຫຼື ຊຸກເຊື່ອງສິ່ງຂອງທີ່ຈະໄດ້ມາຈາກການກະທຳຜິດ.

# ໝວດທີ 4
# ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ
# ແລະ ການພົ້ນຈາກຄວາມຮັບຜິດຊອບທາງອາຍາ

**ມາດຕາ 31 ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ**

ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ ແມ່ນ ກຳນົດເວລາໃນການຮ້ອງຟ້ອງທາງອາຍາ ຊຶ່ງກຳນົດໄວ້ໃນປະມວນກົດໝາຍອາຍາ, ຖ້າຫາກກາຍກຳນົດເວລາດັ່ງກ່າວ ກໍຈະບໍ່ສາມາດຮ້ອງຟ້ອງທາງອາຍາຕໍ່ການກະທຳຜິດໄດ້.

ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ ມີ ດັ່ງນີ້:

1. ໜຶ່ງປີ ສຳລັບການກະທຳຜິດໃນສະຖານ ລະຫຸໂທດ;
2. ເຈັດປີ ສຳລັບການກະທຳຜິດໃນສະຖານ ໂທສານຸໂທດ;
3. ສິບຫ້າປີ ສຳລັບການກະທຳຜິດໃນສະຖານ ຄະຣຸໂທດ.

ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ ໃຫ້ນັບແຕ່ວັນໄດ້ກະທຳຜິດເປັນຕົ້ນໄປ. ໃນກໍລະນີທີ່ໄດ້ມີການກະທຳຜິດເທື່ອໃໝ່ ພາຍໃນກຳນົດອາຍຸຄວາມຂອງການກະທຳຜິດເທື່ອກ່ອນນັ້ນ ອາຍຸຄວາມໃນການຮ້ອງຟ້ອງດັ່ງກ່າວ ໃຫ້ນັບແຕ່ວັນກະທຳຜິດເທື່ອໃໝ່ນັ້ນ ເປັນຕົ້ນໄປ. ໃນກໍລະນີທີ່ໄດ້ຫຼົບຫຼີກຈາກການດຳເນີນຄະດີ ຈະນັບແຕ່ວັນຜູ້ກະທຳຜິດໄດ້ເຂົ້າສະເໜີຕົວ ຫຼື ຖືກຈັບຕົວ ເປັນຕົ້ນໄປ.

**ມາດຕາ 32 ການບໍ່ນຳໃຊ້ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ**

ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ ທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງປະມວນກົດໝາຍສະບັບນີ້ ຈະບໍ່ນຳໃຊ້ຕໍ່ການກະທຳຜິດໃນສະຖານ ການດັບສູນເຊື້ອຊາດ ແລະ ການກະທຳຜິດຕໍ່ຄວາມສະຫງົບຂອງຊາດ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 1 ພາກທີ II ຂອງປະມວນກົດໝາຍສະບັບນີ້ ຍົກເວັ້ນການກະທຳຜິດ ໃນສະຖານການປອມແປງເງິນ ຫຼື ການໃຊ້ເງິນປອມ ແລະ ການຟອກເງິນ.

**ມາດຕາ 33 ສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ**

ສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ ມີ ດັ່ງນີ້:

1. ການໝົດອາຍຸຄວາມໃນການຮ້ອງຟ້ອງ;
2. ການຖືກບັງຄັບ ແລະ ການຖືກຂົ່ມຂູ່;
3. ການປ້ອງກັນຕົວ;
4. ສະພາວະທີ່ຈຳເປັນ;
5. ການປະຕິບັດໜ້າທີ່ຕາມວິຊາຊີບ;

6. ການປະຕິບັດຕາມຄຳສັ່ງ;

7. ການຫຼິ້ນກິລາ;

8. ການກະທຳຜິດຊຶ່ງຈຳເປັນຕ້ອງມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍ.

**ມາດຕາ 34 ການໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ**

ການໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ ແມ່ນ ການສິ້ນສຸດກຳນົດເວລາໃນການຮ້ອງຟ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງປະມວນກົດໝາຍສະບັບນີ້.

ການໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ ເປັນສາເຫດທີ່ພາໃຫ້ຄວາມຮັບຜິດຊອບທາງອາຍາຕົກໄປ.

**ມາດຕາ 35 ການຖືກບັງຄັບ ແລະ ການຖືກຂົ່ມຂູ່**

ບຸກຄົນໃດ ຫາກໄດ້ກະທຳຜິດດ້ວຍການຖືກບັງຄັບ ຫຼື ການຖືກຂົ່ມຂູ່ ຊຶ່ງຕົນບໍ່ສາມາດຫຼີກລ່ຽງໄດ້ ຈະບໍ່ມີຄວາມຮັບຜິດຊອບທາງອາຍາ.

ໃນກໍລະນີທີ່ການກະທຳນັ້ນ ຫາກເປັນການກະທຳຜິດຖານຄະຣຸໂທດ ການຖືກບັງຄັບ ຫຼື ການຖືກຂົ່ມຂູ່ ເປັນພຽງແຕ່ສາເຫດທີ່ພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາເທົ່ານັ້ນ.

**ມາດຕາ 36 ການປ້ອງກັນຕົວ**

ການປ້ອງກັນຕົວ ແມ່ນ ການກະທຳຂອງບຸກຄົນໃດໜຶ່ງ ທີ່ກໍ່ຂຶ້ນເພື່ອປົກປ້ອງຜົນປະໂຫຍດຂອງລັດ ຫຼື ຂອງສັງຄົມ, ຊີວິດ, ສຸຂະພາບ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນເອງ ຫຼື ຂອງບຸກຄົນອື່ນ, ເພື່ອຕ້ານການບຸກລຸກທີ່ເປັນອັນຕະລາຍຕໍ່ສັງຄົມ ແຕ່ການບຸກລຸກນັ້ນ ຕ້ອງມີຈິງ ແລະ ເປັນອັນຕະລາຍແທ້. ການປ້ອງກັນຕົວ ຕ້ອງກະທຳໃນເວລາທີ່ມີການບຸກລຸກ ແລະ ບໍ່ໃຫ້ເກີນຂອບເຂດຂອງການບຸກລຸກນັ້ນ.

**ມາດຕາ 37 ສະພາວະທີ່ຈຳເປັນ**

ສະພາວະທີ່ຈຳເປັນ ແມ່ນ ການກະທຳດ້ວຍຄວາມຈຳເປັນຂອງບຸກຄົນໃດໜຶ່ງ ເພື່ອຫຼີກເວັ້ນໄພອັນຕະລາຍທີ່ຂົ່ມຂູ່ຜົນປະໂຫຍດຂອງລັດ ຫຼື ຂອງສັງຄົມ, ຊີວິດ, ສຸຂະພາບ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນເອງ ຫຼື ຂອງບຸກຄົນອື່ນ ແລະ ເມື່ອໄພອັນຕະລາຍດັ່ງກ່າວ ຫາກບໍ່ສາມາດຫຼີກເວັ້ນໄດ້ ດ້ວຍວິທີອື່ນ ແລະ ບໍ່ເກີດຈາກການກະທຳຂອງຕົນເອງ ແຕ່ຜົນເສຍຫາຍທີ່ເກີດຈາກການກະທຳນັ້ນ ຕ້ອງໜ້ອຍກວ່າຜົນເສຍຫາຍທີ່ຈະເກີດຂຶ້ນຈາກໄພອັນຕະລາຍ.

**ມາດຕາ 38 ການປະຕິບັດໜ້າທີ່ຕາມວິຊາຊີບ**

ການປະຕິບັດໜ້າທີ່ ຈະເປັນສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາໄດ້ ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ການກະທຳ ຕ້ອງຢູ່ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ;

2. ການກະທຳ ຕ້ອງຖືກຕ້ອງຕາມວິຊາສະເພາະ ແລະ ກົດໝາຍ.

**ມາດຕາ 39 ການປະຕິບັດຕາມຄຳສັ່ງ**

ການປະຕິບັດຕາມຄຳສັ່ງ ຈະຖືເປັນສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາໄດ້ ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຕ້ອງເປັນຄຳສັ່ງຈາກຜູ້ມີສິດ ແລະ ໜ້າທີ່ອອກຄຳສັ່ງນັ້ນ;

2. ຄຳສັ່ງນັ້ນ ຕ້ອງຖືກຕ້ອງຕາມກົດໝາຍ;

3. ຜູ້ປະຕິບັດຄຳສັ່ງ ຕ້ອງມີສິດ ແລະ ໜ້າທີ່ປະຕິບັດຄຳສັ່ງນັ້ນ;

4. ຜູ້ປະຕິບັດຄຳສັ່ງ ຕ້ອງປະຕິບັດໃນຂອບເຂດຂອງຄຳສັ່ງ ແລະ ຖືກຕ້ອງຕາມກົດໝາຍ.

**ມາດຕາ 40 ການຫຼິ້ນກິລາ**

ການຫຼິ້ນກິລາ ຈະເປັນສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາໄດ້ ກໍຕໍ່ເມື່ອການຫຼິ້ນກິລານັ້ນ ຫາກຢູ່ໃນຂອບເຂດກະຕິກາຂອງກິລາດັ່ງກ່າວ.

**ມາດຕາ 41 ການກະທຳຜິດຊຶ່ງຈຳເປັນຕ້ອງມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍ**

ໃນກໍລະນີທີ່ການກະທຳຜິດ ຫາກບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ຖ້າວ່າບໍ່ມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ກໍຈະດຳເນີນຄະດີບໍ່ໄດ້.

ການກະທຳຜິດທີ່ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ຊຶ່ງຈຳເປັນຕ້ອງມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ມີ ດັ່ງນີ້:

1. ການທຳຮ້າຍຮ່າງກາຍລະຫວ່າງຍາດໃກ້ຊິດ ທີ່ບໍ່ມີການບາດເຈັບສາຫັດ ຫຼື ບໍ່ເສຍອົງຄະ ຍົກເວັ້ນການທຳຮ້າຍຮ່າງກາຍແມ່ຍິງ ແລະ ເດັກ, ຜູ້ມີອາຍຸແຕ່ ຫົກສິບປີ ຂຶ້ນໄປ ຫຼື ຜູ້ເສຍອົງຄະ ຫຼື ການກະທຳຜິດເປັນອາຈິນ ຫຼື ການກະທຳຜິດບໍ່ເຂັດຫຼາບ;

2. ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການໝິ່ນປະໝາດຊາກສົບ ຫຼື ຊື່ສຽງຂອງຜູ້ຕາຍ;

3. ການທຳມິດສະຈານ;

4. ການກະທຳຜິດຕໍ່ກຳມະສິດສ່ວນຕົວຂອງຍາດໃກ້ຊິດ;

5. ການລ່ວງລະເມີດເຄຫະສະຖານ ແລະ ການລ່ວງລະເມີດຄວາມລັບສ່ວນຕົວ.

ການຖອນຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ກໍພາໃຫ້ການດຳເນີນຄະດີຢຸດຕິລົງ.

## ໝວດທີ 5
## ໂທດ

**ມາດຕາ 42 ໂທດ**

ໂທດ ແມ່ນ ມາດຕະການບັງຄັບຂອງລັດ ທີ່ກຳນົດໄວ້ໃນກົດໝາຍອາຍາ, ນຳໃຊ້ເພື່ອຈຳກັດສິດ, ຕັດສິດ ແລະ ຜົນປະໂຫຍດຂອງຜູ້ກະທຳຜິດ.

**ມາດຕາ 43 ຈຸດປະສົງຂອງການລົງໂທດ**

ການລົງໂທດ ບໍ່ພຽງແຕ່ຈະມີຈຸດປະສົງລົງໂທດຜູ້ກະທຳຜິດເທົ່ານັ້ນ ແຕ່ຫາກຍັງມີຈຸດປະສົງເພື່ອດັດສ້າງ ແລະ ສຶກສາອົບຮົມຜູ້ຖືກລົງໂທດໃຫ້ມີຈິດໃຈບໍລິສຸດຕໍ່ການອອກແຮງງານ, ໃຫ້ປະຕິບັດກົດໝາຍຢ່າງຖືກຕ້ອງ ແລະ ເຂັ້ມງວດ, ໃຫ້ເຄົາລົບລະບຽບການດຳລົງຊີວິດຂອງສັງຄົມພ້ອມທັງເປັນການປ້ອງກັນບໍ່ໃຫ້ການກະທຳຜິດເທື່ອໃໝ່ເກີດຂຶ້ນສຳລັບຜູ້ຖືກຕັດສິນລົງໂທດ ແລະ ບຸກຄົນອື່ນອີກດ້ວຍ.

ການລົງໂທດບໍ່ມີຈຸດປະສົງຈະກໍ່ຄວາມທຸກທໍລະມານແກ່ຮ່າງກາຍ ຫຼື ຢຽບຢ່ຳກຽດສັກສີຂອງມະນຸດ.

**ມາດຕາ 44 ປະເພດໂທດ**

ໂທດ ປະກອບດ້ວຍ ໂທດຕົ້ນຕໍ, ໂທດເພີ່ມ ແລະ ໂທດທາງເລືອກ.

ໂທດຕົ້ນຕໍ ມີ ດັ່ງນີ້:

1. ໂທດຕຳນິວິຈານ;
2. ໂທດປັບໃໝ;
3. ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ;
4. ໂທດເນລະເທດ;
5. ໂທດຕັດອິດສະລະພາບທີ່ມີກຳນົດ;
6. ໂທດຕັດອິດສະລະພາບຕະຫຼອດຊີວິດ;
7. ໂທດປະຫານຊີວິດ.

ໂທດເພີ່ມ ມີ ດັ່ງນີ້:

1. ໂທດປັບໃໝ ໃນກໍລະນີທີ່ບໍ່ເປັນໂທດຕົ້ນຕໍ;
2. ໂທດຣິບຊັບ;
3. ໂທດຣິບວັດຖຸສິ່ງຂອງ;

4. ໂທດປິດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ;

5. ໂທດຈຳກັດທີ່ຢູ່;

6. ໂທດເນລະເທດ ໃນກໍລະນີທີ່ບໍ່ເປັນໂທດຕົ້ນຕໍ;

7. ໂທດຟື້ນຟູຄືນ;

8. ໂທດຖອນໃບອະນຸຍາດ;

9. ໂທດຫ້າມດຳລົງຕຳແໜ່ງ ຫຼື ປະກອບອາຊີບໃດໜຶ່ງ ຫຼື ຖອນຫຼຽນ ຫຼື ປົດນາມມະຍົດ.

ສຳລັບການກະທຳຜິດຖານໂທສານຸໂທດ ສານ ສາມາດລົງໂທດ ໜຶ່ງ ຫຼື ສອງໂທດເພີ່ມ ແທນໂທດຕົ້ນຕໍ.

ໂທດທາງເລືອກ ມີ ດັ່ງນີ້:

1. ໂທດອອກແຮງງານເພື່ອສາທາລະນະ;

2. ໂທດຈຳກັດບໍລິເວນ.

ສານ ອາດນຳໃຊ້ ໂທດທາງເລືອກ ແທນໂທດຕົ້ນຕໍ ຫຼື ໂທດເພີ່ມ ຫຼື ນຳໃຊ້ແທນທັງສອງໂທດນັ້ນ ກໍໄດ້.

### ມາດຕາ 45 ໂທດຕຳນິວິຈານ

ໂທດຕຳນິວິຈານ ແມ່ນ ການຕຳນິວິຈານຜູ້ກະທຳຜິດໃນທີ່ປະຊຸມສານ. ໃນກໍລະນີຈຳເປັນກໍອາດຈະເອົາຄຳຕັດສິນຂອງສານ ລົງໃນໜ້າໜັງສືພິມ ຫຼື ນຳໃຊ້ວິທີການອື່ນກໍໄດ້.

### ມາດຕາ 46 ໂທດປັບໃໝ

ໂທດປັບໃໝ ແມ່ນ ໂທດທາງດ້ານການເງິນ ຊຶ່ງແມ່ນສານເປັນຜູ້ວາງຕາມກໍລະນີ ແລະ ຂອບເຂດທີ່ກົດໝາຍກຳນົດໄວ້. ສຳລັບຈຳນວນເງິນທີ່ຈະປັບໃໝນັ້ນ ສານ ຕ້ອງອີງໃສ່ລະດັບຄວາມເປັນອັນຕະລາຍຂອງການກະທຳຜິດ, ສະພາບທາງດ້ານຊັບສິນຂອງຜູ້ກະທຳຜິດ, ຄ່າຄອງຊີບໃນແຕ່ລະໄລຍະ. ເງິນທີ່ໄດ້ຈາກການປັບໃໝ ຕ້ອງມອບເຂົ້າງົບປະມານແຫ່ງລັດ.

ຄ່າປັບໃໝ ສາມາດຈ່າຍເທື່ອດຽວ ຫຼື ຈ່າຍເປັນງວດ ພາຍໃນກຳນົດເວລາຕາມຄຳຕັດສິນຂອງສານ. ໃນກໍລະນີທີ່ຜູ້ກະທຳຜິດ ຫາກບໍ່ສາມາດເສຍຄ່າປັບໃໝໄດ້ໃນເວລານັ້ນ ສານ ສາມາດປ່ຽນໂທດປັບໃໝມາເປັນໂທດອອກແຮງງານເພື່ອສາທາລະນະ ຫຼື ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ. ໃນກໍລະນີທີ່ຜູ້ກະທຳຜິດ ຫາກບໍ່ສາມາດເສຍຄ່າປັບໃໝຕາມຄຳຕັດສິນຂອງສານ ພາຍຫຼັງໄດ້ປະຕິບັດໂທດຕັດອິດສະລະພາບສຳເລັດແລ້ວ ສານ ສາມາດປ່ຽນໂທດປັບໃໝນັ້ນ ມາເປັນໂທດອອກແຮງງານເພື່ອສາທາລະນະ ຫຼື ໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບ.

ຫ້າມເອົາໂທດປັບໃໝ ມາເປັນໂທດຕັດອິດສະລະພາບ ແລະ ຫ້າມເອົາໂທດຕັດອິດສະລະພາບມາເປັນໂທດປັບໃໝ ໃນກໍລະນີການກະທຳຜິດທີ່ກົດໝາຍກຳນົດໂທດຕັດອິດສະລະພາບເກີນກວ່າ ສາມປີ ຂຶ້ນໄປ.

ສຳລັບການກະທຳຜິດກ່ຽວກັບເສດຖະກິດ ແລະ ການເງິນ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບ ຕ່ຳກວ່າ ສາມປີ ລົງມາ ຍົກເວັ້ນການກະທຳຜິດທີ່ບໍ່ເຊັດຫຼາຍ ຫຼື ເປັນອາຈິນນັ້ນ ສາມາດລົງໂທດປັບໃໝເປັນໂທດຕົ້ນຕໍ; ແຕ່ຖ້າວ່າຜູ້ກະທຳຜິດ ຫາກບໍ່ສາມາດປະຕິບັດໂທດປັບໃໝໄດ້ ສານ ກໍຈະຕັດສິນລົງໂທດຕັດອິດສະລະພາບແທນ ໂດຍຄິດໄລ່ໂທດຕັດອິດສະລະພາບ ໜຶ່ງວັນ ເທົ່າກັບຄ່າແຮງງານຕ່ຳສຸດຕໍ່ວັນ ຂອງຜູ້ອອກແຮງງານ.

**ມາດຕາ 47 ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ**

ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ແມ່ນ ໂທດທີ່ລົງໃສ່ຜູ້ກະທຳຜິດດ້ວຍການປະໃຫ້ຜູ້ກ່ຽວສືບຕໍ່ອອກແຮງງານຢູ່ບ່ອນເຮັດວຽກເດີມ ຫຼື ຢູ່ບ່ອນອື່ນ ໂດຍຫັກເອົາ ແຕ່ ຫ້າ ຫາ ຊາວສ່ວນຮ້ອຍ ຂອງຄ່າແຮງງານທັງໝົດຂອງຜູ້ກະທຳຜິດ ເຂົ້າເປັນລາຍຮັບຂອງລັດ ຕາມຄຳຕັດສິນຂອງສານ.

ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນ ບໍ່ໃຫ້ເກີນໜຶ່ງປີ.

**ມາດຕາ 48 ໂທດເນລະເທດ**

ໂທດເນລະເທດ ແມ່ນ ໂທດທີ່ສານວາງໃສ່ຜູ້ກະທຳຜິດທີ່ເປັນຄົນຕ່າງປະເທດ ໃຫ້ອອກຈາກດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນເວລາ ສິບປີ ຂຶ້ນໄປ. ສານ ອາດນຳໃຊ້ໂທດເນລະເທດ ເປັນໂທດຕົ້ນຕໍ ຫຼື ໂທດເພີ່ມ ຕາມແຕ່ລະກໍລະນີ. ໂທດເນລະເທດນີ້ ຈະວາງໃສ່ການກະທຳຜິດຖານໂທສານຸໂທດ ທີ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ການກະທຳຜິດຖານຄະຣຸໂທດ.

**ມາດຕາ 49 ໂທດຕັດອິດສະລະພາບທີ່ມີກຳນົດ**

ໂທດຕັດອິດສະລະພາບທີ່ມີກຳນົດ ແມ່ນ ໂທດຕັດອິດສະລະພາບທີ່ມີກຳນົດເວລາ ແຕ່ ສາມເດືອນ ຫາ ຊາວປີ ຊຶ່ງຜູ້ຖືກຕັດສິນ ຕ້ອງປະຕິບັດໃນຄ້າຍຄຸມຂັງ.

**ມາດຕາ 50 ໂທດຕັດອິດສະລະພາບຕະຫຼອດຊີວິດ**

ໂທດຕັດອິດສະລະພາບຕະຫຼອດຊີວິດ ແມ່ນ ໂທດຕັດອິດສະລະພາບໂດຍບໍ່ມີກຳນົດເວລາ, ນຳໃຊ້ຕໍ່ບຸກຄົນທີ່ກະທຳຜິດຮ້າຍແຮງເປັນພິເສດ ແຕ່ບໍ່ເຖິງຂັ້ນລົງໂທດປະຫານຊີວິດ.

ຫ້າມລົງໂທດຕັດອິດສະລະພາບຕະຫຼອດຊີວິດ ໃສ່ຜູ້ກະທຳຜິດທີ່ມີອາຍຸຕ່ຳກວ່າ ສິບແປດປີ ແລະ ຜູ້ຍິງທີ່ຖືພາໃນເວລາກະທຳຜິດ ໂດຍໃຫ້ລົງໂທດຕັດອິດສະລະພາບທີ່ມີກຳນົດ ຊາວປີ.

**ມາດຕາ 51 ໂທດປະຫານຊີວິດ**

ໂທດປະຫານຊີວິດ ແມ່ນ ມາດຕະການພິເສດຂອງການລົງໂທດ ທີ່ລົງໃສ່ຜູ້ກະທຳຜິດໃນສະຖານໜັກເປັນພິເສດ ຊຶ່ງໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາສະບັບນີ້ ແລະ ກົດໝາຍສະບັບອື່ນທີ່ກຳນົດການກະທຳຜິດທາງອາຍາ ແລະ ໂທດ.

ການປະຫານຊີວິດ ໃຫ້ປະຕິບັດດ້ວຍການຍິງເປົ້າ.

ຫ້າມລົງໂທດປະຫານຊີວິດ ໃສ່ຜູ້ກະທຳຜິດທີ່ມີອາຍຸຕໍ່າກວ່າ ສິບແປດປີ, ຜູ້ຍິງທີ່ຖືພາ, ແມ່ທີ່ລ້ຽງລູກນ້ອຍອາຍຸ ແຕ່ ສາມປີ ລົງມາ, ຜູ້ທີ່ມີອາຍຸ ແຕ່ ຫົກສິບປີ ຂຶ້ນໄປ ແລະ ຜູ້ພິການທາງສະໝອງໃນເວລາກະທຳຜິດ ຫຼື ໃນເວລາຕັດສິນ ຫຼື ໃນເວລາປະຕິບັດໂທດ ໂດຍໃຫ້ລົງໂທດຕັດອິດສະລະພາບຕະຫຼອດຊີວິດ.

**ມາດຕາ 52 ໂທດຮິບຊັບ**

ໂທດຮິບຊັບ ແມ່ນ ການເອົາຊັບທັງໝົດ ຫຼື ສ່ວນໃດໜຶ່ງ ທີ່ເປັນກຳມະສິດຂອງຜູ້ກະທຳຜິດທີ່ບໍ່ໄດ້ນຳໃຊ້ເຂົ້າໃນການກະທຳຜິດ ຫຼື ບໍ່ໄດ້ມາຈາກການກະທຳຜິດ ມາເປັນຂອງລັດ ໂດຍບໍ່ມີການໃຊ້ແທນ ຊຶ່ງຈະລົງໃສ່ໄດ້ແຕ່ການກະທຳຜິດທີ່ເປັນອັນຕະລາຍຮ້າຍແຮງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

ໃນກໍລະນີການຮິບຊັບທັງໝົດ ກໍຕ້ອງຍົກເວັ້ນ ຊັບທີ່ຈຳເປັນສຳລັບການດຳລົງຊີວິດຂອງຜູ້ກະທຳຜິດ ແລະ ຄອບຄົວຂອງຜູ້ກ່ຽວ ເຊັ່ນ ເຮືອນຢູ່ປະຈຳຂອງຜູ້ຖືກຕັດສິນ ແລະ ຄອບຄົວ, ສັດລ້ຽງສຳລັບບຸກຄົນທີ່ຖືເອົາການປູກຝັງ ຫຼື ການລ້ຽງສັດເປັນອາຊີບ, ວັດຖຸສິ່ງຂອງທີ່ໃຊ້ເປັນປະຈຳຂອງຜູ້ຖືກຕັດສິນ ແລະ ຂອງບຸກຄົນຊຶ່ງຢູ່ພາຍໃຕ້ການດູແລລ້ຽງດູຂອງຜູ້ຖືກຕັດສິນ. ໃນກໍລະນີທີ່ໄດ້ຕົກລົງຮິບຊັບສ່ວນໃດໜຶ່ງ ສານຕ້ອງກຳນົດຊັບທີ່ຈະຖືກຮິບນັ້ນໃຫ້ຈະແຈ້ງ.

ຊັບທີ່ເປັນກຳມະສິດຂອງລັດ ຈະບໍ່ຖືກຮິບ ຊຶ່ງຕ້ອງສົ່ງຄືນໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 53 ໂທດຮິບວັດຖຸສິ່ງຂອງ**

ໂທດຮິບວັດຖຸສິ່ງຂອງ ແມ່ນ ການເອົາວັດຖຸສິ່ງຂອງທີ່ໃຊ້ໃນການກະທຳຜິດ ຫຼື ສຳລັບໃຊ້ໃນການກະທຳຜິດ ຫຼື ໄດ້ມາຈາກການກະທຳຜິດໂດຍເຈດຕະນາ ມາເປັນຂອງລັດ.

ການຮິບວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດນັ້ນ ສາມາດປະຕິບັດໄດ້ຕໍ່ການກະທຳຜິດສະຖານໂທສານຸໂທດ ແລະ ຄະຣຸໂທດ.

ວັດຖຸສິ່ງຂອງຂອງບຸກຄົນອື່ນ ທີ່ຮັບໃຊ້ການກະທຳຜິດນັ້ນ ຈະຖືກຮິບເປັນຂອງລັດໄດ້ ກໍຕໍ່ເມື່ອເຈົ້າຂອງຜູ້ທີ່ໃຫ້ຢືມ ຫາກບໍ່ມີຄວາມບໍລິສຸດໃຈ ຫຼື ເມື່ອເຫັນວ່າການຮິບວັດຖຸສິ່ງຂອງນັ້ນ ມີຄວາມຈຳເປັນ ເພື່ອປົກປັກຮັກສາສັງຄົມ.

ວັດຖຸສິ່ງຂອງທີ່ເປັນກຳມະສິດຂອງລັດນັ້ນ ຈະບໍ່ຖືກຮິບ ຊຶ່ງຕ້ອງສົ່ງຄືນໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 54 ໂທດປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ**

ໂທດປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ແມ່ນ ການຕັດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງຂອງຜູ້ກະທຳຜິດໃນຖານຄະດີອາຍາ.

ໂທດປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນ ບໍ່ໃຫ້ເກີນ ຫ້າປີ ນັບແຕ່ວັນໄດ້ປະຕິບັດໂທດສິ້ນສຸດ ຫຼື ວັນໝົດອາຍຸຄວາມໃນການປະຕິບັດຄຳຕັດສິນ ເປັນຕົ້ນໄປ.

**ມາດຕາ 55 ໂທດຈຳກັດທີ່ຢູ່**

ໂທດຈຳກັດທີ່ຢູ່ ແມ່ນ ການຫ້າມຜູ້ຖືກຕັດສິນອອກຈາກສະຖານທີ່ໃດໜຶ່ງ ຫຼື ຫ້າມເຂົ້າໄປສະຖານທີ່ໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສິນຂອງສານ.

ໂທດຈຳກັດທີ່ຢູ່ ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນ ບໍ່ໃຫ້ເກີນ ຫ້າປີ ນັບແຕ່ວັນປະຕິບັດໂທດສິ້ນສຸດແລ້ວເປັນຕົ້ນໄປ.

ຫ້າມລົງໂທດຈຳກັດທີ່ຢູ່ໃສ່ຜູ້ກະທຳຜິດທີ່ມີອາຍຸຕໍ່າກວ່າ ສິບແປດປີ ແລະ ຜູ້ຍິງທີ່ຖືພາ ຫຼື ຜູ້ຍິງທີ່ມີລູກ ຊຶ່ງອາຍຸບໍ່ທັນເຖິງ ແປດປີ ໃນເວລາກະທຳຜິດ.

ໂທດຈຳກັດທີ່ຢູ່ ໄດ້ກຳນົດໄວ້ໃນພາກສະເພາະຂອງປະມວນກົດໝາຍສະບັບນີ້.

**ມາດຕາ 56 ໂທດຟື້ນຟູຄືນ**

ໂທດຟື້ນຟູຄືນ ແມ່ນ ໂທດທີ່ລົງໃສ່ຜູ້ກະທຳຜິດ ໃຫ້ຟື້ນຟູ ຫຼື ປັບປຸງສິ່ງແວດລ້ອມ ຫຼື ສິ່ງທີ່ຖືກທຳລາຍຄືນສູ່ສະພາບເດີມ ຫຼື ປົກກະຕິ ເຊັ່ນ ການຟື້ນຟູປ່າ, ນ້ຳ, ດິນ, ກິ່ນ, ອາກາດ.

**ມາດຕາ 57 ໂທດຖອນໃບອະນຸຍາດ**

ໂທດຖອນໃບອະນຸຍາດ ແມ່ນ ການຖອນໃບອະນຸຍາດຂອງຜູ້ກະທຳຜິດ ເຊັ່ນ ໃບຂັບຂີ່, ໃບອະນຸຍາດລົງທຶນ, ໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດຂຸດຄົ້ນຊັບພະຍາກອນທຳມະຊາດ ຫຼື ໃບອະນຸຍາດອື່ນ.

ສຳລັບການຖອນໃບອະນຸຍາດຂັບຂີ່ຍານພາຫະນະ ສານ ຈະຕັດສິນຖອນໃບອະນຸຍາດຂັບຂີ່ ຖ້າຜູ້ກະທຳຜິດ ຫາກໄດ້ລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ແຕ່ ສາມຄັ້ງ ຂຶ້ນໄປ ຫຼື ເປັນການກະທຳຜິດທີ່ສ້າງຄວາມເສຍຫາຍຢ່າງຮ້າຍແຮງ.

**ມາດຕາ 58 ໂທດຫ້າມດຳລົງຕຳແໜ່ງ ຫຼື ປະກອບອາຊີບໃດໜຶ່ງ ຫຼື ປິດຫຼຸບ ຫຼື ນາມມະຍົດ**

ໂທດຫ້າມດຳລົງຕຳແໜ່ງ ຫຼື ປະກອບອາຊີບໃດໜຶ່ງ ຫຼື ປິດຫຼຸບ ຫຼື ນາມມະຍົດ ແມ່ນ ການຫ້າມຜູ້ກະທຳຜິດ ດຳລົງຕຳແໜ່ງ ຫຼື ປະກອບອາຊີບໃດໜຶ່ງ ຫຼື ການປິດຫຼຸບ ຫຼື ນາມມະຍົດຂອງຜູ້ກະທຳຜິດ.

**ມາດຕາ 59 ໂທດອອກແຮງງານເພື່ອສາທາລະນະ**

ໂທດອອກແຮງງານເພື່ອສາທາລະນະ ແມ່ນ ວຽກອອກແຮງງານໃດໜຶ່ງເພື່ອຜົນປະໂຫຍດສາທາລະນະ ຊຶ່ງສານວາງໃສ່ຜູ້ກະທຳຜິດໃນຖານໂທສານຸໂທດ ຊຶ່ງກົດໝາຍກຳນົດໂທດຕັດອິດສະລະພາບບໍ່ເກີນ ສາມປີ. ວຽກອອກແຮງງານເພື່ອຜົນປະໂຫຍດສາທາລະນະນີ້ ຕ້ອງແມ່ນວຽກທີ່ບໍ່ລະເມີດ ຫຼື ຢຽບຢ່ຳກຽດສັກສີຂອງມະນຸດ ໂດຍບໍ່ມີຄ່າຕອບແທນ.

ໂທດອອກແຮງງານເພື່ອສາທາລະນະ ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນ ບໍ່ໃຫ້ຫຼຸດ ຫົກສິບຊົ່ວໂມງ ແລະບໍ່ໃຫ້ເກີນ ເຈັດຮ້ອຍຫ້າສິບຊົ່ວໂມງ.

ໃນການວາງໂທດອອກແຮງງານເພື່ອສາທາລະນະນັ້ນ ສານຕ້ອງອີງໃສ່ຈຸດປະສົງຂອງການລົງໂທດ, ລັກສະນະຂອງການກະທຳຜິດ, ບຸກຄະລິກກະພາບ ແລະ ການເຫັນດີຂອງຜູ້ກະທຳຜິດ. ສານ ອາດນຳໃຊ້ໂທດ ອອກແຮງງານເພື່ອສາທາລະນະ ແທນໂທດປັບໃໝ ຫຼື ໂທດຕັດອິດສະລະພາບບໍ່ເກີນ ສາມປີ ຫຼື ນຳໃຊ້ແທນທັງສອງໂທດນັ້ນ ກໍໄດ້.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກບໍ່ປະຕິບັດໂທດອອກແຮງງານເພື່ອສາທາລະນະ ຕາມຄຳຕັດສິນຂອງສານນັ້ນ ສານ ຈະຕັດສິນປ່ຽນໂທດນີ້ ມາເປັນໂທດຕັດອິດສະລະພາບທີ່ມີກຳນົດ ໂດຍຄິດໄລ່ທຸກແປດຊົ່ວໂມງໃດ ເທົ່າກັບໂທດຕັດອິດສະລະພາບ ໜຶ່ງວັນ.

**ມາດຕາ 60 ໂທດຈຳກັດບໍລິເວນ**

ໂທດຈຳກັດບໍລິເວນ ແມ່ນ ການຫ້າມຜູ້ຖືກສານຕັດສິນ ອອກຈາກສະຖານທີ່ໃດໜຶ່ງ ຫຼື ບໍລິເວນໃດໜຶ່ງ ຕາມທີ່ກຳນົດໄວ້ໃນຄຳຕັດສິນຂອງສານ. ໃນກໍລະນີມີຄວາມຈຳເປັນ ຕ້ອງໄດ້ຮັບການເຫັນດີຈາກສານ.

ໂທດຈຳກັດບໍລິເວນ ຈະລົງໃສ່ຜູ້ກະທຳຜິດນັ້ນ ສູງສຸດບໍ່ເກີນ ຫົກເດືອນ.

ໂທດຈຳກັດບໍລິເວນ ແມ່ນ ໂທດທາງເລືອກໜຶ່ງ ຊຶ່ງ ສານ ອາດນຳໃຊ້ແທນໂທດປັບໃໝ ຫຼື ໂທດຕັດອິດສະລະພາບ ຊຶ່ງກົດໝາຍກຳນົດໂທດຕັດອິດສະລະພາບບໍ່ເກີນ ສາມປີ ຍົກເວັ້ນການກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ເປັນອາຈິນ ໂດຍອີງຕາມລັກສະນະຂອງການກະທຳຜິດ ແລະ ບຸກຄະລິກກະພາບຂອງຜູ້ກະທຳຜິດ.

# ໝວດທີ 6
# ການວາງໂທດ

**ມາດຕາ 61 ຫຼັກການລວມຂອງການວາງໂທດ**

ສານ ເປັນຜູ້ວາງໂທດ ໃນຂອບເຂດຂອງມາດຕາກົດໝາຍທີ່ກຳນົດໂທດໃສ່ການກະທຳຜິດນັ້ນ.

ໃນການວາງໂທດນັ້ນ ສານ ຕ້ອງອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ບຸກຄະລິກກະພາບຂອງຜູ້ກະທຳຜິດ ແລະ ສາເຫດທີ່ພາໃຫ້ມີການຫຼຸດຜ່ອນ ຫຼື ການເພີ່ມຄວາມຮັບຜິດຊອບທາງອາຍາ.

**ມາດຕາ 62 ລັກສະນະຄວາມເປັນອັນຕະລາຍຂອງການກະທຳຜິດ**

ລັກສະນະຄວາມເປັນອັນຕະລາຍຂອງການກະທຳຜິດ ແມ່ນ ສະຖານການກະທຳຜິດ ແລະ ວິທີການກະທຳຜິດ.

ສະຖານການກະທຳຜິດ ແມ່ນ ການກະທຳຜິດໃນສະຖານ ລະຫຸໂທດ, ໂທສານຸໂທດ ແລະ ຄະຣຸໂທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງປະມວນກົດໝາຍສະບັບນີ້.

ວິທີການກະທຳຜິດ ແມ່ນ ວິທີທີ່ນຳໃຊ້ໃນການກະທຳຜິດ ເຊັ່ນ ດ້ວຍວິທີທໍລະມານ, ປະຈານຜູ້ຖືກເຄາະຮ້າຍ, ດ້ວຍວິທີທີ່ເປັນອັນຕະລາຍຕໍ່ສາທາລະນະ.

**ມາດຕາ 63 ລະດັບຄວາມເປັນອັນຕະລາຍຂອງການກະທຳຜິດ**

ລະດັບຄວາມເປັນອັນຕະລາຍຂອງການກະທຳຜິດ ຂຶ້ນກັບຜົນເສຍຫາຍຕົວຈິງທາງດ້ານຊີວິດ, ສຸຂະພາບ, ກຽດສັກສີ ແລະ ຊັບສິນ ທີ່ເນື່ອງມາຈາກການກະທຳຜິດໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ.

ສຳລັບຜົນເສຍຫາຍທາງດ້ານຊັບສິນນັ້ນ ມີ ສາມລະດັບ ດັ່ງນີ້:

1. ລະດັບຕ່ຳ ຫຼື ເສຍຫາຍໜ້ອຍ: ຕ່ຳກວ່າ 20.000.000 ກີບ;
2. ລະດັບກາງ ຫຼື ເສຍຫາຍຫຼາຍ: ເກີນກວ່າ 20.000.000 ກີບ ຫາ 50.000.000 ກີບ;
3. ລະດັບສູງ ຫຼື ເສຍຫາຍຢ່າງຫຼວງຫຼາຍ: ເກີນກວ່າ 50.000.000 ກີບ.

**ມາດຕາ 64 ສາເຫດທີ່ພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ**

ສາເຫດທີ່ພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ ມີ ດັ່ງນີ້:

1. ຜູ້ກະທຳຜິດມີອາຍຸຕ່ຳກວ່າ ສິບແປດປີ ຫຼື ເກີນກວ່າ ຫົກສິບປີ;
2. ຜູ້ກະທຳຜິດ ແມ່ນຜູ້ຍິງທີ່ຖືພາ ຫຼື ແມ່ທີ່ມີລູກອ່ອນອາຍຸແຕ່ ສາມປີ ລົງມາ;

3. ການປ້ອງກັນຕົວເກີນຂອບເຂດ;

4. ການກະທຳຜິດຍ້ອນຖືກແຕະຕ້ອງທາງດ້ານຈິດໃຈຢ່າງໜັກ ຈົນບໍ່ສາມາດຄຸມສະຕິໄວ້ໄດ້ ດ້ວຍການກະທຳອັນບໍ່ຖືກຕ້ອງຕາມກົດໝາຍຂອງຜູ້ຖືກເຄາະຮ້າຍ;

5. ການກະທຳເກີນກວ່າຄວາມຈຳເປັນ;

6. ການກະທຳຜິດໃນສະຖານຄະຣຸໂທດ ຍ້ອນຖືກບັງຄັບ ຫຼື ຖືກຂົ່ມຂູ່;

7. ຜູ້ກະທຳຜິດຢັບຢັ້ງ ແລະ ແກ້ໄຂຜົນເສຍຫາຍຂອງການກະທຳຜິດທີ່ຕົນໄດ້ກໍ່ຂຶ້ນ ຫຼື ໄດ້ຈິງໃຈໃຊ້ແທນຄ່າເສຍຫາຍໂດຍສະໝັກໃຈແລ້ວ;

8. ການກະທຳຜິດຍ້ອນສະພາບຫຍຸ້ງຍາກໜັກໜ່ວງທາງສ່ວນຕົວ ຫຼື ທາງຄອບຄົວ;

9. ຜູ້ກະທຳຜິດຮູ້ສຶກກິນແໜງ ແລ້ວຈິງໃຈມອບຕົວຕໍ່ເຈົ້າໜ້າທີ່, ຮັບສາລະພາບ ແລະ ເປີດເຜີຍການກະທຳຜິດຂອງຕົນ ແລະ ການກະທຳຜິດຂອງຜູ້ອື່ນ;

10. ການກະທຳຜິດຄັ້ງທຳອິດ ຖ້າວ່າການກະທຳຜິດດັ່ງກ່າວ ຫາກບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ;

11. ຜູ້ກະທຳຜິດທີ່ໄດ້ມີຄຸນງາມຄວາມດີຕໍ່ປະເທດຊາດ.

ໃນການວາງໂທດນັ້ນ ສານ ອາດອີງໃສ່ສາເຫດອື່ນ ທີ່ພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ ທີ່ບໍ່ໄດ້ກຳນົດໄວ້ໃນມາດຕານີ້ ກໍໄດ້.

**ມາດຕາ 65 ສາເຫດທີ່ພາໃຫ້ມີການເພີ່ມຄວາມຮັບຜິດຊອບທາງອາຍາ**

ສາເຫດທີ່ພາໃຫ້ມີການເພີ່ມຄວາມຮັບຜິດຊອບທາງອາຍາ ມີ ດັ່ງນີ້:

1. ຜູ້ທີ່ເຄີຍໄດ້ກະທຳຜິດມາກ່ອນແລ້ວ ມາກະທຳຜິດເທື່ອໃໝ່ອີກ;

2. ການກະທຳຜິດທີ່ມີການຈັດຕັ້ງເປັນກຸ່ມ;

3. ການກະທຳຜິດຍ້ອນຄວາມໂລບມາກໂລພາ;

4. ການກະທຳຜິດຕໍ່ກຳມະສິດຂອງລັດ;

5. ການກະທຳຜິດຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ຂອງລັດ;

6. ການກະທຳຜິດຕໍ່ເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ, ຜູ້ເຖົ້າ, ຜູ້ທີ່ບໍ່ສາມາດປ້ອງກັນຕົວໄດ້, ຜູ້ທີ່ຂຶ້ນກັບຕົນທາງດ້ານວັດຖຸ ຫຼື ດ້ານອື່ນ, ຜູ້ທີ່ຢູ່ໃຕ້ການບັງຄັບບັນຊາຂອງຕົນ;

7. ການຍຸແຍ່ໃຫ້ເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ໄປກະທຳຜິດ, ການຊັກຊວນເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ໃຫ້ເຂົ້າຮ່ວມໃນການກະທຳຜິດ;

8. ການກະທຳຜິດແບບໂຫດຮ້າຍປ່າເຖື່ອນ ຫຼື ແບບປະຈານຜູ້ຖືກເຄາະຮ້າຍ;

9. ການກະທຳຜິດທີ່ພາໃຫ້ມີຜົນສະທ້ອນອັນໜັກໜ່ວງ;

10. ການສວຍໂອກາດກະທຳຜິດໃນເວລາເກີດໄພພິບັດ;

11. ການກະທຳຜິດດ້ວຍວິທີທີ່ມີລັກສະນະເປັນອັນຕະລາຍຕໍ່ສາທາລະນະຊົນ;

12. ການກະທຳຜິດຍ້ອນເມົາເຫຼົ້າ ຫຼື ເມົາສິ່ງເສບຕິດ. ອີງຕາມລັກສະນະຂອງການກະທຳຜິດດັ່ງກ່າວ ສານ ມີສິດຊີ້ຂາດວ່າ ການກະທຳນັ້ນ ບໍ່ເປັນສາເຫດທີ່ພາໃຫ້ມີການເພີ່ມຄວາມຮັບຜິດຊອບທາງອາຍາ;

13. ການໃຫ້ການຊັດທອດຄວາມຜິດໃສ່ຜູ້ທີ່ຕົນຮູ້ແຈ້ງວ່າເປັນຄົນບໍລິສຸດ;

14. ຜູ້ທີ່ໄດ້ກະທຳຜິດ ເພື່ອປົກປິດການກະທຳຜິດອື່ນ ຫຼື ໃຊ້ຄວາມຮຸນແຮງເພື່ອຫຼົບໜີ.

**ມາດຕາ 66 ການວາງໂທດໃສ່ການກະທຳຜິດຫຼາຍສະຖານ**

ໃນການວາງໂທດໃສ່ການກະທຳຜິດອັນດຽວ ທີ່ຜິດຕໍ່ຫຼາຍມາດຕາ ໃຫ້ເອົາມາດຕາກົດໝາຍທີ່ກຳນົດໂທດໜັກກວ່າໝູ່ ມາວາງໃສ່.

ໃນການວາງໂທດໃສ່ການກະທຳຜິດຫຼາຍອັນທີ່ຜິດຕໍ່ຫຼາຍມາດຕາ ໃຫ້ວາງໂທດໃສ່ແຕ່ລະການກະທຳຜິດ ແລ້ວຈຶ່ງເອົາມາລົມໃສ່ກັນ ແຕ່ໂທດທີ່ມີກຳນົດທີ່ວາງໃສ່ນັ້ນ ສູງສຸດບໍ່ໃຫ້ເກີນ ສິບປີ ສຳລັບສະຖານໂທສານຸໂທດ ແລະ ບໍ່ໃຫ້ເກີນ ຊາວປີ ສຳລັບສະຖານຄະຣຸໂທດ. ໃນກໍລະນີການກະທຳຜິດຫຼາຍອັນທີ່ຜິດຕໍ່ຫຼາຍມາດຕາ ໃນສະຖານໂທສານຸໂທດ ແລະ ຄະຣຸໂທດ ໃຫ້ຖືເອົາສະຖານຄະຣຸໂທດ ເປັນຕົ້ນຕໍ.

ສຳລັບການກະທຳຜິດ ໃນສະຖານຄະຣຸໂທດ ທີ່ມີໂທດຕັດອິດສະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ ໃຫ້ວາງໂທດຕາມທີ່ກຳນົດໄວ້ໃນມາດຕາ ຫຼື ວັກທີ່ກ່ຽວຂ້ອງ.

ໃນການວາງໂທດໃສ່ການກະທຳຜິດຫຼາຍອັນທີ່ຜິດຕໍ່ຫຼາຍມາດຕາ ທີ່ກົດໝາຍກຳນົດໂທດເທົ່າກັນ ໃຫ້ວາງໂທດໃສ່ແຕ່ລະການກະທຳຜິດ ແລ້ວເອົາບັນດາໂທດທັງໝົດມາລົມໃສ່ກັນ ແຕ່ໂທດທີ່ວາງໃສ່ນັ້ນ ບໍ່ໃຫ້ເກີນໂທດສູງສຸດຂອງການກະທຳຜິດທີ່ກຳນົດໃນມາດຕາທີ່ກ່ຽວຂ້ອງ.

ສານ ອາດຕື່ມໂທດເພີ່ມໃດໜຶ່ງໃສ່ໂທດຕົ້ນຕໍອີກກໍໄດ້ ໃນກໍລະນີທີ່ໂທດເພີ່ມນັ້ນ ຫາກໄດ້ບົ່ງໄວ້ໃນກົດໝາຍອາຍາ.

ໃນກໍລະນີທີ່ ສານ ຫາກໄດ້ຕັດສິນ ຫຼື ຄຳຕັດສິນໃຊ້ໄດ້ຢ່າງເດັດຂາດ ຫຼື ຜູ້ກະທຳຜິດ ຫາກໄດ້ປະຕິບັດໂທດສ່ວນໃດສ່ວນໜຶ່ງ ຫຼື ທັງໝົດແລ້ວ ຫາກຍັງເຫັນຕື່ມວ່າ ຜູ້ກະທຳຜິດ ໄດ້ກະທຳຜິດມາກ່ອນ ການວາງໂທດ ກໍໃຫ້ປະຕິບັດຕາມວິທີທີ່ໄດ້ກຳນົດໄວ້ໃນວັກເທິງນີ້.

ສຳລັບໂທດປັບໃໝນັ້ນ ໃຫ້ວາງໃສ່ການກະທຳຜິດແຕ່ລະສະຖານ, ຈະເອົາມາລົມໃສ່ກັນ ຫຼື ລົມໃສ່ໂທດປະເພດອື່ນຕາມວິທີກ່າວມາເທິງນັ້ນ ແມ່ນບໍ່ໄດ້.

**ມາດຕາ 67 ການວາງໂທດໃສ່ການກະທຳຜິດຊ້ຳ ແລະ ການກະທຳຜິດຊ້ອນ**

ໃນການວາງໂທດໃສ່ການກະທຳຜິດຊ້ຳ ແລະ ການກະທຳຜິດຊ້ອນ ໃຫ້ປະຕິບັດເຊັ່ນດຽວກັນກັບການວາງໂທດໃສ່ການກະທຳຜິດຫຼາຍສະຖານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 66 ຂອງປະມວນກົດໝາຍສະບັບນີ້.

**ມາດຕາ 68 ການວາງໂທດໃສ່ການກະທຳຜິດທີ່ບໍ່ເຊັດຂາດ**

ໃນການວາງໂທດໃສ່ການກະທຳຜິດທີ່ບໍ່ເຊັດຂາດ ໃນການກະທຳຜິດຖານໂທສານຸໂທດ ຫຼື ໃນການກະທຳຜິດຫຼາຍສະຖານ ໃຫ້ເອົາໂທດທີ່ສານຈະວາງໃສ່ຜູ້ກະທຳຜິດໃນກໍລະນີທຳມະດາ ມາສົມໃສ່ເຄິ່ງໜຶ່ງຂອງໂທດດັ່ງກ່າວ.

ສ່ວນການກະທຳຜິດທີ່ບໍ່ເຊັດຂາດໃນການກະທຳຜິດຖານຄະຣຸໂທດນັ້ນ ເປັນສາເຫດໜຶ່ງທີ່ພາໃຫ້ເພີ່ມຄວາມຮັບຜິດຊອບທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 65 ຂອງປະມວນກົດໝາຍສະບັບນີ້.

ໃນກໍລະນີທີ່ຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ ຫຼື ໃນເວລາປະຕິບັດໂທດຢູ່ນັ້ນ ຖ້າວ່າຜູ້ຖືກຕັດສິນ ຫາກໄດ້ກະທຳຜິດໃໝ່ອີກ ສານ ຈະຕື່ມໂທດເກົ່າທີ່ຍັງບໍ່ທັນໄດ້ປະຕິບັດທັງໝົດ.

**ມາດຕາ 69 ການວາງໂທດໃສ່ການກະກຽມໃຫ້ແກ່ການກະທຳຜິດ**

ໃນການວາງໂທດໃສ່ການກະກຽມໃຫ້ແກ່ການກະທຳຜິດ ໃຫ້ອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ຕາມລະດັບການປະຕິບັດ, ເຈດຕະນາຂອງຜູ້ກະທຳຜິດ ແລະ ສາເຫດທີ່ພາໃຫ້ການກະທຳຜິດບໍ່ສຳເລັດ.

ໃນການວາງໂທດໃສ່ການກະກຽມໃຫ້ແກ່ການກະທຳຜິດນັ້ນ ສານ ຈະວາງໂທດຕ່ຳກວ່າທີ່ກົດໝາຍກຳນົດໄວ້ກໍໄດ້.

**ມາດຕາ 70 ການວາງໂທດໃສ່ຄວາມພະຍາຍາມກໍ່ການກະທຳຜິດ**

ໃນການວາງໂທດໃສ່ຄວາມພະຍາຍາມກໍ່ການກະທຳຜິດ ໃຫ້ອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ຕາມລະດັບການປະຕິບັດ, ເຈດຕະນາຂອງຜູ້ກະທຳຜິດ ແລະ ສາເຫດທີ່ພາໃຫ້ການກະທຳຜິດບໍ່ສຳເລັດ.

ໃນການວາງໂທດໃສ່ຄວາມພະຍາຍາມກໍ່ການກະທຳຜິດນັ້ນ ສານ ຈະວາງໂທດຕ່ຳກວ່າທີ່ກົດໝາຍກຳນົດໄວ້ກໍໄດ້.

**ມາດຕາ 71 ການວາງໂທດໃສ່ຕົວການ**

ສານ ຕ້ອງວາງໂທດໃສ່ຜູ້ເຂົ້າຮ່ວມການກະທຳຜິດທີ່ເປັນຕົວການ ຕາມທີ່ກົດໝາຍກຳນົດໄວ້ ສຳລັບການກະທຳຜິດນັ້ນ.

ໂທດທີ່ວາງໃສ່ຕົວການນັ້ນ ອາດສູງກວ່າໂທດທີ່ວາງໃສ່ຜູ້ເຂົ້າຮ່ວມອື່ນໃນການກະທຳຜິດ ໂດຍອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ບຸກຄະລິກກະພາບຂອງຕົວການ ແລະ ສາເຫດທີ່ພາໃຫ້ມີການຫຼຸດຜ່ອນ ຫຼື ການເພີ່ມຄວາມຮັບຜິດຊອບທາງອາຍາ.

**ມາດຕາ 72 ການວາງໂທດໃສ່ຜູ້ປະຕິບັດ**

ສານ ອາດວາງໂທດໃສ່ຜູ້ປະຕິບັດ ເທົ່າກັບຕົວການ ໂດຍອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ບຸກຄະລິກກະພາບຂອງຜູ້ປະຕິບັດ ແລະ ສາເຫດທີ່ພາໃຫ້ມີການຫຼຸດຜ່ອນ ຫຼື ການເພີ່ມຄວາມຮັບຜິດຊອບທາງອາຍາ.

**ມາດຕາ 73 ການວາງໂທດໃສ່ຜູ້ຍຸຍົງ**

ສານ ອາດວາງໂທດໃສ່ຜູ້ຍຸຍົງເທົ່າກັບຜູ້ເຂົ້າຮ່ວມອື່ນໃນການກະທຳຜິດ ຫຼື ຕໍ່າກວ່າທີ່ກົດໝາຍກຳນົດໄວ້ກໍໄດ້ ໂດຍອີງຕາມລະດັບ ແລະ ລັກສະນະຂອງການຍຸຍົງ.

ສຳລັບການຍຸຍົງໃນການກະທຳຜິດ ທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບຕະຫຼອດຊີວິດ ຫຼື ປະຫານຊີວິດນັ້ນ ສານ ອາດຈະຫຼຸດລົງມາເປັນໂທດຕັດອິດສະລະພາບແຕ່ ສິບຫ້າປີ ຫາ ຊາວປີ ກໍໄດ້.

**ມາດຕາ 74 ການວາງໂທດໃສ່ຜູ້ສົມຮູ້ຮ່ວມຄິດ**

ສານ ອາດວາງໂທດໃສ່ຜູ້ສົມຮູ້ຮ່ວມຄິດເທົ່າກັບຜູ້ເຂົ້າຮ່ວມອື່ນໃນການກະທຳຜິດ ຫຼື ຕໍ່າກວ່າທີ່ກົດໝາຍກຳນົດໄວ້ກໍໄດ້ ໂດຍອີງຕາມລະດັບ ແລະ ລັກສະນະຂອງການສົມຮູ້ຮ່ວມຄິດ.

ສຳລັບການສົມຮູ້ຮ່ວມຄິດໃນການກະທຳຜິດ ທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບຕະຫຼອດຊີວິດ ຫຼື ປະຫານຊີວິດນັ້ນ ສານ ອາດຈະຫຼຸດ ລົງມາເປັນໂທດຕັດອິດສະລະພາບແຕ່ ສິບຫ້າປີ ຫາ ຊາວປີ ກໍໄດ້.

**ມາດຕາ 75 ການວາງໂທດໃສ່ການກະທຳຜິດທີ່ເປັນສາເຫດພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ**

ໃນການວາງໂທດໃສ່ການກະທຳຜິດ ທີ່ເປັນສາເຫດພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍານັ້ນ ໃຫ້ອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ລະດັບການປະຕິບັດ ແລະ ເຈດຕະນາ, ປະຫວັດ, ບຸກຄະລິກກະພາບຂອງຜູ້ກະທຳຜິດ.

ໃນການວາງໂທດໃສ່ການກະທຳຜິດ ທີ່ເປັນສາເຫດພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍານັ້ນ ສານ ອາດວາງໂທດຕໍ່າກວ່າທີ່ກົດໝາຍກຳນົດໄວ້ ກໍໄດ້.

**ມາດຕາ 76 ການວາງໂທດໃສ່ການກະທຳຜິດທີ່ເປັນສາເຫດພາໃຫ້ມີການເພີ່ມຄວາມຮັບ ຜິດຊອບທາງອາຍາ**

ໃນການວາງໂທດໃສ່ການກະທຳຜິດ ທີ່ເປັນສາເຫດພາໃຫ້ມີການເພີ່ມຄວາມຮັບຜິດຊອບທາງອາຍານັ້ນ ໃຫ້ອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ລະດັບການປະຕິບັດ ແລະ ເຈດຕະນາ, ປະຫວັດ, ບຸກຄະລິກກະພາບຂອງຜູ້ກະທຳຜິດ.

ການວາງໂທດໃສ່ການກະທຳຜິດ ທີ່ເປັນສາເຫດພາໃຫ້ມີການເພີ່ມຄວາມຮັບຜິດຊອບ ບໍ່ໃຫ້ເກີນຂອບເຂດຂອງມາດຕາທີ່ກ່ຽວຂ້ອງ.

**ມາດຕາ 77 ການວາງໂທດໃສ່ການກະທຳຜິດທີ່ເປັນທັງສາເຫດພາໃຫ້ມີການຫຼຸດຜ່ອນ ແລະ ເພີ່ມຄວາມຮັບຜິດຊອບທາງອາຍາ**

ໃນການວາງໂທດໃສ່ການກະທຳຜິດທີ່ເປັນທັງສາເຫດພາໃຫ້ມີການຫຼຸດຜ່ອນ ແລະ ເພີ່ມຄວາມຮັບຜິດຊອບທາງອາຍານັ້ນ ໃຫ້ອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ລະດັບການປະຕິບັດ ແລະ ເຈດຕະນາ, ປະຫວັດ, ບຸກຄະລິກກະພາບຂອງຜູ້ກະທຳຜິດ.

**ມາດຕາ 78 ການວາງໂທດຕໍ່າກວ່າທີ່ກົດໝາຍກຳນົດໄວ້**

ການວາງໂທດຕໍ່າກວ່າທີ່ກົດໝາຍກຳນົດໄວ້ ແມ່ນ ການວາງໂທດຕໍ່າກວ່າຂອບເຂດຂອງມາດຕາກົດໝາຍ ທີ່ກຳນົດໂທດໃສ່ການກະທຳຜິດນັ້ນ ຍົກເວັ້ນໂທດທີ່ກຳນົດໄວ້ໃນມາດຕາ 73 ວັກ 2, 74 ວັກ 2, ມາດຕາ 86 ວັກ 5 ຂອງປະມວນກົດໝາຍສະບັບນີ້.

ໃນການວາງໂທດຕໍ່າກວ່າທີ່ກົດໝາຍກຳນົດໄວ້ນັ້ນ ສານ ຕ້ອງອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ບຸກຄະລິກກະພາບຂອງຜູ້ກະທຳຜິດ ແລະ ສາເຫດທີ່ພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ.

ການວາງໂທດຕໍ່າກວ່າທີ່ກົດໝາຍກຳນົດໄວ້ ໃສ່ການກະທຳຜິດ ບໍ່ໃຫ້ຫຼຸດເຄິ່ງໜຶ່ງຂອງໂທດຕໍ່າສຸດທີ່ກົດໝາຍກຳນົດໂທດສຳລັບການກະທຳຜິດດັ່ງກ່າວ.

ໃນກໍລະນີພິເສດ ເມື່ອຜູ້ກະທຳຜິດ ຫາກໄດ້ກະທຳຜິດເພື່ອປົກປ້ອງສັງຄົມ ຫຼື ບຸກຄົນອື່ນ ສານອາດລົງໂທດຕໍ່າກວ່າເຄິ່ງໜຶ່ງຂອງໂທດຕໍ່າສຸດ ທີ່ກຳນົດໄວ້ໃນມາດຕາທີ່ກ່ຽວຂ້ອງຂອງກົດໝາຍອາຍາ.

ໃນກໍລະນີທີ່ການກະທຳຜິດອັນດຽວ ຫຼື ຫຼາຍອັນ ທີ່ຜິດຕໍ່ຫຼາຍມາດຕາ ຫຼື ຫຼາຍວັກ ໃນມາດຕາດຽວ ການວາງໂທດຕໍ່າກວ່າທີ່ກົດໝາຍກຳນົດໄວ້ໃສ່ການກະທຳຜິດນັ້ນ ບໍ່ໃຫ້ຫຼຸດເຄິ່ງໜຶ່ງ ຂອງໂທດຕໍ່າສຸດຂອງມາດຕາ ຫຼື ວັກ ທີ່ກຳນົດໂທດໜັກກວ່າໝູ່.

### ມາດຕາ 79 ການພາກໂທດ

ການພາກໂທດຕັດອິດສະລະພາບທີ່ມີກຳນົດ, ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ໂທດປັບໃໝທີ່ເປັນໂທດຕົ້ນຕໍ ແມ່ນ ການໂຈະການປະຕິບັດໂທດນີ້ໄວ້ ຫ້າປີ, ຖ້າວ່າພາຍໃນກຳນົດເວລາດັ່ງກ່າວ ຜູ້ຖືກສານຕັດສິນ ຫາກບໍ່ໄດ້ກະທຳຜິດໂດຍເຈດຕະນາອີກ ໂທດທີ່ພາກໄວ້ນັ້ນ ກໍຈະຕົກໄປ. ແຕ່ຖ້າຜູ້ກະທຳຜິດ ຫາກໄດ້ກະທຳຜິດໃໝ່ໂດຍເຈດຕະນາ ແລະ ຖືກສານຕັດສິນລົງໂທດຕັດອິດສະລະພາບທີ່ມີກຳນົດ, ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ໂທດປັບໃໝທີ່ເປັນໂທດຕົ້ນຕໍນັ້ນ, ເມື່ອຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ ຜູ້ກ່ຽວກໍຈະໄດ້ປະຕິບັດໂທດໃໝ່ ລວມທັງໂທດເກົ່າທີ່ພາກໄວ້ນັ້ນອີກ.

ໃນການພາກໂທດນັ້ນ ຈະພາກທັງໝົດ ຫຼື ພາກສ່ວນໃດສ່ວນໜຶ່ງກໍໄດ້.

ສຳລັບຜູ້ກະທຳຜິດທີ່ບໍ່ເຂັດຫຼາບ, ຜູ້ທີ່ຖືກຕັດສິນລົງໂທດຕັດອິດສະລະພາບແຕ່ ສາມປີ ຂຶ້ນໄປ ຫຼື ຜູ້ທີ່ຖືກສານຕັດສິນລົງໂທດໃນສະຖານຄະຣຸໂທດນັ້ນ ຈະບໍ່ໄດ້ຮັບການພາກໂທດ. ຍົກເວັ້ນກໍລະນີພິເສດທີ່ຜູ້ກະທຳຜິດ ຫາກໄດ້ກະທຳລົງໄປເພື່ອປົກປ້ອງສັງຄົມ ຫຼື ບຸກຄົນອື່ນ ສານ ກໍສາມາດພາກໂທດເຖິງວ່າຈະເປັນການກະທຳຜິດໃນສະຖານຄະຣຸໂທດ ກໍຕາມ.

### ມາດຕາ 80 ການຄິດໄລ່ການກັກຂັງພາງເຂົ້າໃນການປະຕິບັດໂທດ

ກຳນົດເວລາການກັກຂັງພາງທັງໝົດ ຕ້ອງຄິດໄລ່ເຂົ້າໃນກຳນົດເວລາການປະຕິບັດໂທດຕັດອິດສະລະພາບ ຫຼື ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ.

ການກັກຂັງພາງ ໜຶ່ງວັນ ເທົ່າກັບໂທດຕັດອິດສະລະພາບ ໜຶ່ງວັນ ຫຼື ເທົ່າກັບໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ສາມວັນ.

### ມາດຕາ 81 ການສົ່ງຜູ້ກະທຳຜິດໃຫ້ອົງການປົກຄອງ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງສຶກສາອົບຮົມ

ສຳລັບການກະທຳຜິດໃນສະຖານລະຫຸໂທດ ຖ້າຫາກເຫັນວ່າບຸກຄະລິກກະພາບຂອງຜູ້ກະທຳຜິດ ບໍ່ເປັນອັນຕະລາຍຕໍ່ສັງຄົມ ສານ ອາດສົ່ງຜູ້ກະທຳຜິດໃຫ້ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງອື່ນຂອງລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ຫຼື ອົງການສາສະໜາ ສຶກສາອົບຮົມ.

## ໝວດທີ 7
## ມາດຕະການຂອງສານ

**ມາດຕາ 82 ມາດຕະການຂອງສານຕໍ່ຄົນເສຍຈິດ**

ສໍາລັບຜູ້ທີ່ໄດ້ກະທໍາຜິດໃນເວລາເສຍຈິດ ຫຼື ໃນເວລາມີສະຕິສົມບູນດີ ແຕ່ໄດ້ເກີດເປັນໂຣກຈິດກ່ອນສານຕັດສິນ ຫຼື ເວລາປະຕິບັດໂທດຢູ່ນັ້ນ ສານ ອາດສົ່ງໄປປິ່ນປົວຢູ່ໂຮງໝໍໂຣກຈິດ ຫຼື ສະຖານທີ່ປິ່ນປົວສະເພາະ.

ພາຍຫຼັງຜູ້ກະທໍາຜິດ ໄດ້ຮັບການປິ່ນປົວຫາຍດີແລ້ວ ຕ້ອງນໍາເອົາຜູ້ກ່ຽວມາດໍາເນີນຄະດີ ຫຼື ມາປະຕິບັດໂທດ ຖ້າວ່າອາຍຸຄວາມໃນການຮ້ອງຟ້ອງ ຫຼື ອາຍຸຄວາມໃນການປະຕິບັດຄໍາຕັດສິນ ຂອງສານຫາກຍັງບໍ່ທັນໝົດ.

ກໍານົດເວລາໃນການປິ່ນປົວ ໃຫ້ຄິດໄລ່ເຂົ້າໃນກໍານົດເວລາຂອງການປະຕິບັດໂທດ.

**ມາດຕາ 83 ມາດຕະການຂອງສານຕໍ່ຜູ້ຕິດເຫຼົ້າ, ຢາເສບຕິດ ຫຼື ສິ່ງເສບຕິດອື່ນ**

ສໍາລັບຜູ້ຕິດເຫຼົ້າ, ຢາເສບຕິດ ຫຼື ສິ່ງເສບຕິດອື່ນ ທີ່ໄດ້ກະທໍາຜິດ ຊຶ່ງບໍ່ຖືກລົງໂທດຕັດອິດສະລະພາບ ສານ ອາດນໍາໃຊ້ມາດຕະການປິ່ນປົວ ໂດຍສົ່ງເຂົ້າໂຮງໝໍ ຫຼື ສະຖານທີ່ປິ່ນປົວສະເພາະ.

ໃນກໍລະນີທີ່ຕັດສິນລົງໂທດຕັດອິດສະລະພາບ ສານຕ້ອງນໍາໃຊ້ມາດຕະການປິ່ນປົວໃນໄລຍະການປະຕິບັດໂທດນັ້ນ ແລະ ເມື່ອພົ້ນໂທດແລ້ວ ແຕ່ການປິ່ນປົວຫາກຍັງບໍ່ທັນຫາຍດີ ສານ ອາດຈະນໍາໃຊ້ມາດຕະການປິ່ນປົວຕໍ່ ໂດຍສົ່ງເຂົ້າໂຮງໝໍສໍາລັບຜູ້ຕິດເຫຼົ້າ ຫຼື ຢາເສບຕິດສະເພາະ ຫຼື ມອບໃຫ້ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງອື່ນຂອງລັດ, ອົງການຈັດຕັ້ງມະຫາຊົນ ຫຼື ອົງການຈັດຕັ້ງສັງຄົມທີ່ກ່ຽວຂ້ອງ ສືບຕໍ່ສຶກສາອົບຮົມ ແລະ ປິ່ນປົວ.

ພາຍຫຼັງທີ່ໄດ້ປິ່ນປົວແລ້ວ ຕ້ອງນໍາເອົາຜູ້ກະທໍາຜິດມາດໍາເນີນຄະດີ ຫຼື ມາປະຕິບັດໂທດ ຖ້າຫາກຍັງບໍ່ທັນໝົດອາຍຸຄວາມໃນການຮ້ອງຟ້ອງ ຫຼື ອາຍຸຄວາມໃນການປະຕິບັດຄໍາຕັດສິນ.

ກໍານົດເວລາໃນການປິ່ນປົວ ໃຫ້ຄິດໄລ່ເຂົ້າໃນກໍານົດເວລາຂອງການປະຕິບັດໂທດ.

## ໝວດທີ 8
## ການກະທໍາຜິດຂອງເດັກ

**ມາດຕາ 84 ເດັກກະທໍາຜິດ**

ເດັກກະທໍາຜິດ ແມ່ນ ຜູ້ກະທໍາຜິດທີ່ມີອາຍຸ ແຕ່ ສິບຫ້າປີ ຂຶ້ນໄປ ແຕ່ບໍ່ເຖິງ ສິບແປດປີ ຊຶ່ງມີການກະທໍາ ຫຼື ການເມີນເສີຍ ທີ່ເປັນອັນຕະລາຍຕໍ່ສັງຄົມ ຊຶ່ງກົດໝາຍກໍານົດໂທດຕັດອິດສະລະພາບ ແຕ່ ສາມ ປີ

ຂຶ້ນໄປ ຫຼື ຕ່ຳກວ່າ ສາມປີ ລົງມາ ແຕ່ບໍ່ມີການຮັບສາລະພາບຂອງເດັກ ຫຼື ຄູ່ກໍລະນີບໍ່ຍິນຍອມໃຫ້ໄກ່ ເກ່ຍ; ການກະທຳຜິດທີ່ບໍ່ເຊັດຫຼາບ ແລະ ການກະທຳຜິດເປັນອາຈິນ.

**ມາດຕາ 85 ຫຼັກການແກ້ໄຂເດັກກະທຳຜິດ**

ຫຼັກການແກ້ໄຂເດັກກະທຳຜິດ ໃຫ້ປະຕິບັດ ດັ່ງນີ້:

1. ການແກ້ໄຂເດັກກະທຳຜິດ ໃຫ້ຖືເອົາການສຶກສາອົບຮົມ, ການຊ່ວຍເຫຼືອເດັກ, ການປົວແປງຄວາມຜິດພາດ, ການພັດທະນາຕົນເອງໃຫ້ກາຍເປັນພົນລະເມືອງດີ, ມີປະໂຫຍດໃຫ້ແກ່ສັງຄົມ;

2. ໃນທຸກກໍລະນີທີ່ມີການສືບສວນ-ສອບສວນ, ການສັ່ງຟ້ອງ ແລະ ການຕັດສິນເດັກກະທຳຜິດ ອົງການຈັດຕັ້ງລັດທີ່ມີສິດອຳນາດ ຕ້ອງຊີ້ໃຫ້ເຫັນຄວາມເປັນອັນຕະລາຍຕໍ່ສັງຄົມ, ສາເຫດ ແລະ ເງື່ອນໄຂຂອງການກະທຳຜິດ;

3. ເດັກກະທຳຜິດ ອາດພົ້ນຈາກຄວາມຮັບຜິດຊອບທາງອາຍາ ຖ້າວ່າຜູ້ກ່ຽວຫາກມີການກະທຳຜິດທີ່ເບົາບາງ, ສ້າງຄວາມເສຍຫາຍບໍ່ຫຼວງຫຼາຍ, ມີສາເຫດທີ່ພາໃຫ້ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ ແລະ ມີຜູ້ປົກຄອງ ຫຼື ການຈັດຕັ້ງ ຮັບຕິດຕາມ ແລະ ສຶກສາອົບຮົມ.

ໃນເວລາຕັດສິນ ສານ ອາດນຳໃຊ້ໜຶ່ງໃນບັນດາມາດຕະການ ທີ່ໄດ້ກຳນົດໄວ້ໃນມາດຕາ 87 ຂອງປະມວນກົດໝາຍສະບັບນີ້ ຖ້າຫາກເຫັນວ່າບໍ່ຈຳເປັນຕ້ອງວາງໂທດໃສ່ເດັກກະທຳຜິດ.

**ມາດຕາ 86 ການວາງໂທດໃສ່ເດັກກະທຳຜິດ**

ໃນການວາງໂທດໃສ່ເດັກກະທຳຜິດ ສານ ຕ້ອງອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ບຸກຄະລິກກະພາບຂອງເດັກ, ຜົນສະທ້ອນ, ສະພາບແວດລ້ອມ, ສາເຫດຈູງໃຈ ແລະ ສາເຫດທີ່ພາໃຫ້ມີການຫຼຸດຜ່ອນ ຫຼື ການເພີ່ມຄວາມຮັບຜິດຊອບທາງອາຍາ.

ການວາງໂທດຕັດອິດສະລະພາບໃສ່ເດັກກະທຳຜິດ ໃຫ້ເປັນມາດຕະການສຸດທ້າຍ ສຳລັບການກະທຳຜິດທີ່ຮ້າຍແຮງເທົ່ານັ້ນ ແລະ ໃນໄລຍະສັ້ນເທົ່າທີ່ຈະເປັນໄປໄດ້.

ໃນກໍລະນີທີ່ມີຄວາມຈຳເປັນ ຕ້ອງໄດ້ລົງໂທດຕັດອິດສະລະພາບໃສ່ເດັກກະທຳຜິດ ສານ ອາດວາງໂທດເຄິ່ງໜຶ່ງ ຂອງໂທດທີ່ສານຈະວາງໃສ່ຜູ້ກະທຳຜິດທີ່ມີອາຍຸ ແຕ່ ສິບແປດປີ ຂຶ້ນໄປ ໃນສະຖານການກະທຳຜິດນັ້ນ ຫຼື ຕ່ຳກວ່າໂທດທີ່ກົດໝາຍກຳນົດໄວ້ກໍໄດ້.

ຫ້າມລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ໂທດປະຫານຊີວິດ ໃສ່ເດັກກະທຳຜິດ.

ສຳລັບການກະທຳຜິດຂອງເດັກ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບຕະຫຼອດຊີວິດ ໃຫ້ຫຼຸດຜ່ອນມາເປັນໂທດຕັດອິດສະລະພາບ ສິບປີ. ສ່ວນໂທດປະຫານຊີວິດນັ້ນ ໃຫ້ຫຼຸດຜ່ອນມາເປັນໂທດຕັດອິດສະລະພາບ ຊາວປີ.

**ມາດຕາ 87 ການນຳໃຊ້ມາດຕະການຕໍ່ເດັກ**

ສຳລັບເດັກອາຍຸບໍ່ເຖິງ ສິບຫ້າປີ ທີ່ໄດ້ມີການກະທຳ ຊຶ່ງເປັນອັນຕະລາຍຕໍ່ສັງຄົມນັ້ນ ໃຫ້ນຳໃຊ້ມາດຕະການ ດັ່ງນີ້:

1. ສຶກສາອົບຮົມໃຫ້ເດັກເຂົ້າໃຈຕໍ່ການກະທຳຜິດຂອງຕົນ;

2. ໃຫ້ໄປຂໍອະໄພນຳຜູ້ຖືກເສຍຫາຍດ້ວຍວິທີການອັນເໝາະສົມ;

3. ໃຊ້ແທນຄ່າເສຍຫາຍທາງແພ່ງ ແຕ່ໃຫ້ ພໍ່ ແມ່ ຫຼື ຜູ້ປົກຄອງ ເປັນຜູ້ຮັບຜິດຊອບ;

4. ມອບໃຫ້ ພໍ່ ແມ່, ຜູ້ປົກຄອງ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ກ່າວເຕືອນ, ສຶກສາອົບຮົມ ແລະ ຕິດຕາມຢ່າງໃກ້ຊິດ;

5. ໃຫ້ເດັກເຂົ້າມາສະເໜີຕົວຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ ຕາມວັນ, ເວລາ ທີ່ກຳນົດໄວ້;

6. ນຳໃຊ້ມາດຕະການອື່ນທີ່ເໝາະສົມກັບອາຍຸຂອງເດັກ ເຊັ່ນ ການອອກແຮງງານ.

ສຳລັບເດັກທີ່ມີອາຍຸ ແຕ່ ສິບຫ້າປີ ຂຶ້ນໄປ ແຕ່ຕໍ່າກວ່າ ສິບແປດປີ ຫາກໄດ້ກະທຳຜິດທາງອາຍາໃນສະຖານລະຫຸໂທດ ແລະ ໂທສານຸໂທດ ຊຶ່ງກົດໝາຍກຳນົດໂທດຕັດອິດສະລະພາບ ຕໍ່າກວ່າ ສາມປີນັ້ນ ໃຫ້ນຳໃຊ້ມາດຕະການທີ່ກ່າວມາເທິງນີ້ ກໍໄດ້.

## ໝວດທີ 9
## ການກະທຳຜິດຂອງນິຕິບຸກຄົນ

**ມາດຕາ 88 ການກະທຳຜິດຂອງນິຕິບຸກຄົນ**

ການກະທຳຜິດຂອງນິຕິບຸກຄົນ ແມ່ນ ການກະທຳຜິດຂອງການຈັດຕັ້ງ ຫຼື ຕົວແທນຂອງນິຕິບຸກຄົນ.

**ມາດຕາ 89 ຄວາມຮັບຜິດຊອບທາງອາຍາຂອງນິຕິບຸກຄົນ**

ນິຕິບຸກຄົນ ຈະມີຄວາມຮັບຜິດຊອບທາງອາຍາຕໍ່ການກະທຳຜິດຂອງຕົນ ໃນກໍລະນີ ດັ່ງນີ້:

1. ການກະທຳຜິດນັ້ນ ເປັນການກະທຳໃນນາມນິຕິບຸກຄົນ;

2. ການກະທຳຜິດນັ້ນ ເປັນການກະທຳເພື່ອຜົນປະໂຫຍດຂອງນິຕິບຸກຄົນ;

3. ການກະທຳຜິດນັ້ນ ເປັນການກະທຳ ພາຍໃຕ້ການຊີ້ນຳ, ການຄຸ້ມຄອງ ແລະ ການຕົກລົງຂອງນິຕິບຸກຄົນເອງ.

ຄວາມຮັບຜິດຊອບທາງອາຍາຂອງນິຕິບຸກຄົນ ຈະບໍ່ພາໃຫ້ຄວາມຮັບຜິດຊອບທາງອາຍາຂອງບຸກຄົນ ທີ່ກະທຳຜິດໃນນິຕິບຸກຄົນນັ້ນ ຕົກໄປ.

## ມາດຕາ 90 ການວາງໂທດໃສ່ນິຕິບຸກຄົນ

ໂທດທີ່ວາງໃສ່ນິຕິບຸກຄົນ ແມ່ນ ໂທດປັບໃໝ ຊຶ່ງເປັນໂທດຕົ້ນຕໍ.

ໂທດປັບໃໝທີ່ວາງໃສ່ນິຕິບຸກຄົນນັ້ນ ແມ່ນ ສອງເທົ່າຂອງໂທດປັບໃໝທີ່ວາງໃສ່ບຸກຄົນ.

ສໍາລັບນິຕິບຸກຄົນ ນອກຈາກໂທດປັບໃໝ ສານ ອາດຕັດສິນໃຫ້ຍົກເລີກທຸລະກິດ, ຫ້າມດໍາເນີນທຸລະກິດບາງປະເພດ, ຫ້າມລະດົມທຶນ, ການຫ້າມນໍາໃຊ້ແຊັກ ຫຼື ບັດເຄຣດິດ, ຮິບວັດຖຸສິ່ງຂອງ ຫຼື ຟື້ນຟູຄືນ.

## ມາດຕາ 91 ການຍົກເລີກທຸລະກິດຂອງນິຕິບຸກຄົນ

ການຍົກເລີກທຸລະກິດຂອງນິຕິບຸກຄົນ ແມ່ນ ມາດຕະການທີ່ສານ ວາງໃສ່ນິຕິບຸກຄົນທີ່ກະທໍາຜິດໃຫ້ຢຸດເຊົາປະເພດທຸລະກິດ ຊຶ່ງສານ ເຫັນວ່າຖ້າຫາກປ່ອຍໃຫ້ສືບຕໍ່ດໍາເນີນ ຈະສ້າງຄວາມເສຍຫາຍ ແລະ ເປັນອັນຕະລາຍຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

## ມາດຕາ 92 ການຫ້າມນິຕິບຸກຄົນດໍາເນີນທຸລະກິດບາງປະເພດ

ການຫ້າມນິຕິບຸກຄົນດໍາເນີນທຸລະກິດບາງປະເພດ ແມ່ນ ການໃຫ້ຢຸດເຊົາຊົ່ວຄາວປະເພດທຸລະກິດ ທີ່ພົວພັນກັບການກະທໍາຜິດຂອງນິຕິບຸກຄົນນັ້ນ ແຕ່ ໜຶ່ງປີ ຫາ ຫ້າປີ.

## ມາດຕາ 93 ການຫ້າມລະດົມທຶນ

ການຫ້າມລະດົມທຶນ ແມ່ນ ການຫ້າມລະດົມທຶນຈາກພາຍນອກເປັນເວລາສູງສຸດ ບໍ່ເກີນ ຫ້າປີ ເຊັ່ນ ການກູ້ຢືມເງິນນໍາທະນາຄານ, ການຫ້າມຈໍາໜ່າຍ ຫຼື ຂາຍຮຸ້ນ, ຫ້າມສ້າງຕັ້ງກອງທຶນ ຫຼື ມູນນິທິ ເພື່ອລະດົມທຶນ.

## ມາດຕາ 94 ການຫ້າມນໍາໃຊ້ແຊັກ ຫຼື ບັດເຄຣດິດ

ການຫ້າມນໍາໃຊ້ແຊັກ ແມ່ນ ການຫ້າມສັ່ງຈ່າຍແຊັກ ຫຼື ນໍາໃຊ້ບັດເຄຣດິດ ເປັນເວລາສູງສຸດບໍ່ເກີນ ຫ້າປີ.

## ມາດຕາ 95 ການຮິບວັດຖຸສິ່ງຂອງຂອງນິຕິບຸກຄົນ

ການຮິບວັດຖຸສິ່ງຂອງ ຂອງນິຕິບຸກຄົນ ໃຫ້ປະຕິບັດຕາມບົດບັນຍັດ ທີ່ໄດ້ກໍານົດໄວ້ໃນມາດຕາ 53 ຂອງປະມວນກົດໝາຍສະບັບນີ້.

## ມາດຕາ 96 ໂທດຟື້ນຟູຄືນ

ສານ ອາດວາງໂທດຟື້ນຟູຄືນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 56 ຂອງປະມວນກົດໝາຍສະບັບນີ້ ຕໍ່ນິຕິບຸກຄົນທີ່ກະທໍາຜິດ.

# ໝວດທີ 10
# ສາເຫດທີ່ພາໃຫ້ການປະຕິບັດໂທດຕົກໄປ, ການໂຈະ ການປະຕິບັດໂທດຕັດອິດສະລະພາບ ແລະ ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ

**ມາດຕາ 97 ສາເຫດທີ່ພາໃຫ້ການປະຕິບັດໂທດຕົກໄປ**

ການປະຕິບັດໂທດທາງອາຍາຈະຕົກໄປ ຖ້າຫາກມີສາເຫດໃດໜຶ່ງ ດັ່ງນີ້:

1. ຜູ້ຖືກຕັດສິນລົງໂທດໄດ້ເສຍຊີວິດ;
2. ອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານໝົດໄປ;
3. ຜູ້ຖືກຕັດສິນລົງໂທດ ໄດ້ຮັບອະໄພຍະໂທດ;
4. ໄດ້ມີການໃຫ້ນິລະໂທດກຳ.

**ມາດຕາ 98 ການເສຍຊີວິດຂອງຜູ້ຖືກຕັດສິນລົງໂທດ**

ການປະຕິບັດໂທດທາງອາຍາຂອງຜູ້ຖືກຕັດສິນລົງໂທດ ຈະຕົກໄປ ຖ້າວ່າຜູ້ກ່ຽວຫາກໄດ້ເສຍຊີວິດ.

**ມາດຕາ 99 ອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານ**

ໂທດ ທີ່ສານວາງໃສ່ຜູ້ກະທຳຜິດ ຈະບໍ່ສາມາດປະຕິບັດໄດ້ ຖ້າຫາກກາຍກຳນົດເວລາ ດັ່ງນີ້:

1. ໜຶ່ງປີ ສຳລັບການກະທຳຜິດໃນສະຖານລະຫຸໂທດ;
2. ເຈັດປີ ສຳລັບການກະທຳຜິດໃນສະຖານໂທສານຸໂທດ;
3. ສິບຫ້າປີ ສຳລັບການກະທຳຜິດໃນສະຖານຄະຣຸໂທດ.

ອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານ ໃຫ້ນັບແຕ່ວັນຄຳຕັດສິນໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ. ໃນກໍລະນີທີ່ໄດ້ກະທຳຜິດເທື່ອໃໝ່ ພາຍໃນກຳນົດອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານໃສ່ການກະທຳຜິດເທື່ອກ່ອນນັ້ນ ອາຍຸຄວາມດັ່ງກ່າວ ໃຫ້ນັບແຕ່ວັນກະທຳຜິດເທື່ອໃໝ່ ເປັນຕົ້ນໄປ. ໃນກໍລະນີທີ່ໄດ້ຫຼົບຫຼີກຈາກການປະຕິບັດໂທດ ພາຍໃນກຳນົດອາຍຸຄວາມໃນການປະຕິບັດຄຳຕັດສິນ ອາຍຸຄວາມດັ່ງກ່າວ ໃຫ້ນັບແຕ່ວັນຜູ້ຖືກຕັດສິນເຂົ້າສະເໜີຕົວ ຫຼື ຖືກຈັບຕົວ ເປັນຕົ້ນໄປ.

**ມາດຕາ 100 ການໃຫ້ອະໄພຍະໂທດ**

ການໃຫ້ອະໄພຍະໂທດ ແມ່ນ ການຕົກລົງຂອງປະທານປະເທດ ໃນການຫຼຸດຜ່ອນໂທດ ຫຼື ລຶບລ້າງໂທດທີ່ຍັງເຫຼືອ ແລ້ວໃຫ້ປ່ອຍຕົວຜູ້ຖືກຕັດສິນລົງໂທດ.

**ມາດຕາ 101 ການໃຫ້ນິລະໂທດກຳ**

ການໃຫ້ນິລະໂທດກຳ ແມ່ນ ການລຶບລ້າງການກະທຳຜິດທາງອາຍາໃດໜຶ່ງ.

ການປະຕິບັດໂທດທາງອາຍາ ສຳລັບການກະທຳຜິດທາງອາຍາໃດໜຶ່ງຈະຕົກໄປ ຖ້າຫາກວ່າສະພາແຫ່ງຊາດ ໃຫ້ການຮັບຮອງ ແລະ ປະທານປະເທດ ປະກາດໃຫ້ນິລະໂທດກຳແກ່ການກະທຳຜິດທາງອາຍານັ້ນ.

**ມາດຕາ 102 ການພົ້ນຈາກການປະຕິບັດຄຳຕັດສິນຂອງສານ**

ນັກໂທດ ທີ່ຖືກສານຕັດສິນລົງໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ໂທດຕັດອິດສະລະພາບຕໍ່າກວ່າ ສາມປີ ຊຶ່ງຍັງບໍ່ທັນໄດ້ປະຕິບັດໂທດຂອງຕົນ ແຕ່ໄດ້ສ້າງຜົນງານອັນໃຫຍ່ຫຼວງຕໍ່ປະເທດຊາດ ຫຼື ເປັນພະຍາດຮ້າຍແຮງ, ຖ້າວ່າຜູ້ກ່ຽວຫາກບໍ່ເປັນອັນຕະລາຍຕໍ່ສັງຄົມອີກຕໍ່ໄປ ສານ ອາດຕັດສິນໃຫ້ຜູ້ກ່ຽວພົ້ນຈາກ ການປະຕິບັດໂທດທັງໝົດ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນ.

ສຳລັບນັກໂທດໃນສະຖານການກະທຳຜິດເບົາ ທີ່ໄດ້ໂຈະການປະຕິບັດໂທດໄວ້ຊົ່ວຄາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 103 ຂອງປະມວນກົດໝາຍສະບັບນີ້, ຖ້າວ່າພາຍໃນກຳນົດເວລາດັ່ງກ່າວຜູ້ກ່ຽວຫາກໄດ້ສ້າງຜົນງານອັນໃຫຍ່ຫຼວງຕໍ່ປະເທດຊາດ ສານ ອາດຕັດສິນໃຫ້ຜູ້ກ່ຽວພົ້ນຈາກການປະຕິບັດໂທດທີ່ຍັງເຫຼືອ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນ.

**ມາດຕາ 103 ການໂຈະການປະຕິບັດໂທດຕັດອິດສະລະພາບ**

ສາເຫດທີ່ພາໃຫ້ໂຈະການປະຕິບັດໂທດຕັດອິດສະລະພາບ ມີ ດັ່ງນີ້:

1. ນັກໂທດ ທີ່ເຈັບເປັນຢ່າງໜັກໜ່ວງ ໂດຍມີການຢັ້ງຢືນຈາກຄະນະແພດ, ພາຍຫຼັງທີ່ໄດ້ຮັບການປິ່ນປົວດີແລ້ວ ໃຫ້ນຳມາປະຕິບັດໂທດ;

2. ແມ່ຍິງຖືພາ ຫຼື ມີລູກນ້ອຍທີ່ມີອາຍຸຕໍ່າກວ່າ ໜຶ່ງປີ ຈົນກວ່າລູກມີອາຍຸ ແຕ່ ໜຶ່ງປີຂຶ້ນໄປ;

3. ໃນກໍລະນີນັກໂທດຖືກລົງໂທດຕັດອິດສະລະພາບ ຕໍ່າກວ່າ ສາມປີ ແລະ ເປັນແຮງງານຕົ້ນຕໍຂອງຄອບຄົວ ຖ້າຫາກນຳໄປປະຕິບັດໂທດຈະມີຜົນກະທົບຢ່າງໜັກໜ່ວງຕໍ່ຄອບຄົວ ຜູ້ກ່ຽວມີສິດຂໍໂຈະໄດ້ ໜຶ່ງປີ;

4. ໃນກໍລະນີທີ່ນັກໂທດມີຄວາມຈຳເປັນ ຕ້ອງປະຕິບັດໜ້າທີ່ທາງລັດຖະການ ໂດຍໄດ້ຮັບການຢັ້ງຢືນຈາກອົງການຈັດຕັ້ງຂອງຜູ້ກ່ຽວ ຍົກເວັ້ນ ການກະທຳຜິດທີ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ ຜູ້ກ່ຽວຈະມີສິດຂໍໂຈະໄດ້ ໜຶ່ງປີ.

ໄລຍະເວລາການໂຈະການປະຕິບັດໂທດຕັດອິດສະລະພາບ ໃນກໍລະນີທີ່ກ່າວມາເທິງນີ້ ຈະບໍ່ນັບເຂົ້າໃນການປະຕິບັດໂທດ.

### ມາດຕາ 104 ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ

ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ ແມ່ນ ການປ່ອຍຕົວນັກໂທດ ຊຶ່ງໄດ້ປະຕິບັດໂທດສ່ວນໃດສ່ວນໜຶ່ງມາແລ້ວ, ມີຄວາມກ້າວໜ້າ, ໄດ້ຝຶກຝົນຫຼໍ່ຫຼອມຕົນເອງ, ເປັນແບບຢ່າງໃນການປະຕິບັດລະບຽບຂອງຄ້າຍດັດສ້າງ ແລະ ການອອກແຮງງານ, ໄດ້ມີການປ່ຽນແປງທາງດ້ານທັດສະນະແນວຄິດ ແລະ ໄດ້ມີຄວາມຮູ້ສຶກກິນແໜງ ຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນໃນໄລຍະຜ່ານມາ.

ນັກໂທດ ທີ່ຈະໄດ້ຮັບການພິຈາລະນາປ່ອຍຕົວກ່ອນກຳນົດ ຕ້ອງແມ່ນນັກໂທດທີ່ໄດ້ປະຕິບັດໂທດມາແລ້ວ ດັ່ງນີ້:

1. ເຄິ່ງໜຶ່ງ ສຳລັບຜູ້ກະທຳຜິດທີ່ມີອາຍຸ ຕ່ຳກວ່າ ສິບແປດປີ ໃນເວລາກະທຳຜິດ;
2. ສອງສ່ວນສາມ ສຳລັບຜູ້ກະທຳຜິດທີ່ມີອາຍຸ ແຕ່ ສິບແປດປີ ຂຶ້ນໄປ ໃນເວລາກະທຳຜິດ;
3. ສິບຫ້າປີ ສຳລັບຜູ້ກະທຳຜິດທີ່ປະຕິບັດໂທດຕັດອິດສະລະພາບຕະຫຼອດຊີວິດ.

ສຳລັບຜູ້ກະທຳຜິດທີ່ບໍ່ເຂັດຫຼາບ ແລະ ຜູ້ຖືກລົງໂທດປະຫານຊີວິດ ແລ້ວປ່ຽນມາເປັນໂທດຕັດອິດສະລະພາບນັ້ນ ບໍ່ອະນຸຍາດໃຫ້ປ່ອຍຕົວກ່ອນກຳນົດ.

## ໝວດທີ 11
## ການລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາ

### ມາດຕາ 105 ການລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາ

ບຸກຄົນທີ່ໄດ້ຮັບການລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາ ຖືວ່າບໍ່ເຄີຍໄດ້ກະທຳຜິດມາກ່ອນ.

ການລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາ ໃຫ້ປະຕິບັດຕາມມາດຕາ 106 ແລະ 107 ຂອງປະມວນກົດໝາຍສະບັບນີ້.

### ມາດຕາ 106 ການລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາໂດຍອັດຕະໂນມັດ

ບຸກຄົນທີ່ໄດ້ຮັບການລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາໂດຍອັດຕະໂນມັດ ໂດຍບໍ່ມີຄຳຕັດສິນຂອງສານ ມີ ດັ່ງນີ້:

1. ບຸກຄົນທີ່ພົ້ນຈາກການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 102 ຂອງປະມວນກົດໝາຍສະບັບນີ້;

2. ບຸກຄົນທີ່ຖືກຕັດສິນພາກໂທດ ຊຶ່ງບໍ່ໄດ້ກະທຳຜິດເທື່ອໃໝ່ພາຍໃນກຳນົດ ໜຶ່ງປີ ພາຍຫຼັງສິ້ນສຸດກຳນົດເວລາພາກໂທດ;

3. ບຸກຄົນທີ່ໄດ້ປະຕິບັດໂທດຕັດອິດສະລະພາບຂອງຕົນສຳເລັດແລ້ວ ຫຼື ຫຼັງຈາກໝົດອາຍຸຄວາມໃນການປະຕິບັດຄຳຕັດສິນ ຊຶ່ງບໍ່ໄດ້ກະທຳຜິດເທື່ອໃໝ່ພາຍໃນກຳນົດເວລາ ດັ່ງນີ້:

- ໜຶ່ງປີ ສຳລັບການກະທຳຜິດໃນສະຖານລະຫຸໂທດ;
- ຫ້າປີ ສຳລັບການກະທຳຜິດໃນສະຖານໂທສານຸໂທດ;
- ເຈັດປີ ສຳລັບການກະທຳຜິດໃນສະຖານຄະຣຸໂທດ.

ຖ້າວ່າຜູ້ທີ່ຍັງບໍ່ທັນໄດ້ຖືກລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາ ຫາກໄດ້ກະທຳຜິດເທື່ອໃໝ່, ກຳນົດເວລາໃນການລຶບຊື່ອອກຈາກບັນຊີເກົ່ານັ້ນ ໃຫ້ນັບແຕ່ວັນປະຕິບັດຄຳຕັດສິນໃໝ່ສຳເລັດ ຫຼື ຫຼັງຈາກໝົດອາຍຸຄວາມໃນການປະຕິບັດຄຳຕັດສິນ ເປັນຕົ້ນໄປ.

**ມາດຕາ 107 ການລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາຕາມຄຳຕັດສິນຂອງສານ**

ສານ ຈະຕັດສິນລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາ ສຳລັບຜູ້ກະທຳຜິດທີ່ຖືກຕັດສິນ ກ່ຽວກັບການກະທຳຜິດທີ່ໄດ້ກຳນົດໂທດໄວ້ໃນໝວດທີ 1 ພາກທີ II ຂອງປະມວນກົດໝາຍສະບັບນີ້ ໂດຍອີງໃສ່ລັກສະນະຂອງການກະທຳຜິດ, ບຸກຄະລິກກະພາບຂອງຜູ້ກະທຳຜິດ, ການປະຕິບັດໂທດ ແລະ ການອອກແຮງງານຂອງຜູ້ກະທຳຜິດ.

ສານ ຈະຕັດສິນລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາຕາມ ວັກທີໜຶ່ງ ເທິງນີ້ ໃນກໍລະນີ ດັ່ງນີ້:

1. ຜູ້ຖືກສານຕັດສິນລົງໂທດຕັດອິດສາລະພາບຕໍ່າກວ່າ ຫ້າປີ ຊຶ່ງບໍ່ໄດ້ກະທຳຜິດໃໝ່ພາຍໃນ ສາມປີ ຫຼັງຈາກການປະຕິບັດໂທດຂອງຕົນສຳເລັດ ຫຼື ໝົດອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນໄປ;

2. ຜູ້ຖືກສານຕັດສິນລົງໂທດຕັດອິດສາລະພາບ ແຕ່ ຫ້າປີ ຫາ ສິບຫ້າປີ ຊຶ່ງບໍ່ໄດ້ກະທຳຜິດໃໝ່ພາຍໃນ ຫ້າປີ ຫຼັງຈາກການປະຕິບັດໂທດຂອງຕົນສຳເລັດ ຫຼື ພາຍຫຼັງໝົດອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານເປັນຕົ້ນໄປ;

3. ຜູ້ຖືກສານຕັດສິນລົງໂທດຕັດອິດສາລະພາບ ແຕ່ ສິບຫ້າປີ ຂຶ້ນໄປ, ຕະຫຼອດຊີວິດ ຫຼື ປະຫານຊີວິດ ທີ່ໄດ້ຮັບການອະໄພຍະໂທດຫຼຸດຜ່ອນໂທດ ຊຶ່ງບໍ່ໄດ້ກະທຳຜິດໃໝ່ ພາຍໃນ ເຈັດປີ ຫຼັງຈາກການປະຕິບັດໂທດຂອງຕົນສຳເລັດ ຫຼື ພາຍຫຼັງໝົດອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານເປັນຕົ້ນໄປ.

ຄຳຮ້ອງຂໍໃຫ້ລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາ ຕ້ອງຂຽນດ້ວຍຕົນເອງ ຫຼື ຜູ້ປົກຄອງແລ້ວ ຍື່ນຕໍ່ສານທີ່ກ່ຽວຂ້ອງ. ໃນກໍລະນີທີ່ສານ ຫາກປະຕິເສດຄຳຮ້ອງດັ່ງກ່າວຄັ້ງທຳອິດ ກໍສາມາດຍື່ນຄຳຮ້ອງໃໝ່ ພາຍຫຼັງ ໜຶ່ງປີ ນັບແຕ່ວັນສານປະຕິເສດຄຳຮ້ອງ, ຖ້າວ່າຄຳຮ້ອງໃໝ່ ຫາກຖືກປະຕິເສດອີກເປັນຄັ້ງທີສອງ ສາມາດຍື່ນຄຳຮ້ອງໃໝ່ອີກ ພາຍຫຼັງ ສອງປີ ນັບແຕ່ວັນ ສານ ປະຕິເສດຄຳຮ້ອງຄັ້ງທີສອງ.

**ມາດຕາ 108 ການລຶບຊື່ນິຕິບຸກຄົນອອກຈາກບັນຊີຜູ້ຖືກລົງໂທດທາງອາຍາ**

ນິຕິບຸກຄົນ ທີ່ຖືກລົງໂທດທາງອາຍາ ຈະຖືກລຶບຊື່ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາໂດຍອັດຕະໂນມັດ ຖ້າຫາກບໍ່ໄດ້ກະທຳຜິດໃໝ່ ພາຍໃນກຳນົດເວລາ ໜຶ່ງປີ ພາຍຫຼັງໄດ້ປະຕິບັດໂທດສຳເລັດ.

**ມາດຕາ 109 ການລຶບຊື່ເດັກກະທຳຜິດອອກຈາກບັນຊີຜູ້ຖືກລົງໂທດທາງອາຍາ**

ກຳນົດເວລາໃນການລຶບຊື່ເດັກກະທຳຜິດ ອອກຈາກບັນຊີຜູ້ຖືກລົງໂທດທາງອາຍາ ແມ່ນ ເຄິ່ງໜຶ່ງຂອງກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 106 ຂອງປະມວນກົດໝາຍສະບັບນີ້.

ເດັກກະທຳຜິດ ທີ່ຖືກມາດຕະການຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 87 ຂອງປະມວນກົດໝາຍສະບັບນີ້ ໃຫ້ຖືວ່າບໍ່ເຄີຍໄດ້ເປັນຜູ້ກະທຳຜິດມາກ່ອນ.

# ພາກທີ II

# ພາກສະເພາະ

## ໝວດທີ 1

## ການກະທຳຜິດຕໍ່ຄວາມສະຫງົບຂອງຊາດ

**ມາດຕາ 110 ການທໍລະຍົດຕໍ່ຊາດ**

ພົນລະເມືອງລາວ ຜູ້ທີ່ໄດ້ເຄື່ອນໄຫວພົວພັນ ແລະ ຮ່ວມມືກັບຄົນຕ່າງປະເທດ ຫຼື ອົງການຈັດຕັ້ງຕ່າງປະເທດ ໂດຍມີເຈດຕະນາທຳລາຍຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ຜົນປະໂຫຍດອັນຍິ່ງໃຫຍ່ທາງດ້ານການເມືອງ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນະທຳ ແລະ ສັງຄົມ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 500.000.000 ກີບ, ອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 700.000.000 ກີບ ຫຼື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

ພົນລະເມືອງລາວ ຜູ້ທີ່ຖືກຄົນຕ່າງປະເທດ ຫຼື ອົງການຈັດຕັ້ງຕ່າງປະເທດ ມອບໝາຍໃຫ້ກະທຳຜິດ ແຕ່ໄດ້ສະໝັກໃຈລາຍງານເຫດການໃຫ້ເຈົ້າໜ້າທີ່ຮູ້ລ່ວງໜ້າ ແລະ ຍັງບໍ່ທັນໄດ້ລົງມືກະທຳຜິດນັ້ນຈະບໍ່ຖືກລົງໂທດ.

## ມາດຕາ 111 ການກະບົດ

ພົນລະເມືອງລາວຜູ້ໃດ ຫາກໄດ້ຈັດຕັ້ງ ຫຼື ເຂົ້າຮ່ວມການເຄື່ອນໄຫວກໍ່ຄວາມວຸ້ນວາຍ ເພື່ອໂຄ່ນລົ້ມອຳນາດການປົກຄອງ ຫຼື ເພື່ອເຮັດໃຫ້ອຳນາດການປົກຄອງອ່ອນເພຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 500.000.000 ກີບ, ອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 700.000.000 ກີບ ຫຼື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 112 ການເປັນນັກສືບສອດແນມ

ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດຜູ້ໃດ ຫາກໄດ້ເຄື່ອນໄຫວເກັບກຳຂ່າວ, ຂໍ້ມູນ, ວັດຖຸ, ການດຳເນີນງານ ຫຼື ເອກະສານທາງຄອມພິວເຕີ ຫຼື ເອກະສານກ່ຽວກັບຄວາມລັບຂອງລັດ ຫຼື ຄວາມລັບທາງລັດຖະການ ເພື່ອກໍ່ຄວາມເສຍຫາຍ ຫຼື ມ້າງເພ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 300.000.000 ກີບ, ອາດຈະຖືກຮິບຊັບ, ຖືກຈຳກັດທີ່ຢູ່ ຫຼື ຖືກເນລະເທດ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 400.000.000 ກີບ ຫຼື ປະຫານຊີວິດ.

ບຸກຄົນໃດ ຫາກໄດ້ເຄື່ອນໄຫວເກັບກຳຂ່າວ, ຂໍ້ມູນ, ວັດຖຸ, ການດຳເນີນງານ ຫຼື ເອກະສານທາງຄອມພິວເຕີ ຫຼື ເອກະສານກ່ຽວກັບຄວາມລັບຂອງລັດ ຫຼື ຄວາມລັບທາງລັດຖະການ ສົ່ງໃຫ້ພວກທໍລະຍົດ ຫຼື ກະບົດຕໍ່ຊາດ ເພື່ອມ້າງເພ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 200.000.000 ກີບ, ອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່.

ພົນລະເມືອງລາວຜູ້ໃດ ທີ່ໄດ້ເຄື່ອນໄຫວເກັບກຳຂ່າວ, ຂໍ້ມູນ, ວັດຖຸ, ການດຳເນີນງານ ຫຼື ເອກະສານທາງຄອມພິວເຕີ ຫຼື ເອກະສານກ່ຽວກັບຄວາມລັບຂອງລັດ ຫຼື ຄວາມລັບທາງລັດຖະການ ສົ່ງໃຫ້ຄົນຕ່າງປະເທດ ຫຼື ອົງການຈັດຕັ້ງຕ່າງປະເທດ ເພື່ອໃຊ້ເປັນຂໍ້ມູນກໍ່ຄວາມເສຍຫາຍ ຫຼື ມ້າງເພ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືວ່າໄດ້ກະທຳຜິດໃນສະຖານທໍລະຍົດຕໍ່ຊາດ ແລະ ຈະຖືກລົງໂທດຕາມມາດຕາ 110 ຂອງປະມວນກົດໝາຍສະບັບນີ້.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 113 ການລ່ວງລະເມີດດິນແດນຊຶ່ງແຕະຕ້ອງເຖິງຄວາມສະຫງົບຂອງຊາດ**

ບຸກຄົນໃດ ທີ່ຖືອາວຸດ ຫາກໄດ້ລ່ວງລະເມີດດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງເປັນການແຕະຕ້ອງເຖິງຄວາມສະຫງົບຂອງຊາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 150.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 114 ການປອງຮ້າຍ**

ບຸກຄົນໃດ ຫາກໄດ້ທຳຮ້າຍຮ່າງກາຍຜູ້ນຳຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແນໃສ່ທຳລາຍມ້າງເພອຳນາດແຫ່ງລັດ ຫຼື ເຮັດໃຫ້ອຳນາດແຫ່ງລັດອ່ອນເພຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 150.000.000 ກີບ.

ໃນກໍລະນີທີ່ການປອງຮ້າຍນັ້ນ ຫາກໄດ້ເຮັດໃຫ້ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 150.000.000 ກີບ ຫາ 1.000.000.000 ກີບ ຫຼື ປະຫານຊີວິດ.

ບຸກຄົນໃດ ຫາກໄດ້ທຳຮ້າຍຮ່າງກາຍຜູ້ຕາງໜ້າອຳນາດແຫ່ງລັດ, ພະນັກງານ, ບຸກຄົນທີ່ເຄື່ອນໄຫວວຽກງານຂອງອົງການຈັດຕັ້ງຂອງລັດ ຫຼື ຂອງສັງຄົມ ແນໃສ່ເຮັດໃຫ້ອຳນາດແຫ່ງລັດອ່ອນເພຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ການປອງຮ້າຍນັ້ນ ຫາກໄດ້ເຮັດໃຫ້ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 150.000.000 ກີບ ຫາ 500.000.000 ກີບ ຫຼື ປະຫານຊີວິດ.

ບຸກຄົນໃດ ຫາກໄດ້ທຳຮ້າຍຮ່າງກາຍຜູ້ນຳ, ສະມາຊິກຄອບຄົວ ຫຼື ຄະນະຕິດຕາມທີ່ມາຢ້ຽມຢາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ຜູ້ຕາງໜ້າຂອງລັດຕ່າງປະເທດ ຫຼື ຂອງອົງການຈັດຕັ້ງສາກົນ ຫຼື ສະມາຊິກຄອບຄົວ ທີ່ເຮັດວຽກຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແນໃສ່ແບ່ງແຍກ, ທຳລາຍສາຍພົວພັນລະຫວ່າງຊາດ ຫຼື ກໍ່ໃຫ້ເກີດສົງຄາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 150.000.000 ກີບ.

ໃນກໍລະນີທີ່ການປອງຮ້າຍນັ້ນ ຫາກໄດ້ເຮັດໃຫ້ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 150.000.000 ກີບ ຫາ 1.000.000.000 ກີບ ຫຼື ປະຫານຊີວິດ.

ນອກຈາກໂທດທີ່ກ່າວມາເທິງນີ້ແລ້ວ ຍັງອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 115 ການທຳລາຍມ້າງເພ

ບຸກຄົນໃດ ຫາກໄດ້ທຳລາຍ, ມ້າງເພ, ຈູດ ເຜົາ ໂຮງຈັກໂຮງງານ, ສຳນັກງານ, ອົງການ, ເສັ້ນທາງ, ພາຫະນະຄົມມະນາຄົມຂົນສົ່ງ, ພາຫະນະສື່ສານ ແລະ ພື້ນຖານເສດຖະກິດອື່ນທີ່ສຳຄັນ ແນໃສ່ເຮັດໃຫ້ລັດອ່ອນເພຍ ແລະ ເສດຖະກິດແຫ່ງຊາດຊຸດໂຊມ, ໄດ້ຫວ່ານ ຢາພິດ, ສານເຄມີ ຫຼື ປ່ອຍເຊື້ອພະຍາດໃສ່ໝູ່ຄົນ ຫຼື ຝູງສັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 500.000.000 ກີບ, ອາດຈະຖືກຣິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫຼື ຕັດອິດສະລະພາບຕະຫຼອດຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 116 ການທຳລາຍກິດຈະການຂອງລັດ ຫຼື ຂອງສັງຄົມ

ບຸກຄົນໃດ ຫາກໄດ້ເຄື່ອນໄຫວທຳລາຍກິດຈະການດ້ານກະສິກຳ, ອຸດສາຫະກຳ, ການຄ້າ, ການຂົນສົ່ງ, ການເງິນ, ພື້ນຖານເສດຖະກິດ, ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງຂອງລັດ ແລະ ສັງຄົມດ້ວຍການກະທຳ ຫຼື ການເມີນເສີຍ ຫຼື ດ້ວຍການຍຸແຍ່, ປັ່ນປ່ວນພາຍໃນໃຫ້ມີຄວາມແຕກແຍກໂດຍສວຍໃຊ້ໜ້າທີ່ຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ລັດອ່ອນເພຍ ແລະ ເສດຖະກິດແຫ່ງຊາດຊຸດໂຊມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 500.000.000 ກີບ, ອາດຈະຖືກຣິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫຼື ຕັດອິດສະລະພາບຕະຫຼອດຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 117 ການໂຄສະນາຕ້ານ ສປປ ລາວ

ບຸກຄົນໃດ ຫາກໄດ້ໂຄສະນາໃສ່ຮ້າຍປ້າຍສີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ບິດເບືອນແນວທາງຂອງພັກ ແລະ ນະໂຍບາຍຂອງລັດ, ປ່າວຂ່າວອະກຸສົນ, ເຮັດໃຫ້ມີຄວາມວຸ້ນວາຍ ດ້ວຍການເວົ້າ, ການຂຽນ, ການພິມ, ໜັງສືພິມ, ຮູບເງົາ, ວີດີໂອ, ຮູບພາບ, ເອກະສານ, ສື່ທາງເອເລັກໂຕຣນິກ ຫຼື ດ້ວຍຮູບການອື່ນ ທີ່ມີເນື້ອໃນຕ້ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອເຮັດໃຫ້ອຳນາດແຫ່ງລັດອ່ອນເພຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

### ມາດຕາ 118 ການແບ່ງແຍກຄວາມສາມັກຄີ

ບຸກຄົນໃດ ຫາກໄດ້ກໍ່ຄວາມແບ່ງແຍກ ຫຼື ກໍ່ຄວາມອາຄາດບາດໝາງລະຫວ່າງ ຊົນເຜົ່າ, ຊັ້ນຄົນ, ສາສະໜາ ເພື່ອທຳລາຍຄວາມສາມັກຄີປວງຊົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 119 ການໂຈລະກຳ**

ບຸກຄົນໃດ ຫາກໄດ້ເຂົ້າໃນການຈັດຕັ້ງເປັນກຸ່ມປະກອບອາວຸດ ແລ້ວໂຈມຕີ, ທຳລາຍໂຮງຈັກໂຮງງານ, ສຳນັກງານ, ອົງການຈັດຕັ້ງສັງຄົມ ຫຼື ຈັບ ຫຼື ຂ້າພະນັກງານ, ປະຊາຊົນ ຫຼື ປຸ້ນເອົາຊັບສົມບັດຂອງລັດ, ຂອງລວມໝູ່, ຂອງບຸກຄົນ ເພື່ອທຳລາຍພື້ນຖານຄວາມເປັນລະບຽບຂອງສັງຄົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 500.000.000 ກີບ, ອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 120 ການກໍ່ການຮ້າຍ**

ການກໍ່ການຮ້າຍ ແມ່ນ ການກະທຳຂອງ ບຸກຄົນ, ກຸ່ມຄົນ ຫຼື ການຈັດຕັ້ງໃນ ຫຼື ນອກດິນແດນ ສປປ ລາວ ດັ່ງນີ້:

1. ການກະທຳທີ່ສ້າງຜົນສະທ້ອນຕໍ່ ຄວາມໝັ້ນຄົງ, ພື້ນຖານເສດຖະກິດ-ສັງຄົມຂອງຊາດ, ອົງການຈັດຕັ້ງຕ່າງປະເທດ, ອົງການສາກົນ, ສ້າງຄວາມຫຍຸ້ງຍາກຕໍ່ການພົວພັນສາກົນຂອງ ສປປ ລາວ ຫຼື ສ້າງຄວາມວຸ້ນວາຍໃຫ້ແກ່ປະຊາຊົນໃນສັງຄົມ;

2. ການກະທຳຮຸນແຮງ ທີ່ແຕະຕ້ອງເຖິງ ຊີວິດ, ສຸຂະພາບ, ສິດເສລີພາບ ຫຼື ການບັງຄັບ, ການນາບຂູ່ທາງດ້ານຮ່າງກາຍ ແລະ ຈິດໃຈ;

3. ການ ຍຶດ, ທຳລາຍຊັບສິນ, ບຸກລຸກ, ໂຈມຕີ, ຂັດຂວາງ, ສ້າງຄວາມເສຍຫາຍ ແລະ ສ້າງຄວາມວຸ້ນວາຍໃຫ້ແກ່ລະບົບຄອມພິວເຕີ, ລະບົບຄົມມະນາຄົມ, ລະບົບອິນເຕີເນັດ ຫຼື ເຄື່ອງມືດິຈິຕອນຂອງອົງການຈັດຕັ້ງລັດ, ນິຕິບຸກຄົນ, ການຈັດຕັ້ງ ແລະ ບຸກຄົນ;

4. ການ ປຸງແຕ່ງ, ຜະລິດ, ນຳໃຊ້, ບັນຈຸ, ຂົນສົ່ງ, ຮິບໂຮມ, ຈັດຫາວັດຖຸລະເບີດ, ສານກຳມັນຕະພາບລັງສີ, ສານພິດ, ວັດຖຸໄວໄຟ ແລະ ຊື້-ຂາຍອາວຸດ, ອຸປະກອນ, ຍານພາຫະນະ ລວມທັງການແນະນຳໃຫ້ກະທຳການໃດໜຶ່ງ ໂດຍມີຈຸດປະສົງຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 2 ແລະ 3 ຂອງມາດຕານີ້;

5. ການ ເຜີຍແຜ່, ຊັກຊວນ, ຊຸກຍູ້, ບັງຄັບ, ນາບຂູ່, ວ່າຈ້າງ ຫຼື ສ້າງເງື່ອນໄຂ, ຊ່ວຍເຫຼືອໃຫ້ມີການກະທຳ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2, 3 ແລະ 4 ຂອງມາດຕານີ້;

6. ການກະທຳຜິດອື່ນ ທີ່ຖືວ່າເປັນການກໍ່ການຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ບຸກຄົນໃດ ຫາກໄດ້ກະທຳຜິດໃນສະຖານການກໍ່ການຮ້າຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 1.000.000.000 ກີບ ຫາ 5.000.000.000 ກີບ.

ໃນກໍລະນີທີ່ມີການຈັດຕັ້ງເປັນກຸ່ມ ຫຼື ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ໜັກໜ່ວງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 5.000.000.000 ກີບ ຫາ 7.000.000.000 ກີບ ແລະ ຈະຖືກຮິບຊັບ ຫຼື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 121 ການທຳລາຍມ້າງເພ ຫຼື ການບຸກລຸກຄ້າຍກັກຂັງຊົ່ວຄາວ, ຄ້າຍຄຸມຂັງ, ຄ້າຍດັດສ້າງ**

ບຸກຄົນໃດ ຫາກໄດ້ໃຊ້ກຳລັງທຳລາຍມ້າງເພ ຫຼື ບຸກລຸກຄ້າຍກັກຂັງຊົ່ວຄາວ, ຄ້າຍຄຸມຂັງ, ຄ້າຍດັດສ້າງ ເພື່ອປຸ້ນເອົາ ຫຼື ຍາດເອົາ ຫຼື ປ່ອຍຕົວຜູ້ຖືກຫາ, ນັກໂທດ, ຜູ້ຖືກດັດສ້າງ ໃນຄ້າຍກັກຂັງຊົ່ວຄາວ, ຄ້າຍຄຸມຂັງ, ຄ້າຍດັດສ້າງ ຫຼື ໃຊ້ກຳລັງປຸ້ນເອົາຜູ້ຖືກຫາ ຫຼື ນັກໂທດ ໃນເວລາໂຍກຍ້າຍໄປ ມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 500.000.000 ກີບ, ອາດຈະຖືກຈຳກັດທີ່ຢູ່ ຫຼື ຕັດອິດສະລະພາບຕະຫຼອດຊີວິດ.

ບຸກຄົນໃດ ຫາກໄດ້ກໍ່ຄວາມປັ່ນປ່ວນ, ທຳລາຍລະບຽບພາຍໃນຂອງຄ້າຍກັກຂັງຊົ່ວຄາວ, ຄ້າຍຄຸມຂັງ, ຄ້າຍດັດສ້າງ ຫຼື ຊັກຊວນ ຍຸແຍ່ໃຫ້ຜູ້ຖືກຫາ, ນັກໂທດ, ຜູ້ຖືກດັດສ້າງໂຕນໜີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 122 ການໂຕນໜີໄປຫາສັດຕູ, ການລ້ຽງດູບຸກຄົນທີ່ເຄື່ອນໄຫວຕ້ານ ສປປ ລາວ**

ບຸກຄົນໃດ ຫາກໄດ້ໂຕນໜີໄປຮ່ວມມືກັບສັດຕູ ເພື່ອຕ້ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ບຸກຄົນໃດ ຫາກໄດ້ປິດບັງ, ຊຸກເຊື່ອງ, ລ້ຽງດູ ຫຼື ຊ່ວຍເຫຼືອບຸກຄົນທີ່ເຄື່ອນໄຫວຕ້ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 123 ການເປີດເຜີຍຄວາມລັບຂອງລັດ ຫຼື ຄວາມລັບທາງລັດຖະການ**

ບຸກຄົນໃດ ທີ່ມີໜ້າທີ່ຮັບຜິດຊອບໃນການເກັບມ້ຽນ, ຮັກສາ, ນຳໃຊ້ເອກະສານກ່ຽວກັບຄວາມລັບຂອງລັດ ຫາກໄດ້ເປີດເຜີຍຄວາມລັບ ຫຼື ເຮັດໃຫ້ເສຍຄວາມລັບ ຫຼື ເຮັດໃຫ້ເອກະສານລັບດັ່ງກ່າວເສຍຫາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

ຖ້າແມ່ນຄວາມລັບທາງລັດຖະການ ກໍຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 124 ການເຕົ້າໂຮມກຸ່ມຄົນເພື່ອສ້າງຄວາມປັ່ນປ່ວນ**

ບຸກຄົນໃດ ຫາກໄດ້ຈັດຕັ້ງ ຫຼື ເຂົ້າຮ່ວມໃນການຈັດຕັ້ງເຕົ້າໂຮມກຸ່ມຄົນ ເພື່ອທຳການປະທ້ວງ, ເດີນຂະບວນ ແລະ ຮູບການອື່ນ ເພື່ອສ້າງຄວາມປັ່ນປ່ວນ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ສັງຄົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 125 ການທຳລາຍ, ການເຄື່ອນຍ້າຍຫຼັກໝາຍຊາຍແດນ**

ບຸກຄົນໃດ ຫາກໄດ້ທຳລາຍ ຫຼື ໄດ້ເຮັດໃຫ້ຫຼັກໝາຍຊາຍແດນເປ່ເພໂດຍເຈດຕະນາ ຫຼື ໄດ້ເຄື່ອນຍ້າຍຫຼັກໝາຍຊາຍແດນໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 126 ການທຳລາຍ, ການໝິ່ນປະໝາດເຄື່ອງໝາຍຊາດ ຫຼື ທຸງຊາດ**

ບຸກຄົນໃດ ຫາກໄດ້ທຳລາຍ, ໝິ່ນປະໝາດເຄື່ອງໝາຍຊາດ ຫຼື ທຸງຊາດ ທີ່ເປັນການແຕະຕ້ອງເຖິງກຽດ ແລະ ສັກສີຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແ ຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 127 ການທຳລາຍ, ການໝິ່ນປະໝາດຮູບຜູ້ນຳຂັ້ນສູງ, ບັນພະບູລຸດຂອງຊາດ**

ບຸກຄົນໃດ ຫາກໄດ້ທຳລາຍ, ໝິ່ນປະໝາດຮູບປັ້ນ, ຮູບຫຼໍ່, ຮູບພາບ, ຮູບຄວັດ ລວມທັງເຄື່ອງໝາຍອື່ນຂອງຜູ້ນຳຂັ້ນສູງ, ບັນພະບູລຸດຂອງຊາດ ຊຶ່ງເປັນການແຕະຕ້ອງເຖິງກຽດ ແລະ ສັກສີ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 128 ການຂົນຂວາຍສົ່ງຄົນອອກ ຫຼື ການເອົາຄົນເຂົ້າປະເທດຢ່າງຜິດກົດໝາຍ**

ບຸກຄົນໃດ ຫາກໄດ້ໂຄສະນາຊວນເຊື່ອ, ຕົວະຍົວະຫຼອກລວງ ໃຫ້ຄົນໂຕນໜີໄປຕ່າງປະເທດ, ສົ່ງຄົນອອກ ຫຼື ເອົາຄົນເຂົ້າປະເທດຢ່າງຜິດກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີໜັກ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 500.000.000 ກີບ.

### ມາດຕາ 129 ການປອມແປງເງິນ ຫຼື ການໃຊ້ເງິນປອມ

ບຸກຄົນໃດ ຫາກໄດ້ໃຊ້ເຄື່ອງພິມ ຫຼື ໃຊ້ວິທີການອື່ນ ປອມແປງເງິນກີບ, ເງິນຕາຕ່າງປະເທດ ຫຼື ນຳເອົາເງິນປອມຈາກຕ່າງປະເທດ ເຂົ້າມາ, ຈຳໜ່າຍ ຫຼື ຈໍລະຈອນ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 500.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ປອມແປງເງິນ ຫຼື ໄດ້ນຳເອົາເງິນປອມເຂົ້າມາ ຢ່າງຫຼວງຫຼາຍ ຫຼື ໂດຍມີການຈັດຕັ້ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວ ປີ ແລະ ຈະຖືກປັບໃໝ ແຕ່ 200.000.000 ກີບ ຫາ 700.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

ບຸກຄົນໃດ ຫາກຮູ້ວ່າແມ່ນເງິນປອມ ແຕ່ຍັງນຳອອກໃຊ້ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ຫາກຮູ້ວ່າຕົນມີເງິນປອມຢູ່ໃນຄອບຄອງ ແຕ່ບໍ່ໄດ້ແຈ້ງຕໍ່ເຈົ້າໜ້າທີ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

### ມາດຕາ 130 ການຟອກເງິນ

ການຟອກເງິນ ແມ່ນ ການປ່ຽນຮູບ, ນຳໃຊ້, ເຄື່ອນຍ້າຍ, ແລກປ່ຽນ, ໄດ້ມາ, ຄອບຄອງ, ໂອນກຳມະສິດທີ່ແທ້ຈິງ ຂອງເງິນ ຫຼື ຊັບສິນອື່ນ ທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍທີ່ຮູ້, ໄດ້ຮູ້ ຫຼື ສົງໄສວ່າເງິນ ຫຼື ຊັບສິນນັ້ນ ມາຈາກການກະທຳຜິດຕົ້ນ ເພື່ອປົກປິດ ຫຼື ຊຸກເຊື່ອງ ຄຸນລັກສະນະ, ທີ່ມາຂອງເງິນ, ທີ່ຕັ້ງຂອງຊັບສິນ ເພື່ອເຮັດໃຫ້ເງິນ ຫຼື ຊັບສິນດັ່ງກ່າວ ຖືກຕ້ອງຕາມກົດໝາຍ.

ບຸກຄົນທີ່ໄດ້ກະທຳຜິດໃນສະຖານຟອກເງິນ ທີ່ມີມູນຄ່າ ຕໍ່າກວ່າ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 300.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ໃນກໍລະນີທີ່ໄດ້ກະທຳຜິດ ຊຶ່ງມີມູນຄ່າ ແຕ່ 1.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 700.000.000 ກີບ ແລະ ຈະຖືກຮິບຊັບ.

ໃນກໍລະນີມີການຈັດຕັ້ງເປັນກຸ່ມ ຫຼື ມີການກະທຳຜິດເປັນອາຈິນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 700.000.000 ກີບ ຫາ 900.000.000 ກີບ ແລະ ຈະຖືກຮິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 131 ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນ ການເຄື່ອນໄຫວໂດຍເຈດຕະນາ ທັງທາງກົງ ແລະ ທາງອ້ອມ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພະຍາຍາມ ໃຫ້, ຮັບໂຮມ, ຈັດຫາທຶນທີ່ຖືກຕ້ອງ ຫຼື ບໍ່ຖືກຕ້ອງ, ທັງໝົດ ຫຼື ບາງສ່ວນ ເພື່ອສະໜອງໃຫ້ແກ່ການກໍ່ການຮ້າຍ ເຖິງວ່າທຶນນັ້ນຈະຖືກນຳໃຊ້ ຫຼື ບໍ່ນຳໃຊ້ເຂົ້າໃນການກະທຳຕົວຈິງກໍຕາມ.

ບຸກຄົນ ທີ່ໄດ້ກະທຳຜິດໃນສະຖານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ມີມູນຄ່າຕ່ຳກວ່າ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 800.000.000 ກີບ ແລະ ຈະຖືກຮິບຊັບ.

ໃນກໍລະນີທີ່ມີມູນຄ່າ ແຕ່ 1.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ແຕ່ 800.000.000 ກີບ ຫາ 1.000.000.000 ກີບ ແລະ ຈະຖືກຮິບຊັບ.

ໃນກໍລະນີທີ່ມີການຈັດຕັ້ງເປັນກຸ່ມ ຫຼື ເປັນອາຈີນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 800.000.000 ກີບ ຫາ 1.000.000.000 ກີບ ແລະ ຈະຖືກຮິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 132 ການຜະລິດ, ການມີໄວ້ໃນຄອບຄອງ, ການໃຊ້ອາວຸດເສິກ ຫຼື ວັດຖຸລະເບີດໂດຍບໍ່ຖືກຕ້ອງຕາມກົດໝາຍ

ບຸກຄົນໃດ ຫາກໄດ້ຜະລິດ, ມີໄວ້ໃນຄອບຄອງ, ຮັກສາ, ໃຊ້ອາວຸດເສິກ ຫຼື ວັດຖຸລະເບີດ ລວມທັງຊິ້ນສ່ວນຂອງອາວຸດເສິກ ຫຼື ວັດຖຸລະເບີດ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 133 ການຊື້, ຂາຍ, ນຳເຂົ້າອາວຸດເສິກ ຫຼື ວັດຖຸລະເບີດ ໂດຍບໍ່ຖືກຕ້ອງຕາມກົດໝາຍ

ບຸກຄົນໃດ ຫາກໄດ້ ຊື້, ຂາຍ, ນຳເຂົ້າ ອາວຸດເສິກ ຫຼື ວັດຖຸລະເບີດ ລວມທັງສານເຄມີທີ່ໃຊ້ ເພື່ອຜະລິດລະເບີດ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ຖືເອົາການຊື້, ການຂາຍ, ການນຳເຂົ້າອາວຸດເສິກ ຫຼື ວັດຖຸລະເບີດ ລວມທັງສານເຄມີທີ່ໃຊ້ເພື່ອຜະລິດລະເບີດ ເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີທີ່ໄດ້ຊື້, ຂາຍວັດຖຸດັ່ງກ່າວ ເປັນຈຳນວນຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 134 ການລັກ, ການຍັກຍອກ, ການປຸ້ນເອົາອາວຸດເສິກ ຫຼື ວັດຖຸລະເບີດ**

ບຸກຄົນໃດ ຫາກໄດ້ລັກ, ຍັກຍອກ, ປຸ້ນເອົາອາວຸດເສິກ ຫຼື ວັດຖຸລະເບີດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ຖືເອົາການລັກ, ຍັກຍອກອາວຸດເສິກ ຫຼື ວັດຖຸລະເບີດເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ ຫຼື ໄດ້ລັກ, ຍັກຍອກເອົາອາວຸດດັ່ງກ່າວເປັນຈຳນວນຫຼວງຫຼາຍ ຫຼື ໄດ້ປຸ້ນເອົາອາວຸດດັ່ງກ່າວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 135 ການທຳລາຍສາງອາວຸດ**

ບຸກຄົນໃດ ຫາກໄດ້ທຳລາຍ, ມ້າງເພ ຫຼື ຈູດເຜົາສາງອາວຸດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 100.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 136 ການເຮັດໃຫ້ອາວຸດເສິກ ຫຼື ວັດຖຸລະເບີດຂອງລັດເສຍຫາຍ**

ບຸກຄົນໃດ ຫາກໄດ້ເຮັດໃຫ້ອາວຸດເສິກ ຫຼື ວັດຖຸລະເບີດຂອງລັດເສຍຫາຍ ດ້ວຍຄວາມບໍ່ລະມັດລະວັງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 137 ການກະທຳຜິດກ່ຽວກັບອາວຸດເຄມີ**

ອາວຸດເຄມີ ແມ່ນ ອາວຸດທີ່ປະກອບດ້ວຍທາດພິດ, ທາດເບື່ອ ຊຶ່ງນຳໃຊ້ເພື່ອທຳລາຍລ້າງຜານມະນຸດ.

ບຸກຄົນໃດ ຫາກໄດ້ ຜະລິດ, ຊື້, ຂາຍ, ມອບ, ແລກປ່ຽນ, ມີໄວ້ໃນຄອບຄອງ ຫຼື ຂົນສົ່ງ ສານເຄມີ ເພື່ອຜະລິດອາວຸດເຄມີ ຈະຖືກລົງໂທດ ດັ່ງນີ້:

– ແຕ່ຫ້າພັນກຣາມລົງມາ ຈະຖືກຕັດອິດສະລະພາບ ແຕ່ ຫ້າປີ ຫາ ຫົກປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 6.000.000 ກີບ;

– ເກີນກວ່າຫ້າພັນກຣາມ ຫາ ສິບພັນກຣາມ ຈະຖືກຕັດອິດສະລະພາບເກີນກວ່າ ຫົກປີ ຫາ ແປດປີ ແລະ ຈະຖືກປັບໃໝ ເກີນກວ່າ 6.000.000 ກີບ ຫາ 8.000.000 ກີບ;

– ເກີນກວ່າສິບພັນກຣາມ ຈະຖືກຕັດອິດສະລະພາບເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກປັບໃໝ ເກີນກວ່າ 8.000.000 ກີບ ຫາ 10.000.000 ກີບ.

ບຸກຄົນໃດ ຫາກໄດ້ຜະລິດ, ຊື້, ຂາຍ, ມອບ, ແລກປ່ຽນ, ມີໄວ້ໃນຄອບຄອງ, ຂົນສົ່ງ ຫຼື ຍຸຍົງສົ່ງເສີມການນຳໃຊ້ອາວຸດເຄມີ ຈະຖືກລົງໂທດ ດັ່ງນີ້:

– ແຕ່ຫ້າພັນກຣາມລົງມາ ຈະຖືກຕັດອິດສະລະພາບ ແຕ່ ເຈັດປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 200.000.000 ກີບ;

– ເກີນກວ່າຫ້າພັນກຣາມ ຫາ ສິບພັນກຣາມ ຈະຖືກຕັດອິດສະລະພາບເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກ ປັບ ໃໝເກີນກວ່າ 200.000.000 ກີບ ຫາ 300.000.000 ກີບ;

– ເກີນກວ່າສິບພັນກຣາມ ຈະຖືກຕັດອິດສະລະພາບເກີນກວ່າ ສິບປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ເກີນກວ່າ 300.000.000 ກີບ ຫາ 500.000.000 ກີບ.

ບຸກຄົນໃດ ຫາກໄດ້ນຳໃຊ້ອາວຸດເຄມີ ຈະຖືກລົງໂທດ ດັ່ງນີ້:

– ຖ້າຜົນເສຍຫາຍບໍ່ຫຼວງຫຼາຍ ຈະຖືກຕັດອິດສະລະພາບ ແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 700.000.000 ກີບ ຫາ 1.500.000.000 ກີບ;

– ຖ້າຜົນເສຍຫາຍຢ່າງຫຼວງຫຼາຍ ຈະຖືກຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 2.000.000.000 ກີບ ຫາ 5.000.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 138 ການຜະລິດ, ການມີໄວ້ໃນຄອບຄອງເຄື່ອງວິທະຍຸສື່ສານ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກໄດ້ຜະລິດ, ມີໄວ້ຄອບຄອງ ຫຼື ໄດ້ຕິດຕັ້ງເຄື່ອງວິທະຍຸສື່ສານ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 139 ການສ້າງຕັ້ງກຳລັງປ້ອງກັນຕົວ ແລະ ກຳລັງຮັກສາຄວາມປອດໄພໂດຍບໍ່ໄດ້ຮັບອະນຸຍາດ**

ບຸກຄົນໃດ ຫາກໄດ້ສ້າງຕັ້ງກຳລັງປ້ອງກັນຕົວ ແລະ ກຳລັງຮັກສາຄວາມປອດໄພໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 70.000.000 ກີບ.

# ໝວດທີ 2
# ການກະທຳຜິດກ່ຽວກັບຄວາມປອດໄພ
# ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ

**ມາດຕາ 140 ການເປັນແພດເຖື່ອນ**

ບຸກຄົນໃດ ທີ່ບໍ່ໄດ້ຮັບອະນຸຍາດປິ່ນປົວຢ່າງຖືກຕ້ອງຕາມກົດໝາຍ ຫາກໄດ້ປິ່ນປົວຄົນເຈັບ ເພື່ອຫາລາຍໄດ້ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເຮັດໃຫ້ຄົນເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເຮັດໃຫ້ຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 141 ການຫຼິ້ນການພະນັນທີ່ຕ້ອງຫ້າມ**

ບຸກຄົນໃດ ຫາກໄດ້ຫຼິ້ນການພະນັນທີ່ຕ້ອງຫ້າມ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ບຸກຄົນໃດ ຫາກໄດ້ລົມຍອມໃຫ້ຫຼິ້ນການພະນັນທີ່ຕ້ອງຫ້າມຢູ່ໃນເຮືອນຂອງຕົນ ຫຼື ເປັນເຈົ້າມື ຫຼື ເປັນຜູ້ກະທຳຜິດທີ່ບໍ່ເຂັດຫຼາບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 142 ການເປັນນັກເລງອັນທະພານ**

ບຸກຄົນໃດ ທີ່ບໍ່ເຄົາລົບນັບຖືລະບຽບວິໄນຂອງການດຳລົງຊີວິດຂອງສັງຄົມ ຫາກໄດ້ໃຊ້ຄວາມຮຸນແຮງ, ໃຊ້ການນາບຂູ່, ໃຊ້ຄວາມຫຍາບຊ້າ ຫຼື ໄດ້ມີການກະທຳອື່ນ ຊຶ່ງຝືນຕໍ່ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຈະຖືກຕຳນິວິຈານ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີມີການຈັດຕັ້ງເປັນກຸ່ມ ຫຼື ເປັນອາຈິນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 143 ການກະທຳຜິດຕໍ່ຄວາມປອດໄພຂອງການຈະລາຈອນທາງບົກ**

ບຸກຄົນໃດ ໂດຍເຈດຕະນາ ຫາກໄດ້ເຮັດໃຫ້ຖະໜົນຫົນທາງເສຍຫາຍ, ປ່ຽນແປງ ຫຼື ເຮັດໃຫ້ລະບົບສັນຍານຈະລາຈອນ ເປັນຕົ້ນ ປ້າຍຈະລາຈອນ ຫຼື ປ້າຍສັນຍານ, ໄຟອຳນາດ, ກ້ອງວົງຈອນປິດ, ຫຼັກ

ໝາຍກິໂລແມັດ ເສຍຫາຍ; ໄດ້ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ຜູ້ຂັບຂີ່ຍານພາຫະນະ ຊຶ່ງພາໃຫ້ເກີດອຸບປະຕິເຫດໃນການຈະລາຈອນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທໍາຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທໍາຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີທີ່ການກະທໍາຜິດ ຫາກພາໃຫ້ມີຄົນເສຍຊີວິດແແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ເປັນການກະທໍາຜິດດ້ວຍຄວາມບໍ່ລະມັດລະວັງ ແລະ ສ້າງຄວາມເສຍຫາຍ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ເປັນການກະທໍາຜິດດ້ວຍຄວາມບໍ່ລະມັດລະວັງ ແລ້ວພາໃຫ້ມີຄົນບາດເຈັບສາຫັດ, ເຈັບຫຼາຍຄົນ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ເປັນການກະທໍາຜິດດ້ວຍຄວາມບໍ່ລະມັດລະວັງ ແລ້ວພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ເປັນການກະທໍາຜິດດ້ວຍຄວາມບໍ່ລະມັດລະວັງ ແລ້ວພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 30.000.000 ກີບ.

**ມາດຕາ 144 ການກີດຂວາງການຈະລາຈອນທາງບົກ**

ບຸກຄົນໃດ ຫາກໄດ້ກີດຂວາງການຈະລາຈອນທາງບົກ ດ້ວຍການ ຂຸດ, ເຈາະ ຫຼື ຕັດ, ວາງສິ່ງກີດຂວາງ, ມ້າງ, ຮື້ຖອນ, ຍົກຍ້າຍ, ເຮັດໃຫ້ຫຍຸ້ງຍາກ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີເປັນການກະທຳຜິດ ທີ່ພາໃຫ້ເກີດອຸບປະຕິເຫດໃນການຈະລາຈອນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກໄດ້ພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກໄດ້ພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 145 ການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ**

ບຸກຄົນໃດ ຫາກໄດ້ລະເມີດກົດຈະລາຈອນ ແລ້ວພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ຜູ້ອື່ນຖືກບາດເຈັບ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເຈັບຫຼາຍຄົນ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 146 ການຫຼົບໜີຈາກອຸບປະຕິເຫດ**

ບຸກຄົນໃດ ຫາກໄດ້ເຮັດໃຫ້ອຸບປະຕິເຫດເກີດຂຶ້ນ ຫຼື ມີສ່ວນພົວພັນໂດຍກົງກັບອຸບປະຕິເຫດແລ້ວຫຼົບໜີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 147 ການນຳໃຊ້ພາຫະນະທີ່ບໍ່ໄດ້ມາດຕະຖານເຕັກນິກ

ບຸກຄົນໃດ ຫາກນຳໃຊ້ພາຫະນະທີ່ບໍ່ໄດ້ມາດຕະຖານເຕັກນິກ ແລ້ວພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 148 ການມອບໝາຍໃຫ້ບຸກຄົນທີ່ບໍ່ມີເງື່ອນໄຂຂັບຂີ່ພາຫະນະບິນທ້ອງຖະໜົນ

ບຸກຄົນໃດ ຫາກໄດ້ມອບໝາຍໃຫ້ບຸກຄົນທີ່ບໍ່ອະນຸຍາດໃຫ້ຂັບຂີ່ ຫຼື ບໍ່ມີໃບອະນຸຍາດຂັບຂີ່ ຫຼື ບໍ່ມີເງື່ອນໄຂຄົບຖ້ວນຕາມກົດໝາຍ ເພື່ອຂັບຂີ່ພາຫະນະບິນທ້ອງຖະໜົນ ຊຶ່ງພາໃຫ້ເກີດອຸບປະຕິເຫດເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 149 ການແຂ່ງລົດໂດຍບໍ່ຖືກຕ້ອງຕາມກົດໝາຍ

ບຸກຄົນໃດ ຫາກເຂົ້າຮ່ວມໃນການແຂ່ງ ລົດໃຫຍ່, ລົດຈັກ ຫຼື ພາຫະນະອື່ນ ທີ່ແລ່ນດ້ວຍເຄື່ອງຈັກໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບ ຈະຖືກລົງໂທດຕັດອິດສະ ລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 25.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫົກປີ ແລະ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 70.000.000 ກີບ.

**ມາດຕາ 150 ການຈັດຕັ້ງແຂ່ງລົດໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກຈັດຕັ້ງໃຫ້ມີການແຂ່ງ ລົດໃຫຍ່, ລົດຈັກ ຫຼື ພາຫະນະອື່ນ ທີ່ແລ່ນດ້ວຍເຄື່ອງຈັກໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກປັບໃໝ 10.000.000 ກີບ ຫາ 50.000.000 ກີບ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ເກີດອຸບປະຕິເຫດ ແລະ ມີການບາດເຈັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກ ເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 70.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 151 ການລະເມີດລະບຽບການກ່ຽວກັບການຈະລາຈອນທາງລົດໄຟ**

ບຸກຄົນໃດ ຫາກໄດ້ລະເມີດລະບຽບການ ກ່ຽວກັບຄວາມປອດໄພໃນການຈະລາຈອນທາງລົດໄຟແລ້ວພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ມີຄົນບາດເຈັບ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 152 ການລະເມີດລະບຽບການກ່ຽວກັບຄວາມປອດໄພໃນການຈະລາຈອນທາງນ້ຳ**

ບຸກຄົນໃດ ຫາກໄດ້ລະເມີດລະບຽບການ ກ່ຽວກັບຄວາມປອດໄພໃນການຈະລາຈອນທາງນ້ຳ ແລ້ວພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ມີຄົນບາດເຈັບ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 153 ການລະເມີດລະບຽບການກ່ຽວກັບຄວາມປອດໄພຂອງການບິນ**

ບຸກຄົນໃດ ຫາກໄດ້ສັ່ງ ຫຼື ດຳເນີນງານກ່ຽວກັບການບິນ ໂດຍລະເມີດລະບຽບການກ່ຽວກັບຄວາມປອດໄພໃນການຈະລາຈອນທາງອາກາດ ຊຶ່ງເຮັດໃຫ້ຄົນອື່ນໄດ້ຮັບບາດເຈັບ ຫຼື ເສຍຊີວິດ ຫຼື ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 154 ການນຳໃຊ້ອຸປະກອນກ່ຽວກັບເຮືອບິນທີ່ບໍ່ໄດ້ມາດຕະຖານຄວາມປອດໄພ**

ບຸກຄົນໃດ ທີ່ຮັບຜິດຊອບໂດຍກົງກ່ຽວກັບສະພາບເຄື່ອງຈັກ, ເຕັກນິກຂອງເຮືອບິນ ແຕ່ອະນຸຍາດໃຫ້ນຳໃຊ້ເຮືອບິນ ຊຶ່ງບໍ່ຕອບສະໜອງມາດຕະຖານຄວາມປອດໄພຢ່າງຈະແຈ້ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ຄົນອື່ນບາດເຈັບສາຫັດ ຫຼື ເສຍຊີວິດ ຫຼື ໃນກໍລະນີທີ່ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 155 ການລະເມີດລະບຽບການກ່ຽວກັບການຮັກສາ, ສ້ອມແປງ ຫຼື ຄຸ້ມຄອງວຽກງານການຈະລາຈອນ**

ບຸກຄົນໃດ ທີ່ຮັບຜິດຊອບໂດຍກົງກ່ຽວກັບການຮັກສາ, ສ້ອມແປງ ຫຼື ຄຸ້ມຄອງວຽກງານການຈະລາຈອນທາງບົກ, ທາງນ້ຳ, ທາງອາກາດ ຫຼື ທາງລົດໄຟ ແຕ່ໄດ້ລະເມີດລະບຽບການເຫຼົ່ານັ້ນ ຊຶ່ງເຮັດໃຫ້ຄົນ ອື່ນບາດເຈັບສາຫັດ ຫຼື ເສຍຊີວິດ ຫຼື ໃນກໍລະນີທີ່ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 156 ການກະທຳທີ່ເປັນອັນຕະລາຍຕໍ່ຄວາມປອດໄພຂອງເຮືອ, ເຮືອບິນ, ກຳປັ່ນ, ລົດໄຟ, ລົດ, ສະໜາມບິນ, ທ່າກຳປັ່ນ, ສະຖານີລົດໄຟ ຫຼື ສະຖານີລົດ**

ບຸກຄົນໃດ ຫາກມີການກະທຳທີ່ເປັນການລະເມີດລະບຽບ ແລະ ເປັນອັນຕະລາຍຕໍ່ຄວາມປອດໄພຂອງ ເຮືອ, ເຮືອບິນ, ກຳປັ່ນ, ລົດໄຟ, ລົດ, ສະໜາມບິນ, ທ່າກຳປັ່ນ, ສະຖານີລົດໄຟ ຫຼື ສະຖານີລົດ ຊຶ່ງໄດ້ສ້າງຄວາມເສຍຫາຍຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກ ປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທຳຜິດນັ້ນ ຫາກໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 50.000.000 ກີບ ຫຼື ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 150.000.000 ກີບ.

**ມາດຕາ 157 ການຈີ້ ລົດ, ເຮືອ, ເຮືອບິນ**

ບຸກຄົນໃດ ຫາກໄດ້ໃຊ້ອາວຸດ ຫຼື ຄວາມຮຸນແຮງ ເພື່ອ ຈີ້, ຄວບຄຸມ ຫຼື ຍຶດ ລົດ, ລົດໄຟ, ເຮືອ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 300.000.000 ກີບ.

ບຸກຄົນໃດ ຫາກໄດ້ໃຊ້ອາວຸດ ຫຼື ຄວາມຮຸນແຮງ ເພື່ອ ຈີ້, ຄວບຄຸມ ຫຼື ຍຶດ ເຮືອບິນ, ກຳປັ່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ.

ໃນກໍລະນີທີ່ການກະທຳຜິດດັ່ງກ່າວ ຫາກໄດ້ກໍ່ຄວາມເສຍຫາຍຕໍ່ ຊີວິດ, ສຸຂະພາບ ຫຼື ຊັບສິນຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 1.000.000.000 ກີບ ຫາ 10.000.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 158 ການທຳລາຍເຮືອບິນ, ສະໜາມບິນ, ສະຖານີລົດໄຟ, ສະຖານີຂົນສົ່ງ, ທ່າເຮືອ ຫຼື ທ່າກຳປັ່ນ**

ບຸກຄົນໃດ ຫາກໄດ້ທຳລາຍເຮືອບິນ, ສະໜາມບິນ, ສະຖານີລົດໄຟ, ສະຖານີຂົນສົ່ງ, ທ່າເຮືອ ຫຼື ທ່າກຳປັ່ນ, ລົດໄຟ ຈະດ້ວຍວິທີໃດກໍຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 3.000.000.000 ກີບ.

ໃນກໍລະນີທີ່ການກະທຳຜິດນັ້ນ ຫາກໄດ້ສ້າງຄວາມເສຍຫາຍຕໍ່ ຊີວິດ, ສຸຂະພາບ ຫຼື ຊັບສິນຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 3.000.000.000 ກີບ ຫາ 20.000.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 159 ການປຸ້ນຢູ່ທະເລ**

ບຸກຄົນໃດ ຫາກໄດ້ໂຈມຕີ, ປຸ້ນ, ທຳລາຍຊັບສິນເທິງກຳປັ່ນ, ຍານພາຫະນະບິນ ຫຼື ຍານພາຫະນະອື່ນທາງທະເລຢູ່ທະເລ ຫຼື ບ່ອນທີ່ບໍ່ຢູ່ໃນເຂດອຳນາດຕັດສິນຂອງປະເທດໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 300.000.000 ກີບ.

ໃນກໍລະນີທີ່ການກະທຳຜິດດັ່ງກ່າວ ຫາກໄດ້ກໍ່ຄວາມເສຍຫາຍຕໍ່ຊີວິດ, ສຸຂະພາບ ຫຼື ຊັບສິນຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 1.000.000.000 ກີບ ຫາ 10.000.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 160 ການບຸກລຸກເຮືອບິນ, ສະໜາມບິນ ຫຼື ເຂດຕິດຕັ້ງອຸປະກອນອຳນວຍຄວາມສະດວກການບິນ**

ບຸກຄົນໃດ ຫາກໄດ້ໃຊ້ກຳລັງ ຫຼື ອາວຸດ ບຸກລຸກເຮືອບິນ, ສະໜາມບິນ ຫຼື ເຂດຕິດຕັ້ງອຸປະກອນອຳນວຍຄວາມສະດວກການບິນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ.

ໃນກໍລະນີທີ່ການກະທຳຜິດນັ້ນ ຫາກໄດ້ສ້າງຄວາມເສຍຫາຍຕໍ່ ຊີວິດ, ສຸຂະພາບ ຫຼື ຊັບສິນຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 1.000.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 161 ການນຳເອົາອາວຸດ, ວັດຖຸລະເບີດ ຫຼື ທາດເຄມີອັນຕະລາຍ ຂຶ້ນເທິງເຮືອບິນ ຫຼື ເຂົ້າໃນສະໜາມບິນ ຫຼື ເຂດຕິດຕັ້ງອຸປະກອນອຳນວຍຄວາມສະດວກການບິນ**

ບຸກຄົນໃດ ຫາກນຳເອົາອາວຸດ, ວັດຖຸອັນຕະລາຍ ຫຼື ວັດຖຸໃດໜຶ່ງ ທີ່ສາມາດກໍ່ໃຫ້ເກີດຄວາມເສຍຫາຍຂຶ້ນເທິງເຮືອບິນ ຫຼື ເຂົ້າໃນສະໜາມບິນ ຫຼື ເຂົ້າໃນເຂດຕິດຕັ້ງອຸປະກອນອຳນວຍຄວາມສະດວກການບິນ ໂດຍບໍ່ຖືກຕ້ອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ.

ໃນກໍລະນີທີ່ການກະທຳຜິດນັ້ນ ຫາກໄດ້ສ້າງຄວາມເສຍຫາຍຕໍ່ ຊີວິດ, ສຸຂະພາບ ຫຼື ຊັບສິນຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 1.000.000.000 ກີບ.

**ມາດຕາ 162 ການເຜີຍແຜ່ຂໍ້ມູນ ຂ່າວສານທີ່ບໍ່ຖືກຕ້ອງກ່ຽວກັບການບິນ**

ບຸກຄົນໃດ ຫາກເຜີຍແຜ່ຂໍ້ມູນ ຂ່າວສານທີ່ບໍ່ຖືກຕ້ອງ ກ່ຽວກັບການບິນພົນລະເຮືອນ ເຊັ່ນ ການໂຄສະນາທີ່ເປັນການຂົ່ມຂູ່ ຕໍ່ຄວາມປອດໄພ ແລະ ການຮັກສາຄວາມປອດໄພ ຂອງເຮືອບິນ, ສະໜາມບິນ ຫຼື ອຸປະກອນອຳນວຍຄວາມສະດວກການບິນ, ພະນັກງານຜູ້ໃຫ້ບໍລິການເທິງເຮືອບິນ ຫຼື ພາກພື້ນດິນ, ຈຸບິນ, ຜູ້ໂດຍສານ ຫຼື ສາທາລະນະຊົນທົ່ວໄປທີ່ຢູ່ໃນສະໜາມບິນ, ອ້ອມຂ້າງສະໜາມບິນ ຫຼື ຂອບເຂດທີ່ໄດ້ຮັບ

ພືນກະທົບຈາກການບິນພົນລະເຮືອນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີການກະທຳຜິດນັ້ນ ຫາກໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 50.000. 000 ກີບ ຫາ 100.000.000 ກີບ.

**ມາດຕາ 163 ການຂັບເຮືອບິນທີ່ຂັດກັບລະບຽບການບິນຂອງ ສປປ ລາວ**

ບຸກຄົນໃດ ຫາກໄດ້ຂັບເຮືອບິນ ເຂົ້າ ຫຼື ອອກຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ລະເມີດລະບຽບການກ່ຽວກັບການບິນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 164 ການເປີດເຜີຍມາດຕະການປ້ອງກັນການເຂົ້າເຖິງລະບົບຄອມພິວເຕີ**

ບຸກຄົນໃດ ຫາກໄດ້ນຳເອົາມາດຕະການປ້ອງກັນສະເພາະ ໄປເປີດເຜີຍໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ ລັດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 4.000.000 ກີບ.

**ມາດຕາ 165 ການເຂົ້າເຖິງລະບົບຄອມພິວເຕີ ໂດຍບໍ່ໄດ້ຮັບອະນຸຍາດ**

ບຸກຄົນໃດ ຫາກໄດ້ນຳໃຊ້ອຸປະກອນເອເລັກໂຕຣນິກ ເຂົ້າໃນລະບົບຄອມພິວເຕີທີ່ມີມາດຕະການປ້ອງກັນສະເພາະ ຫຼື ເພື່ອລັກເອົາຂໍ້ມູນທາງດ້ານການຄ້າ, ດ້ານການເງິນ, ຄວາມລັບ ແລະ ຂໍ້ມູນອື່ນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 166 ການຕັດຕໍ່ເນື້ອໃນ, ຮູບ, ພາບເຄື່ອນໄຫວ, ສຽງ ແລະ ວີດີໂອ ໂດຍບໍ່ໄດ້ຮັບອະນຸຍາດ**

ບຸກຄົນໃດ ຫາກໄດ້ສ້າງຂຶ້ນໃໝ່, ການເພີ່ມເຕີມ ຫຼື ການດັດແປງຈາກສະບັບຕົ້ນ ດ້ວຍວິທີການທາງເອເລັກໂຕຣນິກ ຫຼື ວິທີການອື່ນ ເພື່ອເຜີຍແຜ່ ຜ່ານລະບົບຄອມພິວເຕີ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 167 ການລັດເອົາຂໍ້ມູນໃນລະບົບຄອມພິວເຕີ ໂດຍບໍ່ໄດ້ຮັບອະນຸຍາດ**

ບຸກຄົນໃດ ຫາກໄດ້ລັດເອົາຂໍ້ມູນທີ່ກຳລັງຮັບ ຫຼື ສົ່ງຜ່ານລະບົບຄອມພິວເຕີ ດ້ວຍການນຳໃຊ້ເຄື່ອງມືທາງດ້ານເອເລັກໂຕຣນິກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 168 ການສ້າງຄວາມເສຍຫາຍຜ່ານສື່ສັງຄົມອອນລາຍ**

ບຸກຄົນໃດ ຫາກໄດ້ສ້າງຄວາມເສຍຫາຍຜ່ານສື່ສັງຄົມອອນລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 169 ການເຜີຍແຜ່ສິ່ງລາມົກຜ່ານລະບົບຄອມພິວເຕີ**

ບຸກຄົນໃດ ຫາກໄດ້ເຜີຍແຜ່ຂໍ້ມູນ ທີ່ມີເນື້ອໃນ ສະແດງອອກຢ່າງຈະແຈ້ງ ເປັນຕົ້ນ ຮູບ, ພາບເຄື່ອນໄຫວ, ສຽງ ແລະ ວີດີໂອ ກ່ຽວກັບອະໄວຍະເພດ ແລະ ພຶດຕິກຳທາງເພດຂອງຄົນ ຜ່ານລະບົບຄອມພິວເຕີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 30.000.000 ກີບ.

**ມາດຕາ 170 ການລົບກວນລະບົບຄອມພິວເຕີ**

ບຸກຄົນໃດ ຫາກໄດ້ນຳໃຊ້ໂປຣແກຣມຄອມພິວເຕີ, ໄວຣັດ ຫຼື ເຄື່ອງມືອື່ນ ເພື່ອຂັດຂວາງ ຫຼື ທຳລາຍການປະຕິບັດງານຂອງລະບົບຄອມພິວເຕີ, ໄດ້ສົ່ງຂໍ້ມູນລະບົບຄອມພິວເຕີ ຫຼື ຈົດໝາຍທາງເອເລັກໂຕຣນິກ ໂດຍມີການປົກປິດທີ່ຢູ່ ຫຼື ແຫຼ່ງທີ່ມາຂອງຜູ້ສົ່ງ ເພື່ອລົບກວນ ແລະ/ຫຼື ທຳລາຍການປະຕິບັດງານຂອງລະບົບຄອມພິວເຕີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 30.000.000 ກີບ.

**ມາດຕາ 171 ການປອມແປງຂໍ້ມູນຄອມພິວເຕີ**

ບຸກຄົນໃດ ຫາກໄດ້ນຳໃຊ້ຄອມພິວເຕີ ຫຼື ລະບົບຄອມພິວເຕີ ແລະ ອຸປະກອນເອເລັກໂຕຣນິກ ເພື່ອປ່ຽນແປງຂໍ້ມູນຄອມພິວເຕີ ດ້ວຍການປ້ອນຂໍ້ມູນ, ການປ່ຽນແປງຂໍ້ມູນ, ການປອມທີ່ຢູ່ທາງເອເລັກໂຕຣນິກ ຫຼື ການລຶບຂໍ້ມູນໃນລະບົບຄອມພິວເຕີ ທີ່ສົ່ງຜົນໃຫ້ຂໍ້ມູນທາງລະບົບຄອມພິວເຕີໃດໜຶ່ງ ປ່ຽນແປງຈາກຂໍ້ມູນ ເດີມໂດຍເຈດຕະນາ, ປ້ອນ ແລະ ການປ່ຽນແປງຂໍ້ມູນທຸລະກຳທາງການເງິນ, ທາງການຄ້າ, ຄວາມລັບ ແລະ ຂໍ້ມູນອື່ນ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ດ້ວຍການສ້າງເວັບໄຊປອມ ເພື່ອຫຼອກລວງ, ການຫຼອກລວງໃຫ້ຜູ້ນຳໃຊ້ລະບົບຄອມພິວເຕີ ຫຼື ອິນເຕີເນັດປ້ອນຂໍ້ມູນບັນຊີເງິນຝາກ, ລະຫັດບັດເຄຣດິດ, ລະຫັດນຳໃຊ້ອິນເຕີເນັດ ແລະ ຂໍ້ມູນອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 30.000.000 ກີບ.

## ມາດຕາ 172 ການທຳລາຍຂໍ້ມູນລະບົບຄອມພິວເຕີ

ບຸກຄົນໃດ ຫາກໄດ້ລຶບ, ດັດແກ້ ແລະ/ຫຼື ປ່ຽນແປງຂໍ້ມູນຄອມພິວເຕີ ຫຼື ຂໍ້ມູນໃນລະບົບຄອມພິວເຕີ ເພື່ອເຮັດໃຫ້ຂໍ້ມູນ ຫຼື ລະບົບຄອມພິວເຕີນັ້ນ ເສຍຫາຍ ແລະ ຜິດແປກຈາກຂໍ້ມູນເດີມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 173 ການດຳເນີນກິດຈະການກ່ຽວກັບເຄື່ອງມືອາຊະຍາກຳທາງລະບົບຄອມພິວເຕີ

ບຸກຄົນໃດ ຫາກໄດ້ສ້າງໂປຣແກຣມໃໝ່ສະເພາະ, ການຜະລິດ, ການນຳເຂົ້າ, ມີໄວ້ໃນຄອບຄອງ, ການຊື້ຂາຍ, ການຈຳໜ່າຍ, ການໂຄສະນາ ເຜີຍແຜ່ ຫຼື ແນະນຳເຄື່ອງມືດັ່ງກ່າວ ເປັນຕົ້ນ ໂປຣແກຣມຄອມພິວເຕີ ຫຼື ການອອກແບບຂໍ້ມູນຄອມພິວເຕີ ເພື່ອກໍ່ອາຊະຍາກຳທາງລະບົບຄອມພິວເຕີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 174 ການກະທຳຜິດທາງລະບົບໂທລະຄົມມະນາຄົມ

ບຸກຄົນໃດ ຫາກໄດ້ດັດປັບຄື້ນຄວາມຖີ່ ຫຼື ນຳໃຊ້ອຸປະກອນ, ເຄືອຂ່າຍໂທລະຄົມມະນາຄົມຂອງຕົນ ເຂົ້າໃສ່ຄື້ນຄວາມຖີ່ ຫຼື ອຸປະກອນ, ເຄືອຂ່າຍໂທລະຄົມມະນາຄົມຂອງຜູ້ອື່ນ ເພື່ອສະກັດກັ້ນ, ລົບກວນ, ບຸກລຸກ, ທຳລາຍ, ປ່ຽນແປງ, ລຶບ, ລັກຕໍ່, ລັກຟັງ, ລັກ ຫຼື ກັ່ນກອງເອົາຂໍ້ມູນ ຂ່າວສານ ຂອງຜູ້ອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫົກເດືອນ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ການກະທຳຜິດເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງ ປີ ຫາ ສາມ ປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

## ມາດຕາ 175 ການລະເມີດລະບຽບການກ່ຽວກັບຄວາມປອດໄພດ້ານແຮງງານ, ສຸຂານາໄມ ແລະ ຄວາມປອດໄພໃນຫົວໜ່ວຍແຮງງານ

ບຸກຄົນໃດ ຫາກໄດ້ລະເມີດລະບຽບການກ່ຽວກັບຄວາມປອດໄພດ້ານແຮງງານ, ສຸຂານາໄມ ແລະ ຄວາມປອດໄພໃນຫົວໜ່ວຍແຮງງານ ຊຶ່ງພາໃຫ້ມີຄວາມເປັນອັນຕະລາຍຕໍ່ສຸຂະພາບ ຫຼື ຊັບສິນຂອງບຸກຄົນອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ເກີດອຸບປະຕິເຫດ ຊຶ່ງພາໃຫ້ມີຄົນບາດເຈັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 35.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 176 ການໃຊ້ແຮງງານໄວໜຸ່ມ

ບຸກຄົນໃດ ຫາກໄດ້ຮັບເອົາເດັກ ອາຍຸແຕ່ ສິບສີ່ປີ ຫາ ຕໍ່າກວ່າ ສິບແປດປີ ເຂົ້າເຮັດວຽກ, ໃຫ້ເຮັດວຽກໜັກ ຫຼື ວຽກທີ່ເປັນອັນຕະລາຍ ຫຼື ວຽກຢູ່ສະຖານທີ່ ທີ່ເປັນອັນຕະລາຍ, ໃຫ້ເດັກເຮັດວຽກເກີນເວລາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ ແລະ ລະບຽບການທີ່ກ່ຽວຂ້ອງ ຫຼື ໃຊ້ເດັກ ໃນການສູ້ຮົບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ບາດເຈັບຫຼາຍຄົນ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າ ປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 100.000.000 ກີບ.

### ມາດຕາ 177 ການລະເມີດລະບຽບການກ່ຽວກັບການກໍ່ສ້າງ

ບຸກຄົນໃດ ຫາກລະເມີດລະບຽບການກ່ຽວກັບການກໍ່ສ້າງ, ການສ້ອມແປງ, ການຕໍ່ເຕີມ, ການທັບມ້າງ, ການຂົນສົ່ງ, ການນຳໃຊ້ ແລະ ການທົດລອງວັດສະດຸກໍ່ສ້າງ, ການນຳໃຊ້ກົນຈັກ ຫຼື ວັດຖຸປະກອນກໍ່ສ້າງ ແລະ ການຄວບຄຸມການກໍ່ສ້າງ ຊຶ່ງເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບ ຫຼື ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ຊັບສິນຂອງບຸກຄົນອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງ ປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ເກີດອຸບປະຕິເຫດ ຊຶ່ງພາໃຫ້ມີຄົນບາດເຈັບ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 35.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 178 ການລະເມີດລະບຽບການກ່ຽວກັບການຄຸ້ມຄອງວັດຖຸກຳມັນຕະພາບລັງສີ

ບຸກຄົນໃດ ຫາກລະເມີດລະບຽບການກ່ຽວກັບການຄຸ້ມຄອງການຜະລິດ, ການສ້ອມແປງ, ການສະໜອງ, ການນຳໃຊ້, ການບຳລຸງຮັກສາ, ການເກັບຮັກສາ, ຊື້, ຂາຍ, ມອບ, ແລກປ່ຽນ, ມີໄວ້ໃນຄອບຄອງ ຫຼື ຂົນສົ່ງ ວັດຖຸກຳມັນຕະພາບລັງສີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກສ້າງຄວາມເສຍຫາຍຕໍ່ສຸຂະພາບ ຫຼື ຊັບສິນຂອງບຸກຄົນອື່ນຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ເກີດອຸບປະຕິເຫດ ຊຶ່ງພາໃຫ້ມີຄົນບາດເຈັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 25.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 35.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 6.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 179 ການລະເມີດລະບຽບການກ່ຽວກັບການຄຸ້ມຄອງວັດຖຸໄວໄຟ, ທາດເບື່ອ

ບຸກຄົນໃດ ຫາກລະເມີດລະບຽບການກ່ຽວກັບການຄຸ້ມຄອງການຜະລິດ, ການເກັບຮັກສາ, ການຂົນສົ່ງ, ການນຳໃຊ້ ຫຼື ການຄ້າຂາຍ ວັດຖຸໄວໄຟ, ທາດເບື່ອ ທີ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ເກີດອຸບປະຕິເຫດ ຊຶ່ງພາໃຫ້ມີຄົນບາດເຈັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 35.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 180 ການລະເມີດລະບຽບການກ່ຽວກັບຄວາມປອດໄພໃນການນຳໃຊ້ລະບົບໄຟຟ້າ**

ບຸກຄົນໃດ ຫາກໄດ້ລະເມີດລະບຽບການກ່ຽວກັບຄວາມປອດໄພ ໃນການນຳໃຊ້ລະບົບໄຟຟ້າ ດ້ວຍການອະນຸຍາດໃຫ້ດຳເນີນການກໍ່ສ້າງ ຫຼື ດຳເນີນການກໍ່ສ້າງໂດຍບໍ່ຖືກຕ້ອງ ຊຶ່ງລວມມີລະບົບຄວາມປອດໄພໃນການກໍ່ສ້າງເຮືອນ ແລະ ການຕິດຕັ້ງລະບົບເຊື່ອມໄຟຟ້າ ທີ່ກໍ່ໃຫ້ເກີດການລະເບີດ, ແປວໄຟ; ການຈູດປ່າເພື່ອເປີດແລວທາງ, ຕັດຕົ້ນໄມ້ທີ່ສົ່ງຜົນກະທົບຕໍ່ຄວາມປອດໄພຂອງລະບົບໄຟຟ້າ; ການຂຸດ, ເຈາະ, ຕອກເສົາເຂັມ ຫຼື ກໍ່ສ້າງເຮືອນໃກ້ບໍລິເວນຈຸດເຊື່ອມຕໍ່ ທີ່ຖືກກຳນົດ ແລະ ອອກແບບ ເພື່ອປ້ອງກັນລະບົບສາຍໄຟຟ້າ ທີ່ຈັດວາງຢູ່ໃຕ້ດິນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ເກີດອຸບປະຕິເຫດ ຊຶ່ງພາໃຫ້ມີຄົນບາດເຈັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 35.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 181 ການລະເມີດລະບຽບການກ່ຽວກັບການປິ່ນປົວ ແລະ ການບໍລິການດ້ານການແພດ**

ບຸກຄົນໃດ ຫາກໄດ້ລະເມີດລະບຽບການກ່ຽວກັບການປິ່ນປົວ ແລະ ການກວດກາສຸຂະພາບ, ການຜະລິດຢາ, ການຈ່າຍຢາ, ການຂາຍຢາ ແລະ ການບໍລິການດ້ານການແພດ ທີ່ສ້າງຄວາມເສຍຫາຍຕໍ່ສຸຂະພາບຂອງບຸກຄົນອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 35.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 182 ການລະເມີດມາດຕະການຄວາມປອດໄພໂຮງງານ**

ບຸກຄົນໃດ ຫາກບໍ່ປະຕິບັດມາດຕະການທີ່ຮັບປະກັນຄວາມປອດໄພໂຮງງານ ຊຶ່ງສ້າງຄວາມເສຍຫາຍຕໍ່ສຸຂະພາບຂອງບຸກຄົນອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 35.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 183 ການລະເມີດລະບຽບການກ່ຽວກັບຄວາມປອດໄພຂອງອາຫານ ແລະ ສຸຂານາໄມ**

ບຸກຄົນໃດ ຫາກລະເມີດລະບຽບການກ່ຽວກັບຄວາມປອດໄພຂອງອາຫານ ແລະ ສຸຂານາໄມ ຊຶ່ງສ້າງຄວາມເສຍຫາຍຕໍ່ສຸຂະພາບຂອງບຸກຄົນອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 35.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 184 ການເຄື່ອນໄຫວກ່ຽວກັບໄສຍະສາດ

ບຸກຄົນໃດ ຫາກເປັນໝໍດູ, ເປັນນາງທຽມ ຫຼື ທຳການເຄື່ອນໄຫວດ້ານໄສຍະສາດ ແລ້ວສວຍໃຊ້ຄວາມເຊື່ອຂອງຜູ້ອື່ນ ຊຶ່ງສ້າງຄວາມເສຍຫາຍຕໍ່ຊັບສິນ ຫຼື ສຸຂະພາບຂອງບຸກຄົນອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ມີການເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

## ມາດຕາ 185 ການຫຼອກລວງ, ການບັງຄັບເດັກໃຫ້ກະທຳຜິດ ຫຼື ຊຸກເຊື່ອງເດັກກະທຳຜິດ

ບຸກຄົນໃດ ຫາກຫຼອກລວງ ຫຼື ບັງຄັບເດັກໃຫ້ກະທຳຜິດ ຫຼື ໃຫ້ກະທຳສິ່ງທີ່ບໍ່ດີ ຫຼື ຊຸກເຊື່ອງເດັກກະທຳຜິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 186 ການເຂົ້າຮ່ວມໃນກຸ່ມອົງການອາຊະຍາກຳ ຫຼື ກຸ່ມຄົນທີ່ເກັບຄ່າຄຸ້ມຄອງ

ບຸກຄົນໃດ ຫາກໄດ້ເຂົ້າຮ່ວມໃນກຸ່ມອົງການອາຊະຍາກຳ ຫຼື ກຸ່ມຄົນທີ່ເກັບຄ່າຄຸ້ມຄອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫົກປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 60.000.000 ກີບ ແລະ ຈະຖືກຣິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 187 ການແຈ້ງເຫດການເທັດ**

ບຸກຄົນໃດ ໂດຍເຈດຕະນາ ຫາກໄດ້ແຈ້ງກ່ຽວກັບເຫດການທີ່ບໍ່ມີຈິງ ຕໍ່ເຈົ້າໜ້າທີ່ ຫຼື ຜູ້ທີ່ກ່ຽວຂ້ອງ ເພື່ອໃຫ້ດໍາເນີນການໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

## ໝວດທີ 3
## ການກະທໍາຜິດຕໍ່ຊີວິດ, ສຸຂະພາບ ແລະ ກຽດສັກສີຂອງບຸກຄົນ

**ມາດຕາ 188 ການຄາດຕະກໍາ**

ບຸກຄົນໃດ ຫາກໄດ້ເຮັດໃຫ້ຜູ້ອື່ນເສຍຊີວິດໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ຜູ້ກະທໍາຜິດ ຫາກໄດ້ເອົາການຄາດຕະກໍາເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ, ຂ້າຄົນໂດຍມີແຜນການ, ຂ້າຄົນຢ່າງໂຫດຮ້າຍປ່າເຖື່ອນ, ຂ້າພະນັກງານທີ່ກໍາລັງປະຕິບັດໜ້າທີ່, ຂ້າຫຼາຍຄົນ, ຂ້າຜູ້ຍິງຖືພາ, ຂ້າເດັກ, ຂ້າເມຍ ຫຼື ຜົວ, ຂ້າຍາດໃກ້ຊິດ, ຂ້າຄົນທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຫຼື ຢູ່ໃນສະພາບອ່ອນແອ, ຂ້າຄົນເພື່ອເອົາອະໄວຍະວະ, ຂ້າຄົນເພື່ອປົດບັງການກະທໍາຜິດອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບຫາ 100.000.000 ກີບ, ອາດຈະຖືກຈໍາກັດທີ່ຢູ່ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທໍາຜິດ, ຄວາມພະຍາຍາມກໍ່ການກະທໍາຜິດ ກໍຈະຖືກລົງໂທດ.

**ມາດຕາ 189 ການຈ້າງໃຫ້ຄາດຕະກໍາ**

ບຸກຄົນໃດ ຫາກໄດ້ຈ້າງບຸກຄົນໃດໜຶ່ງ ໃຫ້ຄາດຕະກໍາຜູ້ອື່ນຈະຖືກລົງໂທດຕັດອິດສະລະພາບແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 100.000.000 ກີບ.

ໃນກໍລະນີ ຫາກໄດ້ຈ້າງໃຫ້ຄາດຕະກໍາແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 200.000.000 ກີບ.

ການກະກຽມໃຫ້ແກ່ການກະທໍາຜິດ, ຄວາມພະຍາຍາມກໍ່ການກະທໍາຜິດ ກໍຈະຖືກລົງໂທດ.

**ມາດຕາ 190 ການຄາດຕະກໍາຍ້ອນຖືກກະທົບທາງດ້ານຈິດໃຈ**

ບຸກຄົນໃດ ຫາກໄດ້ເຮັດໃຫ້ຜູ້ອື່ນເສຍຊີວິດໂດຍເຈດຕະນາ ຍ້ອນຖືກກະທົບທາງດ້ານຈິດໃຈຢ່າງຮຸນແຮງ ຫຼື ຍ້ອນການເກາະຜິດ ຊຶ່ງເຮັດໃຫ້ບໍ່ສາມາດຈະຄຸມສະຕິໄວ້ໄດ້ ດ້ວຍການກະທໍາອັນບໍ່ຖືກຕ້ອງຕາມ

ກົດໝາຍຂອງຜູ້ຖືກເຄາະຮ້າຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 30.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.

## ມາດຕາ 191 ການຄາດຕະກຳ ຫຼື ການປະຖິ້ມລູກທີ່ຫາກໍ່ເກີດ

ແມ່ຜູ້ໃດ ຫາກໄດ້ຄາດຕະກຳ ຫຼື ປະຖິ້ມລູກທີ່ຫາກໍ່ເກີດຂອງຕົນໃຫ້ເສຍຊີວິດ ຈະດ້ວຍເຫດຜົນໃດກໍຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ.

ໃນກໍລະນີ ການຄາດຕະກຳ ຫຼື ການປະຖິ້ມລູກທີ່ຫາກໍ່ເກີດຂອງຕົນໃຫ້ເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ເຈັດປີ.

## ມາດຕາ 192 ການເຮັດໃຫ້ຜູ້ອື່ນເສຍຊີວິດຍ້ອນການປ້ອງກັນຕົວເກີນຂອບເຂດ

ບຸກຄົນໃດ ຫາກໄດ້ປ້ອງກັນຕົວເກີນຂອບເຂດ ຊຶ່ງເຮັດໃຫ້ຜູ້ອື່ນເສຍຊີວິດຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີເຮັດໃຫ້ເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 193 ການເຮັດໃຫ້ຜູ້ອື່ນເສຍຊີວິດໂດຍບໍ່ເຈດຕະນາ ໃນເວລາປະຕິບັດໜ້າທີ່ທາງການ

ບຸກຄົນໃດ ຫາກໄດ້ເຮັດໃຫ້ຜູ້ອື່ນເສຍຊີວິດໂດຍບໍ່ເຈດຕະນາໃນເວລາປະຕິບັດໜ້າທີ່ທາງການຂອງຕົນ ຍ້ອນການໃຊ້ຄວາມຮຸນແຮງນອກຂອບເຂດທີ່ກົດໝາຍອະນຸຍາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີເຮັດໃຫ້ເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຫຼື ໃນກໍລະນີຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 194 ການທຳຮ້າຍຮ່າງກາຍ

ບຸກຄົນໃດ ຫາກເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ມີການຫຸ້ມຕີ ຫຼື ໃນກໍລະນີທີ່ການກະທຳຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີການບາດເຈັບສາຫັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກໄດ້ເຮັດໃຫ້ເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 195 ການເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບໃນເວລາປະຕິບັດໜ້າທີ່ທາງການ

ບຸກຄົນໃດ ໃນເວລາປະຕິບັດໜ້າທີ່ທາງການ ຫາກໄດ້ໃຊ້ຄວາມຮຸນແຮງນອກຂອບເຂດທີ່ກົດໝາຍອະນຸຍາດ ຊຶ່ງເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ຫາ 10.000.000 ກີບ.

ໃນກໍລະນີ ມີການບາດເຈັບແຕ່ ສອງຄົນ ຂຶ້ນໄປ ຫຼື ບາດເຈັບສາຫັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ຫາ 15.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ ເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ຫາ 30.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ຫາ 50.000.000 ກີບ.

## ມາດຕາ 196 ການເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບຍ້ອນການປ້ອງກັນຕົວເກີນຂອບເຂດ

ບຸກຄົນໃດ ຫາກໄດ້ເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບຍ້ອນການປ້ອງກັນຕົວເກີນຂອບເຂດ ຈະຖືກດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ຫາ 5.000.000 ກີບ.

ໃນກໍລະນີ ມີການບາດເຈັບແຕ່ ສອງຄົນ ຂຶ້ນໄປ ຫຼື ບາດເຈັບສາຫັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ຫາ 15.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ຫາ 30.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ເສຍຊີວິດ ແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ຫາ 50.000.000 ກີບ.

### ມາດຕາ 197 ການເຮັດໃຫ້ຜູ້ອື່ນຂ້າຕົວຕາຍ

ບຸກຄົນໃດ ຫາກໄດ້ປະພຶດຢ່າງປ່າເຖື່ອນ, ເຮັດໃຫ້ມີຄວາມຢ້ານກົວຢ່າງຕໍ່ເນື່ອງ, ປະຕິບັດໂດຍບໍ່ຖືກຕ້ອງ ຫຼື ແບບຕໍ່າຕ້ອຍ ຕໍ່ຜູ້ອື່ນທີ່ຢູ່ໃຕ້ການເບິ່ງແຍງດູແລຂອງຕົນ ຊຶ່ງເປັນເຫດໃຫ້ຜູ້ກ່ຽວຂ້າຕົວຕາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີເຮັດໃຫ້ມີການຂ້າຕົວຕາຍແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 198 ການຊ່ວຍເຫຼືອຜູ້ອື່ນໃຫ້ຂ້າຕົວຕາຍ

ບຸກຄົນໃດ ຫາກໄດ້ຊຸກຍູ້, ຊ່ວຍເຫຼືອ, ສົ່ງເສີມ, ສ້າງເງື່ອນໄຂ ທາງດ້ານວັດຖຸ ຫຼື ຈິດໃຈ ໃຫ້ຜູ້ອື່ນຂ້າຕົວຕາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ໃນກໍລະນີຊ່ວຍເຫຼືອຜູ້ອື່ນ ໃຫ້ຂ້າຕົວຕາຍແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ.

### ມາດຕາ 199 ການແຜ່ເຊື້ອພະຍາດທີ່ຮ້າຍແຮງ

ຜູ້ຕິດເຊື້ອພະຍາດທີ່ຮ້າຍແຮງ ຫາກນຳເອົາເຊື້ອພະຍາດນັ້ນ ໄປແຜ່ຂະຫຍາຍສູ່ບຸກຄົນອື່ນໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝແຕ່ 10.000.000 ກີບ ຫາ 50.000.000 ກີບ.

ບຸກຄົນໃດ ໂດຍເຈດຕະນາ ຫາກນຳເອົາ ເຊື້ອພະຍາດທີ່ຮ້າຍແຮງ ໄປແຜ່ຂະຫຍາຍສູ່ບຸກຄົນອື່ນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ 30.000.000 ກີບ 70.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ນຳເອົາເຊື້ອພະຍາດທີ່ຮ້າຍແຮງ ໄປແຜ່ຂະຫຍາຍສູ່ບຸກຄົນອື່ນເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ.

### ມາດຕາ 200 ການເຮັດໃຫ້ຜູ້ອື່ນທີ່ຢູ່ໃນການຄຸ້ມຄອງຂອງຕົນໄດ້ຮັບບາດເຈັບ

ບຸກຄົນໃດ ຫາກໄດ້ປະຕິບັດຕໍ່ບຸກຄົນອື່ນ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ຢ່າງປ່າເຖື່ອນ ຫຼື ເຮັດໃຫ້ໄດ້ຮັບບາດເຈັບໂດຍເຈດຕະນາ ຈະຖືກຕຳນິວິຈານ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 1.500.000 ກີບ.

ໃນກໍລະນີທີ່ການກະທຳຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີການບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 201 ການຫຼຸລູກໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກໄດ້ທຳການຫຼຸລູກໃຫ້ຜູ້ອື່ນຢ່າງຜິດກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ທຳການຫຼຸລູກໃຫ້ຜູ້ອື່ນເປັນອາຈິນ ຫຼື ໃນກໍລະນີທີ່ການຫຼຸລູກໂດຍບໍ່ຖືກຕ້ອງຕາມກົດໝາຍນັ້ນ ຫາກເຮັດໃຫ້ສຸຂະພາບຂອງແມ່ຊຸດໂຊມ ຫຼື ເຮັດໃຫ້ແມ່ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ເຈັດປີ ແລະ ຈະຖືກປັບໃໝແຕ່ 7.000.000 ກີບ ຫາ 20.000.000 ກີບ.

ຜູ້ຍິງໃດ ຫາກໄດ້ທຳການຫຼຸລູກດ້ວຍຕົນເອງ ຫຼື ໃຊ້ຜູ້ອື່ນເຮັດໃຫ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 202 ການບໍ່ໃຫ້ຄວາມຊ່ວຍເຫຼືອແກ່ຜູ້ອື່ນໃນເວລາຕົກຢູ່ໃນໄພອັນຕະລາຍ**

ບຸກຄົນໃດ ຫາກໄດ້ພົບເຫັນຜູ້ອື່ນຕົກຢູ່ໃນໄພອັນຕະລາຍແກ່ຊີວິດ ຫຼື ສຸຂະພາບ ແຕ່ບໍ່ໃຫ້ຄວາມຊ່ວຍເຫຼືອທັງໆ ທີ່ຕົນເອງກໍມີເງື່ອນໄຂພໍຊ່ວຍເຫຼືອໄດ້ ຫຼື ບອກຄົນອື່ນໃຫ້ຊ່ວຍເຫຼືອ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ທີ່ມີໜ້າທີ່ຊ່ວຍເຫຼືອ ແຕ່ບໍ່ໄດ້ປະຕິບັດໜ້າທີ່ຂອງຕົນໃນການຊ່ວຍເຫຼືອຜູ້ທີ່ຕົກຢູ່ໃນໄພອັນຕະລາຍແກ່ຊີວິດ ຫຼື ສຸຂະພາບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 203 ການຂູ່ຈະຄາດຕະກຳ**

ບຸກຄົນໃດ ຫາກຂູ່ວ່າຈະຄາດຕະກຳບຸກຄົນອື່ນດ້ວຍວິທີໃດກໍຕາມ ໂດຍໄດ້ເຮັດໃຫ້ບຸກຄົນດັ່ງກ່າວເຊື່ອວ່າການຂູ່ນັ້ນ ຈະເປັນຈິງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 1.500.000 ກີບ.

ໃນກໍລະນີມີການຂູ່ຈະຄາດຕະກຳ ແຕ່ ສອງຄົນ ຂຶ້ນໄປ, ມີການສວຍໃຊ້ໜ້າທີ່, ຕຳແໜ່ງ, ມີການຈັດຕັ້ງເປັນກຸ່ມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 204 ການໝິ່ນປະໝາດຊາກສົບ ຫຼື ຊື່ສຽງຂອງຜູ້ຕາຍ**

ບຸກຄົນໃດ ຫາກໄດ້ກະທຳ ຫຼື ໃຊ້ວາຈາຢ່າງຫຍາບຊ້າ ຕໍ່ຊາກສົບ, ຊື່ສຽງ, ບ່ອນຝັງສົບ ຫຼື ທາດຂອງຜູ້ຕາຍ ຊຶ່ງເປັນການແຕະຕ້ອງຈິດໃຈຂອງມະຫາຊົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 205 ການບົ່ນທາ ແລະ ການໃສ່ຮ້າຍ**

ບຸກຄົນໃດ ຫາກໄດ້ເຮັດໃຫ້ຜູ້ອື່ນເສື່ອມເສຍກຽດສັກສີຢ່າງຮ້າຍແຮງ ດ້ວຍການຂຽນ, ການເວົ້າ ຫຼື ດ້ວຍຮູບການອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ຫາກໄດ້ໃສ່ຮ້າຍປ້າຍສີຜູ້ອື່ນ ໂດຍບໍ່ມີຄວາມຈິງ ດ້ວຍການຂຽນ, ການເວົ້າ ຫຼື ດ້ວຍຮູບການອື່ນ ຊຶ່ງເຮັດໃຫ້ເສື່ອມເສຍກຽດສັກສີຢ່າງຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 206 ການເຮັດໃຫ້ບຸກຄົນອື່ນອັບອາຍ**

ບຸກຄົນໃດ ຫາກລະເມີດກຽດສັກສີຂອງບຸກຄົນອື່ນ ແລະ ເຮັດໃຫ້ໄດ້ຮັບຄວາມອັບອາຍ ຈະຖືກຕຳນິວິຈານ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 207 ການປ້ອຍດ່າ**

ບຸກຄົນໃດ ຫາກໄດ້ໃຊ້ວາຈາ, ຂຽນ ຫຼື ກະທຳແນວຫຍາບຊ້າໃສ່ຜູ້ອື່ນ ເພື່ອໃຫ້ເສື່ອມເສຍກຽດສັກສີຢ່າງຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 208 ການເຮັດໃຫ້ຜູ້ອື່ນເສຍຊີວິດດ້ວຍຄວາມບໍ່ລະມັດລະວັງ**

ບຸກຄົນໃດ ຫາກໄດ້ເຮັດໃຫ້ຜູ້ອື່ນເສຍຊີວິດດ້ວຍຄວາມປະໝາດ, ຄວາມເລິ່ນເລີ້ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ການກະທຳຜິດຫາກໄດ້ເຮັດໃຫ້ຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

**ມາດຕາ 209 ການເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງ**

ບຸກຄົນໃດ ຫາກເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບດ້ວຍຄວາມປະໝາດ, ຄວາມເລິ່ນເລີ້ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກໄດ້ເຮັດໃຫ້ມີບາດເຈັບສາຫັດ, ບາດເຈັບຫຼາຍຄົນ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝແຕ່ 3.000.000 ກີບ ຫາ 15.000.000 ກີບ.

## ໝວດທີ 4
## ການກະທຳຜິດຕໍ່ສິດ ແລະ ເສລີພາບຂອງພົນລະເມືອງ

**ມາດຕາ 210 ການດັບສູນເຊື້ອຊາດ**

ບຸກຄົນໃດ ໂດຍເຈດຕະນາ ຫາກໄດ້ ຂ້າ, ລ້າງຜານສະມາຊິກຈຳນວນຫຼາຍຂອງຊົນຊາດ, ເຜົ່າ, ເຊື້ອ ຊາດ ຫຼື ສາສະໜາໃດໜຶ່ງ ທັງໝົດ ຫຼື ບາງສ່ວນ ຫຼື ໄດ້ສ້າງຄວາມເສຍຫາຍຢ່າງຮ້າຍແຮງທາງຮ່າງກາຍ ແລະ ຈິດໃຈ ຂອງສະມາຊິກຈຳນວນຫຼາຍຂອງກຸ່ມ ຫຼື ໄດ້ນຳໃຊ້ມາດຕະການບໍ່ໃຫ້ມີການກຳເນີດເດັກພາຍໃນກຸ່ມ ເພື່ອຈຸດປະສົງດັບສູນເຊື້ອຊາດ ຈະຖືກລົງໂທດຕັດອິດສະລະພາບ ສິບປີ ຫາ ຊາວປີ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 1.000.000.000 ກີບ ຫາ 100.000.000.000 ກີບ ຫຼື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 211 ການຈັບເປັນຕົວປະກັນ**

ບຸກຄົນໃດ ຫາກໄດ້ບັງຄັບ, ຈັບຕົວ, ກັກຂັງບຸກຄົນໃດໜຶ່ງເປັນຕົວປະກັນ ແລະ ຂົ່ມຂູ່ວ່າຈະຂ້າ, ທຸບຕີ ຫຼື ສືບຕໍ່ກັກຂັງຜູ້ນີ້ ເພື່ອບັງຄັບຜູ້ອື່ນ ເຊັ່ນ ບຸກຄົນ ຫຼື ການຈັດຕັ້ງ ໃຫ້ກະທຳ ຫຼື ບໍ່ກະທຳ ສິ່ງໃດໜຶ່ງທີ່ເປັນເງື່ອນໄຂໃຫ້ແກ່ການປ່ອຍຕົວປະກັນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 150.000.000 ກີບ.

ໃນກໍລະນີມີການຈັບຕົວປະກັນ ເທິງເຮືອບິນ ຫຼື ໃນສະໜາມບິນ ຫຼື ຈັບຕົວປະກັນແຕ່ ສອງຄົນ ຂຶ້ນໄປ, ທໍລະມານ, ທຳຮ້າຍຮ່າງກາຍ ຫຼື ເຮັດໃຫ້ຕົວປະກັນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 150.000.000 ກີບ ຫາ 500.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 212 ການທໍລະມານ**

ບຸກຄົນໃດ ຫາກມີການກະທຳໃດໜຶ່ງໂດຍເຈດຕະນາ ຈະແມ່ນໃນການປະຕິບັດໜ້າທີ່ທາງການ ຫຼື ບໍ່ ກໍຕາມ ຊຶ່ງກໍ່ໃຫ້ເກີດຄວາມເຈັບປວດ ຫຼື ບວບຊ້ຳອັນສາຫັດທາງຮ່າງກາຍ ຫຼື ຈິດໃຈແກ່ບຸກຄົນອື່ນ ເພື່ອໃຫ້ຜູ້ກ່ຽວ ຫຼື ບຸກຄົນທີສາມ ບອກຂໍ້ມູນ ຂ່າວສານ ຫຼື ຮັບສາລະພາບ, ເພື່ອລົງໂທດຜູ້ກ່ຽວນັ້ນ ຍ້ອນການກະທຳຂອງຜູ້ກ່ຽວ ຫຼື ຂອງບຸກຄົນທີສາມ ຫຼື ຍ້ອນສົງໄສວ່າ ຜູ້ກ່ຽວ ຫຼື ບຸກຄົນທີສາມ ໄດ້ມີການກະທຳນັ້ນ ຫຼື ຂົ່ມຂູ່ ຫຼື ບັງຄັບຜູ້ກ່ຽວ ຫຼື ບຸກຄົນທີສາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກໄດ້ເຮັດໃຫ້ເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ 100.000.000 ກີບ.

ຄວາມເຈັບປວດ ຫຼື ຄວາມບວບຊ້ຳ ທີ່ເນື່ອງມາຈາກການລົງໂທດທີ່ຖືກຕ້ອງຕາມກົດໝາຍ ຫຼື ເກີດຂຶ້ນໂດຍບໍ່ເຈດຕະນາຈາກການລົງໂທດດັ່ງກ່າວ ຈະບໍ່ຖືວ່າເປັນການທໍລະມານ.

**ມາດຕາ 213 ການຂາຍຄົນ**

ບຸກຄົນໃດ ຫາກໄດ້ຂາຍຄົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 70.000.000 ກີບ.

ໃນກໍລະນີທີ່ມີການຂາຍ ແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ 100.000.000 ກີບ.

ຜູ້ຊື້ ກໍຈະຖືກລົງໂທດໃນສະຖານດຽວກັນ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 214 ການຂາຍ ຫຼື ລັກອະໄວຍະວະ ຫຼື ເນື້ອເຫຍື່ອ ຂອງຄົນ**

ບຸກຄົນໃດ ຫາກໄດ້ຂາຍອະໄວຍະວະ ຫຼື ເນື້ອເຫຍື່ອ ຂອງຄົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ບຸກຄົນໃດ ຫາກໄດ້ລັກອະໄວຍະວະ ຫຼື ເນື້ອເຫຍື່ອ ຂອງຄົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 70.000.000 ກີບ.

ບຸກຄົນໃດ ຫາກໄດ້ເອົາການຂາຍ ຫຼື ການລັກອະໄວຍະວະ ຫຼື ເນື້ອເຫຍື່ອ ຂອງຄົນ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 100.000.000 ກີບ.

ຜູ້ຊື້, ຜູ້ຂົນສົ່ງ ກໍຈະຖືກລົງໂທດໃນສະຖານດຽວກັນ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 215 ການຄ້າມະນຸດ**

ການຄ້າມະນຸດ ແມ່ນ ການຊອກຫາ, ລັກພາຕົວ, ການເຄື່ອນຍ້າຍ, ການຂົນສົ່ງ ຫຼື ນຳສົ່ງ, ຮັບເອົາ ຄົນ ຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ດ້ວຍການ ຂົນຂວາຍ, ແນະນຳ, ຕົວະຍົວະ ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ, ບັງຄັບ, ນາບຂູ່, ຜູກມັດດ້ວຍໜີ້ສິນ, ການເອົາ ເດັກໄປລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ, ໝັ້ນໝາຍແອບແຝງ, ແຕ່ງດອງແອບແຝງ, ການໃຫ້ຖືພາ, ຂໍທານ ແລະ ການຖ່າຍຮູບພາບ, ສະແດງ, ເຜີຍແຜ່ສິ່ງລາມົກ ຫຼື ດ້ວຍຮູບການອື່ນ ເພື່ອຂູດຮີດແຮງງານ, ຂູດຮີດທາງເພດ, ເປັນຂ້າທາດ, ຄ້າປະເວນີຂອງຜູ້ອື່ນ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆ ຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະ ສົງອື່ນ ເພື່ອຫາຜົນປະໂຫຍດ.

ບຸກຄົນໃດ ຫາກໄດ້ກະທຳຜິດໃນສະຖານການຄ້າມະນຸດ ຈະຖືກລົງໂທດຕາມກໍລະນີ ດັ່ງນີ້:

1. ການຊອກຫາ, ລັກພາຕົວ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະ ຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ;

2. ການເຄື່ອນຍ້າຍ, ການຂົນສົ່ງ ຫຼື ນຳສົ່ງ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບ ສອງປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 70.000.000 ກີບ;

3. ການຮັບເອົາຄົນ ຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ຈະຖືກລົງໂທດ ຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ສຳລັບການກະທຳຜິດຕໍ່ເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ພຽງແຕ່ມີການກະທຳ ແລະ ຈຸດປະສົງ ຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງ ຂອງມາດຕານີ້ ເຖິງວ່າຈະມີການຍິນຍອມ ຫຼື ມີຄວາມສະໝັກໃຈ ກໍຕາມ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ.

ບຸກຄົນໃດ ຫາກໄດ້ກະທຳຜິດໃນສະຖານການຄ້າປະເວນີ ເຖິງວ່າຜູ້ຖືກເຄາະຮ້າຍ ຈະມີການຍິນ ຍອມ ຫຼື ມີຄວາມສະໝັກໃຈ ແຕ່ຖ້າຫາກຖືກນຳໃຊ້ເພື່ອຈຸດປະສົງໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງ

ຂອງມາດຕານີ້ ຖືວ່າເປັນການຄ້າມະນຸດ ແລະ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ, ຜູ້ຖືກເຄາະຮ້າຍເປັນເດັກ, ຜູ້ຖືກເຄາະຮ້າຍມີຈຳນວນແຕ່ ສອງຄົນ ຂຶ້ນໄປ, ເປັນຍາດໃກ້ຊິດຂອງຜູ້ກະທຳຜິດ, ຜູ້ຖືກເຄາະຮ້າຍໄດ້ຮັບບາດເຈັບສາຫັດ, ເສຍອົງຄະ, ພິການ ຫຼື ເສຍຈິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວ ປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ໃນກໍລະນີການກະທຳຜິດ ຫາກໄດ້ເຮັດໃຫ້ຜູ້ຖືກເຄາະຮ້າຍ ພິການຕະຫຼອດຊີວິດ, ຕິດເຊື້ອເຮສໄອວີ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 1.000.000.000 ກີບ ແລະ ຈະຖືກຮິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 216 ການລັກພາຕົວ**

ບຸກຄົນໃດ ຫາກໄດ້ລັກເອົາຕົວຄົນໄປເພື່ອຮຽກຄ່າໄຖ່ ຫຼື ເພື່ອຈຸດປະສົງອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝແຕ່ 30.000.000 ກີບ ຫາ 100.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 217 ການຈັບຕົວ, ການກັກຕົວ ຫຼື ການກັກຂັງ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກຈັບຕົວ, ກັກຕົວ ຫຼື ກັກຂັງບຸກຄົນອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕຳນິວິຈານຕໍ່ໜ້າມະຫາຊົນ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດມີການຈັດຕັ້ງເປັນກຸ່ມ, ມີການສວຍໃຊ້ໜ້າທີ່ຕຳແໜ່ງ, ກະທຳຜິດຫຼາຍກວ່າໜຶ່ງຄັ້ງ, ກະທຳຜິດຕໍ່ຫຼາຍກວ່າໜຶ່ງຄົນ ຫຼື ຕໍ່ບຸກຄົນທີ່ກຳລັງປະຕິບັດໜ້າທີ່ທາງການ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 218 ການບັງຄັບ**

ບຸກຄົນໃດ ຫາກໄດ້ບັງຄັບຜູ້ອື່ນ ດ້ວຍການໃຊ້ກຳລັງ ຫຼື ອາວຸດ ຫຼື ການນາບຂູ່ ເພື່ອໃຫ້ກະທຳ ຫຼື ບໍ່ໃຫ້ກະທຳສິ່ງໃດສິ່ງໜຶ່ງ ທີ່ຕົນຕ້ອງການ ຊຶ່ງເປັນການຂັດກັບຈຸດປະສົງຂອງຜູ້ຖືກບັງຄັບ ແລະ ກໍ່ຄວາມເສຍຫາຍແກ່ຜູ້ກ່ຽວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 219 ການຂັດຂວາງສິດໃນການເລືອກຕັ້ງ ແລະ ການສະໝັກຮັບເລືອກຕັ້ງ**

ບຸກຄົນໃດ ຫາກໄດ້ຂັດຂວາງສິດໃນການເລືອກຕັ້ງ ຫຼື ການສະໝັກຮັບເລືອກຕັ້ງຂອງພົນລະເມືອງເຂົ້າໃນສະພາແຫ່ງຊາດ ຫຼື ສະພາປະຊາຊົນທ້ອງຖິ່ນ ດ້ວຍການນາບຂູ່, ການຊື້ຈ້າງ ຫຼື ການຕົວະຍົວະ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 220 ການປອມແປງ ຫຼື ການທຳລາຍເອກະສານໃນການເລືອກຕັ້ງ**

ບຸກຄົນໃດ ຫາກໄດ້ປອມແປງ ຫຼື ທຳລາຍເອກະສານໃນການເລືອກຕັ້ງ, ໄດ້ປອມແປງ ຫຼື ທຳລາຍຄະແນນສຽງ ຫຼື ຜົນຂອງການເລືອກຕັ້ງເຂົ້າໃນສະພາແຫ່ງຊາດ ຫຼື ສະພາປະຊາຊົນທ້ອງຖິ່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 221 ການລ່ວງລະເມີດເສລີພາບຂອງບຸກຄົນ**

ບຸກຄົນໃດ ຫາກໄດ້ລ່ວງລະເມີດເສລີພາບຂອງບຸກຄົນອື່ນ ໃນການປາກເວົ້າ, ການຂີດຂຽນ, ການໂຮມຊຸມນຸມ, ມິດຕິງ ແລະ ອື່ນໆ ທີ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 222 ການລ່ວງລະເມີດເຄຫະສະຖານ**

ບຸກຄົນໃດ ຫາກລ່ວງເຂົ້າເຄຫະສະຖານຜູ້ອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ດ້ວຍການໃຊ້ຄວາມຮຸນແຮງ, ການນາບຂູ່, ການໃຊ້ເອກະສານປອມ, ການປອມແປງເປັນເຈົ້າໜ້າທີ່ ຫຼື ດ້ວຍວິທີການອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 223 ການບັງຄັບໃຫ້ກຳມະກອນ, ພະນັກງານປະລະວຽກງານຢ່າງຜິດກົດໝາຍ**

ບຸກຄົນໃດ ຫາກໄດ້ບັງຄັບໃຫ້ກຳມະກອນ, ພະນັກງານ ປະລະວຽກງານຢ່າງຜິດກົດໝາຍ ເພື່ອຜົນປະໂຫຍດຂອງຕົນ ຊຶ່ງໄດ້ກໍ່ຄວາມເສຍຫາຍ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ ຫຼື ດັດສ້າງ ໂດຍບໍ່ຕັດອິດສະລະພາບ ຫຼື ລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 224 ການຈຳແນກເພດຍິງ**

ບຸກຄົນໃດ ຫາກໄດ້ຈຳແນກ, ແບ່ງແຍກ, ກີດກັ້ນ, ຈຳກັດແມ່ຍິງ ໃນການເຄື່ອນໄຫວທາງດ້ານການເມືອງ, ເສດຖະກິດ, ວິທະຍາສາດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ ເນື່ອງຈາກເຫດຜົນທາງເພດ ຈະຖືກຕຳນິວິຈານ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 225 ການຈຳແນກຄົນພິການ**

ບຸກຄົນໃດ ຫາກໄດ້ຈຳແນກ, ແບ່ງແຍກ, ກີດກັ້ນ, ຈຳກັດ ຄົນພິການ ໃນການເຄື່ອນໄຫທາງດ້ານການເມືອງ, ເສດຖະກິດ, ວິທະຍາສາດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ ຍ້ອນເຫດຜົນຄວາມເປັນພິການ ຈະຖືກຕຳນິວິຈານ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກ ປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 226 ການຈຳແນກເດັກ**

ບຸກຄົນໃດ ຫາກໄດ້ຈຳແນກ, ແບ່ງແຍກ, ກີດກັ້ນ, ກີດໜ່ວງ ຫຼື ຈຳກັດ ບົນພື້ນຖານເຊື້ອຊາດ, ຜິວພັນ, ເພດ, ເຜົ່າ, ສາສະໜາ, ພາສາ, ການສຶກສາ, ຄວາມຮູ້ ຄວາມສາມາດ, ສະຕິປັນຍາ, ຖານະທາງດ້ານເສດຖະກິດ-ສັງຄົມ, ສຸຂະພາບ, ຮູບຮ່າງ, ຄວາມພິການ, ຕົ້ນກຳເນີດ ແລະ ດ້ານອື່ນຂອງເດັກ, ພໍ່ແມ່, ຜູ້ປົກຄອງ ຫຼື ສະມາຊິກອື່ນໃນຄອບຄົວຂອງເດັກ ຊຶ່ງເຮັດໃຫ້ເດັກບໍ່ໄດ້ຮັບສິດອັນຊອບທຳຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 3.000.000 ກີບ.

**ມາດຕາ 227 ການຈຳແນກເຜົ່າຊົນ**

ບຸກຄົນໃດ ຫາກໄດ້ຈຳແນກ, ແບ່ງແຍກ, ກີດກັ້ນ, ຈຳກັດການເຂົ້າຮ່ວມ ຫຼື ເລືອກປະຕິບັດຕໍ່ບຸກຄົນອື່ນ ເນື່ອງຈາກເຫດຜົນທາງດ້ານເຜົ່າຊົນ ຈະຖືກຕຳນິວິຈານ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 228 ການລະເມີດສິດໃນການຮ້ອງທຸກ**

ບຸກຄົນໃດ ຫາກໄດ້ສວຍໃຊ້ຖານະ, ຕຳແໜ່ງ, ອຳນາດ ເພື່ອຂັດຂວາງ ການຮ້ອງທຸກ, ການແກ້ໄຂການຮ້ອງທຸກ ຫຼື ບຸກຄົນທີ່ເປັນບັນຫາຂອງການຮ້ອງທຸກ ຫຼື ປະຕິເສດການປະຕິບັດຕາມການຕົກລົງຂອງອົງການທີ່ມີສິດໃນການພິຈາລະນາ ແລະ ແກ້ໄຂການຮ້ອງທຸກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ

ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 229 ການລ່ວງລະເມີດຄວາມລັບສ່ວນຕົວ**

ບຸກຄົນໃດ ຫາກໄດ້ເປີດເຜີຍຄວາມລັບສ່ວນຕົວຂອງຜູ້ອື່ນ ທີ່ຕົນໄດ້ຮູ້ຈັກໃນເວລາປະຕິບັດວຽກງານວິຊາສະເພາະ ຫຼື ໜ້າທີ່ ຊຶ່ງເປັນການກໍ່ຄວາມເສຍຫາຍແກ່ຜູ້ອື່ນນັ້ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສາມເດືອນ ຫາ ຫົກເດືອນ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ບຸກຄົນໃດ ຫາກໄດ້ລັກເປີດຈົດໝາຍ, ຈົດໝາຍທາງເອເລັກໂຕຣນິກ, ໂທລະເລກ ຫຼື ເອກະສານອື່ນ ຫຼື ລັກຟັງໂທລະສັບຂອງຜູ້ອື່ນ ຊຶ່ງເປັນການກໍ່ຄວາມເສຍຫາຍແກ່ຜູ້ອື່ນນັ້ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫົກເດືອນ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

## ໝວດທີ 5
## ການກະທຳຜິດຕໍ່ກຳມະສິດ

**ມາດຕາ 230 ການປຸ້ນຊັບ**

ບຸກຄົນໃດ ຫາກໄດ້ໃຊ້ຄວາມຮຸນແຮງ ບຸກລຸກ ຫຼື ໄດ້ໃຊ້ການນາບຂູ່ໂດຍກົງຕໍ່ຊີວິດ ຫຼື ສຸຂະພາບຂອງຜູ້ອື່ນ ເພື່ອເອົາຊັບມາເປັນຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສີ່ປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເອົາການປຸ້ນຊັບເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ, ເຮັດໃຫ້ຄົນອື່ນບາດເຈັບສາຫັດ ຫຼື ເສຍຊີວິດ ຫຼື ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 70.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 231 ການລັກຊັບ**

ບຸກຄົນໃດ ຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນໂດຍບໍ່ຖືກຕ້ອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ລັກດ້ວຍການງັດແງະ, ມ້າງເພຮື້ອຮາວ, ປະຕູ, ຫີບ, ຕູ້ ແລະ ອື່ນໆ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເອົາການລັກເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 232 ການຍາດຊິງຊັບ

ບຸກຄົນໃດ ຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນດ້ວຍວິທີຍາດຊິງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເອົາການຍາດຊິງຊັບເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ ຫຼື ເຮັດໃຫ້ຜູ້ອື່ນບາດເຈັບສາຫັດ ຫຼື ເສຍຊີວິດ ຫຼື ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 233 ການສໍ້ໂກງຊັບ

ບຸກຄົນໃດ ຫາກໄດ້ໃຊ້ເລ່ຫຼ່ຽມ ຕົວະຍົວະຫຼອກລວງ ດ້ວຍວິທີໃດກໍຕາມ ເພື່ອເຮັດໃຫ້ຜູ້ອື່ນເອົາຊັບໃຫ້ຕົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີເອົາການສໍ້ໂກງຊັບເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 234 ການຍັກຍອກຊັບ

ບຸກຄົນໃດ ຫາກໄດ້ສວຍໃຊ້ຄວາມເຊື່ອໃຈ ເພື່ອຫຼັກໂລບເອົາ, ຕັດຮອນເອົາ ຫຼື ສັບປ່ຽນເອົາຊັບທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີເອົາການຍັກຍອກຊັບເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 235 ການຫຼີບຫຼີກຈາກການໃຊ້ແທນໜີ້ສິນ

ບຸກຄົນໃດ ຫາກໄດ້ສ້າງໜີ້ສິນ ແລ້ວເຮັດໃຫ້ຄວາມສາມາດໃຊ້ແທນໜີ້ສິນຂອງຕົນຫຼຸດລົງ ດ້ວຍການເພີ່ມໜີ້ ຫຼື ຫຼຸດຊັບສິນບັດທີ່ຕົນມີ ຫຼື ຫຼຸດ ຫຼື ຊຸກເຊື່ອງ ລາຍໄດ້ທັງໝົດ ຫຼື ບາງສ່ວນ ຫຼື ຊຸກເຊື່ອງຊັບບາງຢ່າງຂອງຕົນ ເພື່ອຫຼີບຫຼີກການໃຊ້ແທນໜີ້ສິນ ກ່ອນ ຫຼື ຫຼັງ ມີຄຳຕັດສິນຂອງສານ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 236 ການທຳລາຍ ຫຼື ການເຮັດໃຫ້ຊັບເປ່ເພໂດຍເຈດຕະນາ

ບຸກຄົນໃດ ຫາກໄດ້ທຳລາຍ ຫຼື ເຮັດໃຫ້ຊັບຂອງຜູ້ອື່ນເປ່ເພໂດຍເຈດຕະນາ ດ້ວຍວິທີ ຫຼື ຮູບການໃດກໍຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີ ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ, ເປັນອັນຕະລາຍຕໍ່ຊີວິດ ແລະ ສຸຂະພາບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 237 ການທຳລາຍວັດຖຸບູຮານ ຫຼື ສິ່ງກໍ່ສ້າງແຫ່ງສິລະປະວັນນະກຳ

ບຸກຄົນໃດຫາກໄດ້ທຳລາຍ, ມ້າງເພພະທາດເຈດີ, ສະຖານທີ່ ແລະ ເຄື່ອງສັກກາລະບູຊາອື່ນ ຫຼື ໄດ້ຂຸດຄົ້ນເອົາບີສິມ ຫຼື ໄດ້ນຳເອົາພະພຸດທະຮູບ ຫຼື ເຄື່ອງສັກກາລະບູຊາອື່ນໄປທຳລາຍ ຫຼື ຂາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ບຸກຄົນໃດ ຫາກໄດ້ທຳລາຍວັດຖຸບູຮານ ຫຼື ສິ່ງກໍ່ສ້າງແຫ່ງສິລະປະວັນນະກຳ ຊຶ່ງເປັນຂອງສ່ວນລວມ ຫຼື ຂອງສ່ວນຕົວ ຫຼື ໄດ້ນຳເອົາສິ່ງດັ່ງກ່າວອອກໄປຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 100.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 238 ການເຮັດໃຫ້ຊັບຂອງລັດ ຫຼື ລວມໝູ່ເສຍຫາຍ ດ້ວຍຄວາມບໍ່ລະມັດລະວັງ**

ບຸກຄົນໃດ ດ້ວຍຄວາມປະໝາດ ຫຼື ດ້ວຍຄວາມເລີນເລີ້ ຫາກໄດ້ເຮັດໃຫ້ຊັບຂອງລັດ ຫຼື ລວມໝູ່ເສຍຫາຍຢ່າງຫຼວງຫຼາຍ ຫຼື ເສຍຫາຍບໍ່ຫຼວງຫຼາຍ ແຕ່ຫາກມີຜົນສະທ້ອນຕໍ່ສັງຄົມ ຫຼື ຕໍ່ພື້ນຖານເສດຖະກິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 239 ການຂາດຄວາມຮັບຜິດຊອບຕໍ່ໜ້າທີ່ຄຸ້ມຄອງຊັບຂອງລັດ ຫຼື ລວມໝູ່**

ບຸກຄົນໃດ ທີ່ມີໜ້າທີ່ຄຸ້ມຄອງຊັບຂອງລັດ ຫຼື ລວມໝູ່ໂດຍກົງ ຫາກໄດ້ຂາດຄວາມຮັບຜິດຊອບບໍ່ໄດ້ປະຕິບັດຕາມລະບຽບການຄຸ້ມຄອງ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 240 ການຄອບຄອງຊັບຢ່າງຜິດກົດໝາຍ**

ບຸກຄົນໃດ ໂດຍເຈດຕະນາ ຫາກໄດ້ຄອບຄອງຊັບຂອງຜູ້ອື່ນທີ່ຕົນຊອກໄດ້, ເກັບໄດ້, ຂຸດຄົ້ນໄດ້ ຫຼື ທີ່ບຸກຄົນອື່ນໄດ້ຫຼົງມອບໃຫ້ແກ່ຕົນ ໂດຍບໍ່ແຈ້ງຕໍ່ເຈົ້າໜ້າທີ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ຊັບເຫຼົ່ານັ້ນ ຫາກມີມູນຄ່າສູງ ຫຼື ເປັນຈຳນວນຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 241 ການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່**

ບຸກຄົນໃດ ຫາກໄດ້ສວຍໃຊ້ຊັບຂອງລັດ ຫຼື ລວມໝູ່ເພື່ອຜົນປະໂຫຍດສ່ວນຕົວ ຊຶ່ງໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍແກ່ລັດ ຫຼື ລວມໝູ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 242 ການບັງຄັບເອົາຊັບ**

ບຸກຄົນໃດ ຫາກນາບຂູ່ຈະໃຊ້ຄວາມຮຸນແຮງ ຫຼື ນາບຂູ່ ດ້ວຍວິທີອື່ນ ເພື່ອບັງຄັບເອົາຊັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 50.000.000 ກີບ ແລະ ຈະຖືກຣິບຊັບ.

ໃນກໍລະນີການກະທຳຜິດເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບໃໝແຕ່ 30.000.000 ກີບ ຫາ 100.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 243 ການປະລະໜ້າທີ່ໃນການຄຸ້ມຄອງດູແລຊັບຂອງລັດ**

ບຸກຄົນໃດ ຫາກມີໜ້າທີ່ຮັບຜິດຊອບໂດຍກົງໃນການຄຸ້ມຄອງດູແລຊັບຂອງລັດ ແຕ່ປະລະຄວາມຮັບຜິດຊອບນັ້ນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ, ຖືກທຳລາຍ, ເຮັດໃຫ້ເສຍ ຫຼື ເຮັດໃຫ້ຊັບມີຄວາມເສຍຫາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

**ມາດຕາ 244 ການຊຸກເຊື່ອງ, ການຊື້ຂາຍຊັບຢ່າງຜິດກົດໝາຍ**

ບຸກຄົນໃດ ຫາກຮູ້ວ່າຊັບທີ່ຜູ້ອື່ນໄດ້ມາຈາກການປຸ້ນ, ການລັກ, ການຍາດຊີງ, ການສໍ້ໂກງ, ການຍັກຍອກ ຫຼື ດ້ວຍວິທີອື່ນທີ່ຜິດກົດໝາຍແລ້ວ ຮັບເອົາ, ຊື້ເອົາ, ເກັບຮັກສາ, ຊຸກເຊື່ອງ ຫຼື ນຳໄປຂາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 245 ການເຮັດໃຫ້ຊັບຂອງຜູ້ອື່ນຖືກໄຟໄໝ້ຍ້ອນຄວາມບໍ່ລະມັດລະວັງ**

ບຸກຄົນໃດ ຍ້ອນຄວາມປະໝາດ, ຄວາມເລີ່ນເລີ້ ຫາກໄດ້ເຮັດໃຫ້ໄຟໄໝ້ ເຮືອນ, ຕຶກ, ອາຄານ, ສາງເຄື່ອງ, ຫ້າງຮ້ານຂອງຜູ້ອື່ນ ຫຼື ພືນລະປູກຂອງຜູ້ອື່ນ ຫຼື ຊັບສິນອື່ນ ຖືກເສຍຫາຍເປັນຈຳນວນຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 246 ການລະເມີດຊັບສິນທາງປັນຍາ**

ບຸກຄົນໃດ ຫາກໄດ້ລະເມີດສິດຕໍ່ຊັບສິນທາງປັນຍາ, ປອມແປງ, ຕົວະຍົວະ, ຫຼອກລວງ, ແຂ່ງຂັນທີ່ບໍ່ເປັນທຳກ່ຽວກັບຊັບສິນທາງປັນຍາ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຈະຖືກລົງໂທດຕັດອິດສະລະພາບ

ແຕ່ ໜຶ່ງປີ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

## ໝວດທີ 6
## ການກະທຳຜິດຕໍ່ສາຍຜົວເມຍ, ຄອບຄົວ ແລະ ຮີດຄອງປະເພນີ

### ມາດຕາ 247 ການທຳມິດສະຈານ

ບຸກຄົນໃດ ທີ່ມີຜົວ ຫຼື ເມຍ ຫາກໄດ້ເສບສົມກັບຜູ້ອື່ນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ຄູ່ທຳມິດສະຈານ ກໍຈະຖືກລົງໂທດໃນສະຖານດຽວກັນ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 248 ການຂົ່ມຂືນທຳຊຳເລົາ

ບຸກຄົນໃດ ຫາກໄດ້ໃຊ້ກຳລັງ, ໃຊ້ອາວຸດນາບຂູ່, ໃຊ້ຢາສະຫຼົບ, ໃຊ້ສິ່ງມຶນເມົາ ຫຼື ໃຊ້ວິທີອື່ນ ທີ່ເຮັດໃຫ້ຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຫຼື ສວຍໂອກາດເພື່ອທຳຊຳເລົາ ດ້ວຍການຂືນໃຈຂອງຜູ້ກ່ຽວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ຂົ່ມຂືນທຳຊຳເລົາຜູ້ຍິງທີ່ມີອາຍຸ ແຕ່ ສິບຫ້າປີ ຫາ ຕໍ່າກວ່າ ສິບແປດປີ ທີ່ຢູ່ໃນຄວາມຄຸ້ມຄອງດູແລຂອງຕົນ ຫຼື ໃນການປິ່ນປົວຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ຂົ່ມຂືນທຳຊຳເລົາ ດ້ວຍວິທີປ່ຽນຜຽນກັນ, ຂົ່ມຂືນທຳຊຳເລົາເດັກທີ່ມີອາຍຸຕໍ່າກວ່າ ສິບຫ້າປີ, ໄດ້ທຳຮ້າຍຮ່າງກາຍຜູ້ຍິງໃນເວລາຂົ່ມຂືນ ຫຼື ເຮັດໃຫ້ຜູ້ຍິງພິການຕະຫຼອດຊີວິດ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 70.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 249 ການຂົ່ມຂືນທຳຊຳເລົາແລ້ວຂ້າຖິ້ມ

ບຸກຄົນໃດ ຫາກໄດ້ຂົ່ມຂືນທຳຊຳເລົາແລ້ວໄດ້ຂ້າຖິ້ມ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບຫ້າປີ ຫາ ຊາວປີ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ ຫຼື ປະຫານຊີວິດ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 250 ການທຳຊຳເລົາເດັກ

ບຸກຄົນໃດ ຫາກໄດ້ຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ ທີ່ມີອາຍຸ ຕ່ຳກວ່າ ສິບແປດປີລົງມາ ຫາ ສິບ ຫ້າປີ ດ້ວຍການຕົວະຍົວະ, ຫຼອກລວງ, ຊວນເຊື່ອ, ຊື້ຈ້າງ, ຈອບອອຍ ຫຼື ຮູບການອື່ນ ເພື່ອໃຫ້ເດັກ ສົມຍອມ ແລະ ປະຕິບັດຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ຫາກໄດ້ຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ ທີ່ມີອາຍຸຕ່ຳກວ່າ ສິບຫ້າປີ ຫາ ສິບສອງປີ ດ້ວຍການຈ່າຍຄ່າຕອບແທນ ຫຼື ຕອບສະໜອງຜົນປະໂຫຍດດ້ວຍຮູບການໃດໜຶ່ງ ຈະຖືກລົງໂທດຕັດອິດ ສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 7.000.000 ກີບ.

ບຸກຄົນໃດ ຫາກໄດ້ຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ ທີ່ມີອາຍຸຕ່ຳກວ່າ ສິບສອງປີ ຈະດ້ວຍຮູບການໃດກໍຕາມ ຖືວ່າເປັນການຂົ່ມຂືນທຳຊຳເລົາເດັກ ແລະ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

ບຸກຄົນໃດ ທີ່ໄດ້ສະເໜີ, ຮັບເອົາ, ຈັດຫາ ຫຼື ສະໜອງເດັກ ທີ່ມີອາຍຸ ຕ່ຳກວ່າສິບແປດປີລົງມາໃຫ້ ຂາຍປະເວນີ ຖືວ່າເປັນການກະທຳຜິດ ແລະ ຈະຖືກລົງໂທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 254 ຂອງ ປະມວນກົດໝາຍສະບັບນີ້.

## ມາດຕາ 251 ການໃຊ້ເລ່ລ່ຽມເພື່ອມີເພດສຳພັນ

ບຸກຄົນໃດ ຫາກໃຊ້ເລ່ລ່ຽມ ເພື່ອໃຫ້ບຸກຄົນທີ່ຢູ່ໃນການຄຸ້ມຄອງດູແລຂອງຕົນ ຫຼື ບຸກຄົນທີ່ຢູ່ໃນສະພາວະຈຳເປັນ ມີເພດສຳພັນກັບຕົນ ຫຼື ກັບບຸກຄົນອື່ນ ດ້ວຍການຂືນໃຈຂອງຜູ້ກ່ຽວ ຈະຖືກລົງໂທດຕັດອິດ ສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີ ການກະທຳຜິດຕໍ່ເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີ ຫາ ສິບສອງປີ ມີເພດສຳພັນກັບຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີ ການກະທຳຜິດຕໍ່ເດັກ ທີ່ມີອາຍຸຕໍ່າກວ່າ ສິບສອງປີ ຈະດ້ວຍຮູບການໃດກໍຕາມ ຖືວ່າເປັນການຂົ່ມຂືນທຳຊຳເລົາເດັກ ແລະ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 70.000.000 ກີບ.

### ມາດຕາ 252 ການບັງຄັບຮ່ວມເພດກັບເມຍ

ບຸກຄົນໃດ ຫາກໄດ້ຮ່ວມເພດກັບເມຍຕົນ ດ້ວຍການໃຊ້ກຳລັງ, ບັງຄັບ, ຂົ່ມຂູ່ ຊຶ່ງຝືນໃຈຂອງຜູ້ເປັນເມຍ ຫຼື ໃນເວລາທີ່ເມຍ ຢູ່ໃນສະພາບບໍ່ພ້ອມ ທີ່ຈະມີເພດສຳພັນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 500.000 ກີບຫາ 3.000.000 ກີບ.

ໃນກໍລະນີການບັງຄັບຮ່ວມເພດທີ່ພາໃຫ້ມີການບາດເຈັບໜັກ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

### ມາດຕາ 253 ການບັງຄັບໃຫ້ເປັນໂສເພນີ

ບຸກຄົນໃດ ຫາກໄດ້ບັງຄັບຜູ້ອື່ນໃຫ້ເປັນໂສເພນີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາສິບປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 100.000.000 ກີບ.

ບຸກຄົນໃດ ຫາກໄດ້ບັງຄັບເດັກທີ່ມີອາຍຸຕໍ່າກ່ວາສິບແປດປີ ໃຫ້ເປັນໂສເພນີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 150.000.000 ກີບ.

### ມາດຕາ 254 ການຄ້າປະເວນີຂອງບຸກຄົນອື່ນ

ບຸກຄົນໃດ ຫາກຫາລາຍໄດ້ ດ້ວຍການ ຄ້າປະເວນີຂອງບຸກຄົນອື່ນ ຈະໃນຮູບການໃດກໍຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ຖືເອົາການຄ້າປະເວນີຂອງບຸກຄົນອື່ນເປັນອາຊີບ ຫຼື ບັງຄັບບຸກຄົນທີ່ຢູ່ໃນຄວາມຄຸ້ມຄອງດູແລຂອງຕົນ ໃຫ້ເປັນໂສເພນີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາເຈັດປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 100.000.000 ກີບ.

### ມາດຕາ 255 ການຮ່ວມປະເວນີກັບຍາດໃກ້ຊິດ

ບຸກຄົນໃດ ຫາກໄດ້ເສບສົມກັບ ພໍ່ ຫຼື ແມ່, ພໍ່ລ້ຽງ ຫຼື ແມ່ລ້ຽງ, ພໍ່ນ້າ ຫຼື ແມ່ນ້າ, ພໍ່ເຖົ້າ ຫຼື ແມ່ເຖົ້າ, ປູ່ຫຼື ຍ່າ, ລູກຄີງ ຫຼື ລູກລ້ຽງ, ລູກນ້າ, ຫຼານສາຍຕັ້ງ ຫຼື ອ້າຍຄີງ, ເອື້ອຍຄີງ, ນ້ອງຄີງຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ຜູ້ສົມຍອມໃຫ້ເສບສົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 256 ການເຜີຍແຜ່ສິ່ງລາມົກເດັກ**

ບຸກຄົນໃດ ຫາກໄດ້ຜະລິດ, ຈຳໜ່າຍ, ເຜີຍແຜ່, ນຳເຂົ້າ, ສົ່ງອອກ, ສະແດງ ຫຼື ຂາຍໜັງສື, ຮູບ, ຟີມ ວີດີໂອ, ວີຊີດີ, ດີວີດີ ແລະ ສິ່ງອື່ນ ທີ່ລາມົກກ່ຽວກັບເດັກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 257 ການຄອບຄອງສິ່ງລາມົກເດັກ**

ບຸກຄົນໃດ ຫາກໄດ້ຄອບຄອງໜັງສື, ຮູບ, ຟີມວີດີໂອ, ວີຊີດີ, ດີວີດີ ແລະ ສິ່ງອື່ນ ທີ່ລາມົກກ່ຽວກັບເດັກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 3.000.000 ກີບ.

**ມາດຕາ 258 ການທຳລາມົກ**

ບຸກຄົນໃດ ຫາກໄດ້ເສບສົມ ຫຼື ໄດ້ເຜີຍອະໄວຍະວະເພດຂອງຕົນຕໍ່ໜ້າຊຸມຊົນ ຫຼື ສະຖານທີ່ສາທາລະນະ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 259 ການທຳອະນາຈານ**

ບຸກຄົນໃດ ຫາກໄດ້ມີການກະທຳທີ່ແຕະຕ້ອງເຖິງຄວາມອັບອາຍທາງເພດຂອງບຸກຄົນອື່ນ ໂດຍຝືນໃຈຂອງຜູ້ນັ້ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ຫາກກະທຳອະນາຈານເດັກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 260 ການຂາຍປະເວນີ**

ບຸກຄົນໃດ ຫາກໄດ້ຫາກິນ ດ້ວຍການຂາຍປະເວນີໃຫ້ຜູ້ອື່ນ ເສບສົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 3.000.000 ກີບ.

ບຸກຄົນໃດ ຫາກໄດ້ໃຫ້ຄວາມຊ່ວຍເຫຼືອ ຫຼື ຄວາມສະດວກແກ່ການຂາຍປະເວນີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

ຜູ້ຊື້ປະເວນີ ກໍຈະຖືກລົງໂທດໃນສະຖານດຽວກັນ.

**ມາດຕາ 261 ການບໍ່ປະຕິບັດພັນທະໃນການລ້ຽງດູລູກ, ພໍ່, ແມ່ ຫຼື ຜົວເມຍ**

ບຸກຄົນໃດ ຫາກບໍ່ໄດ້ລ້ຽງດູລູກຂອງຕົນ ທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ບໍ່ໄດ້ລ້ຽງດູ ພໍ່ແມ່ຂອງຕົນທີ່ຂາດເຂີນ, ບໍ່ລ້ຽງດູເມຍ ຫຼື ຜົວຂອງຕົນທີ່ເສຍອົງຄະ ຫຼື ປ່ວຍໄຂ້ ຕາມຄໍາຕັດສິນຂອງສານ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 262 ການທ່ອງທ່ຽວທາງເພດເດັກ**

ບຸກຄົນໃດ ຫາກໄດ້ເດີນທາງຈາກປະເທດໜຶ່ງ ໄປຍັງປະເທດອື່ນ ຫຼື ຈາກສະຖານທີ່ໃດໜຶ່ງ ໄປຍັງສະຖານທີ່ອື່ນ ເພື່ອລ່ວງລະເມີດທາງເພດເດັກ ດ້ວຍການສ້າງຄວາມຜູກພັນ, ສ້າງກິດຈະກໍາໃດໜຶ່ງຮ່ວມກັບເດັກ ຫຼື ໃຊ້ວິທີການອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ຫາກໄດ້ຈັດຫາ, ໂຄສະນາ, ອໍານວຍຄວາມສະດວກ ໃຫ້ແກ່ຜູ້ທີ່ເດີນທາງເພື່ອທ່ອງທ່ຽວທາງເພດເດັກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 263 ການທາລຸນແມ່ຍິງ ແລະ ເດັກ**

ບຸກຄົນໃດ ຫາກໄດ້ທາລຸນທາງດ້ານຮ່າງກາຍ ຫຼື ຈິດໃຈຂອງແມ່ຍິງ ດ້ວຍການເຕະ, ຕີ, ຜູກມັດ, ຂັງ, ໃຫ້ອົດອາຫານ, ບັງຄັບໃຫ້ອອກແຮງງານເກີນຂອບເຂດ, ນອກໃຈ, ລ່ວງລະເມີດທາງເພດຕໍ່ແມ່ຍິງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທໍາຜິດຕໍ່ເດັກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 264 ການເປີດເຜີຍປະຫວັດສ່ວນຕົວຂອງເດັກ**

ບຸກຄົນໃດ ຫາກໄດ້ເປີດເຜີຍປະຫວັດສ່ວນຕົວ ຫຼື ຂໍ້ມູນ ກ່ຽວກັບເດັກທີ່ເປັນຜູ້ຖືກເສຍຫາຍ, ຜູ້ຖືກສົງໄສ, ຜູ້ຖືກຫາ, ຈໍາເລີຍ ຫຼື ເປັນຜູ້ກະທໍາຜິດ ຫຼື ເດັກທີ່ເປັນພະຍານ ຈະຖືກລົງໂທດຕັດອິດສະລະພາບ ແຕ່

ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 265 ການປະຖິ້ມເດັກ**

ບຸກຄົນໃດ ຫາກໄດ້ປະຖິ້ມເດັກໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການປະຖິ້ມ ຫາກເຮັດໃຫ້ເດັກ ເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 30.000.000 ກີບ.

**ມາດຕາ 266 ການທຳຊຳເລົາຂອງພິກຂຸ, ສາມະເນນ, ພໍ່ຂາວ ແລະ ແມ່ຂາວ**

ພິກຂຸ, ສາມະເນນ, ພໍ່ຂາວ ແລະ ແມ່ຂາວ ຫາກໄດ້ເສບສົມກັບຜູ້ຍິງ ຫຼື ຜູ້ຊາຍ ຫຼື ດ້ວຍກັນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ຜູ້ຍິງ ຫຼື ຜູ້ຊາຍ ທີ່ໄດ້ສະໝັກໃຈເສບສົມກັບພິກຂຸ, ສາມະເນນ, ພໍ່ຂາວ ຫຼື ແມ່ຂາວ ກໍຈະຖືກລົງໂທດໃນສະຖານດຽວກັນ.

**ມາດຕາ 267 ການເຜີຍແຜ່ສິ່ງທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ**

ບຸກຄົນໃດ ຫາກໄດ້ຜະລິດ ຫຼື ໄດ້ນຳເອົາໜັງສື, ຮູບ, ຟິມວີດີໂອ ແລະ ສິ່ງອື່ນທີ່ລາມົກ ຫຼື ສິ່ງອື່ນ ທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ ອອກຈຳໜ່າຍ ຫຼື ເຜີຍແຜ່ທາງກົງ ຫຼື ທາງອ້ອມຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 268 ການບັງຄັບໃຫ້ແຕ່ງດອງ ຫຼື ຢ່າຮ້າງ ແລະ ການກີດກັ້ນການແຕ່ງດອງ ຫຼື ຢ່າຮ້າງ**

ບຸກຄົນໃດ ຫາກບັງຄັບຜູ້ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໃຫ້ແຕ່ງດອງ, ຢ່າຮ້າງ ຫຼື ກີດກັ້ນການແຕ່ງດອງ ຫຼື ການຢ່າຮ້າງ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ຫາກໃຊ້ຄວາມຮຸນແຮງ ຫຼື ຂົ່ມຂູ່ທາງດ້ານຈິດໃຈ ເພື່ອບັງຄັບຜູ້ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໃຫ້ແຕ່ງດອງ, ຢ່າຮ້າງ ຫຼື ກີດກັ້ນ ການແຕ່ງດອງ ຫຼື ການຢ່າຮ້າງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີ ບັງຄັບເດັກອາຍຸຕ່ຳກວ່າ ສິບແປດປີ ໃຫ້ແຕ່ງດອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 269 ການແຕ່ງດອງກັບເດັກ**

ບຸກຄົນໃດ ຫາກໄດ້ແຕ່ງດອງກັບເດັກທີ່ມີອາຍຸ ຕໍ່າກວ່າ ສິບແປດປີ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ຫາກໄດ້ອະນຸຍາດໃຫ້ເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ສິບແປດປີ ແຕ່ງດອງ ກໍຈະຖືກລົງໂທດໃນສະຖານດຽວກັນ.

**ມາດຕາ 270 ການປະຕິບັດທີ່ບໍ່ເໝາະສົມຕໍ່ຍາດໃກ້ຊິດ**

ບຸກຄົນໃດ ຫາກປະຕິບັດທີ່ບໍ່ເໝາະສົມ ຫຼື ຂົ່ມເຫັງ ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ, ພໍ່, ແມ່, ຜົວ, ເມຍ, ລູກ, ຫຼານຂອງຕົນ ຫຼື ຜູ້ລ້ຽງດູຕົນເອງ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ກຽດສັກສີ, ຮີດຄອງປະເພນີອັນດີງາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

## ໝວດທີ 7
## ການກະທຳຜິດຕໍ່ລະບຽບການຄຸ້ມຄອງເສດຖະກິດ

**ມາດຕາ 271 ການປັ່ນຕະຫຼາດ**

ບຸກຄົນໃດ ຫາກໄດ້ມີການກະທຳ ຊຶ່ງສົ່ງຜົນກະທົບຕໍ່ລາຄາ ຫຼື ຈຳນວນຫຼັກຊັບ ທີ່ມີການຊື້-ຂາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 300.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 700.000.000 ກີບ ແລະ ຈະຖືກຮິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 272 ການຊື້-ຂາຍຂໍ້ມູນພາຍໃນ**

ບຸກຄົນໃດ ຫາກໄດ້ໃຫ້, ໃຊ້, ຮັບ, ສົ່ງຕໍ່, ເປີດເຜີຍ ຫຼື ເຜີຍແຜ່ຂໍ້ມູນພາຍໃນ ເພື່ອຊື້-ຂາຍຫຼັກຊັບໃນນາມຕົນເອງ ຫຼື ບຸກຄົນອື່ນ ເພື່ອຜົນປະໂຫຍດຂອງຕົນ ຫຼື ຂອງບຸກຄົນອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 300.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ໃນກໍລະນີທີ່ມີການກະທຳຜິດ ເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ, ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 700.000.000 ກີບ ແລະ ຈະຖືກຮິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 273 ການຍຸຍົງໃຫ້ລູກຄ້າຕັດສິນໃຈ ຊື້-ຂາຍ ຫຼັກຊັບ

ບຸກຄົນໃດ ຫາກໄດ້ຍຸຍົງໃຫ້ລູກຄ້າຕັດສິນໃຈ ຊື້-ຂາຍຫຼັກຊັບ ຢ່າງບໍ່ສົມເຫດສົມຜົນ ເພື່ອຜົນປະໂຫຍດຂອງຕົນ ຫຼື ໃຫ້ຄຳໝັ້ນສັນຍາກ່ຽວກັບຜົນຕອບແທນຈາກການຊື້, ການຂາຍຫຼັກຊັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ຫາ 50.000.000 ກີບ.

## ມາດຕາ 274 ການສ້າງ ແລະ ການສະໜອງຂໍ້ມູນກ່ຽວກັບຕະຫຼາດຫຼັກຊັບທີ່ບໍ່ຖືກຕ້ອງຕາມຄວາມຈິງ

ບຸກຄົນໃດ ຫາກໄດ້ສ້າງ ແລະ ສະໜອງຂໍ້ມູນກ່ຽວກັບຕະຫຼາດຫຼັກຊັບທີ່ບໍ່ຖືກຕ້ອງຕາມຄວາມຈິງທີ່ມີຜົນກະທົບຕໍ່ການຕັດສິນໃຈຂອງຜູ້ລົງທຶນ ແລະ ເຮັດໃຫ້ຕະຫຼາດຫຼັກຊັບມີຄວາມຜັນຜວນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 300.000.000 ຫາ 500.000.000 ກີບ.

## ມາດຕາ 275 ການຜະລິດ, ການຂາຍເຄື່ອງບໍລິໂພກ ຫຼື ຢາປິ່ນປົວພະຍາດ, ເຄື່ອງສຳອາງ ທີ່ເປັນອັນຕະລາຍຕໍ່ສຸຂະພາບ

ບຸກຄົນໃດ ດ້ວຍຄວາມບໍ່ລະມັດລະວັງ ຫາກໄດ້ຜະລິດ, ຈຳໜ່າຍ ຫຼື ສະໜອງເຄື່ອງດື່ມ, ເຄື່ອງບໍລິໂພກ ເຊັ່ນ ອາຫານ, ຊີ້ນ, ປາ, ໝາກໄມ້, ຜັກ ຫຼື ເຄື່ອງບໍລິໂພກອື່ນ ຫຼື ຢາປິ່ນປົວພະຍາດ, ເຄື່ອງສຳອາງທີ່ບໍ່ໄດ້ຄຸນນະພາບ, ເສຍຄຸນ, ໝົດອາຍຸການນຳໃຊ້ແລ້ວ ຫຼື ມີສານຕົກຄ້າງ ຊຶ່ງເປັນອັນຕະລາຍຕໍ່ສຸຂະພາບ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳນັ້ນ ຫາກເປັນການກະທຳຜິດ ໂດຍເຈດຕະນາ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

## ມາດຕາ 276 ການຜະລິດ, ຂົນສົ່ງ, ນຳເຂົ້າ, ຂາຍ ຫຼື ແລກປ່ຽນສິນຄ້າທີ່ເກືອດຫ້າມ

ບຸກຄົນໃດ ຫາກໄດ້ຜະລິດ, ຂົນສົ່ງ, ນຳເຂົ້າ, ຂາຍ ຫຼື ແລກປ່ຽນສິນຄ້າທີ່ເກືອດຫ້າມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 277 ການສວຍໂອກາດຂຶ້ນລາຄາສິນຄ້າ ແລະ ຄ່າບໍລິການ**

ບຸກຄົນໃດ ຫາກໄດ້ສວຍໂອກາດຂຶ້ນລາຄາສິນຄ້າ, ຄ່າບໍລິການ ຫຼື ໄດ້ຂາຍສິນຄ້າແພງເກີນຂອບເຂດໃນເວລາເກີດໄພແຫ້ງແລ້ງ, ໄພນໍ້າຖ້ວມ ຫຼື ໃນເວລາທີ່ມີສະພາບການຫຍຸ້ງຍາກເກີດຂຶ້ນໃນທ້ອງຖິ່ນໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 278 ການກັກຕຸນສິນຄ້າ**

ບຸກຄົນໃດ ຫາກໄດ້ກັກຕຸນ, ຊຸກເຊື່ອງສິນຄ້າໄວ້ໃນວິສາຫະກິດ, ບໍລິສັດ, ຫ້າງຮ້ານຂອງຕົນ ຫຼື ຢູ່ບ່ອນອື່ນ ເພື່ອສ້າງຄວາມປັ່ນປ່ວນທາງດ້ານເສດຖະກິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 279 ການຂາຍສິນຄ້າຂອງລັດ ຫຼື ລວມໝູ່ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ທີ່ມີໜ້າທີ່ຮັບຜິດຊອບໃນການຂາຍສິນຄ້າຢູ່ຮ້ານຄ້າຂອງລັດ ຫຼື ລວມໝູ່ ຫາກໄດ້ເອົາສິນຄ້າທີ່ຕົນຮັບຜິດຊອບນັ້ນ ອອກຂາຍ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຍ້ອນຄວາມໂລບມາກໂລພາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 280 ການປອມແປງຕາຊິ່ງ ຫຼື ການວັດແທກ**

ບຸກຄົນໃດ ຫາກໄດ້ ປອມແປງຕາຊິ່ງ ຫຼື ການວັດແທກ ເພື່ອຫຼັກໂລບ ການຊັ່ງ, ການຜອງ, ການວັດແທກໃນເວລາຊື້-ຂາຍ, ແລກປ່ຽນ ຫຼື ໃຊ້ຊິ່ງ, ເຄື່ອງຜອງ, ເຄື່ອງວັດແທກທີ່ດັດແປງ ຫຼື ທີ່ບໍ່ໄດ້ມາດຕະຖານ ເພື່ອຫຼັກໂລບເອົາສິນຄ້າ ຫຼື ເງິນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 281 ການປອມແປງແຊັກ, ການນຳໃຊ້ແຊັກ ຫຼື ພັນທະບັດອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກໄດ້ປອມແປງແຊັກ ຫຼື ພັນທະບັດອື່ນ ດ້ວຍການ ປ່ຽນແປງ ຫຼື ເພີ່ມເຕີມຂໍ້ຄວາມໃດໜຶ່ງ ຫຼື ນຳໃຊ້ໃນຮູບການອື່ນ ເພື່ອແລກປ່ຽນເອົາເງິນຕາຈາກທະນາຄານ, ແລກປ່ຽນເອົາສິນຄ້າ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ຫາກໄດ້ໃຊ້ແຊັກທີ່ບໍ່ມີເງິນ, ໃຊ້ແຊັກເກີນຈຳນວນເງິນທີ່ຕົນໄດ້ຝາກຢູ່ທະນາຄານ ຫຼື ຊື້-ຂາຍ ແລະ ແລກປ່ຽນແຊັກໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 282 ການທຳລາຍທະນະບັດ ຫຼື ເງິນຫຼຽນ**

ບຸກຄົນໃດ ຫາກໄດ້ທຳລາຍທະນະບັດ ຫຼື ເງິນຫຼຽນ ດ້ວຍການຕັດ, ເຈາະ, ຈີກ, ແຕ້ມ, ຂີດ, ຂຽນ, ພິມ, ຈ້ຳກາ, ຕິດກາ ໃສ່ທະນະບັດ ຫຼື ເງິນຫຼຽນ ຫຼື ດ້ວຍວິທີໃດກໍຕາມ ຊຶ່ງເຮັດໃຫ້ທະນະບັດ ຫຼື ເງິນຫຼຽນ ທີ່ນຳອອກຈໍລະຈອນນັ້ນ ຖືກເສຍຫາຍ ຫຼື ໃຊ້ບໍ່ໄດ້ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 283 ການລະເມີດລະບຽບການກ່ຽວກັບລະບອບພາສີ, ອາກອນຂອງລັດ**

ບຸກຄົນໃດ ຫາກໄດ້ລະເມີດລະບຽບການກ່ຽວກັບລະບອບພາສີ, ອາກອນຂອງລັດ ດ້ວຍການຫຼົບຫຼີກ, ເຊື່ອງອຳບໍ່ເສຍພັນທະຕໍ່ລັດ ຫຼື ເສຍບໍ່ຖືກຕ້ອງຕາມລະບຽບການທີ່ໄດ້ກຳນົດໄວ້ ເຊັ່ນ ຄ່າພາສີຂາອອກ-ຂາເຂົ້າ, ຄ່າອາກອນ, ຄ່າຊັບພະຍາກອນ ແລະ ຄ່າທຳນຽມຕ່າງໆ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 284 ການນຳເຂົ້າ ຫຼື ສົ່ງອອກສິນຄ້າໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກນຳເຂົ້າ ຫຼື ສົ່ງອອກສິນຄ້າ ໂດຍບໍ່ຖືກຕ້ອງຕາມກົດໝາຍ ດ້ວຍການລັກລອບເອົາສິນຄ້າເຂົ້າ-ອອກ ໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 285 ການລະເມີດລະບຽບການຄຸ້ມຄອງເງິນຕາຕ່າງປະເທດ**

ບຸກຄົນໃດ ຫາກໄດ້ລະເມີດລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ເປັນອາຈິນ ດ້ວຍການກະທຳໃດໜຶ່ງ ດັ່ງນີ້:

1. ການຕິດປະກາດ ຫຼື ໂຄສະນາລາຄາ ແລະ ຄ່າອື່ນ ເປັນເງິນຕາຕ່າງປະເທດ;

2. ການຮັບຊໍາລະຄ່າສິນຄ້າ, ຄ່າບໍລິການ, ຊໍາລະໜີ້, ເບີກຈ່າຍເງິນເດືອນ, ປະຕິບັດພັນທະຕໍ່ລັດ ເປັນເງິນຕາຕ່າງປະເທດ;

3. ການດໍາເນີນທຸລະກິດເງິນຕາຕ່າງປະເທດ ຫຼື ແລກປ່ຽນເງິນຕາໂດຍບໍ່ໄດ້ຮັບອະນຸຍາດ;

4. ການກໍານົດ, ຕິດປະກາດ ຫຼື ປະຕິບັດອັດຕາແລກປ່ຽນ ຂອງທະນາຄານທຸລະກິດ, ຮ້ານແລກປ່ຽນເງິນຕາ ຫຼື ສະຖານບໍລິການທີ່ກ່ຽວຂ້ອງທີ່ບໍ່ຖືກຕ້ອງ;

5. ການເປີດບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ;

6. ການບໍ່ລາຍງານລາຍຮັບ, ລາຍຈ່າຍ ທີ່ເປັນເງິນຕາຕ່າງປະເທດ ໃຫ້ທະນາຄານ ແຫ່ງ ສປປ ລາວ;

7. ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າກັບຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;

8. ການນໍາເງິນສົດເປັນເງິນຕາຕ່າງປະເທດ, ເປັນເງິນກີບເຂົ້າ-ອອກ ສປປ ລາວ ທີ່ມີມູນຄ່າເກີນລະບຽບການກໍານົດໄວ້ ໂດຍບໍ່ແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈໍາດ່ານ ຫຼື ບໍ່ໄດ້ຮັບອະນຸຍາດ ຈາກທະນາຄານ ແຫ່ງ ສປປ ລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 286 ການຂົນສົ່ງສິນຄ້າ ຜ່ານ ສປປ ລາວ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກຂົນສົ່ງສິນຄ້າ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທໍາຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ການຂົນສົ່ງສິນຄ້າເປັນຈໍານວນຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 287 ການຂົນສົ່ງເງິນຕາຕ່າງປະເທດ ຜ່ານ ສປປ ລາວ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກຂົນສົ່ງເງິນຕາຕ່າງປະເທດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ການຂົນສິ່ງເງິນຕາຕ່າງປະເທດເປັນຈຳນວນຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

### ມາດຕາ 288 ການຜະລິດ, ຂາຍສິນຄ້າປອມ

ບຸກຄົນໃດ ຫາກຜະລິດ, ຂາຍສິນຄ້າປອມ ຫຼື ຮຽນແບບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 289 ການປອມແປງ, ຕົວະຍົວະ ແລະ ຫຼອກລວງກ່ຽວກັບຄຸນນະພາບ

ບຸກຄົນໃດ ຫາກໄດ້ປອມແປງ, ຕົວະຍົວະ ແລະ ຫຼອກລວງ ກ່ຽວກັບຄຸນນະພາບຂອງຜະລິດຕະພັນ, ສິນຄ້າ, ການບໍລິການ ແລະ ສິ່ງແວດລ້ອມ ຊຶ່ງກໍ່ຄວາມເປັນອັນຕະລາຍຕໍ່ຜູ້ອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳນັ້ນ ຫາກເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບສາຫັດ, ເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 150.000.000 ກີບ.

ໃນກໍລະນີທີ່ມີການເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ຊາວປີ ຫຼື ຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 1.000.000.000 ກີບ.

### ມາດຕາ 290 ການຜະລິດ ຫຼື ການຂາຍອາຫານ, ສະບຽງອາຫານ, ຢາປິ່ນປົວພະຍາດ, ຢາປ້ອງກັນພະຍາດປອມ

ບຸກຄົນໃດ ຫາກຜະລິດ ຫຼື ຂາຍອາຫານ, ສະບຽງອາຫານ, ຢາປິ່ນປົວພະຍາດ, ຢາປ້ອງກັນພະຍາດປອມ ຫຼື ຮຽນແບບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ, ເຮັດໃຫ້ມີການເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 291 ການຜະລິດ ຫຼື ການຂາຍສິນຄ້າສຳລັບລ້ຽງສັດ, ຝຸ່ນ, ຢາປ້ອງກັນສັດ, ຢາປິ່ນປົວສັດ, ຢາປາບສັດຕູພືດ, ພືດປະເພດຕ່າງໆປອມ**

ບຸກຄົນໃດ ຫາກຜະລິດ ຫຼື ຂາຍສິນຄ້າສຳລັບລ້ຽງສັດ, ຝຸ່ນ, ຢາປ້ອງກັນສັດ, ຢາປິ່ນປົວສັດ, ຢາປາບສັດຕູພືດ, ພືດປະເພດຕ່າງໆ ປອມ ຫຼື ຮຽນແບບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 292 ການຈຳໜ່າຍ ຫຼື ຊຸກເຊື່ອງສັດ ແລະ ຜະລິດຕະພັນສັດທີ່ເປັນພະຍາດ**

ບຸກຄົນໃດ ໂດຍເຈດຕະນາ ຫາກໄດ້ຈຳໜ່າຍ ຫຼື ຊຸກເຊື່ອງ ສັດ ແລະ ຜະລິດຕະພັນສັດທີ່ເປັນພະຍາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 293 ການເຄື່ອນຍ້າຍ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມໂດຍບໍ່ໄດ້ຮັບອະນຸຍາດ**

ບຸກຄົນໃດ ໂດຍເຈດຕະນາ ຫາກໄດ້ເຄື່ອນຍ້າຍ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຈາກພື້ນທີ່ທີ່ມີການລະບາດຂອງສັດຕູພືດ ໄປຍັງພື້ນທີ່ອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງຂອງລັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 294 ການລັກລອບນຳເຂົ້າ, ສົ່ງອອກ ຫຼື ນຳ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມຜ່ານ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ

ບຸກຄົນໃດ ຫາກໄດ້ລັກລອບນຳເຂົ້າ, ສົ່ງອອກ ຫຼື ນຳ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມທີ່ຕິດແປດສັດຕູພືດ ຫຼື ເປັນອັນຕະລາຍຕໍ່ສຸຂານາໄມພືດ, ຄົນ, ສັດ ແລະ ສິ່ງແວດລ້ອມ ຜ່ານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງຂອງລັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 295 ການຈຳໜ່າຍ, ແຈກຢາຍ ຫຼື ເກັບຮັກສາ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ

ບຸກຄົນໃດ ໂດຍເຈດຕະນາ ຫາກໄດ້ຈຳໜ່າຍ, ແຈກຢາຍ ຫຼື ເກັບຮັກສາພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມທີ່ຕິດແປດສັດຕູພືດຄວບຄຸມ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 296 ການນຳເຂົ້າ, ການຂະຫຍາຍ ຫຼື ມີໄວ້ໃນຄອບຄອງສັດຕູພືດຄວບຄຸມ

ບຸກຄົນໃດ ຫາກໄດ້ນຳເຂົ້າ, ຂະຫຍາຍ ຫຼື ມີໄວ້ໃນຄອບຄອງສັດຕູພືດຄວບຄຸມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 297 ການດຳເນີນທຸລະກິດໂດຍບໍ່ຖືກຕ້ອງຕາມກົດໝາຍ

ບຸກຄົນໃດ ຫາກໄດ້ດຳເນີນທຸລະກິດໂດຍບໍ່ໄດ້ຂຶ້ນທະບຽນວິສາຫະກິດ ຫຼື ເຄື່ອນໄຫວທຸລະກິດໂດຍບໍ່ຖືກກັບວັດຖຸປະສົງຂອງວິສາຫະກິດຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ

ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 298 ການຄິດໄລ່ດອກເບ້ຍສູງ**

ບຸກຄົນໃດ ຫາກໄດ້ໃຫ້ກູ້ຢືມເປັນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຈາກຂະແໜງການທີ່ກ່ຽວຂ້ອງ ແລ້ວຄິດໄລ່ອັດຕາດອກເບ້ຍເງິນກູ້ຢືມ ສູງກວ່າ ສາມສິບຫົກ ສ່ວນຮ້ອຍ ຕໍ່ປີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 299 ການລະເມີດລະບຽບການຄຸ້ມຄອງເສດຖະກິດຂອງລັດ**

ບຸກຄົນໃດ ຫາກໃຊ້ສິດ, ໜ້າທີ່, ຕຳແໜ່ງ ໃນທາງທີ່ບໍ່ຖືກຕ້ອງ ຫຼື ໃຊ້ສິດ, ໜ້າທີ່, ຕຳແໜ່ງເກີນກວ່າກົດໝາຍກຳນົດໄວ້ ຊຶ່ງເປັນການລະເມີດລະບຽບການຄຸ້ມຄອງເສດຖະກິດຂອງລັດໂດຍເຈດຕະນາ ຊຶ່ງກໍ່ຄວາມເສຍຫາຍຢ່າງໜັກໜ່ວງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 30.000.000 ກີບ.

**ມາດຕາ 300 ການລາຍງານກ່ຽວກັບການຄຸ້ມຄອງເສດຖະກິດບໍ່ຖືກຕ້ອງ**

ບຸກຄົນໃດ ຫາກລາຍງານກ່ຽວກັບການຄຸ້ມຄອງເສດຖະກິດບໍ່ຖືກຕ້ອງ ດ້ວຍການໃຫ້ຂໍ້ມູນ ຫຼື ເອກະສານທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຊຶ່ງກໍ່ຄວາມເສຍຫາຍຢ່າງໜັກໜ່ວງຕໍ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 30.000.000 ກີບ.

**ມາດຕາ 301 ການລະເມີດລະບຽບການບັນຊີ**

ຜູ້ບໍລິຫານ ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ຫຼື ບຸກຄົນອື່ນ ໂດຍເຈດຕະນາ ຫາກສ້າງ ຫຼື ບັນທຶກບັນຊີບໍ່ຖືກຕ້ອງ, ປອມແປງ ຫຼື ທຳລາຍບັນຊີຂອງທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ຫຼື ລູກຄ້າ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີ ທີ່ການກະທຳຜິດ ຫາກກໍ່ຄວາມເສຍຫາຍຢ່າງໜັກໜ່ວງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ.

### ມາດຕາ 302 ການສະໜອງຂໍ້ມູນເທັດກ່ຽວກັບການບັນຊີ

ບຸກຄົນໃດ ຫາກລາຍງານເທັດ ຫຼື ສະໜອງຂໍ້ມູນເທັດກ່ຽວກັບການບັນຊີ ຊຶ່ງເປັນຂໍ້ມູນສຳຄັນທີ່ເປັນພື້ນຖານໃຫ້ແກ່ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ.

### ມາດຕາ 303 ການລະເມີດການແຂ່ງຂັນທາງທຸລະກິດ

ບຸກຄົນໃດ ຫາກໄດ້ລະເມີດການແຂ່ງຂັນທາງທຸລະກິດ ດ້ວຍການເຮັດໃຫ້ເຂົ້າໃຈຜິດ, ການລະເມີດຄວາມລັບທາງທຸລະກິດ, ການບັງຄັບໃນການດຳເນີນທຸລະກິດ, ການເຮັດໃຫ້ຜູ້ດຳເນີນທຸລະກິດອື່ນເສື່ອມເສຍຊື່ສຽງ, ການສ້າງອຸປະສັກຂັດຂວາງຕໍ່ການດຳເນີນທຸລະກິດ, ການໂຄສະນາທີ່ບໍ່ຖືກຕ້ອງ ຕາມຄວາມເປັນຈິງ, ການສົ່ງເສີມການຂາຍດ້ວຍວິທີທີ່ບໍ່ເປັນທຳ, ການຈຳແນກປະຕິບັດໂດຍສະມາຄົມທຸລະກິດ ຫຼື ຈຳກັດການແຂ່ງຂັນທາງທຸລະກິດ ດ້ວຍການຕົກລົງ ເພື່ອຈຳກັດການແຂ່ງຂັນທາງທຸລະກິດ, ການສວຍໃຊ້ການຄອບຄອງຕະຫຼາດ ແລະ ການຜູກຂາດຕະຫຼາດ ຫຼື ການລວມຕົວເພື່ອຈຳກັດການແຂ່ງຂັນທາງທຸລະກິດ ຫຼື ມີພຶດຕິກຳ ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍ ແຕ່ 1.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ.

### ມາດຕາ 304 ການແຂ່ງຂັນທີ່ບໍ່ເປັນທຳກ່ຽວກັບການປະກັນໄພ

ບຸກຄົນໃດ ຫາກແຂ່ງຂັນທີ່ບໍ່ເປັນທຳກ່ຽວກັບການປະກັນໄພ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 20.000.000 ກີບ.

### ມາດຕາ 305 ການໂຄສະນາເກີນຄວາມເປັນຈິງ

ບຸກຄົນໃດ ຫາກໂຄສະນາສິນຄ້າ ຫຼື ການບໍລິການ ເກີນຄວາມເປັນຈິງ ຫຼື ບໍ່ຖືກຕ້ອງ ໂດຍເຈດຕະນາ ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

### ມາດຕາ 306 ການລະເມີດລະບຽບການບໍລິຈາກເງິນ ແລະ ເຄື່ອງບັນເທົາທຸກ

ບຸກຄົນໃດ ຫາກໃຊ້ອຳນາດ, ໜ້າທີ່, ຕຳແໜ່ງໃນທາງທີ່ບໍ່ຖືກຕ້ອງ ຫຼື ໃຊ້ສິດ, ໜ້າທີ່, ຕຳແໜ່ງເກີນກວ່າກົດໝາຍກຳນົດໄວ້ ທີ່ເປັນການລະເມີດລະບຽບການກ່ຽວກັບການບໍລິຈາກເງິນ ແລະ ເຄື່ອງບັນເທົາທຸກ

ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 307 ການລະເມີດລະບຽບການອະນຸຍາດການປົກປ້ອງຊັບສິນອຸດສາຫະກຳ ແລະ ພັນພືດໃໝ່**

ບຸກຄົນໃດ ທີ່ມີໜ້າທີ່ອະນຸຍາດການປົກປ້ອງຊັບສິນອຸດສາຫະກຳ ແລະ ພັນພືດໃໝ່ ຫາກລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການປົກປ້ອງຊັບສິນອຸດສະຫະກຳ ແລະ ພັນພືດໃໝ່ ຫຼື ໃຊ້ສິດ, ໜ້າທີ່, ຕຳແໜ່ງເກີນກວ່າກົດໝາຍກຳນົດໄວ້ ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 308 ການລະເມີດລະບຽບການຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນຊັບພະຍາກອນທຳມະຊາດ**

ບຸກຄົນໃດ ຫາກລະເມີດລະບຽບການກ່ຽວກັບການຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນຊັບພະຍາກອນທຳມະຊາດ ຊຶ່ງກໍ່ຄວາມເສຍຫາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 100.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 200.000.000 ກີບ.

**ມາດຕາ 309 ການລະເມີດລະບຽບການນຳໃຊ້ທີ່ດິນ**

ບຸກຄົນໃດ ຫາກລະເມີດລະບຽບການນຳໃຊ້ທີ່ດິນ ດ້ວຍການຈັບຈອງ ແລະ ຄອບຄອງ ຫຼື ໂອນສິດນຳໃຊ້ທີ່ດິນ ຫຼື ການໃຊ້ທີ່ດິນໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ຊຶ່ງກໍ່ໃຫ້ເກີດຜົນເສຍຫາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

**ມາດຕາ 310 ການລະເມີດລະບຽບການຄຸ້ມຄອງທີ່ດິນ**

ບຸກຄົນໃດ ຫາກລະເມີດລະບຽບການຄຸ້ມຄອງທີ່ດິນ ດ້ວຍການສວຍໂອກາດ ຫຼື ໃຊ້ສິດ ແລະ ໜ້າທີ່ໃນທາງທີ່ບໍ່ຖືກຕ້ອງ ຫຼື ເກີນກວ່າກົດໝາຍກຳນົດ ເພື່ອມອບ, ໃຫ້ເຊົ່າ, ໃຫ້ສຳປະທານ, ໂອນ ຫຼື ປ່ຽນແປງ

ສິດນຳໃຊ້ທີ່ດິນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງ ຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

### ມາດຕາ 311 ການລະເມີດລະບຽບການຂຸດຄົ້ນ ແລະ ປົກປັກຮັກສາປ່າໄມ້

ບຸກຄົນໃດ ຫາກລະເມີດລະບຽບການຂຸດຄົ້ນ ແລະ ປົກປັກຮັກສາປ່າໄມ້ ດ້ວຍການສຳຫຼວດ, ຂຸດຄົ້ນຊັບພະຍາກອນປ່າໄມ້, ຂົນສົ່ງ ຫຼື ຄ້າຂາຍໄມ້ທ່ອນ, ຕໍໄມ້, ປູດໄມ້, ໄມ້ເລື່ອຍ, ໄມ້ແປຮູບ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

### ມາດຕາ 312 ການລະເມີດລະບຽບການຄຸ້ມຄອງປ່າໄມ້

ບຸກຄົນໃດ ຫາກລະເມີດລະບຽບການຄຸ້ມຄອງປ່າໄມ້ ດ້ວຍການສວຍໂອກາດ ຫຼື ໃຊ້ສິດ ແລະ ໜ້າທີ່ໃນທາງທີ່ບໍ່ຖືກຕ້ອງ ຫຼື ເກີນກວ່າກົດໝາຍກຳນົດໄວ້ ເພື່ອກຳນົດເຂດປ່າໄມ້ ຫຼື ທີ່ດິນປ່າໄມ້, ມອບ, ໂອນ, ຂຸດຄົ້ນ, ຖາງປ່າ, ຈູດປ່າ ຫຼື ຂົນສົ່ງຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງໂດຍບໍ່ຖືກ ຕ້ອງຕາມກົດໝາຍ ຫຼື ລະເມີດລະບຽບການກ່ຽວກັບການວັດແທກໄມ້, ການປະທັບຕາໄມ້ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.00 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 100.000.000 ກີບ.

### ມາດຕາ 313 ການລະເມີດລະບຽບການຈຳໜ່າຍໄຟຟ້າ ຫຼື ນ້ຳປະປາ

ບຸກຄົນໃດ ທີ່ມີໜ້າທີ່ຮັບຜິດຊອບ ໃນການຈຳໜ່າຍໄຟຟ້າ ຫຼື ນ້ຳປະປາ ຫາກໄດ້ລະເມີດລະບຽບການຈຳໜ່າຍໄຟຟ້າ ຫຼື ນ້ຳປະປາ ດ້ວຍການຕັດການຈຳໜ່າຍໄຟຟ້າ ຫຼື ນ້ຳປະປາ ໂດຍບໍ່ມີເຫດຜົນ ຫຼື ບໍ່ມີການແຈ້ງເຕືອນລ່ວງໜ້າພາຍໃນ ຊາວສີ່ ຊົ່ວໂມງ, ປະຕິເສດການຈຳໜ່າຍໄຟຟ້າ ຫຼື ນ້ຳປະປາໂດຍບໍ່ມີເຫດຜົນ, ຈຳໜ່າຍບໍ່ຕໍ່ເນື່ອງ ຫຼື ບໍ່ປອດໄພ, ການບັນທຶກຕົວເລກນຳໃຊ້ໄຟຟ້າ ຫຼື ນ້ຳປະປາປະຈຳເດືອນ

ຂອງຜູ້ຊົມໃຊ້ບໍ່ຖືກຕ້ອງ, ຊັກຊ້າໃນການແກ້ໄຂບັນຫາກ່ຽວກັບໄຟຟ້າ ຫຼື ນ້ຳປະປາ ພາຍຫຼັງທີ່ໄດ້ຮັບຄຳຮ້ອງ ຫຼື ຄຳສະເໜີພາຍໃນ ຊາວສີ່ ຊົ່ວໂມງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

## ໝວດທີ 8
## ການກະທຳຜິດກ່ຽວກັບຢາເສບຕິດ

### ມາດຕາ 314 ການຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເຮໂຣອີນ, ມອກຟີນ ຫຼື ໂຄເຄນ ຜ່ານ ສປປ ລາວ

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເຮໂຣອີນ, ມອກຟີນ ຫຼື ໂຄເຄນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ່ຳກວ່າ ໜຶ່ງຮ້ອຍ (100) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເຮໂຣອີນ, ມອກຟີນ ຫຼື ໂຄເຄນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ມີເຮໂຣອີນ, ມອກຟີນ ຫຼື ໂຄເຄນ ແຕ່ ໜຶ່ງຮ້ອຍ (100) ກຣາມ ຫາ ສາມຮ້ອຍ (300) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເຮໂຣອີນ, ມອກຟີນ ຫຼື ໂຄເຄນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນກວ່າ ສາມຮ້ອຍ (300) ກຣາມ ຫາ ຫ້າຮ້ອຍ (500) ກຣາມ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 1.000.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເຮໂຣອີນ, ມອກຟີນ ຫຼື ໂຄເຄນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນກວ່າ ຫ້າຮ້ອຍ (500) ກຣາມ ຂຶ້ນໄປ ຈະຖືກລົງໂທດປະຫານຊີວິດ ແລະ ຈະຖືກຮິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 315 ການຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ມີວັດຖຸອອກລິດຕໍ່ຈິດປະສາດ ຜ່ານ ສປປ ລາວ

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ມີວັດຖຸອອກລິດຕໍ່ຈິດປະສາດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ່ຳກວ່າ ໜຶ່ງຮ້ອຍ (100) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ມີວັດຖຸອອກລິດຕໍ່ຈິດປະສາດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈີນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ມີຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ມີວັດຖຸອອກລິດຕໍ່ຈິດປະສາດ ແຕ່ ໜຶ່ງຮ້ອຍ (100) ກຣາມ ຫາ ຫ້າຮ້ອຍ (500) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ 100.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ວັດຖຸອອກລິດຕໍ່ຈິດປະສາດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນກວ່າ ຫ້າຮ້ອຍ (500) ກຣາມ ຫາ ສາມ (3) ກິໂລກຣາມ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 1.000.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ວັດຖຸອອກລິດຕໍ່ຈິດປະສາດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນກວ່າ ສາມ (3) ກິໂລກຣາມ ຂຶ້ນໄປ ຈະຖືກລົງໂທດປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 316 ການຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເອົາວັດຖຸເຄມີເພື່ອຜະລິດຢາເສບຕິດ ຜ່ານ ສປປ ລາວ

ການຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເອົາວັດຖຸເຄມີເພື່ອຜະລິດຢາເສບຕິດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ່ຳກວ່າ ຫ້າຮ້ອຍ (500) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ ແລະ ຈະຖືກຮິບຊັບ.

ການຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເອົາວັດຖຸເຄມີເພື່ອຜະລິດຢາເສບຕິດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈີນ ຫຼື

ມີການຈັດຕັ້ງເປັນກຸ່ມ ຫຼື ມີວັດຖຸເຄມີເພື່ອຜະລິດຢາເສບຕິດ ແຕ່ ຫ້າຮ້ອຍ (500) ກຣາມ ຫາ ໜຶ່ງ (1) ກິໂລກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ 20.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຮິບຊັບ.

ການຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເອົາວັດຖຸເຄມີເພື່ອຜະລິດຢາເສບຕິດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນກວ່າ ໜຶ່ງ (1) ກິໂລກຣາມ ຫາ ສິບ (10) ກິໂລກຣາມ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ການຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເອົາວັດຖຸເຄມີເພື່ອຜະລິດຢາເສບຕິດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນກວ່າ ສິບ (10) ກິໂລກຣາມ ຂຶ້ນໄປ ຈະຖືກລົງໂທດປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 317 ການປູກ, ຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຝິ່ນ ຜ່ານ ສປປ ລາວ**

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຝິ່ນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າຂາຍ ຈຳນວນ ຕ່ຳກວ່າ ໜຶ່ງ (1) ກິໂລກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ສິບປີ ແລະ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 10.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຝິ່ນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າຂາຍ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ມີຝິ່ນ ແຕ່ ໜຶ່ງ (1) ກິໂລກຣາມ ຫາ ສາມ (3) ກິໂລກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 20.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຝິ່ນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າຂາຍ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ມີຝິ່ນແຕ່ ສາມ (3) ກິໂລກຣາມ ຫາ ຫ້າ (5) ກິໂລກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 40.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຝິ່ນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າຂາຍ ເກີນກວ່າ ຫ້າ (5) ກິ

ໂລກຣາມຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 40.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກປູກຝິ່ນ ຄັ້ງທີໜຶ່ງ ຈະຖືກຕຳນິວິຈານ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ ແລະ ໃຫ້ທຳລາຍຕົ້ນຝິ່ນທີ່ປູກນັ້ນຖິ້ມ.

ບຸກຄົນໃດ ຫາກປູກຝິ່ນ ແຕ່ ຄັ້ງທີສອງ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ ແລະ ໃຫ້ທຳລາຍຕົ້ນຝິ່ນທີ່ປູກນັ້ນຖິ້ມ.

ບຸກຄົນໃດ ຫາກມີແກ່ນຝິ່ນໄວ້ໃນຄອບຄອງ ຄັ້ງທີໜຶ່ງ ຈະຖືກຕຳນິວິຈານ, ຈະຖືກປັບໃໝ ແຕ່ 100.000 ກີບ ຫາ 500.000 ກີບ ແລະ ໃຫ້ທຳລາຍແກ່ນຝິ່ນນັ້ນຖິ້ມ.

ບຸກຄົນໃດ ຫາກມີແກ່ນຝິ່ນໄວ້ໃນຄອບຄອງ ຄັ້ງທີສອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບ ແລະ ໃຫ້ທຳລາຍແກ່ນຝິ່ນນັ້ນຖິ້ມ.

ບຸກຄົນໃດ ຫາກຄ້າຂາຍ ຫຼື ຄອບຄອງເບ້ຍຝິ່ນ ຄັ້ງທີໜຶ່ງ ຈະຖືກຕຳນິວິຈານ, ຈະຖືກປັບໃໝ ແຕ່ 100.000 ກີບ ຫາ 500.000 ກີບ ແລະ ໃຫ້ທຳລາຍເບ້ຍຝິ່ນນັ້ນຖິ້ມ.

ບຸກຄົນໃດ ຫາກຄ້າຂາຍ ຫຼື ຄອບຄອງເບ້ຍຝິ່ນ ແຕ່ ຄັ້ງທີສອງ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 3.000.000 ກີບ ແລະ ໃຫ້ທຳລາຍເບ້ຍຝິ່ນນັ້ນຖິ້ມ.

**ມາດຕາ 318 ການປູກ, ຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຄັນຊາ, ແກ່ນຄັນຊາ ຜ່ານ ສປປ ລາວ**

ບຸກຄົນໃດ ຫາກປູກຄັນຊາເປັນຈຳນວນແຕ່ ສາມ (3) ກິໂລກຣາມ ຫາ ສິບ (10) ກິໂລກຣາມ ຄັນຊາດິບ ເພື່ອຄ້າຂາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ຫາກປູກຄັນຊາເປັນຈຳນວນ ເກີນກວ່າ ສິບ (10) ກິໂລກຣາມ ຄັນຊາດິບ ຂຶ້ນໄປ ເພື່ອຄ້າຂາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີຄັນຊາແຫ້ງໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຄັນຊາແຫ້ງ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າຂາຍ ຈຳນວນ ແຕ່ ຫ້າ (5) ກິໂລກຣາມ ຫາ ສິບ (10) ກິໂລກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີຄັນຊາແຫ້ງໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຄັນຊາແຫ້ງ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າຂາຍ ຈຳນວນຕ່ຳກວ່າ ຫ້າ (5) ກິໂລກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີຄັນຊາແຫ້ງໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຄັນຊາແຫ້ງ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າຂາຍ ເປັນອາຈີນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ມີຄັນຊາແຫ້ງເກີນກວ່າ ສິບ (10) ກິໂລກຣາມ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 50.000.000 ກີບ.

ບຸກຄົນໃດ ຫາກຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີແກ່ນຄັນຊາ ໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳແກ່ນຄັນຊາ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າຂາຍ ຈຳນວນ ແຕ່ ສິບ (10) ກຣາມ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ເຄມີຢາງຄັນຊາ (Tetrahydrocannabinol, Hashish) ແລະ ອະນຸພັນຕ່າງໆຂອງເຄມີຢາງຄັນຊາ:

– ນ້ຳໜັກເກີນກວ່າ ສູນຈຸດສາມ (0,3) ກຣາມ ຫາ ຫ້າສິບ (50) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 9.000.000 ກີບ;

– ນ້ຳໜັກເກີນກວ່າ ຫ້າສິບ (50) ກຣາມ ຫາ ໜຶ່ງຮ້ອຍ (100) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 29.000.000 ກີບ ແລະ ຈະຖືກຮິບຊັບ;

– ນ້ຳໜັກເກີນກວ່າ ໜຶ່ງຮ້ອຍ (100) ກຣາມ ຫາ ສອງຮ້ອຍ (200) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 59.000.000 ກີບ ແລະ ຈະຖືກຮິບຊັບ;

– ນ້ຳໜັກເກີນກວ່າ ສອງຮ້ອຍ (200) ກຣາມ ຫາ ຫ້າຮ້ອຍ (500) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 60.000.000 ກີບ ຫາ 99.000.000 ກີບ ແລະ ຈະຖືກຮິບຊັບ;

– ນ້ຳໜັກເກີນກວ່າ ຫ້າຮ້ອຍ (500) ກຣາມ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 200.000.000 ກີບ ແລະ ຈະຖືກຮິບຊັບ.

**ມາດຕາ 319 ການຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາເສບຕິດປອມ ຜ່ານ ສປປ ລາວ**

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາເສບຕິດປອມ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຫ້ພິຈາລະນາ ດັ່ງນີ້:

– ຜ່ານການວິໄຈ ຫາກເຫັນວ່າມີເຊື້ອຢາເສບຕິດເຈືອປົນຢູ່ກັບທາດອື່ນ ກໍໃຫ້ລົງໂທດຕາມນໍ້າໜັກ ແລະ ປະເພດຢາເສບຕິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 314, 315, 316, 317 ແລະ 318 ຂອງປະມວນກົດໝາຍອາຍາສະບັບນີ້;

– ຜ່ານການວິໄຈ ຫາກເຫັນວ່າບໍ່ມີເຊື້ອຢາເສບຕິດເຈືອປົນຢູ່ນຳນັ້ນ ຜູ້ຜະລິດ, ປຸງແຕ່ງ, ຊື້, ຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາເສບຕິດປອມ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 320 ການເສບ ຫຼື ການມີໄວ້ໃນຄອບຄອງເພື່ອເສບ**

ບຸກຄົນໃດ ຫາກເສບ ຫຼື ມີໄວ້ໃນຄອບຄອງເພື່ອເສບ ເຮໂຣອິນ, ມອກຟີນ ຫຼື ໂຄເຄນ ທີ່ມີນໍ້າໜັກ ແຕ່ ສູນຈຸດສອງ (0,2) ກຣາມລົງມາ ຫຼື ຢາອີ, ຢາບ້າ, ຢາໄອສ໌ (Ice) ທີ່ມີນໍ້າໜັກ ແຕ່ ສູນຈຸດສາມ (0,3) ກຣາມ ລົງມາ ຫຼື ຝິ່ນ ທີ່ມີນໍ້າໜັກ ແຕ່ ສູນຈຸດຫ້າ (0,5) ກຣາມ ລົງມາ ຫຼື ຄັນຊາແຫ້ງ ທີ່ມີນໍ້າໜັກ ແຕ່ ຫ້າ (5) ກຣາມ ລົງມາ ຫຼື ສານລະເຫີຍອື່ນ ທີ່ມີສານເສບຕິດ ທີ່ມີນໍ້າໜັກ ແຕ່ ສູນຈຸດຫ້າ (0,5) ກຣາມ ລົງມາ ຫຼື ພືດທີ່ໃຫ້ສານເສບຕິດ ທີ່ມີນໍ້າໜັກ ແຕ່ ຫ້າ (5) ກຣາມ ລົງມາ ຖືວ່າເປັນຜູ້ຖືກເຄາະຮ້າຍ ຊຶ່ງຕ້ອງໄດ້ຮັບການປິ່ນປົວ ຫຼື ນຳໄປປິ່ນປົວຕາມແຕ່ລະກໍລະນີ.

ບຸກຄົນໃດ ມີໄວ້ໃນຄອບຄອງ ເພື່ອເສບ ເຮໂຣອິນ, ມອກຟີນ ຫຼື ໂຄເຄນ ທີ່ມີນໍ້າໜັກເກີນກວ່າ ສູນຈຸດສອງ (0,2) ກຣາມ ຫາ ສອງ (2) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດ ປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ມີໄວ້ໃນຄອບຄອງເພື່ອເສບ ຢາອີ, ຢາບ້າ ແລະ ຢາໄອສ໌ (Ice) ທີ່ມີນໍ້າໜັກເກີນກວ່າ ສູນຈຸດສາມ (0,3) ກຣາມ ຫາ ສາມ (3) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ບຸກຄົນໃດ ມີໄວ້ໃນຄອບຄອງເພື່ອສູບ ຝິ່ນ ທີ່ມີນໍ້າໜັກເກີນກວ່າ ສູນຈຸດຫ້າ (0,5) ກຣາມ ຫາ ຫ້າ (5) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ມີໄວ້ຄອບຄອງເພື່ອສູບ ຄັນຊາແຫ້ງ ທີ່ມີນ້ຳໜັກເກີນກວ່າ ຫ້າ (5) ກຣາມ ຫາ ສິບ (10) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ມີໄວ້ໃນຄອບຄອງເພື່ອເສບ ສານລະເຫີຍອື່ນທີ່ມີສານເສບຕິດ ທີ່ມີນ້ຳໜັກເກີນກວ່າ ສູນຈຸດຫ້າ (0,5) ກຣາມ ຫາ ຫ້າ (5) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ມີໄວ້ໃນຄອບຄອງເພື່ອເສບ ພືດທີ່ໃຫ້ສານເສບຕິດ ທີ່ມີນ້ຳໜັກເກີນກວ່າ ຫ້າ (5) ກຣາມ ຫາ ສິບ (10) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງເດືອນ ຫາ ຫົກເດືອນ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ຫາກດຳເນີນການບໍລິການສູບຝິ່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ຫາກດຳເນີນການບໍລິການສູບຄັນຊາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 321 ການກັບຄືນມາເສບໃໝ່**

ຜູ້ເສບຢາເສບຕິດທີ່ໄດ້ຮັບການປິ່ນປົວແລ້ວກັບຄືນມາເສບໃໝ່ ໃຫ້ປະຕິບັດ ດັ່ງນີ້:

– ໄດ້ຮັບການປິ່ນປົວ ຄັ້ງທີໜຶ່ງ ໂດຍໄດ້ຮັບການຢັ້ງຢືນເປັນລາຍລັກອັກສອນ ຈາກຄະນະຮັບຜິດຊອບສູນປິ່ນປົວຢາເສບຕິດອອກມາແລ້ວ ກັບຄືນມາເສບໃໝ່ ຈະຖືກຕຳນິວິຈານ ແລະ ຈະຖືກປັບໃໝ ແຕ່ 100.000 ກີບ ຫາ 300.000 ກີບ;

– ໄດ້ຮັບການປິ່ນປົວ ຄັ້ງທີສອງ ໂດຍໄດ້ຮັບການຢັ້ງຢືນເປັນລາຍລັກອັກສອນ ຈາກຄະນະຮັບຜິດຊອບສູນປິ່ນປົວຢາເສບຕິດອອກມາແລ້ວ ກັບຄືນມາເສບໃໝ່ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 300.000 ກີບ ຫາ 500.000 ກີບ;

– ໄດ້ຮັບການປິ່ນປົວ ຄັ້ງທີສາມ ຂຶ້ນໄປ ໂດຍໄດ້ຮັບການຢັ້ງຢືນເປັນລາຍລັກອັກສອນຈາກຄະນະຮັບຜິດຊອບສູນປິ່ນປົວຢາເສບຕິດ ອອກມາແລ້ວ ກັບຄືນມາເສບໃໝ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 500.000 ກີບຫາ 5.000.000 ກີບ.

**ມາດຕາ 322 ການລັກ, ການສໍ້ໂກງ, ການຍັກຍອກ ຫຼື ການປຸ້ນເອົາຢາເສບຕິດ**

ບຸກຄົນໃດ ຫາກໄດ້ ລັກ, ສໍ້ໂກງ, ຍັກຍອກ ຫຼື ປຸ້ນເອົາຢາເສບຕິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ຜູ້ກະທໍາຜິດ ຫາກໄດ້ຖືເອົາການລັກ, ສໍ້ໂກງ, ຍັກຍອກ ຫຼື ປຸ້ນເອົາຢາເສບຕິດ ເປັນອາຈີນ, ມີການຈັດຕັ້ງປັນກຸ່ມ ຫຼື ຫາກໄດ້ ລັກ, ຍັກຍອກ ຫຼື ປຸ້ນເອົາຢາເສບຕິດຈໍານວນຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ.

ຄວາມພະຍາຍາມກໍ່ການກະທໍາຜິດ ກໍຈະຖືກລົງໂທດ.

### ມາດຕາ 323 ການມີໄວ້ໃນຄອບຄອງເຄື່ອງຈັກ, ເຄື່ອງມື, ອຸປະກອນທີ່ໃຊ້ຜະລິດຢາເສບຕິດ

ບຸກຄົນໃດ ຫາກມີໄວ້ໃນຄອບຄອງ ເຄື່ອງຈັກ, ເຄື່ອງມື, ອຸປະກອນທີ່ໃຊ້ເພື່ອຜະລິດຢາເສບຕິດປະເພດຕ່າງໆ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີການກະທໍາຜິດ ເປັນອາຈີນ ຫຼື ເປັນຈໍານວນຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

### ມາດຕາ 324 ການບັງຄັບ ຫຼື ການຊັກຊວນບຸກຄົນອື່ນໃຫ້ນໍາໃຊ້ຢາເສບຕິດ

ບຸກຄົນໃດ ຫາກໃຊ້ກໍາລັງ, ອາວຸດ, ນາບຂູ່, ຍົວະຍອຍ, ເລ່ລ່ຽມ ຫຼື ສະເໜີຜົນປະໂຫຍດໃດໜຶ່ງແກ່ບຸກຄົນອື່ນ ຫຼື ນໍາໃຊ້ວິທີການອື່ນ ເພື່ອໃຫ້ນໍາໃຊ້ຢາເສບຕິດ ຊຶ່ງຂັດກັບຈຸດປະສົງ ແລະ ກໍ່ຄວາມເສຍຫາຍແກ່ຜູ້ຖືກບັງຄັບ ຫຼື ຜູ້ຖືກຊັກຊວນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທໍາຜິດ ຫາກໄດ້ເອົາການກະທໍາຜິດ ເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ, ກະທໍາຜິດຕໍ່ເດັກ, ກະທໍາຜິດຕໍ່ຜູ້ຍິງທີ່ພວມຖືພາ, ກະທໍາຜິດຕໍ່ຫຼາຍຄົນ, ກໍ່ໃຫ້ເກີດເຊື້ອພະຍາດຕ່າງໆ ທີ່ເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ຜູ້ກະທໍາຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີການເສຍອົງຄະ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີທີ່ຜູ້ກະທໍາຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີການເສຍອົງຄະ, ພິການ ຫຼື ເສຍຊີວິດ ແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 325 ການລະເມີດລະບຽບການກ່ຽວກັບການຄຸ້ມຄອງ, ການນຳໃຊ້ຢາເສບຕິດ ຫຼື ເຄມີຕົ້ນ**

ບຸກຄົນໃດ ຫາກມີໜ້າທີ່ຮັບຜິດຊອບໃນການເກັບມ້ຽນ, ປົກປັກຮັກສາ, ຈັດສົ່ງ, ຂົນຍ້າຍ ຫຼື ນຳໃຊ້ຢາເສບຕິດ ຫຼື ເຄມີຕົ້ນ ເພື່ອການທົດລອງ, ການວິໄຈ ຫາກບໍ່ປະຕິບັດຕາມລະບຽບການຄຸ້ມຄອງ, ການນຳໃຊ້ຢາເສບຕິດ ຫຼື ເຄມີຕົ້ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເອົາການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີທີ່ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

## ໝວດທີ 9
## ການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

**ມາດຕາ 326 ການຕັດໄມ້ຄຸ້ມຄອງ, ຖາງປ່າ, ຈູດປ່າ ແລະ ການຂຸດຄົ້ນເຄື່ອງປ່າຂອງດົງ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກໄດ້ຕັດໄມ້, ຖາງປ່າ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວກັບປ່າໄມ້; ຈູດປ່າ ຫຼື ທຳລາຍປ່າໄມ້ດ້ວຍວິທີການອື່ນ ຫຼື ການຂຸດຄົ້ນເຄື່ອງປ່າຂອງດົງ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຊຶ່ງສ້າງຜົນເສຍຫາຍ ທີ່ມີມູນຄ່າ ແຕ່ 5.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ສອງເທົ່າຂອງມູນຄ່າຄວາມເສຍຫາຍ ແລະ ໃຫ້ຟື້ນຟູຄືນ.

ໃນກໍລະນີ ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ສາມເທົ່າຂອງມູນຄ່າຄວາມເສຍຫາຍ ແລະ ໃຫ້ຟື້ນຟູຄືນ.

**ມາດຕາ 327 ການຕັດ, ຊື້-ຂາຍ ຫຼື ເຄື່ອນຍ້າຍໄມ້ ແລະ ຕໍໄມ້ທຳມະຊາດປະເພດຫວງຫ້າມ ແລະ ໄມ້ພິເສດທີ່ໃກ້ຈະສູນພັນໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກໄດ້ຕັດ, ຊື້-ຂາຍ ຫຼື ເຄື່ອນຍ້າຍໄມ້ ແລະ ຕໍໄມ້ທຳມະຊາດປະເພດຫວງຫ້າມ ແລະ ໄມ້ພິເສດທີ່ໃກ້ຈະສູນພັນ ໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງສ້າງຜົນເສຍຫາຍທີ່ມີມູນຄ່າ ແຕ່ 5.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000.000 ກີບ ຫາ 2.500.000.000 ກີບ ແລະ ໃຫ້ຟື້ນຟູຄືນ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ກະທຳຜິດອີກ ເປັນຄັ້ງທີສອງ ຫຼື ເປັນອາຈິນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ສອງເທົ່າຂອງມູນຄ່າຄວາມເສຍຫາຍ ແລະ ໃຫ້ຟື້ນຟູຄືນ.

**ມາດຕາ 328 ການມອບຄ້ອນປະທັບຕາໄມ້ໃຫ້ຜູ້ບໍ່ມີສິດ, ໜ້າທີ່ຮັບຜິດຊອບ, ການອະນຸຍາດຫັນປ່ຽນປ່າໄມ້ທຳມະຊາດ, ການອະນຸຍາດຂຸດຄົ້ນໄມ້ເກີນສິດ ແລະ ໜ້າທີ່ຂອງຕົນ**

ບຸກຄົນໃດ ຫາກໄດ້ມອບຄ້ອນປະທັບຕາໄມ້ໃຫ້ຜູ້ບໍ່ມີສິດ, ໜ້າທີ່ຮັບຜິດຊອບ, ອະນຸຍາດຫັນປ່ຽນປ່າໄມ້ທຳມະຊາດ, ອະນຸຍາດຂຸດຄົ້ນໄມ້ເກີນສິດ ແລະ ໜ້າທີ່ຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ສອງເທົ່າຂອງມູນຄ່າຄວາມເສຍຫາຍໃນລາຄາຕາມທ້ອງຕະຫຼາດໃນເວລານັ້ນ.

**ມາດຕາ 329 ການປອມແປງຄ້ອນຕາປະທັບ ແລະ ເອກະສານຕ່າງໆ ກ່ຽວກັບການຂຸດຄົ້ນ, ຊື້-ຂາຍ, ເຄື່ອນຍ້າຍ, ປຸງແຕ່ງ ແລະ ຈຳໜ່າຍໄມ້, ຕໍໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນໃດ ຫາກໄດ້ປອມແປງຄ້ອນຕາປະທັບ ແລະ ເອກະສານຕ່າງໆ ກ່ຽວກັບການຂຸດຄົ້ນ, ຊື້-ຂາຍ, ເຄື່ອນຍ້າຍ, ປຸງແຕ່ງ ແລະ ຈຳໜ່າຍໄມ້, ຕໍໄມ້ ແລະ ເຄື່ອງປ່າຂອງດົງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ສອງເທົ່າຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 330 ການທຳລາຍເຄື່ອງປູກ**

ບຸກຄົນໃດ ຫາກໄດ້ທຳລາຍເຄື່ອງປູກຂອງລັດ, ລວມໝູ່, ອົງການຈັດຕັ້ງສັງຄົມ ຫຼື ພົນລະເມືອງ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 331 ການລ່າສັດໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກໄດ້ລ່າສັດໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບການລ່າສັດ ເຊັ່ນ ລ່າສັດປະເພດຫວງຫ້າມ, ລ່າສັດຖືພາມານ, ລ່າສັດໃນລະດູ ຫຼື ໃນເຂດທີ່ຫວງຫ້າມ ຫຼື ດ້ວຍເຄື່ອງມືທີ່ເກືອດຫ້າມ ແລະ ອື່ນໆ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍທີ່ມີມູນຄ່າແຕ່ 50.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 332 ການຫາປາ ຫຼື ສັດນ້ຳອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກໄດ້ຫາປາ ຫຼື ສັດນ້ຳອື່ນ ໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບການຫາປາ ເຊັ່ນ ຫາປາດ້ວຍການໃຊ້ລະເບີດ, ຢາເບື່ອ, ທາດເຄມີ, ໄຟຟ້າຊັອດ ຫຼື ເຄື່ອງມືອື່ນທີ່ເກືອດຫ້າມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ການກະທຳຜິດ ຫາກກໍ່ຄວາມເສຍຫາຍທີ່ມີມູນຄ່າ ແຕ່ 1.000.000 ກີບ ຫາ 15.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີ ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 333 ການບຸກລຸກທຳລາຍຖິ່ນອາໄສ ແລະ ແຫຼ່ງອາຫານຂອງສັດນ້ຳ ແລະ ສັດປ່າ**

ບຸກຄົນໃດ ຫາກໄດ້ບຸກລຸກທຳລາຍຖິ່ນທີ່ຢູ່ອາໄສ ແລະ ແຫຼ່ງອາຫານຂອງສັດນ້ຳ ແລະ ສັດປ່າ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 334 ການຄ້າຂາຍ ຫຼື ມີໄວ້ໃນຄອບຄອງສັດນ້ຳ ຫຼື ສັດປ່າທີ່ຫວງຫ້າມ**

ບຸກຄົນໃດ ຫາກລັກເອົາສັດນ້ຳ ແລະ ສັດປ່າປະເພດຫວງຫ້າມ ທີ່ຍັງມີຊີວິດ, ຊາກ ຫຼື ຊິ້ນສ່ວນ ແລະ ອະໄວຍະວະຕ່າງໆ ຂອງສັດ ເພື່ອຄ້າຂາຍ ຫຼື ມີໄວ້ໃນຄອບຄອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 335 ການນຳເຂົ້າ, ສົ່ງອອກ, ນຳຜ່ານ ຫຼື ເຄື່ອນຍ້າຍສັດນ້ຳ ແລະ ສັດປ່າ**

ບຸກຄົນໃດ ຫາກໄດ້ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ ຫຼື ເຄື່ອນຍ້າຍສັດນ້ຳ ແລະ ສັດປ່າ ລວມທັງຊິ້ນສ່ວນ, ອະໄວຍະວະ ແລະ ຜະລິດຕະພັນຕ່າງໆໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບສົນທິສັນຍາວ່າດ້ວຍການຄຸ້ມຄອງສັດປ່າ ແລະ ພັນພືດທີ່ໃກ້ຈະສູນພັນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີ ການກະທໍາຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ.

### ມາດຕາ 336 ການທໍາລາຍຊັບພະຍາກອນສັດນໍ້າ

ບຸກຄົນໃດ ຫາກໄດ້ໃຊ້ສານພິດ, ວັດຖຸລະເບີດ, ສານເຄມີ, ກະແສໄຟຟ້າ ຫຼື ວິທີການປະມົງ ທີ່ຕ້ອງຫ້າມ ຫຼື ເຄື່ອງມືໃຊ້ປະໂຫຍດຈາກຜະລິດຕະພັນສັດນໍ້າ ຫຼື ທໍາລາຍຊັບພະຍາກອນສັດນໍ້າ ຊຶ່ງກໍ່ຄວາມເສຍຫາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 337 ການລະເມີດລະບຽບການກ່ຽວກັບການຄຸ້ມຄອງສັດປ່າທີ່ມີຄຸນຄ່າ ແລະ ຫາຍາກ

ບຸກຄົນໃດ ຫາກໄດ້ລ່າສັດ, ຈັບ, ກັກຂັງ, ຂ້າ, ຂົນສົ່ງ ຫຼື ຄ້າຂາຍ ສັດປ່າທີ່ມີຄຸນຄ່າ ແລະ ຫາຍາກ ຫຼື ຂົນສົ່ງ ຫຼື ຄ້າຂາຍຜະລິດຕະພັນທີ່ເຮັດຈາກສັດດັ່ງກ່າວໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 338 ການຈັບຈອງທີ່ດິນໂດຍບໍ່ຖືກຕ້ອງຕາມກົດໝາຍ

ບຸກຄົນໃດ ຫາກໄດ້ຈັບຈອງທີ່ດິນໃນເຂດປ່າສະຫງວນ, ປ່າດົງດິບ, ປ່າຍອດນໍ້າ, ທີ່ດິນບໍລິເວນບໍ່ແຮ່, ບໍລິເວນເຂດວັດທະນະທໍາ ແລະ ບູຮານສະຖານ, ເຂດປ່າສັກສິດ, ເຂດທ່ອງທ່ຽວທໍາມະຊາດ, ເຂດປະຫວັດສາດ ແລະ ເຂດສະຫງວນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຊັບສິນຂອງລັດ, ຂອງລວມໝູ່ ຫຼື ມີຜົນກະທົບຕໍ່ສິ່ງແວດລ້ອມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ ແລະ ຈະຖືກຮິບທີ່ດິນນັ້ນ.

ໃນກໍລະນີ ການກະທໍາຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ມີຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ ແລະ ຈະຖືກຮິບທີ່ດິນນັ້ນ.

### ມາດຕາ 339 ການທໍາລາຍແຫຼ່ງແຮ່

ບຸກຄົນໃດ ຫາກໄດ້ທໍາລາຍແຫຼ່ງແຮ່ ທີ່ເປັນບ່ອນສະສົມຂອງແຮ່ທາດ ຊຶ່ງເກີດຂຶ້ນຕາມທໍາມະຊາດ ໂດຍມີການຢັ້ງຢືນກ່ຽວກັບປະລິມານ ແລະ ຄຸນນະພາບຂອງແຮ່ທາດ ຈະຖືກລົງໂທດຕັດອິດສະລະພາບ

ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ການກະທຳຜິດນັ້ນ ຫາກໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

### ມາດຕາ 340 ການຂຸດຄົ້ນຊັບພະຍາກອນແຮ່ທາດໂດຍບໍ່ຖືກຕ້ອງຕາມກົດໝາຍ

ບຸກຄົນໃດ ຫາກໄດ້ຂຸດຄົ້ນເອົາຊັບພະຍາກອນແຮ່ທາດ ເຊັ່ນ ໂລຫະ, ແຮ່, ຫີນຕ່າງໆ ທີ່ມີຄຸນຄ່າ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງ ຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 20.000.000 ກີບ.

### ມາດຕາ 341 ການສຳຫຼວດ, ຂຸດຄົ້ນ, ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ

ບຸກຄົນໃດ ຫາກໄດ້ສຳຫຼວດ, ຂຸດຄົ້ນ, ນຳໃຊ້ນ້ຳໜ້າດິນ, ໃຕ້ດິນ ແລະ ຊັບພະຍາກອນນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 342 ການລະເມີດລະບຽບການສ້າງສະຖານີອຸຕຸນິຍົມ, ອຸທົກກະສາດ ແລະ ແຜ່ນດິນໄຫວ

ບຸກຄົນໃດ ຫາກລະເມີດລະບຽບການກ່ຽວກັບການສ້າງສະຖານີ, ການເກັບກຳຂໍ້ມູນ ອຸຕຸນິຍົມ ແລະ ອຸທົກກະສາດ ແລະ ແຜ່ນດິນໄຫວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 343 ການກະທຳຜິດກ່ຽວກັບວຽກງານອຸຕຸນິຍົມ, ອຸທົກກະສາດ ແລະ ແຜ່ນດິນໄຫວ

ບຸກຄົນໃດ ຫາກອອກຂ່າວບິດເບືອນ ກ່ຽວກັບວຽກງານອຸຕຸນິຍົມ, ອຸທົກກະສາດ ແລະ ແຜ່ນດິນໄຫວ ໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບ ອຸຕຸນິຍົມ, ອຸທົກກະສາດ ແລະ ແຜ່ນດິນໄຫວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 344 ການທຳລາຍອຸປະກອນຮັບໃຊ້ວຽກງານອຸຕຸນິຍົມ, ອຸທົກກະສາດ ແລະ ແຜ່ນດິນໄຫວ**

ບຸກຄົນໃດ ຫາກໄດ້ທຳລາຍອຸປະກອນຮັບໃຊ້ວຽກງານອຸຕຸນິຍົມ, ອຸທົກກະສາດ ແລະ ແຜ່ນດິນໄຫວ ຊຶ່ງສ້າງຜົນເສຍຫາຍທີ່ມີມູນຄ່າ ແຕ່ 5.000.000 ກີບຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍຕົວຈິງ.

**ມາດຕາ 345 ການລະເມີດມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ**

ບຸກຄົນໃດ ຫາກລະເມີດມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ ເປັນຕົ້ນ ຄຸນນະພາບນ້ຳດື່ມ, ນ້ຳໜ້າດິນ, ນ້ຳໃຕ້ດິນ, ຄຸນນະພາບດິນສຳລັບທີ່ຢູ່ອາໄສ, ດິນສຳລັບກະສິກຳ, ຄຸນນະພາບອາກາດ, ຄຸນນະພາບທາງສຽງ ເກີນຄ່າເຂັ້ມຂຸ້ນສູງສຸດ ຫຼື ຄ່າຄວາມເຂັ້ມປົກກະຕິ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

ໃນກໍລະນີ ການກະທຳຜິດ ເປັນອາຈິນ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ.

**ມາດຕາ 346 ການກໍ່ໃຫ້ເກີດມົນລະພິດທາງອາກາດ**

ບຸກຄົນໃດ ຫາກໄດ້ປ່ອຍຄວັນ, ຝຸ່ນລະອອງ, ສານພິດ ຫຼື ລັງສີ ຫຼື ອົງປະກອບອື່ນ ທີ່ເປັນອັນຕະລາຍ ຂຶ້ນສູ່ອາກາດໃນສັດສ່ວນທີ່ເກີນກວ່າມາດຕະຖານທີ່ກຳນົດໄວ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 347 ການກໍ່ໃຫ້ເກີດມົນລະພິດທາງດິນ**

ບຸກຄົນໃດ ຫາກໄດ້ ຖິ້ມ, ຝັງ, ທຳລາຍສິ່ງເສດເຫຼືອ ຫຼື ຂີ້ເຫຍື້ອ ຫຼື ປ່ອຍສານພິດລົງດິນເກີນກວ່າມາດຕະຖານທີ່ກຳນົດ ຊຶ່ງກໍ່ໃຫ້ເກີດຜົນເສຍຫາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 348 ການກໍ່ໃຫ້ເກີດມົນລະພິດທາງນ້ຳ**

ບຸກຄົນໃດ ຫາກໄດ້ປ່ອຍນ້ຳເປື້ອນ, ນ້ຳມັນ, ໄຂມັນ, ສານເຄມີທີ່ເປັນພິດ, ສານກຳມັນຕະພາບລັງສີເກີນກວ່າມາດຕະຖານທີ່ໄດ້ກຳນົດໄວ້, ຂີ້ເຫຍື້ອ, ຊາກພືດ ແລະ ສັດ, ແບັກທີເຣັຍ, ແບັກທີເຣັຍໄມໂຄຣ, ຈຸລິນຊີນຳເຊື້ອພະຍາດລະບາດ, ພະຍາດລະບາດທີ່ເປັນອັນຕະລາຍ ຫຼື ອົງປະກອບອື່ນທີ່ເປັນອັນຕະລາຍລົງສູ່ແຫຼ່ງນ້ຳ ຊຶ່ງກໍ່ຄວາມເສຍຫາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 349 ການລະເມີດມາດຕະຖານມົນລະພິດທາງສິ່ງລົບກວນ

ບຸກຄົນໃດ ຫາກໄດ້ລະເມີດມາດຕະຖານ ການປ່ອຍມົນລະພິດທາງສິ່ງລົບກວນ ເຊັ່ນ ສຽງ, ແສງ, ສີ, ກິ່ນ, ຄວາມສັ່ນສະເທືອນ ແລະ ຄວາມຮ້ອນ ທີ່ເກີນມາດຕະຖານຄຸນນະພາບສິ່ງແວດລ້ອມ ແລະ ມາດຕະຖານຄວບຄຸມມົນລະພິດແຫ່ງຊາດ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມອື່ນ ແລະ ລະບົບນິເວດ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

## ມາດຕາ 350 ການນຳເຂົ້າເຕັກໂນໂລຊີ, ເຄື່ອງກົນຈັກ, ເຄື່ອງມື, ອຸປະກອນເກົ່າ ຫຼື ອຸປະກອນທີ່ບໍ່ໄດ້ມາດຕະຖານການປົກປັກຮັກສາສິ່ງແວດລ້ອມ

ບຸກຄົນໃດ ຫາກໄດ້ນຳເຂົ້າ ຫຼື ອະນຸຍາດນຳເຂົ້າ ເຕັກໂນໂລຊີ, ເຄື່ອງກົນຈັກ, ເຄື່ອງມື, ທາດກຳມັນຕະພາບລັງສີ, ສານພິດ, ອຸປະກອນເກົ່າ ຫຼື ອຸປະກອນທີ່ບໍ່ໄດ້ມາດຕະຖານການປົກປັກຮັກສາສິ່ງແວດລ້ອມ ຊຶ່ງສ້າງຄວາມເສຍຫາຍຢ່າງຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 351 ການລະເມີດມາດຕະການຄວບຄຸມເຄມີ ແລະ ສິ່ງເສດເຫຼືອອັນຕະລາຍ

ບຸກຄົນໃດ ຫາກໄດ້ລະເມີດລະບຽບການ ແລະ ຂັ້ນຕອນກ່ຽວກັບມາດຕະການຄວບຄຸມການນຳໃຊ້ເຄມີອັນຕະລາຍເຂົ້າໃນຂະບວນການຜະລິດ, ການດຳເນີນທຸລະກິດ ແລະ ການບໍລິການ ຫຼື ລະເມີດມາດຕະການຄວບຄຸມການເກັບຮັກສາ, ການຖິ້ມ ແລະ ການທຳລາຍເຄມີທີ່ເປັນພິດ ແລະ ສິ່ງເສດເຫຼືອເຄມີ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

ໃນກໍລະນີ ການກະທຳຜິດ ເປັນອາຈິນ ຫຼື ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ.

## ມາດຕາ 352 ການບໍ່ປະຕິບັດການຟື້ນຟູຄືນ

ບຸກຄົນໃດ ຫາກບໍ່ປະຕິບັດມາດຕະການຟື້ນຟູຄືນ ຕາມຄຳຕັດສິນຂອງສານ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 6.000.000 ກີບ ຫາ 100.000.000 ກີບ.

## ມາດຕາ 353 ການທໍລະມານສັດ

ບຸກຄົນໃດ ຫາກໄດ້ກະທຳຕໍ່ສັດ ທີ່ເປັນການທໍລະມານ ເປັນຕົ້ນ ການກັກຂັງສັດໂດຍໃຫ້ອົດນ້ຳ, ອົດອາຫານ, ນຳໃຊ້ແຮງງານສັດເກີນຂອບເຂດ ໂດຍບໍ່ໃຫ້ສັດໄດ້ພັກຜ່ອນ, ທຸບຕີທີ່ມີລັກສະນະທາລຸນ, ບັນທຸກ ແລະ ຂົນສົ່ງສັດແບບແອອັດທໍລະມານ, ຂ້າສັດແບບໂຫດຮ້າຍປ່າເຖື່ອນ ຫຼື ໃຊ້ສານພິດເບື່ອສັດ ຈະຖືກລົງໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 3.000.000 ກີບ.

ໃນກໍລະນີການກະທໍາຜິດ ເປັນອາຈິນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງ ປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

## ໝວດທີ 10
## ການສໍ້ລາດບັງຫຼວງ

### ມາດຕາ 354 ການສໍ້ລາດບັງຫຼວງ

ການສໍ້ລາດບັງຫຼວງ ແມ່ນ ພຶດຕິກໍາຂອງພະນັກງານນໍາພາ, ພະນັກງານຄຸ້ມຄອງ, ພະນັກງານວິຊາການ, ພະນັກງານວິສາຫະກິດ, ລັດຖະກອນ, ທະຫານ, ຕໍາຫຼວດ ລວມທັງນາຍບ້ານ ແລະ ຜູ້ໄດ້ຮັບມອບສິດ, ໜ້າທີ່ໃດໜຶ່ງຈາກທາງການ ແລະ ພະນັກງານຕ່າງປະເທດ, ພະນັກງານອົງການຈັດຕັ້ງສາກົນ.

ການສໍ້ລາດບັງຫຼວງ ປະກອບດ້ວຍ ສະຖານການກະທໍາຜິດ ດັ່ງນີ້:

1. ການຍັກຍອກຊັບຂອງລັດ ຫຼື ລວມໝູ່;
2. ການສໍ້ໂກງຊັບຂອງລັດ ຫຼື ລວມໝູ່;
3. ການໃຫ້ສິນບົນ;
4. ການຮັບສິນບົນ;
5. ການສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ;
6. ການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່;
7. ການໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ເກີນຂອບເຂດ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ;
8. ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ອອກແບບ, ຄິດໄລ່ ແລະ ອື່ນໆ;
9. ການໂກງການປະມູນ ຫຼື ການສໍາປະທານ;
10. ການປອມແປງເອກະສານ ຫຼື ການນໍາໃຊ້ເອກະສານປອມ;
11. ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ;
12. ການກົດໜ່ວງ, ຖ່ວງດຶງເອກະສານ.

### ມາດຕາ 355 ການຍັກຍອກຊັບຂອງລັດ ຫຼື ລວມໝູ່

ພະນັກງານຜູ້ໃດ ຕາມທີ່ກໍານົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງ ໃນສະຖານການຍັກຍອກຊັບຂອງລັດ ຫຼື ລວມໝູ່ ດ້ວຍການສວຍໃຊ້ຄວາມເຊື່ອໃຈ ເພື່ອລັກໂລບເອົາ, ຕັດຮອນເອົາ ຫຼື ສັບປ່ຽນເອົາຊັບຂອງລັດ ຫຼື ລວມໝູ່ ທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ,

ນຳໃຊ້, ຂົນສົ່ງ, ກໍ່ສ້າງ, ສ້ອມແປງ ຫຼື ເຮັດວຽກໃດວຽກໜຶ່ງ ຈະຖືກລົງໂທດຕາມມູນຄ່າຄວາມເສຍຫາຍ ດັ່ງນີ້:

1. ແຕ່ 20.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

2. ເກີນກວ່າ 20.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

3. ເກີນກວ່າ 50.000.000 ກີບ ຫາ 100.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

4. ເກີນກວ່າ 100.000.000 ກີບ ຫາ 300.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ຫົກປີ ຫາ ແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

5. ເກີນກວ່າ 300.000.000 ກີບ ຫາ 500.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

6. ເກີນກວ່າ 500.000.000 ກີບ ຫາ 600.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

7. ເກີນກວ່າ 600.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສອງປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

8. ເກີນກວ່າ 700.000.000 ກີບ ຫາ 800.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສີ່ປີ ຫາ ສິບຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

9. ເກີນກວ່າ 800.000.000 ກີບ ຫາ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບຫົກປີ ຫາ ສິບແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

10. ເກີນກວ່າ 1.000.000.000 ກີບ ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສິບແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

11. ເກີນກວ່າ 2.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີການກະທຳຜິດ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຈະຖືກລົງໂທດຕັດອິດສະລະພາບ ແລະ ຈະຖືກປັບໃໝ ຫຼາຍກວ່າ ສອງເທົ່າ ຂອງໂທດທີ່ວາງໃສ່ ຕາມມູນຄ່າຄວາມເສຍຫາຍໃນແຕ່ລະຂໍ້ ຂອງວັກ 1 ຂອງມາດຕານີ້ ແລະ ຈະຖືກຮິບຊັບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 356 ການສໍ້ໂກງຊັບຂອງລັດ ຫຼື ລວມໝູ່**

ພະນັກງານຜູ້ໃດ ຕາມທີ່ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງ ໃນສະຖານການສໍ້ໂກງຊັບຂອງລັດ ຫຼື ລວມໝູ່ ດ້ວຍການ ໃຊ້ເລ່ລ່ຽມຕົວະຍົວະ, ຫຼອກລວງ ດ້ວຍວິທີໃດກໍຕາມ ເພື່ອເຮັດໃຫ້ຜູ້ມີໜ້າທີ່ຮັບຜິດຊອບຊັບຂອງລັດ ຫຼື ລວມໝູ່ ຫຼື ຜູ້ອື່ນ ເອົາຊັບດັ່ງກ່າວໃຫ້ຕົນ ຈະຖືກລົງໂທດຕາມມູນຄ່າຄວາມເສຍຫາຍ ດັ່ງນີ້:

1. ແຕ່ 20.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

2. ເກີນກວ່າ 20.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

3. ເກີນກວ່າ 50.000.000 ກີບ ຫາ 100.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

4. ເກີນກວ່າ 100.000.000 ກີບ ຫາ 300.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ຫົກປີ ຫາ ແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

5. ເກີນກວ່າ 300.000.000 ກີບ ຫາ 500.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

6. ເກີນກວ່າ 500.000.000 ກີບ ຫາ 600.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

7. ເກີນກວ່າ 600.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສອງປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

8. ເກີນກວ່າ 700.000.000 ກີບ ຫາ 800.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສີ່ປີ ຫາ ສິບຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

9. ເກີນກວ່າ 800.000.000 ກີບ ຫາ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບຫົກປີ ຫາ ສິບແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

10. ເກີນກວ່າ 1.000.000.000 ກີບ ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

11. ເກີນກວ່າ 2.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີການກະທຳຜິດ ເປັນອາຈີນ ຫຼື ມີການຈັດຕັ້ງເປັນກຸ່ມ ຈະຖືກລົງໂທດຕັດອິດສະລະພາບ ແລະ ຈະຖືກປັບໃໝ ຫຼາຍກວ່າ ສອງເທົ່າ ຂອງໂທດທີ່ວາງໃສ່ ຕາມມູນຄ່າຄວາມເສຍຫາຍໃນແຕ່ລະຂໍ້ ຂອງວັກ 1 ຂອງມາດຕານີ້ ແລະ ຈະຖືກຮິບຊັບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 357 ການໃຫ້ສິນບົນ**

ພະນັກງານຜູ້ໃດ ຕາມທີ່ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງ ໃນສະຖານການໃຫ້ສິນບົນ ດ້ວຍການ ສະເໜີໃຫ້, ເອົາໃຫ້ ຫຼື ສັນຍາວ່າຈະໃຫ້ເງິນ, ຊັບສິ່ງຂອງ ຫຼື ຜົນປະໂຫຍດໃດໜຶ່ງ ດ້ວຍຕົນເອງ ຫຼື ຜ່ານສື່ກາງ ແກ່ພະນັກງານ ໂດຍທາງກົງ ຫຼື ທາງອ້ອມ ເພື່ອໃຫ້ປະຕິບັດ, ເລືອກປະຕິບັດ ຫຼື ລະເວັ້ນການປະຕິບັດໜ້າທີ່ຂອງພະນັກງານ ເພື່ອຈຸດປະສົງ ແລະ ຜົນປະໂຫຍດຂອງຜູ້ໃຫ້ສິນບົນ ຈະຖືກລົງໂທດຕາມມູນຄ່າຄວາມເສຍຫາຍ ດັ່ງນີ້:

1. ແຕ່ 20.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

2. ເກີນກວ່າ 20.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

3. ເກີນກວ່າ 50.000.000 ກີບ ຫາ 100.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

4. ເກີນກວ່າ 100.000.000 ກີບ ຫາ 300.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ຫົກປີ ຫາ ແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

5. ເກີນກວ່າ 300.000.000 ກີບ ຫາ 500.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

6. ເກີນກວ່າ 500.000.000 ກີບ ຫາ 600.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

7. ເກີນກວ່າ 600.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສອງປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

8. ເກີນກວ່າ 700.000.000 ກີບ ຫາ 800.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສີ່ປີ ຫາ ສິບຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

9. ເກີນກວ່າ 800.000.000 ກີບ ຫາ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບຫົກ ປີ ຫາ ສິບແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

10. ເກີນກວ່າ 1.000.000.000 ກີບ ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສິບແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

11. ເກີນກວ່າ 2.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 358 ການຮັບສິນບົນ**

ພະນັກງານຜູ້ໃດ ຕາມທີ່ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງ ໃນສະຖານການຮັບສິນບົນ ດ້ວຍການ ຮັບເອົາ, ທວງເອົາ, ຂໍເອົາ ຫຼື ຕົກລົງຮັບເອົາເງິນ, ຊັບສິ່ງຂອງ ຫຼື ຜົນປະໂຫຍດໃດໜຶ່ງ ຈາກຜູ້ໃຫ້ສິນບົນ ໂດຍທາງກົງ ຫຼື ທາງອ້ອມ ແລ້ວປະຕິບັດ, ເລືອກປະຕິບັດ ຫຼື ລະເວັ້ນການປະຕິບັດໜ້າທີ່ຂອງຕົນ ຕາມຈຸດປະສົງ ແລະ ເພື່ອຜົນປະໂຫຍດຂອງຜູ້ໃຫ້ສິນບົນ ຈະຖືກລົງໂທດຕາມມູນຄ່າຄວາມເສຍຫາຍ ດັ່ງນີ້:

1. ແຕ່ 20.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

2. ເກີນກວ່າ 20.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

3. ເກີນກວ່າ 50.000.000 ກີບ ຫາ 100.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

4. ເກີນກວ່າ 100.000.000 ກີບ ຫາ 300.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ຫົກປີ ຫາ ແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

5. ເກີນກວ່າ 300.000.000 ກີບ ຫາ 500.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

6. ເກີນກວ່າ 500.000.000 ກີບ ຫາ 600.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

7. ເກີນກວ່າ 600.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສອງປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

8. ເກີນກວ່າ 700.000.000 ກີບ ຫາ 800.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສິບສີ່ປີ ຫາ ສິບຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

9. ເກີນກວ່າ 800.000.000 ກີບ ຫາ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສິບຫົກປີ ຫາ ສິບແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

10. ເກີນກວ່າ 1.000.000.000 ກີບ ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສິບແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

11. ເກີນກວ່າ 2.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 359 ການສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເອົາຊັບ ຂອງລັດ, ລວມໝູ່ ຫຼື ບຸກຄົນ**

ພະນັກງານຜູ້ໃດ ຕາມທີ່ກໍານົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງ ໃນສະຖານການສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ ດ້ວຍການອີງໃສ່ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ຂອງຕົນ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ຈະຖືກລົງໂທດຕາມມູນຄ່າຄວາມເສຍຫາຍ ດັ່ງນີ້:

1. ແຕ່ 20.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

2. ເກີນກວ່າ 20.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

3. ເກີນກວ່າ 50.000.000 ກີບ ຫາ 100.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

4. ເກີນກວ່າ 100.000.000 ກີບ ຫາ 300.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ຫົກປີ ຫາ ແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

5. ເກີນກວ່າ 300.000.000 ກີບ ຫາ 500.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

6. ເກີນກວ່າ 500.000.000 ກີບ ຫາ 600.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສິບປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

7. ເກີນກວ່າ 600.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສອງປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າ ຄວາມເສຍຫາຍ;

8. ເກີນກວ່າ 700.000.000 ກີບ ຫາ 800.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສີ່ປີ ຫາ ສິບຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

9. ເກີນກວ່າ 800.000.000 ກີບ ຫາ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບຫົກປີ ຫາ ສິບແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

10. ເກີນກວ່າ 1.000.000.000 ກີບ ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສິບແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

11. ເກີນກວ່າ 2.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 360 ການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່**

ພະນັກງານຜູ້ໃດ ຕາມທີ່ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງ ໃນສະຖານການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່ ດ້ວຍການນຳໃຊ້ຊັບຂອງ ລັດ ຫຼື ລວມໝູ່ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ ຫຼື ລວມໝູ່ ຈະຖືກລົງໂທດຕາມມູນຄ່າຄວາມເສຍຫາຍ ດັ່ງນີ້:

1. ແຕ່ 20.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

2. ເກີນກວ່າ 20.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

3. ເກີນກວ່າ 50.000.000 ກີບ ຫາ 100.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

4. ເກີນກວ່າ 100.000.000 ກີບ ຫາ 300.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ຫົກປີ ຫາ ແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

5. ເກີນກວ່າ 300.000.000 ກີບ ຫາ 500.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

6. ເກີນກວ່າ 500.000.000 ກີບ ຫາ 600.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

7. ເກີນກວ່າ 600.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສອງປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

8. ເກີນກວ່າ 700.000.000 ກີບ ຫາ 800.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສີ່ປີ ຫາ ສິບຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າ ຄວາມເສຍຫາຍ;

9. ເກີນກວ່າ 800.000.000 ກີບ ຫາ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບຫົກປີ ຫາ ສິບແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

10. ເກີນກວ່າ 1.000.000.000 ກີບ ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

11. ເກີນກວ່າ 2.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

### ມາດຕາ 361 ການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນຂອບເຂດ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ

ພະນັກງານຜູ້ໃດ ຕາມທີ່ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງ ໃນສະຖານການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເກີນຂອບເຂດ ເພື່ອເອົາຊັບ ຂອງລັດ, ລວມໝູ່ ຫຼື ບຸກຄົນ ດ້ວຍການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນທີ່ລະບຽບ, ກົດໝາຍໄດ້ກຳນົດໄວ້ໂດຍເຈດຕະນາ ເພື່ອຫາຜົນປະໂຫຍດໃຫ້ແກ່ ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກລົງໂທດຕາມມູນຄ່າຄວາມເສຍຫາຍ ດັ່ງນີ້:

1. ແຕ່ 20.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

2. ເກີນກວ່າ 20.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

3. ເກີນກວ່າ 50.000.000 ກີບ ຫາ 100.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

4. ເກີນກວ່າ 100.000.000 ກີບ ຫາ 300.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ຫົກປີ ຫາ ແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

5. ເກີນກວ່າ 300.000.000 ກີບ ຫາ 500.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

6. ເກີນກວ່າ 500.000.000 ກີບ ຫາ 600.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

7. ເກີນກວ່າ 600.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສອງປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

8. ເກີນກວ່າ 700.000.000 ກີບ ຫາ 800.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສີ່ປີ ຫາ ສິບຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

9. ເກີນກວ່າ 800.000.000 ກີບ ຫາ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບຫົກປີ ຫາ ສິບແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

10. ເກີນກວ່າ 1.000.000.000 ກີບ ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສິບແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

11. ເກີນກວ່າ 2.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 362 ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ**

ພະນັກງານຜູ້ໃດ ຕາມທີ່ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງ ໃນສະຖານການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ດ້ວຍການ ລັກໂລບ, ປອມແປງມາດຕະຖານເຕັກນິກໃນການ ສຳຫຼວດ, ອອກແບບ, ຄິດໄລ່ ແລະ ອື່ນໆ ລະຫວ່າງເຈົ້າຂອງໂຄງການກັບຜູ້ຮັບເໝົາ ແລະ ຜູ້ອື່ນທີ່ກ່ຽວຂ້ອງກັບກິດຈະການໃດໜຶ່ງ ເຊັ່ນ ການກໍ່ສ້າງ, ການສ້ອມແປງ, ການປະດັບປະດາຕົບແຕ່ງ, ການຕິດຕັ້ງ ແລະ ກິດຈະການອື່ນ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ເກີນກວ່າ 5.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີມີການກະທຳຜິດ ເປັນອາຈິນ ຫຼື ມີຜົນເສຍຫາຍເກີນກວ່າ 50.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສີ່ປີ ຫາ ສິບສີ່ ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີການກະທໍາຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ແລະ ມີຄວາມເສຍຫາຍເກີນກວ່າ 700.000.000 ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສີ່ປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີການກະທໍາຜິດ ມີຄວາມເສຍຫາຍ ເກີນກວ່າ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 363 ການໂກງການປະມູນ ຫຼື ການສໍາປະທານ**

ພະນັກງານຜູ້ໃດ ຕາມທີ່ກໍານົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງໃນສະຖານການໂກງການປະມູນ ຫຼື ການສໍາປະທານ ດ້ວຍການຕົກລົງລະຫວ່າງພະນັກງານຂອງລັດກັບບໍລິສັດຮັບເໝົາ ແລະ ຜູ້ອື່ນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂໃຫ້ຊະນະການປະມູນ ຫຼື ການສໍາປະທານໃນກິດຈະການໃດໜຶ່ງຂອງລັດ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງເກີນກວ່າ 5.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີມີການກະທໍາຜິດ ເປັນອາຈິນ ຫຼື ມີຜົນເສຍຫາຍເກີນກວ່າ 50.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສີ່ປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີການກະທໍາຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ແລະ ມີຄວາມເສຍຫາຍເກີນກວ່າ 700.000.000 ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສິບສີ່ປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີການກະທໍາຜິດ ມີຄວາມເສຍຫາຍ ເກີນກວ່າ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 364 ການປອມແປງເອກະສານ ຫຼື ການນໍາໃຊ້ເອກະສານປອມ**

ພະນັກງານຜູ້ໃດ ຕາມທີ່ກໍານົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງໃນສະຖານການປອມແປງເອກະສານ ຫຼື ການນໍາໃຊ້ເອກະສານປອມ ດ້ວຍການປອມແປງລາຍເຊັນ, ຕາປະທັບ, ຕັດ ຫຼື ເພີ່ມຂໍ້ຄວາມໃດໜຶ່ງ ໃສ່ເນື້ອໃນເອກະສານ ຫຼື ຮູ້ວ່າເປັນເອກະສານປອມແຕ່ນໍາໄປໃຊ້ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ຈະຖືກລົງໂທດຕາມມູນຄ່າຄວາມເສຍຫາຍ ດັ່ງນີ້:

1. ແຕ່ 20.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

2. ເກີນກວ່າ 20.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

3. ເກີນກວ່າ 50.000.000 ກີບ ຫາ 100.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

4. ເກີນກວ່າ 100.000.000 ກີບ ຫາ 300.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ຫົກປີ ຫາ ແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

5. ເກີນກວ່າ 300.000.000 ກີບ ຫາ 500.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

6. ເກີນກວ່າ 500.000.000 ກີບ ຫາ 600.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

7. ເກີນກວ່າ 600.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສອງປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

8. ເກີນກວ່າ 700.000.000 ກີບ ຫາ 800.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສີ່ປີ ຫາ ສິບຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

9. ເກີນກວ່າ 800.000.000 ກີບ ຫາ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບຫົກປີ ຫາ ສິບແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

10. ເກີນກວ່າ 1.000.000.000 ກີບ ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບເກີນກວ່າ ສິບແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

11. ເກີນກວ່າ 2.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີການກະທຳຜິດ ເປັນອາຈິນ ຈະຖືກລົງໂທດຕັດອິດສະລະພາບ ແລະ ຈະຖືກປັບໃໝຫຼາຍກວ່າ ສອງເທົ່າ ຂອງໂທດທີ່ວາງໃສ່ ຕາມມູນຄ່າຄວາມເສຍຫາຍໃນແຕ່ລະຂໍ້ຂອງວັກ 1 ຂອງມາດຕານີ້.

### ມາດຕາ 365 ການເປີດເຜີຍຄວາມລັບເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ

ພະນັກງານຜູ້ໃດ ຕາມທີ່ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງໃນສະຖານການເປີດເຜີຍຄວາມລັບເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ ດ້ວຍການເປີດ

ເຜີຍເອກະສານ ຫຼື ຂໍ້ມູນລັບ, ການຕິກລົງຂອງລັດ ຫຼື ທາງລັດຖະການ ທີ່ລັດບໍ່ອະນຸຍາດໃຫ້ເປີດເຜີຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດ ເປັນອາຈິນ ຫຼື ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບຫາ 50.000.000 ກີບ.

**ມາດຕາ 366 ການກີດໜ່ວງ, ຖ່ວງດຶງເອກະສານ**

ພະນັກງານຜູ້ໃດ ຕາມທີ່ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ ຫາກໄດ້ສໍ້ລາດບັງຫຼວງໃນສະຖານການກີດໜ່ວງ, ຖ່ວງດຶງເອກະສານ ດ້ວຍການກັກ, ໜ່ວງໜ່ຽວ, ແກ່ຍາວເວລາໃນການແກ້ໄຂເອກະສານທາງການ ໂດຍຜູ້ມີຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີການກະທຳຜິດ ເປັນອາຈິນ ຫຼື ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບຫາ 10.000.000 ກີບ.

## ໝວດທີ 11
## ການກະທຳຜິດກ່ຽວກັບໜ້າທີ່ຮັບຜິດຊອບ

**ມາດຕາ 367 ການປະລະໜ້າທີ່**

ພະນັກງານຜູ້ໃດ ຫາກໄດ້ປະລະໜ້າທີ່ວຽກງານຂອງຕົນ ໂດຍເຈດຕະນາ ຊຶ່ງເປັນການກໍ່ຄວາມເສຍຫາຍແກ່ການເຄື່ອນໄຫວວຽກງານຂອງລັດ ຫຼື ຂອງສັງຄົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 368 ຄວາມເລີ່ນເລີ້ໃນການປະຕິບັດໜ້າທີ່**

ພະນັກງານຜູ້ໃດ ຫາກບໍ່ປະຕິບັດໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ ຫຼື ໄດ້ປະຕິບັດໜ້າທີ່ວຽກງານດັ່ງກ່າວ ໂດຍຂາດຄວາມເອົາໃຈໃສ່, ຂາດນ້ຳໃຈຮັບຜິດຊອບ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມ

ເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 369 ການໃຫ້ສິນບົນແກ່ພະນັກງານ ແລະ ການເປັນສື່ກາງ**

ບຸກຄົນໃດ ຫາກໄດ້ໃຫ້ສິນບົນ ຫຼື ຕົກລົງຈະໃຫ້ສິນບົນແກ່ພະນັກງານ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝເທົ່າກັບຈຳນວນເງິນ ຫຼື ມູນຄ່າຂອງສິນບົນ.

ໃນກໍລະນີທີ່ສິນບົນນັ້ນ ຫາກເປັນຈຳນວນຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ສອງເທົ່າ ຂອງຈຳນວນເງິນ ຫຼື ມູນຄ່າຂອງສິນບົນ.

ຜູ້ເປັນສື່ກາງໃນການຮັບສິນບົນ ແລະ ໃນການໃຫ້ສິນບົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ເທົ່າກັບຈຳນວນເງິນ ຫຼື ມູນຄ່າຂອງສິນບົນ.

ຜູ້ທີ່ໃຫ້ສິນບົນຍ້ອນຖືກບັງຄັບ, ຂົ່ມຂູ່ ແລະ ພາຍຫຼັງທີ່ໄດ້ໃຫ້ສິນບົນແລ້ວ ຈິງໃຈໄປລາຍງານຕໍ່ເຈົ້າໜ້າທີ່ ຈະບໍ່ຖືວ່າເປັນຜູ້ກະທຳຜິດໃນສະຖານໃຫ້ສິນບົນ.

ຜູ້ທີ່ໄດ້ຮັບສິນບົນແລ້ວ ແຕ່ໄດ້ຈິງໃຈລາຍງານ ພ້ອມທັງມອບເງິນ ຫຼື ວັດຖຸສິ່ງຂອງທີ່ຕົນໄດ້ຮັບທັງໝົດນັ້ນ ໃຫ້ແກ່ການຈັດຕັ້ງ ຈະບໍ່ຖືວ່າເປັນຜູ້ກະທຳຜິດໃນສະຖານຮັບສິນບົນ.

## ໝວດທີ 12
## ການກະທຳຜິດຕໍ່ລະບຽບການບໍລິຫານ ແລະ ການຍຸຕິທຳ

**ມາດຕາ 370 ການແອບອ້າງເປັນເຈົ້າໜ້າທີ່**

ບຸກຄົນໃດ ຫາກແອບອ້າງເປັນເຈົ້າໜ້າທີ່ ເພື່ອເຄື່ອນໄຫວຫາຜົນປະໂຫຍດໃຫ້ແກ່ຕົນເອງ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ລັດ, ຄວາມສະຫງົບ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດດັ່ງກ່າວ ຫາກໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 371 ການຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່**

ບຸກຄົນໃດ ຫາກໄດ້ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ເພື່ອຂັດຂວາງເຈົ້າໜ້າທີ່ຊຶ່ງປະຕິບັດວຽກງານຂອງລັດ ຫຼື ຂອງສັງຄົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ມີການໃຊ້ຄວາມຮຸນແຮງ ຊຶ່ງເຮັດໃຫ້ເຈົ້າໜ້າທີ່ໄດ້ຮັບບາດເຈັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ 15.000.000 ກີບ.

ໃນກໍລະນີທີ່ມີການໃຊ້ຄວາມຮຸນແຮງ ຊຶ່ງເຮັດໃຫ້ເຈົ້າໜ້າທີ່ເສຍອົງຄະ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 20.000.000 ກີບ ຫຼື ຕັດອິດສະລະພາບຕະຫຼອດຊີວິດ.

**ມາດຕາ 372 ການໝິ່ນປະໝາດເຈົ້າໜ້າທີ່**

ບຸກຄົນໃດ ຫາກກະທໍາ, ຫຍາບຊ້າ ຫຼື ໄດ້ຫາຄວາມບໍ່ຈິງໃສ່ເຈົ້າໜ້າທີ່ ເພື່ອເຮັດໃຫ້ເສຍຊື່ສຽງ, ເສຍບົດບາດ ຊຶ່ງເຮັດໃຫ້ຂາດຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 373 ການທໍາລາຍ, ການຊຸກເຊື່ອງເອກະສານ ແລະ ຕາປະທັບ**

ບຸກຄົນໃດ ຫາກໄດ້ທໍາລາຍ, ຊຸກເຊື່ອງເອກະສານທາງລັດຖະການ, ຕາປະທັບ, ເຮັດໃຫ້ເອກະ ສານທາງລັດຖະການ, ຕາປະທັບດັ່ງກ່າວເສຍຫາຍ ຫຼື ໃຊ້ການບໍ່ໄດ້ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ທີ່ມີເອກະສານສໍາຄັນ ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 20.000.000 ກີບ.

ຄວາມພະຍາຍາມກໍ່ການກະທໍາຜິດ ກໍຈະຖືກລົງໂທດ.

**ມາດຕາ 374 ການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ**

ບຸກຄົນໃດ ຫາກໄດ້ປອມແປງ ເອກະສານ, ລາຍເຊັນ, ຕາປະທັບ, ໄດ້ຕັດ, ເພີ່ມຂໍ້ຄວາມໃນເອກະສານ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ຫາກຮູ້ວ່າແມ່ນເອກະສານປອມ ແລ້ວຍັງນໍາເອົາໄປໃຊ້ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 20.000.000 ກີບ.

### ມາດຕາ 375 ການເຂົ້າບວດໂດຍບໍ່ໄດ້ຮັບອະນຸຍາດ

ບຸກຄົນໃດ ຫາກໄດ້ເຂົ້າບວດເປັນ ພິຊຸ, ສາມະເນນ ຫຼື ນັກບວດ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ພະສົງທີ່ໄດ້ຮັບບວດໃຫ້ບຸກຄົນໃດໜຶ່ງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກລົງໂທດໃນສະຖານດຽວກັນ.

### ມາດຕາ 376 ການຫາຄວາມບໍ່ຈິງໃສ່ຜູ້ອື່ນ

ບຸກຄົນໃດ ໂດຍເຈດຕະນາ ເພື່ອປັກປຳທຳລາຍຜູ້ອື່ນ ໄດ້ແຈ້ງຄວາມບໍ່ຈິງຕໍ່ເຈົ້າໜ້າທີ່ເພື່ອໃຫ້ດຳເນີນຄະດີ ຫຼື ຈັບກຸມຜູ້ນັ້ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝແຕ່ 5.000.000 ກີບ ຫາ 10.000.000 ກີບ.

### ມາດຕາ 377 ການປະຕິເສດບໍ່ຍອມໃຫ້ການ

ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ພະຍານ ຫາກປະຕິເສດບໍ່ຍອມໃຫ້ການຕໍ່ເຈົ້າໜ້າທີ່ ຫຼື ຕໍ່ສານ ເພື່ອຜົນປະໂຫຍດໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ບຸກຄົນໃດ ຫາກໄດ້ຕົກລົງວ່າ ຈະມອບເງິນ, ວັດຖຸສິ່ງຂອງ ຫຼື ຈະໃຫ້ຜົນປະໂຫຍດໃດໜຶ່ງແກ່ຜູ້ທີ່ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ພະຍານ ເພື່ອປະຕິເສດບໍ່ຍອມໃຫ້ການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

### ມາດຕາ 378 ການປະຕິເສດການພິສູດ, ໃຫ້ຄຳເຫັນ ຫຼື ແປພາສາ ໂດຍບໍ່ໃຫ້ເຫດຜົນ

ຜູ້ຊ່ຽວຊານ, ຜູ້ຊຳນານງານ, ຜູ້ແປພາສາ ຫາກປະຕິເສດການພິສູດ, ໃຫ້ຄຳເຫັນ ຫຼື ແປພາສາຕໍ່ເຈົ້າໜ້າທີ່ ຫຼື ຕໍ່ສານ ໂດຍບໍ່ໃຫ້ເຫດຜົນ ເພື່ອຜົນປະໂຫຍດໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ບຸກຄົນໃດ ຫາກໄດ້ຕົກລົງວ່າຈະມອບ ເງິນ, ວັດຖຸສິ່ງຂອງ ຫຼື ຜົນປະໂຫຍດໃດໜຶ່ງ ແກ່ຜູ້ຊ່ຽວຊານ, ຜູ້ຊຳນານງານ, ຜູ້ແປພາສາ ເພື່ອປະຕິເສດການພິສູດ, ໃຫ້ຄຳເຫັນ ຫຼື ແປພາສາ ໂດຍບໍ່ໃຫ້ເຫດຜົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 379 ການໃຫ້ການເທັດ**

ຜູ້ຖືກເສຍຫາຍ, ພະຍານ, ຜູ້ຊ່ຽວຊານ, ຜູ້ຊຳນານງານ, ຜູ້ແປພາສາ ຫາກໄດ້ໃຫ້ການ, ໃຫ້ຄຳເຫັນ ຫຼື ແປພາສາ ບໍ່ຖືກຕາມຄວາມຈິງຕໍ່ເຈົ້າໜ້າທີ່ ຫຼື ຕໍ່ສານເພື່ອຜົນປະໂຫຍດໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ບຸກຄົນໃດ ຫາກໄດ້ຕົກລົງວ່າຈະມອບ ເງິນ, ວັດຖຸສິ່ງຂອງ ຫຼື ຈະໃຫ້ຜົນປະໂຫຍດໃດໜຶ່ງ ແກ່ບຸກຄົນທີ່ກ່າວມາເທິງນີ້ ເພື່ອໃຫ້ການ, ໃຫ້ຄຳເຫັນ ຫຼື ແປພາສາບໍ່ຖືກຕາມຄວາມຈິງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 380 ການປິດບັງການກະທຳຜິດ**

ບຸກຄົນໃດ ຫາກໄດ້ຮູ້ ຫຼື ໄດ້ເຫັນການກະທຳຜິດຂອງຜູ້ອື່ນ ແລ້ວບໍ່ລາຍງານຕໍ່ເຈົ້າໜ້າທີ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ບຸກຄົນໃດ ຫາກຮູ້ຕົວຜູ້ກະທຳຜິດ ແລ້ວບໍ່ລາຍງານຕໍ່ເຈົ້າໜ້າທີ່ ແລະ ຍັງໄດ້ຮູ້ຕື່ມວ່າຜູ້ກະທຳຜິດນັ້ນ ພວມທ້າງຫາກະກຽມທີ່ຈະກະທຳຜິດຄັ້ງໃໝ່ ຫຼື ໄດ້ລົງມືກະທຳຜິດຄັ້ງໃໝ່ ແຕ່ກໍບໍ່ລາຍງານຕໍ່ເຈົ້າໜ້າທີ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 381 ການຊຸກເຊື່ອງຜູ້ກະທຳຜິດ**

ບຸກຄົນໃດ ໂດຍບໍ່ໄດ້ຕົກລົງໃຫ້ຄຳໝັ້ນສັນຍາກັບຜູ້ກະທຳຜິດໄວ້ກ່ອນ ແລ້ວໄດ້ຊຸກເຊື່ອງ ຫຼື ໃຫ້ຄວາມຊ່ວຍເຫຼືອແກ່ຜູ້ກະທຳຜິດ ເພື່ອໃຫ້ພົ້ນຈາກການຈັບກຸມ ຫຼື ຈາກການດຳເນີນຄະດີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 382 ການຊ່ວຍເຫຼືອຜູ້ກະທຳຜິດໃຫ້ພົ້ນຈາກການຈັບກຸມ ຫຼື ດຳເນີນຄະດີ**

ບຸກຄົນໃດ ຫາກໄດ້ນາບຂູ່, ໃຊ້ຄວາມຮຸນແຮງ ຫຼື ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຂັດຂວາງ ທີ່ເປັນການໃຫ້ຄວາມຊ່ວຍເຫຼືອແກ່ຜູ້ກະທຳຜິດ ໃຫ້ພົ້ນຈາກການຈັບກຸມ ຫຼື ດຳເນີນຄະດີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 383 ການທຳລາຍຫຼັກຖານ**

ບຸກຄົນໃດ ຫາກໄດ້ລຶບລ້າງຮ່ອງຮອຍ, ຊຸກເຊື່ອງເອກະສານ ຫຼື ວັດຖຸສິ່ງຂອງທີ່ເປັນຫຼັກຖານຢັ້ງຢືນການກະທຳຜິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 384 ການຍັກຍອກຂອງກາງ**

ບຸກຄົນໃດ ທີ່ມີໜ້າທີ່ຮັບຜິດຊອບປົກປັກຮັກສາຊັບ ຫຼື ວັດຖຸສິ່ງຂອງ ຊຶ່ງເປັນຂອງກາງນັ້ນ ຫາກໄດ້ຂາຍ, ຊຸກເຊື່ອງ, ຈຳນຳ, ນຳໃຊ້, ສັບປ່ຽນ ຫຼື ໄດ້ເຮັດໃຫ້ຂອງກາງເສຍຫາຍ ຫຼື ອື່ນໆ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີຂອງກາງ ຫາກແມ່ນ ຊັບ ຫຼື ວັດຖຸສິ່ງຂອງທີ່ມີມູນຄ່າສູງ ຫຼື ເປັນອັນຕະລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 385 ການໂຕນໜີຈາກສະຖານທີ່ກັກຂັງ ຫຼື ຄ້າຍດັດສ້າງ**

ຜູ້ຖືກຫາ, ນັກໂທດ ຫາກໄດ້ໂຕນໜີຈາກສະຖານທີ່ກັກຂັງ ຫຼື ຄ້າຍດັດສ້າງໃນເວລາດຳເນີນຄະດີ ຫຼື ໃນເວລາປະຕິບັດໂທດ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ໂຕນໜີຈາກສະຖານທີ່ກັກຂັງ ຫຼື ຄ້າຍດັດສ້າງໂດຍໃຊ້ຄວາມຮຸນແຮງຕໍ່ເຈົ້າໜ້າທີ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 386 ການກໍ່ຄວາມວຸ້ນວາຍໃນສະຖານທີ່ກັກຂັງ ຫຼື ຄ້າຍດັດສ້າງ**

ບຸກຄົນໃດ ຫາກໄດ້ກໍ່ຄວາມປັ່ນປ່ວນ, ກໍ່ຄວາມວຸ້ນວາຍ, ທຳລາຍລະບຽບພາຍໃນຂອງສະຖານທີ່ກັກຂັງ ຫຼື ຄ້າຍດັດສ້າງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 387 ການທຸບຕີ, ທໍລະມານຜູ້ຖືກຫາ ຫຼື ນັກໂທດ**

ບຸກຄົນໃດ ຫາກໄດ້ທຸບຕີ, ທໍລະມານ, ໃຊ້ມາດຕະການ ຫຼື ມີການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍຕໍ່ຜູ້ຖືກຫາ ຫຼື ນັກໂທດ ໃນເວລາຈັບຕົວ, ໃນເວລາດຳເນີນຄະດີ ຫຼື ໃນເວລາປະຕິບັດໂທດ ຈະຖືກລົງ

ໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 388 ການເຮັດໃຫ້ຜູ້ຖືກຫາ ຫຼື ນັກໂທດໂຕນໜີ**

ບຸກຄົນໃດ ດ້ວຍຄວາມປະໝາດ, ຄວາມເລີ່ນເລີ້ ຫາກໄດ້ເຮັດໃຫ້ຜູ້ຖືກຫາ ຫຼື ນັກໂທດໂຕນໜີໃນເວລາຮັກສາ, ປ້ອງກັນ ຫຼື ໃນເວລາຍົກຍ້າຍຜູ້ຖືກຫາ ຫຼື ນັກໂທດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເຮັດໃຫ້ຜູ້ຖືກຫາ ຫຼື ນັກໂທດໂຕນໜີໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 389 ການບໍ່ປະຕິບັດຄຳຕັດສິນຂອງສານ**

ບຸກຄົນໃດ ຫາກບໍ່ປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຫຼື ໝາຍຮຽກຂອງສານ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 390 ການຕົກລົງທີ່ບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ທີ່ມີສິດກ່ຽວຂ້ອງ ຫາກໄດ້ຕົກລົງ ຫຼື ອອກເອກະສານໃດໜຶ່ງ ທີ່ເປັນການຕົກລົງກ່ຽວກັບການສືບສວນ-ສອບສວນ, ການສັ່ງຟ້ອງ, ການອອກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງບຸກຄົນດັ່ງກ່າວກໍຮັບຮູ້ຢ່າງຈະແຈ້ງວ່າ ບໍ່ສອດຄ່ອງກັບກົດໝາຍ ທັງເປັນການກໍ່ຄວາມເສຍຫາຍໃຫ້ແກ່ສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 391 ການບັງຄັບເຈົ້າໜ້າທີ່, ພະນັກງານຍຸຕິທຳໃຫ້ເຮັດຜິດກົດໝາຍ**

ບຸກຄົນໃດ ຫາກສວຍໃຊ້ໜ້າທີ່ຕຳແໜ່ງ, ອຳນາດ ຫຼື ໃຊ້ຄວາມຮຸນແຮງບັງຄັບ, ນາບຂູ່ເຈົ້າໜ້າທີ່, ພະນັກງານຍຸຕິທຳ ໃຫ້ເຮັດຜິດກົດໝາຍໃນການດຳເນີນການສືບສວນ-ສອບສວນ, ສັ່ງຟ້ອງ, ພິຈາລະນາຕັດສິນ, ພິພາກສາຄະດີ ຫຼື ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 392 ການບັງຄັບໃຫ້ຜູ້ອື່ນໃຫ້ການ ແລະ ນຳເອົາຫຼັກຖານເທັດມາໃຫ້**

ບຸກຄົນໃດ ຫາກໃຊ້ວິທີບັງຄັບ, ໃຊ້ເລ່ລ່ຽມ, ກົນອຸບາຍ ໃນການດຳເນີນການສືບສວນ-ສອບສວນ, ສັ່ງຟ້ອງ, ໄຕ່ສວນ ເພື່ອໃຫ້ຜູ້ອື່ນ ຕອບຄຳຖາມ ຫຼື ນຳເອົາຫຼັກຖານເທັດມາໃຫ້ ຈະຖືກລົງໂທດຕັດອິດສະ ລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 393 ການກົດໜ່ວງຖ່ວງດຶງການດຳເນີນຄະດີ**

ບຸກຄົນໃດ ຫາກໄດ້ກົດໜ່ວງຖ່ວງດຶງ ການດຳເນີນຄະດີຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 394 ການປອມແປງສຳນວນຄະດີ**

ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ, ຈ່າສານ, ຜູ້ພິພາກສາ, ພະນັກງານຍຸຕິທຳ, ຜູ້ປົກປ້ອງ, ຜູ້ກະທຳຜິດ ຫຼື ຜູ້ເຂົ້າຮ່ວມໃນການດຳເນີນຄະດີໃດໜຶ່ງ ຫາກຕັດ, ເພີ່ມ ຫຼື ຂີດຂ້າເນື້ອໃນຕົວຈິງຂອງເອກະສານ ທີ່ເປັນຫຼັກຖານໃນການດຳເນີນຄະດີ ຫຼື ນຳໃຊ້ວິທີອື່ນ ເພື່ອປອມແປງສຳນວນຄະດີ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ກະທຳຜິດໂດຍມີການຈັດຕັ້ງເປັນກຸ່ມ, ໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 395 ການບໍ່ຈັດຕັ້ງປະຕິບັດຄຳຕັດສິນ ຫຼື ຄຳພິພາກສາຂອງສານ**

ເຈົ້າໜ້າທີ່, ພະນັກງານຜູ້ໃດ ທີ່ມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດຄຳຕັດສິນ ຫຼື ຄຳພິພາກສາຂອງສານ ຫາກມີເຈດຕະນາບໍ່ຈັດຕັ້ງປະຕິບັດຄຳຕັດສິນ ຫຼື ຄຳພິພາກສາຂອງສານ ຊຶ່ງກໍ່ຄວາມເສຍຫາຍຢ່າງ

ຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 396 ການຂັດຂວາງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ບຸກຄົນໃດ ຫາກສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ ຫຼື ໃຊ້ຄວາມຮຸນແຮງ ເພື່ອຂັດຂວາງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ກະທຳຜິດໂດຍມີການຈັດຕັ້ງເປັນກຸ່ມ, ໄດ້ໃຊ້ຄວາມຮຸນແຮງ ຊຶ່ງເຮັດໃຫ້ເຈົ້າໜ້າທີ່ໄດ້ຮັບບາດເຈັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ໃຊ້ຄວາມຮຸນແຮງ ຊຶ່ງເຮັດໃຫ້ເຈົ້າໜ້າທີ່ໄດ້ຮັບບາດເຈັບສາຫັດ, ເສຍອົງຄະ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ຊາວປີ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 397 ການໃຫ້ການຊ່ວຍເຫຼືອຜູ້ທີ່ຖືກກັກຕົວ, ກັກຂັງ, ດັດສ້າງ ຫຼື ຜູ້ເຂົ້າຮັບການບຳບັດ**

ບຸກຄົນໃດ ຫາກໄດ້ໃຫ້ການຊ່ວຍເຫຼືອຜູ້ຖືກກັກຕົວ, ກັກຂັງ, ດັດສ້າງ ຫຼື ຜູ້ເຂົ້າຮັບການບຳບັດໃນຄ້າຍກັກຂັງຊົ່ວຄາວ, ຄ້າຍຄຸມຂັງ, ຄ້າຍດັດສ້າງ ແລະ ສູນບຳບັດ ເພື່ອກະທຳຜິດຄັ້ງໃໝ່ຢູ່ໃນສະຖານທີ່ດັ່ງກ່າວ ຫຼື ໃຫ້ພົ້ນຈາກການກັກຕົວ, ກັກຂັງ, ດັດສ້າງ ຫຼື ບຳບັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີມີການຈັດຕັ້ງເປັນກຸ່ມ, ໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ, ໄດ້ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງໃນການກະທຳຜິດ, ໄດ້ໃຫ້ການຊ່ວຍເຫຼືອຜູ້ທີ່ຖືກສານຕັດສິນໃນສະຖານການກະທຳຜິດຕໍ່ຄວາມສະຫງົບຂອງຊາດ ຫຼື ຜູ້ທີ່ຖືກສານຕັດສິນລົງໂທດປະຫານຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 20.000.000 ກີບ.

## ໝວດທີ 13
## ການກະທຳຜິດທາງທະຫານ

**ມາດຕາ 398 ການຫຼົບຫຼີກຈາກການເປັນທະຫານພັນທະ**

ບຸກຄົນໃດ ຫາກບໍ່ໄປຂຶ້ນທະບຽນ, ບໍ່ປະຕິບັດຄຳສັ່ງຮຽກເອີ້ນເຂົ້າເປັນທະຫານພັນທະ ຈະຖືກສຶກສາອົບຮົມ, ກ່າວເຕືອນໃຫ້ປະຕິບັດ, ຖ້າບໍ່ປະຕິບັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 2.000.000 ກີບ.

ໃນຍາມສົງຄາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 399 ການຂັດຂວາງ, ຊຸກເຊື່ອງ ຫຼື ປິດບັງບໍ່ໃຫ້ບຸກຄົນອື່ນໄປເປັນທະຫານພັນທະ**

ບຸກຄົນໃດ ໄດ້ຂັດຂວາງ, ຊຸກເຊື່ອງ ຫຼື ປິດບັງບໍ່ໃຫ້ບຸກຄົນອື່ນໄປເປັນທະຫານພັນທະ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນຍາມສົງຄາມ ຈະຖືກລົງໂທດຕັດອິດສະລະພາບ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 7.000.000 ກີບ.

**ມາດຕາ 400 ການໂຕນໜີຈາກການເປັນທະຫານພັນທະ**

ບຸກຄົນໃດ ທີ່ເປັນທະຫານພັນທະ ຫາກໄດ້ໂຕນໜີຈາກກົມກອງກ່ອນໝົດກຳນົດເວລາເປັນທະຫານພັນທະນັ້ນ ໃຫ້ອົງການປົກຄອງທ້ອງຖິ່ນ ສຶກສາອົບຮົມຜູ້ກ່ຽວໃຫ້ກັບຄືນກົມກອງເດີມ, ຖ້າຫາກຜູ້ກ່ຽວບໍ່ຍອມກັບຄືນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 5.000.000 ກີບ.

ໃນຍາມສົງຄາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 401 ການກະທຳຜິດຢູ່ພາຍໃນຄ້າຍ, ຂອບເຂດຕັ້ງທັບ ຫຼື ໃນເວລາເຄື່ອນທັບ**

ບຸກຄົນໃດ ຫາກໄດ້ກໍ່ຄວາມປັ່ນປ່ວນ, ລະເມີດລະບຽບການຂອງກອງທັບ, ສ້າງຄວາມເສຍຫາຍໃນຄ້າຍ, ຂອບເຂດຕັ້ງທັບ ຫຼື ໃນເວລາເຄື່ອນທັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ແລະ ຈະ ຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍໃຫ້ແກ່ກອງທັບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

## ມາດຕາ 402 ການໂຕນໜີຈາກການເປັນທະຫານ

ບຸກຄົນໃດ ຫາກໄດ້ໂຕນໜີອອກຈາກກົມກອງທີ່ຕົນສັງກັດ ເພື່ອຫຼີກລ່ຽງການປະຕິບັດໜ້າທີ່ ທີ່ຕົນໄດ້ຮັບມອບໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີການກະທຳຜິດດັ່ງກ່າວ ຫາກເປັນພື້ນຖານທີ່ກໍ່ໃຫ້ເກີດການກະທຳຜິດອື່ນ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ຜູ້ກະທຳຜິດແມ່ນຜູ້ບັງຄັບບັນຊາ ຫາກໄດ້ຊຸກຊວນ ຫຼື ນຳພາບຸກຄົນອື່ນເຂົ້າຮ່ວມໃນການກະທຳຜິດ ຫຼື ເປັນການກະທຳຜິດທີ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 50.000.000 ກີບ.

## ມາດຕາ 403 ການບໍ່ປະຕິບັດຕາມຄຳສັ່ງ

ບຸກຄົນໃດ ຫາກບໍ່ປະຕິບັດຕາມຄຳສັ່ງຂອງຜູ້ບັງຄັບບັນຊາ ທີ່ຕົນຂຶ້ນກັບ, ມີການຊຸກຊວນ ຫຼື ນຳເອົາບຸກຄົນອື່ນເຂົ້າຮ່ວມການກະທຳຜິດນຳກັນ, ມີການໃຊ້ກຳລັງຕອບໂຕ້ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສິບປີ.

ໃນກໍລະນີສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ.

## ມາດຕາ 404 ການອອກຄຳສັ່ງດ້ວຍຄວາມບໍ່ລະມັດລະວັງ

ບຸກຄົນໃດ ຫາກອອກຄຳສັ່ງດ້ວຍຄວາມຊັກຊ້າ, ບໍ່ລະມັດລະວັງ ຫຼື ຂາດຄວາມເອົາໃຈໃສ່ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ.

ບຸກຄົນໃດ ຫາກອອກຄຳສັ່ງ ດ້ວຍຄວາມຊັກຊ້າ, ບໍ່ລະມັດລະວັງ ຫຼື ຂາດຄວາມເອົາໃຈໃສ່ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ.

ໃນກໍລະນີຢູ່ໃນໄລຍະເວລາສູ້ຮົບໃນສະໜາມຮົບ ຫຼື ໃນສະພາວະທີ່ຈຳເປັນ ຊຶ່ງໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ຊາວປີ.

**ມາດຕາ 405 ການຂັດຂວາງການປະຕິບັດຕາມໜ້າທີ່ ແລະ ຄວາມຮັບຜິດຊອບ**

ບຸກຄົນໃດ ຫາກຂັດຂວາງຜູ້ສັງກັດໃນກຳລັງປ້ອງກັນຊາດ ບໍ່ໃຫ້ປະຕິບັດຕາມໜ້າທີ່ ແລະ ຄວາມຮັບຜິດຊອບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ໃນກໍລະນີມີການຊັກຊວນ ຫຼື ນຳເອົາບຸກຄົນອື່ນເຂົ້າຮ່ວມການກະທຳຜິດນຳກັນ, ມີການໃຊ້ກຳລັງຕອບໂຕ້ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ສິບປີ.

ໃນກໍລະນີ ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ.

ໃນກໍລະນີ ຢູ່ໃນໄລຍະເວລາຂອງການຕໍ່ສູ້ຢູ່ໃນສະໜາມຮົບ ຫຼື ໃນສະພະວະທີ່ຈຳເປັນ ຊຶ່ງໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ.

**ມາດຕາ 406 ການໝິ່ນປະໝາດ ຫຼື ການທຳຮ້າຍຜູ້ບັງຄັບບັນຊາ**

ບຸກຄົນໃດ ຫາກໝິ່ນປະໝາດ ຫຼື ທຳຮ້າຍຜູ້ບັງຄັບບັນຊາຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ໃນກໍລະນີມີການທຸ້ມຕີ ຫຼື ເຮັດໃຫ້ມີການບາດເຈັບສາຫັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ.

ໃນກໍລະນີທີ່ການກະທຳຜິດ ຫາກໄດ້ເຮັດໃຫ້ມີການເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ.

ໃນຍາມສົງຄາມ ຫາກໄດ້ເຮັດໃຫ້ຜູ້ບັນຊາສູ້ຮົບໄດ້ຮັບບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ຊາວປີ ຫຼື ຕັດອິດສະລະພາບຕະຫຼອດຊີວິດ.

**ມາດຕາ 407 ການລົງໂທດທາງຮ່າງກາຍທີ່ຮຸນແຮງ ຫຼື ການລົງໂທດ ທີ່ເຮັດໃຫ້ຜູ້ທີ່ຢູ່ພາຍໃຕ້ບັງຄັບບັນຊາ ໄດ້ຮັບຄວາມອັບອາຍ**

ບຸກຄົນໃດ ຫາກລົງໂທດທາງຮ່າງກາຍທີ່ຮຸນແຮງ ຫຼື ລົງໂທດດ້ວຍການເຮັດໃຫ້ຜູ້ທີ່ຢູ່ພາຍໃຕ້ບັງຄັບບັນຊາໄດ້ຮັບຄວາມອັບອາຍ ຊຶ່ງແຕະຕ້ອງເຖິງກຽດ, ສັກສີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ໃນກໍລະນີສ້າງຄວາມເສຍຫາຍ ຫຼື ມີຄວາມເປັນອັນຕະລາຍຮ້າຍແຮງຕໍ່ຊີວິດ, ສຸຂະພາບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ.

**ມາດຕາ 408 ການຍອມຈຳນົນຕໍ່ສັດຕູ**

ບຸກຄົນໃດ ຫາກໄດ້ຍອມຈຳນົນຕໍ່ສັດຕູ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບ ຫ້າປີ.

ໃນກໍລະນີ ຜູ້ກະທຳຜິດ ຫາກເປັນຜູ້ບັງຄັບບັນຊາ ນຳເອົາວັດຖຸປະກອນດ້ານການທະຫານ, ອາວຸດເສິກ, ຍຸດທະວິທີ ຫຼື ເອກະສານດ້ານການທະຫານ ໄປມອບໃຫ້ສັດຕູ, ຊັກຊວນ ແລະ ນຳພາບຸກຄົນອື່ນເຂົ້າຮ່ວມໃນການກະທຳຜິດ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ.

**ມາດຕາ 409 ການສົ່ງຂໍ້ມູນດ້ານການທະຫານໃຫ້ແກ່ສັດຕູ ຫຼື ການສະໝັກໃຈຮັບໃຊ້ສັດຕູໃນເວລາຕົກເປັນຊະເລີຍເສິກ**

ບຸກຄົນໃດ ຫາກສົ່ງຂໍ້ມູນດ້ານການທະຫານໃຫ້ແກ່ສັດຕູ ຫຼື ສະໝັກໃຈຮັບໃຊ້ສັດຕູ ໃນເວລາຕົກເປັນຊະເລີຍເສິກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ເຈັດປີ.

**ມາດຕາ 410 ການປະລະໜ້າທີ່ໃນສະໜາມຮົບ**

ບຸກຄົນໃດ ຫາກປະລະໜ້າທີ່ຂອງຕົນໃນສະໜາມຮົບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ສິບປີ.

ໃນກໍລະນີ ຜູ້ກະທຳຜິດ ຫາກເປັນຜູ້ບັງຄັບບັນຊາ ໄດ້ປະຖິ້ມອາວຸດເສິກ, ຍຸດທະວິທີການທະຫານ ຫຼື ເອກະສານດ້ານການທະຫານທີ່ສຳຄັນ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ຊາວປີ.

**ມາດຕາ 411 ການຫຼົບຫຼີກການປະຕິບັດໜ້າທີ່**

ບຸກຄົນໃດ ຫາກໄດ້ທຳຮ້າຍຕົນເອງໃຫ້ໄດ້ຮັບບາດເຈັບ ຫຼື ໃຊ້ເລ່ຫຼ່ຽມ, ກົນອຸບາຍ ເພື່ອຫຼົບຫຼີກການປະຕິບັດໜ້າທີ່ ທີ່ຕົນໄດ້ຮັບມອບໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ໃນກໍລະນີ ຜູ້ກະທຳຜິດ ຫາກເປັນຜູ້ບັງຄັບບັນຊາໄດ້ຊັກຊວນ ຫຼື ນຳພາບຸກຄົນອື່ນເຂົ້າຮ່ວມໃນການກະທຳຜິດ ຊຶ່ງເປັນການກະທຳຜິດທີ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ຊາວປີ.

**ມາດຕາ 412 ການເປີດເຜີຍຄວາມລັບດ້ານການທະຫານ, ການທ້ອນໂຮມ, ການຂາຍ ຫຼື ການທຳລາຍເອກະສານດ້ານການທະຫານ ໂດຍເຈດຕະນາ**

ບຸກຄົນໃດ ຫາກໄດ້ເປີດເຜີຍຄວາມລັບດ້ານການທະຫານ, ທ້ອນໂຮມ, ຂາຍ ຫຼື ທຳລາຍເອກະສານດ້ານການທະຫານໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ.

ໃນກໍລະນີການກະທຳຜິດ ຫາກເປັນພື້ນຖານທີ່ກໍ່ໃຫ້ເກີດການກະທຳຜິດອື່ນ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ສິບປີ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 413 ການລາຍງານຜິດ**

ບຸກຄົນໃດ ຫາກໄດ້ລາຍງານຜິດໂດຍເຈດຕະນາ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ໃນກໍລະນີການກະທຳຜິດ ຫາກເປັນພື້ນຖານທີ່ກໍ່ໃຫ້ເກີດການກະທຳຜິດອື່ນ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ.

**ມາດຕາ 414 ການລະເມີດລະບຽບການກຽມພ້ອມສູ້ຮົບ**

ບຸກຄົນໃດ ຫາກລະເມີດລະບຽບການກຽມພ້ອມສູ້ຮົບ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 415 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ຮັກສາຄວາມປອດໄພ**

ບຸກຄົນໃດ ຫາກບໍ່ໄດ້ປະຕິບັດລະບຽບການກວດກາເວນຍາມ, ຮັກສາຄວາມປອດໄພຢ່າງເຂັ້ມງວດ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 416 ການລະເມີດລະບຽບການຮັບປະກັນຄວາມປອດໄພໃນເວລາອົບຮົມ ຫັດແອບ ຫຼື ໃນເວລາສູ້ຮົບ**

ບຸກຄົນໃດ ຫາກລະເມີດລະບຽບການຮັບປະກັນຄວາມປອດໄພໃນເວລາອົບຮົມ ຫັດແອບ ຫຼື ໃນເວລາສູ້ຮົບ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 417 ການລະເມີດລະບຽບການກ່ຽວກັບການນຳໃຊ້ອາວຸດເສິກ ຫຼື ວັດຖຸລະເບີດ**

ບຸກຄົນໃດ ຫາກລະເມີດລະບຽບການກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ອາວຸດເສິກ ຫຼື ວັດຖຸລະເບີດ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 418 ການລັກ ຫຼື ການທຳລາຍເອກະສານຍຸດທະສາດ, ຍຸດທະບັ້ນຮົບການທະຫານ, ອາວຸດເສິກ ຫຼື ວັດຖຸລະເບີດ**

ບຸກຄົນໃດ ຫາກໄດ້ລັກ ຫຼື ທຳລາຍເອກະສານຍຸດທະສາດ, ຍຸດທະບັ້ນຮົບການທະຫານ, ອາວຸດເສິກ ຫຼື ວັດຖຸລະເບີດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ.

ໃນກໍລະນີຜູ້ກະທຳຜິດ ຫາກກະທຳຜິດໃນຍາມທີ່ມີການຕໍ່ສູ້ ຫຼື ໃນຍາມທີ່ມີສະພາບຫຍຸ້ງຍາກ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ.

**ມາດຕາ 419 ການເຮັດໃຫ້ອາວຸດເສິກ, ເອກະສານຍຸດທະສາດ, ຍຸດທະບັ້ນຮົບການທະຫານ ເສຍຫາຍດ້ວຍຄວາມບໍ່ລະມັດລະວັງ**

ບຸກຄົນໃດ ທີ່ໄດ້ຮັບມອບໝາຍໃຫ້ຮັກສາ ຫຼື ໄດ້ຮັບການປະກອບອາວຸດ ຫຼື ໃຫ້ຮັກສາແຜນຍຸດທະວິທີດ້ານການທະຫານ ຫາກໄດ້ເຮັດໃຫ້ ອາວຸດເສິກ, ເອກະສານຍຸດທະສາດ, ຍຸດທະບັ້ນຮົບການທະຫານເສຍຫາຍ ດ້ວຍຄວາມບໍ່ລະມັດລະວັງ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ ແລະ ເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ.

ໃນກໍລະນີການກະທຳຜິດ ຫາກເປັນພື້ນຖານທີ່ກໍ່ໃຫ້ເກີດການກະທຳຜິດອື່ນ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ.

### ມາດຕາ 420 ການລະເມີດການປະຕິບັດນະໂຍບາຍຕໍ່ຜູ້ທີ່ໄດ້ຮັບບາດເຈັບ ແລະ ຜູ້ທີ່ເສຍຊີວິດໃນເວລາເຄື່ອນໄຫວສູ້ຮົບ

ບຸກຄົນໃດ ທີ່ໄດ້ຮັບມອບໝາຍໃຫ້ຮັບຜິດຊອບເກັບກູ້, ປິ່ນປົວ ຫາກໄດ້ປະປ່ອຍຜູ້ທີ່ໄດ້ຮັບບາດເຈັບ ແລະ ຜູ້ທີ່ເສຍຊີວິດໃນເວລາເຄື່ອນໄຫວສູ້ຮົບ ໂດຍເຈດຕະນາ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ ແລະ ເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ບຸກຄົນໃດ ຫາກເກັບໂຮມເອົາວັດຖຸສິ່ງຂອງ ຂອງຜູ້ທີ່ເສຍຊີວິດໃນການສູ້ຮົບ ເປັນຂອງຕົນເອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ໃນກໍລະນີ ການກະທຳຜິດ ຫາກເປັນພື້ນຖານ ທີ່ກໍ່ໃຫ້ເກີດການກະທຳຜິດອື່ນ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ.

### ມາດຕາ 421 ການເອົາ ຫຼື ການທຳລາຍເຄື່ອງສິນເສີກ

ບຸກຄົນໃດ ຫາກໄດ້ ເອົາ ຫຼື ທຳລາຍເຄື່ອງສິນເສີກ ໃນເວລາມີການສູ້ຮົບ ຫຼື ໃນເວລາເກັບມ້ຽນສະໜາມຮົບ ພາຍຫຼັງສິ້ນສຸດສົງຄາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ໃນກໍລະນີ ຜູ້ກະທຳຜິດ ຫາກເປັນຜູ້ບັງຄັບບັນຊາ ມີເຄື່ອງສິນເສີກທີ່ຍັງເຫຼືອພາຍຫຼັງສິ້ນສຸດສົງຄາມທີ່ມີມູນຄ່າສູງ ແລະ ມີຈຳນວນຫຼາຍ ຊຶ່ງເປັນການກະທຳຜິດທີ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ມີຄວາມເປັນອັນຕະລາຍຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ແປດປີ.

### ມາດຕາ 422 ການທາລຸນຊະເລີຍເສີກ ຫຼື ທະຫານສັດຕູທີ່ຍອມຈຳນົນ

ບຸກຄົນໃດ ຫາກທາລຸນຊະເລີຍເສີກ ຫຼື ທະຫານສັດຕູທີ່ຍອມຈຳນົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ.

### ມາດຕາ 423 ການແອບອ້າງເປັນເຈົ້າໜ້າທີ່ທະຫານ

ບຸກຄົນໃດ ຫາກແອບອ້າງເປັນເຈົ້າໜ້າທີ່ທະຫານ ເພື່ອເຄື່ອນໄຫວຫາຜົນປະໂຫຍດໃຫ້ແກ່ຕົນເອງ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ຊື່ສຽງ, ກຽດສັກສີ, ຜົນປະໂຫຍດຂອງກອງທັບ, ຄວາມບໍ່ສະຫງົບ ຫຼື ຄວາມ

ບໍ່ເປັນລະບຽບຮຽບຮ້ອຍຂອງສັງຄົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທໍາຜິດດັ່ງກ່າວ ຫາກໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ເປັນພື້ນຖານໃຫ້ແກ່ການກະທໍາຜິດອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

# ພາກທີ III
# ບົດບັນຍັດສຸດທ້າຍ

**ມາດຕາ 424 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການອື່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດປະມວນກົດໝາຍອາຍາສະບັບນີ້.

**ມາດຕາ 425 ຜົນສັກສິດ**

ປະມວນກົດໝາຍອາຍາສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ປະມວນກົດໝາຍອາຍາສະບັບນີ້ ປ່ຽນແທນກົດໝາຍອາຍາ ສະບັບເລກທີ 12 /ສພຊ, ລົງວັນທີ 9 ພະຈິກ 2005.

ບັນດາບົດບັນຍັດ ທີ່ໄດ້ກໍານົດການກະທໍາຜິດທາງອາຍາ ແລະ ໂທດ ໃນກົດໝາຍສະບັບອື່ນ ຊຶ່ງໄດ້ລວບລວມເຂົ້າໃນປະມວນກົດໝາຍສະບັບນີ້ແລ້ວ ຈະບໍ່ມີຜົນນໍາໃຊ້ ນັບແຕ່ວັນປະມວນກົດໝາຍອາຍາສະບັບນີ້ ມີຜົນສັກສິດ ດັ່ງນີ້:

1. ມາດຕາ 124 ຂອງກົດໝາຍວ່າດ້ວຍການປະກັນໄພ ສະບັບເລກທີ 06/ສພຊ, ລົງວັນທີ 21 ທັນວາ 2011;

2. ມາດຕາ 59 ຂອງກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ສະບັບເລກທີ 60/ສພຊ, ລົງວັນທີ 16 ມັງກອນ 2012;

3. ມາດຕາ 59, 60, 61 ຂອງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 27/ສພຊ, ລົງວັນທີ 18 ທັນວາ 2012;

4. ມາດຕາ 86, 87 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;

5. ມາດຕາ 104 ຂອງກົດໝາຍວ່າດ້ວຍມາດຕະຖານ ສະບັບເລກທີ 13/ສພຊ, ລົງວັນທີ 26 ທັນວາ 2007;

6. ມາດຕາ 85, 86, 87, 88, 89, 90 ຂອງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບເລກທີ 05/ສພຊ, ລົງວັນທີ 27 ທັນວາ 2007;

7. ມາດຕາ 127 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;

8. ມາດຕາ 71 ວັກສຸດທ້າຍ ຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;

9. ມາດຕາ 162 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 01/ສພຊ, ລົງວັນທີ 20 ທັນວາ 2011;

10. ມາດຕາ 69 ຂອງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດສ ສະບັບເລກທີ 01/ສພຊ, ລົງວັນທີ 29 ມິຖຸນາ 2010;

11. ມາດຕາ 75 ຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007;

12. ມາດຕາ 2, 3, 4 ຂອງກົດໝາຍວ່າດ້ວຍການປັບປຸງມາດຕາ 146 ຂອງກົດໝາຍອາຍາ ແລະ ມາດຕາ 75, 76 ຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 22/ສພຊ, ລົງວັນທີ 21 ທັນວາ 2010;

13. ມາດຕາ 170 ຂອງກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;

14. ມາດຕາ 66, 67, 68, 69, 70 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;

15. ມາດຕາ 68 ຂອງກົດໝາຍວ່າດ້ວຍການປະມົງ ສະບັບເລກທີ 03/ສພຊ, ລົງວັນທີ 9 ກໍລະກົດ 2009;

16. ມາດຕາ 49 ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ສະບັບເລກທີ 08/ສພຊ, ລົງວັນທີ 22 ຕຸລາ 2004;

17. ມາດຕາ 52 ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;

18. ມາດຕາ 79 ຂໍ້ 1, 2, 3 ແລະ 4 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບເລກທີ 56/ສພຊ, ລົງວັນທີ 23 ທັນວາ 2014;

19. ມາດຕາ 62 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ສະບັບເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015;

20. ມາດຕາ 89 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບເລກທີ 73/ສພຊ, ລົງວັນທີ 17 ທັນວາ 2015.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້